# ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

PetroTrade

## ການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ "IPO"

ຮຸ້ນສາມັນເພີ່ມທຶນທີ່ອອກຈຳໜ່າຍຈຳນວນ 60,000,000 ຮຸ້ນ, ມູນຄ່າກຳນົດ 2,000 ກີບຕໍ່ຮຸ້ນ

**ລາຄາອອກຈຳໜ່າຍ:** ຮຸ້ນລະ 4,000 ກີບ

ສຳລັບຮຸ້ນສາມັນເພີ່ມທຶນທີ່ອອກຈຳໜ່າຍໃຫ້ແກ່ນັກລົງທຶນໃນ ສປປ ລາວ ແລະ ນັກລົງທຶນຕ່າງປະເທດ

**ໄລຍະເວລາການຈອງຊື້:**

ລະຫວ່າງເວລາ 8:30 ໂມງ ຕອນເຊົ້າ ຫາ 3:30 ໂມງ ຕອນແລງ ຂອງວັນທີ 1, 3 ແລະ 4 ທັນວາ 2014

| | | |
|---|---|---|
| ບໍລິສັດທີ່ປຶກສາທາງການເງິນ | : | ບໍລິສັດ ຫຼັກຊັບເອພີເອັມລາວ ຈຳກັດ |
| ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ | : | ບໍລິສັດ ຫຼັກຊັບ ລ້ານຊ້າງ ມະຫາຊົນ |
| ຜູ້ກວດສອບພາຍນອກ | : | ບໍລິສັດ ເອີນແອນຢັງ ລາວ ຈຳກັດ |
| ຜູ້ກວດສອບພາຍໃນ | : | ບໍລິສັດ ພຣາຍສ້ວເຕີ້ເຮົ້າສ່ກູເປີ້ສ (ລາວ) ຈຳກັດ |
| ບໍລິສັດທີ່ປຶກສາກົດໝາຍ | : | ບໍລິສັດ ລາວພຣິເມຍ ອິນເຕີເນຊັນແນລ ລໍອອຟຟິສ ຈຳກັດ |

ຄຳເຕືອນ

ໜັງສືຊວນຊື້ສະບັບນີ້ເຮັດຂຶ້ນເພື່ອໃຫ້ກຸ່ມນັກລົງທຶນທີ່ສົນໃຈຈະລົງທຶນໃນຮຸ້ນສາມັນເພີ່ມທຶນທີ່ອອກໂດຍບໍລິສັດ ເຊິ່ງຈະໃຊ້ເປັນຂໍ້ມູນເບື້ອງຕົ້ນສຳລັບພິຈາລະນາການລົງທຶນເທົ່ານັ້ນ. ການອະນຸມັດໃຫ້ໜັງສືຊວນຊື້ສະບັບນີ້ມີຜົນບັງຄັບໃຊ້ ບໍ່ໄດ້ໝາຍຄວາມວ່າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ແລະ ຕະຫຼາດຫຼັກຊັບລາວ (ຕລຊລ) ແນະນຳໃຫ້ລົງທຶນໃນຫຼັກຊັບທີ່ອອກຈຳໜ່າຍ ຮັບປະກັນກ່ຽວກັບລາຄາ ຫຼື ຜົນຕອບແທນຂອງຫຼັກຊັບດັ່ງກ່າວ ຫຼື ຮັບຮອງຄວາມຖືກຕ້ອງຂອງຂໍ້ມູນໃນໜັງສືຊວນຊື້ສະບັບນີ້ແຕ່ຢ່າງໃດ. ການຮັບຮອງຄວາມຖືກຕ້ອງຂອງເນື້ອໃນ ແລະ ຂໍ້ມູນຕ່າງໆໃນໜັງສືຊວນຊື້ສະບັບນີ້ເປັນຄວາມຮັບຜິດຊອບຜູ້ສະເໜີຂາຍຫຼັກຊັບ.

ຫາກເນື້ອໃນ ຫຼື ຂໍ້ມູນໃນໜັງສືຊວນຊື້ສະບັບນີ້ບໍ່ມີມູນຄວາມຈິງ ຫຼື ຂາດຂໍ້ມູນສຳຄັນທີ່ຄວນແຈ້ງຜູ້ຖືຫຼັກຊັບທີ່ໄດ້ລົງທຶນຊື້ນັບຕັ້ງແຕ່ມື້ສະເໜີຂາຍຫຼັກຊັບ ແລະ ຍັງຖືຫຼັກຊັບຢູ່ສາມາດຮຽກຮ້ອງຄ່າເສຍຫາຍຈາກຜູ້ສະເໜີຂາຍຫຼັກຊັບໄດ້ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

*ຄຳເຕືອນ: ການລົງທຶນມີຄວາມສ່ຽງ ນັກລົງທຶນຄວນສຶກສາຫາຂໍ້ມູນຂອງບໍລິສັດຜູ້ອອກຈຳໜ່າຍຫຼັກຊັບໃຫ້ລະອຽດກ່ອນຕັດສິນໃຈລົງທຶນ.*

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ອອກຈຳໜ່າຍຮຸ້ນສາມັນເພີ່ມທຶນຂອງຕົນໃນຈຳນວນ 60,000,000 ຮຸ້ນ (ສະເພາະຮຸ້ນທີ່ອອກຈຳໜ່າຍ) ເຊິ່ງເປັນການຈຳໜ່າຍໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຕາມລະບຽບການຂອງ ສຄຄຊ.

ການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃນຄັ້ງນີ້ ຮຸ້ນທັງໝົດຈະຖືກຈັດສັນ ແລະ ອອກຈຳໜ່າຍໃຫ້ແກ່ມວນຊົນພ້ອມທັງນັກລົງທຶນພາຍໃນ ສປປ ລາວ ແລະ ນັກລົງທຶນຕ່າງປະເທດໂດຍ ບໍລິສັດ ຫຼັກຊັບ ລ້ານຊ້າງ ມະຫາຊົນ ເປັນຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນຜ່ານ ທະນາຄານ ພັດທະນາລາວ  ໂດຍບໍ່ໄດ້ຍື່ນຂໍອະນຸຍາດສະເໜີຂາຍຫຼັກຊັບຕາມກົດໝາຍຫຼັກຊັບຂອງປະເທດອື່ນ ນອກຈາກກົດໝາຍທີ່ກ່ຽວຂ້ອງກັບຫຼັກຊັບຂອງ ສປປ ລາວ.

---

ໜັງສືຊວນຊື້ຕົ້ນສະບັບເຮັດເປັນພາສາລາວ (**ໜັງສືຊວນຊື້ສະບັບພາສາລາວ**) ເຊິ່ງຈະໄດ້ຍື່ນຕໍ່ ສຄຄຊ. ສ່ວນໜັງສືຊວນຊື້ສະບັບແປເປັນພາສາອັງກິດ **(ໜັງສືຊວນຊື້ສະບັບພາສາອັງກິດ)** ກະກຽມໂດຍ ບໍລິສັດ ແລະ ບໍລິສັດ ຫຼັກຊັບເອພີເອັມ ລາວ ຈຳກັດ (APMLAO ຫຼື ບໍລິສັດທີ່ປຶກສາທາງການເງິນ). ເຖິງວ່າຈະໄດ້ຮັບການເອົາໃຈໃສ່ໃນການແປແລ້ວກໍ່ຕາມ, ແຕ່ເນື້ອໃນທີ່ແປອອກມານັ້ນບໍ່ໄດ້ມີຜົນໃນທາງກົດໝາຍ ແລະ ບໍ່ໄດ້ມີການຢັ້ງຢືນຄວາມຖືກຕ້ອງຂອງການແປ ແລະ ບົດແປສະບັບພາສາອັງກິດນີ້ບໍ່ແມ່ນໜັງສືຊວນຊື້ຕາມທີ່ໄດ້ນິຍາມໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ (ກົດໝາຍວ່າດ້ວຍຫຼັກຊັບ) ເຊິ່ງມີພຽງເອກະສານຕົ້ນສະບັບທີ່ເປັນພາສາລາວເທົ່ານັ້ນ ທີ່ມີຜົນທາງກົດໝາຍຕາມກົດໝາຍວ່າດ້ວຍຫຼັກຊັບ ແລະ ກົດໝາຍແຫ່ງ ສປປ ລາວ ເຊິ່ງຈະກຳນົດໃຫ້ແຈກຢາຍໜັງສືຊວນຊື້ທີ່ມີຜົນບັງຄັບໃຊ້ແລ້ວ ພາຍໃຕ້ກົດໝາຍວ່າດ້ວຍຫຼັກຊັບ ທີ່ພົວພັນເຖິງການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດໃນ ສປປ ລາວ. ໃນການອອກຈຳໜ່າຍຮຸ້ນນີ້ຈະຕ້ອງສອດຄ່ອງກັບກົດລະບຽບ ແລະ ຂໍ້ກຳນົດຂອງ ສຄຄຊ ເຊິ່ງໜັງສືຊວນຊື້ສະບັບພາສາລາວນີ້ແມ່ນໄດ້ເຮັດຂຶ້ນເພື່ອຈຸດປະສົງໃນການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດໃນ ສປປ ລາວ. ດັ່ງນັ້ນ, ຮຸ້ນທີ່ອອກຈຳໜ່າຍຈະບໍ່ໄດ້ຍື່ນຂໍອະນຸຍາດສະເໜີຂາຍຫຼັກຊັບຕາມກົດໝາຍຫຼັກຊັບຂອງປະເທດອື່ນ ນອກຈາກລະບຽບການທີ່ກ່ຽວຂ້ອງກັບຫຼັກຊັບຂອງ ສປປ ລາວ. ຮູບແບບ ແລະ ໜັງສືຊວນຊື້ສະບັບນີ້ ບໍ່ໄດ້ຢັ້ງຢືນຄວາມເໝາະສົມ ຫຼື ມີຂໍ້ມູນພຽງພໍສຳລັບການອອກຈຳໜ່າຍຫຼັກຊັບໃນປະເທດອື່ນ. ນັກລົງທຶນຄວນອ່ານໜັງສືຊວນຊື້ສະບັບພາສາລາວ ແລະ ພາສາອັງກິດໄປພ້ອມໆກັນກ່ອນຈະຕັດສິນໃຈລົງທຶນຊື້ຮຸ້ນສາມັນເພີ່ມທຶນທີ່ອອກຈຳໜ່າຍໃນຄັ້ງນີ້.

ການອອກຈຳໜ່າຍຮຸ້ນໃນຄັ້ງນີ້ ເປັນການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນຂອງບໍລິສັດໃຫ້ແກ່ມວນຊົນຄັ້ງທຳອິດ ແລະ ຖ້າຫາກ ຕລຊລ ອະນຸຍາດໃນການສະເໜີຈົດທະບຽນຮຸ້ນສາມັນຂອງບໍລິສັດ, ຮຸ້ນດັ່ງກ່າວກໍ່ຈະຖືກຈົດທະບຽນໃນ ຕລຊລ ເຊິ່ງເປັນຕະຫຼາດຂັ້ນສອງທີ່ໄດ້ຮັບການສ້າງຕັ້ງຂຶ້ນຕາມລະບຽບກົດໝາຍໃນເດືອນ ຕຸລາ 2010 ເພື່ອເຮັດໜ້າທີ່ໃນການຊື້-ຂາຍ ແລະ ສ້າງສະພາບຄ່ອງໃຫ້ກັບຮຸ້ນໃນຕະຫຼາດຂັ້ນສອງກໍ່ຄືຕະຫຼາດຫຼັກຊັບລາວ ເຊິ່ງບໍລິສັດຈະໄດ້ຍື່ນເພື່ອຂໍຈົດທະບຽນການຊື້ຂາຍຕາມວັນເວລາທີ່ກຳນົດໄວ້.

ບໍລິສັດຄາດຫວັງວ່າ, ການຊຳລະຄ່າຮຸ້ນຈະໄດ້ຮັບການປະຕິບັດພາຍໃນໄລຍະເວລາຂອງການອອກຈຳໜ່າຍ, ການສົ່ງມອບຮຸ້ນໃຫ້ກັບຜູ້ຖືຮຸ້ນນັ້ນແມ່ນຈະປະຕິບັດດ້ວຍການໂອນຜ່ານສູນຮັບຝາກຫຼັກຊັບຂອງຕະຫຼາດຫຼັກຊັບລາວ ແລະ ຄາດວ່າຮຸ້ນສາມັນຂອງບໍລິສັດຈະໄດ້ຮັບການອະນຸຍາດຈົດທະບຽນໃນຕະຫຼາດຫຼັກຊັບລາວຊ້າສຸດແມ່ນບໍ່ກາຍ 7 ວັນ ຫຼັງຈາກຍື່ນຄຳຮ້ອງຂໍຈົດທະບຽນ.

ກ່ອນການລົງທຶນຮຸ້ນສາມັນເພີ່ມທຶນທີ່ອອກຈຳໜ່າຍ, ນັກລົງທຶນຄວນພິຈາລະນາເຖິງບັນດາຄວາມສ່ຽງທີ່ກ່ຽວຂ້ອງ. ກະລຸນາອ່ານໝວດທີ່ມີຫົວຂໍ້ວ່າດ້ວຍ “ປັດໃຈຄວາມສ່ຽງ” ກ່ອນຕັດສິນໃຈລົງທຶນຊື້ຮຸ້ນສາມັນເພີ່ມທຶນທີ່ອອກຈຳໜ່າຍ.

ທຸກການລົງທຶນມີຄວາມສ່ຽງ ນັກລົງທຶນຄວນສຶກສາຂໍ້ມູນລະອຽດກ່ອນການຕັດສິນໃຈລົງທຶນ

==========

| | |
|---|---|
| ➢ **ບໍລິສັດອອກຈຳໜ່າຍຮຸ້ນ**<br>ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ<br>ຖະໜົນ T4, ບ້ານ ໂພນທັນເໜືອ<br>ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ<br>ໂທ/ແຟັກ: (+856 21)264834 / (+856 21)264836 | ➢ **ບໍລິສັດທີ່ປຶກສາທາງການເງິນ**<br>ບໍລິສັດ ຫຼັກຊັບເອພີເອັມລາວ ຈຳກັດ<br>ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 7<br>ຖະໜົນ T4, ບ້ານ ໂພນທັນເໜືອ<br>ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ<br>ໂທ/ແຟັກ: (+856 21) 419170 / (+856 21) 419171 |
| ➢ **ບໍລິສັດທີ່ປຶກສາກົດໝາຍ**<br>ບໍລິສັດ ລາວພຣີເມຍ ອິນເຕີເນຊັນແນລ ລໍອອຟຟິສ ຈຳກັດ<br>ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 7<br>ຖະໜົນ T4, ບ້ານ ໂພນທັນເໜືອ<br>ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ<br>ໂທ/ແຟັກ: (+856 21)265471 / (+856 21)265474 | ➢ **ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ**<br>ບໍລິສັດ ຫຼັກຊັບ ລ້ານຊ້າງ ມະຫາຊົນ<br>ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 5<br>ຖະໜົນ T4, ບ້ານ ໂພນທັນເໜືອ<br>ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ<br>ໂທ/ແຟັກ: (+856 21)265461-4/ (+856 21)265465-6 |
| ➢ **ຜູ້ກວດສອບພາຍນອກ**<br>ບໍລິສັດ ເອີນແອນຢັ່ງ ລາວ ຈຳກັດ<br>ອາຄານ ແຄັບປິຕັລ ທາວເວີ, ຊັ້ນ 6<br>ຖະໜົນ 23 ສິງຫາ, ບ້ານ ໜອງບອນ<br>ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ<br>ໂທ/ແຟັກ: (+856 21)455077 / (+856 21)455078 | ➢ **ຜູ້ກວດສອບພາຍໃນ**<br>ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກຼູເປີ້ສ (ລາວ) ຈຳກັດ<br>ອາຄານ ເອເອັນແຊັດ ພານິດ ຊັ້ນ 4<br>ຖະໜົນ ລ້ານຊ້າງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ<br>ໂທ/ແຟັກ: (+856 21)222718-9 / (+856 21)222723 |
| ➢ **ຕົວແທນຈຳໜ່າຍຮຸ້ນ**<br>ທະນາຄານ ພັດທະນາລາວ<br>ບ້ານ ສີຫອມ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ.<br>ໂທ/ແຟັກ: : (+856 21)213300-03/(+856 21) 3304-222506 | |

==========

# ສາລະບານ

**ນິຍາມຄຳສັບ**

**ພາກສັງລວມ**

**ພາກທີ 1 ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ**

1.0 ພາກສັງລວມ ສ່ວນທີ 1.0-1
1.1 ບໍລິສັດອອກຈຳໜ່າຍຮຸ້ນ ສ່ວນທີ 1.1-1
1.2 ເປົ້າໝາຍການນຳໃຊ້ເງິນທີ່ໄດ້ຈາກການອອກຈຳໜ່າຍຮຸ້ນ ສ່ວນທີ 1.2-1
1.3 ບັນດາປັດໄຈຄວາມສ່ຽງ ສ່ວນທີ 1.3-1
1.4 ທຸລະກິດທີ່ດຳເນີນໃນປັດຈຸບັນ ສ່ວນທີ 1.4-1
1.5 ແຜນການໃນອະນາຄົດ ສ່ວນທີ 1.5-1
1.6 ຊັບສິນທີ່ໃຊ້ໃນການດຳເນີນທຸລະກິດ ສ່ວນທີ 1.6-1
1.7 ຂໍ້ຂັດແຍ່ງທາງດ້ານກົດໝາຍ ສ່ວນທີ 1.7-1
1.8 ໂຄງສ້າງທຶນບໍລິສັດ ສ່ວນທີ 1.8-1
1.9 ການຄຸ້ມຄອງບໍລິສັດ ແລະ ການບໍລິຫານຈັດການ ສ່ວນທີ 1.9-1
1.10ການກວດສອບພາຍໃນ ສ່ວນທີ 1.10-1
1.11 ລາຍການທີ່ກ່ຽວພັນ ສ່ວນທີ 1.11-1
1.12ຜົນການດຳເນີນງານ ແລະ ຂໍ້ມູນຖານະການເງິນ ສ່ວນທີ 1.12-1

**ພາກທີ 2 ຂໍ້ມູນທີ່ກ່ຽວຂ້ອງກັບການອອກຈຳໜ່າຍຮຸ້ນ**

2.1 ລາຍລະອຽດຂອງຮຸ້ນ ສ່ວນທີ 2-1
2.2 ຂໍ້ຫ້າມໃນການໂອນຮຸ້ນ ສ່ວນທີ 2-4
2.3 ການກຳນົດລາຄາຮຸ້ນ ສ່ວນທີ 2-4
2.4 ການອອກຈຳໜ່າຍ, ການຈອງຊື້ ແລະ ການແບ່ງປັນຮຸ້ນສາມັນເພີ່ມທຶນ ສ່ວນທີ 2-4
2.5 ການສົ່ງມອບຮຸ້ນ ສ່ວນທີ 2-10
2.6 ແຜນສຳລັບການອອກຈຳໜ່າຍຫຼັກຊັບ ແລະ ການນຳໃຊ້ທຶນ ສ່ວນທີ 2-10
2.7 ເປົ້າໝາຍການນຳໃຊ້ເງິນທີ່ລະດົມໄດ້ຈາກການອອກຈຳໜ່າຍ ສ່ວນທີ 2-11

**ພາກທີ 3 ການຮັບຮອງຄວາມຖືກຕ້ອງຂອງຂໍ້ມູນ**

3.1 ການຮັບຮອງຄວາມຖືກຕ້ອງຂອງຂໍ້ມູນໃນສ່ວນຂອງສະພາບໍລິຫານ ສ່ວນທີ 3-1
3.2 ການຮັບຮອງຄວາມຖືກຕ້ອງຂອງຂໍ້ມູນໃນສ່ວນຂອງທີ່ປຶກສາທາງການເງິນ ສ່ວນທີ 3-3

ເອກະສານຊ້ອນທ້າຍ 1 ປະຫວັດສະພາບໍລິຫານ ແລະ ຜູ້ບໍລິຫານຂອງບໍລິສັດ
ເອກະສານຊ້ອນທ້າຍ 2 ເອກະສານລາຍງານການເງິນ ປີ 2011-2013 ແລະ 6 ເດືອນຕົ້ນປີ 2014
ເອກະສານຊ້ອນທ້າຍ 3 ຕົວຢ່າງແບບຟອມໃບຂໍຈອງຊື້ຮຸ້ນ

# ສາລະບານຕາຕະລາງ


| | | |
|---|---|---|
| ຕາຕະລາງທີ 1.1.1 | ສະຫຼຸບຫຍໍ້ເຫດການທີ່ພົ້ນເດັ່ນ | ສ່ວນທີ 1.1-5 |
| ຕາຕະລາງທີ 1.1.2 | ຕາຕະລາງສະຫຼຸບບໍລິສັດທີ່ກ່ຽວພັນ | ສ່ວນທີ 1.1-7 |
| ຕາຕະລາງທີ 1.2.1 | ເປົ້າໝາຍການນຳໃຊ້ເງິນທີ່ໄດ້ຈາກການອອກຈຳໜ່າຍຮຸ້ນ | ສ່ວນທີ 1.2-1 |
| ຕາຕະລາງທີ 1.3.1 | ສະຫຼຸບຈຳນວນສະຖານີສະຖານີບໍລິການໃນຮູບແບບ CODO ທີ່ຈະໝົດອາຍຸສັນຍາ | ສ່ວນທີ 1.3-5 |
| ຕາຕະລາງທີ 1.4.1 | ສະຫຼຸບຈຳນວນສະຖານີບໍລິການນ້ຳມັນທັງໝົດ | ສ່ວນທີ 1.4-7 |
| ຕາຕະລາງທີ 1.4.2 | ສະຫຼຸບຈຳນວນສະຖານີບໍລິການນ້ຳມັນແບ່ງຕາມພູມສັນຖານ | ສ່ວນທີ 1.4-7 |
| ຕາຕະລາງທີ 1.4.3 | ລາຍລະອຽດທີ່ຕັ້ງ ແລະ ຈຳນວນສາຂາຂອງຮ້ານຄ້າສະດວກຊື້ | ສ່ວນທີ 1.4-11 |
| ຕາຕະລາງທີ 1.4.4 | ລາຍລະອຽດທີ່ຕັ້ງ ແລະ ຈຳນວນສາຂາຂອງສູນລ້າງອັດສີດ | ສ່ວນທີ 1.4-11 |
| ຕາຕະລາງທີ 1.4.5 | ລາຍລະອຽດທີ່ຕັ້ງ ແລະ ຈຳນວນສາຂາຂອງຕູ້ກົດເງິນສົດ (ATM) | ສ່ວນທີ 1.4-12 |
| ຕາຕະລາງທີ 1.4.6 | ລາຍລະອຽດທີ່ຕັ້ງ ແລະ ຈຳນວນສາຂາຂອງບັດເຕີມນ້ຳມັນແທນເງິນສົດ | ສ່ວນທີ 1.4-13 |
| ຕາຕະລາງທີ 1.4.7 | ສະຫຼຸບລາຍລະອຽດຂອງສາງນ້ຳມັນ | ສ່ວນທີ 1.4-15 |
| ຕາຕະລາງທີ 1.4.8 | ຕາຕະລາງສະຫຼຸບຕົວເລກ GDP ຂອງ ປີ 2012 ແລະ 2013 | ສ່ວນທີ 1.4-20 |
| ຕາຕະລາງທີ 1.4.9 | ຕາຕະລາງສະແດງການໃຊ້ນ້ຳມັນໃນ ສປປ ລາວ | ສ່ວນທີ 1.4-20 |
| ຕາຕະລາງທີ 1.4.10 | ປະເພດຂອງຜູ້ຈັດຈຳໜ່າຍນ້ຳມັນໃນ ສປປ ລາວ | ສ່ວນທີ 1.4-21 |
| ຕາຕະລາງທີ 1.4.11 | ຄາດຄະເນຄວາມຕ້ອງການໃຊ້ນ້ຳມັນແຕ່ປີ 2015 – 2020 | ສ່ວນທີ 1.4-24 |
| ຕາຕະລາງທີ 1.4.12 | ສັດສ່ວນການຂາຍຂອງບໍລິສັດນ້ຳມັນ 16 ບໍລິສັດໃນ ສປປ ລາວ | ສ່ວນທີ 1.4-25 |
| ຕາຕະລາງທີ 1.4.13 | ຄ່າມາດຕະຖານ API ຈາກໂຮງກັ່ນຂອງນ້ຳມັນກາຊວນ | ສ່ວນທີ 1.4-28 |
| ຕາຕະລາງທີ 1.4.14 | ການດຳເນີນການກວດກາຄ່າ API ຂອງນ້ຳມັນແອັດຊັງ | ສ່ວນທີ 1.4-28 |
| ຕາຕະລາງທີ 1.5.1 | ສະແດງເຖິງຈຳນວນ ແລະ ສັດສ່ວນການຂະຫຍາຍສະຖານີບໍລິການນ້ຳມັນ | ສ່ວນທີ 1.5-1 |
| ຕາຕະລາງທີ 1.5.2 | ລາຍລະອຽດການລົງທຶນໃນການບໍລິຫານລະບົບການຂົນສົ່ງ | ສ່ວນທີ 1.5-2 |
| ຕາຕະລາງທີ 1.5.3 | ເປົ້າໝາຍການນຳໃຊ້ເງິນທີ່ໄດ້ຈາກການອອກຈຳໜ່າຍຮຸ້ນ | ສ່ວນທີ 1.5-3 |
| ຕາຕະລາງທີ 1.6.1 | ມູນຄ່າຊັບສິນຕາມບັນຊີສຸດທິຂອງປີ 2013 | ສ່ວນທີ 1.6-1 |
| ຕາຕະລາງທີ 1.6.2 | ລາຍການທີ່ດິນທັງໝົດທີ່ໂອນເຂົ້າມາປະກອບເປັນທຶນຂອງບໍລິສັດ | ສ່ວນທີ 1.6-1 |
| ຕາຕະລາງທີ 1.6.3 | ສະແດງເຖິງລັກສະນະກຳມະສິດທີ່ດິນ ໃນວັນທີ 31 ທັນວາ 2013 | ສ່ວນທີ 1.6-2 |
| ຕາຕະລາງທີ 1.6.4 | ກຳມະສິດທີ່ດິນຫຼັງມີການໂອນເຂົ້າມາເພີ່ມ | ສ່ວນທີ 1.6-2 |
| ຕາຕະລາງທີ 1.6.5 | ຈຳນວນສະຖານີບໍລິການນ້ຳມັນທັງໝົດ 107 ສະຖານີບໍລິການ | ສ່ວນທີ 1.6-3 |
| ຕາຕະລາງທີ 1.6.6 | ສະຫຼຸບຈຳນວນສະຖານີບໍລິການນ້ຳມັນແບ່ງຕາມພູມສັນຖານ | ສ່ວນທີ 1.6-3 |
| ຕາຕະລາງທີ 1.8.1 | ສັດສ່ວນຜູ້ຖືຮຸ້ນຂອງບໍລິສັດກ່ອນ ແລະ ຫຼັງການອອກຈຳໜ່າຍຮຸ້ນທັງໝົດ | ສ່ວນທີ 1.8-1 |
| ຕາຕະລາງທີ 1.9.1 | ລາຍຊື່ຄະນະກຳມະການ ແລະ ຜູ້ບໍລິຫານ | ສ່ວນທີ 1.9-2 |
| ຕາຕະລາງທີ 1.9.2 | ລາຍຊື່ຂອງອົງປະກອບສະພາບໍລິຫານ | ສ່ວນທີ 1.9-3 |
| ຕາຕະລາງທີ 1.9.3 | ລາຍຊື່ອົງປະກອບຂອງຄະນະກຳມະການກວດສອບພາຍໃນ | ສ່ວນທີ 1.9-5 |
| ຕາຕະລາງທີ 1.9.4 | ລາຍຊື່ອົງປະກອບຂອງຄະນະກຳມະການສະເພາະດ້ານ | ສ່ວນທີ 1.9-7 |

| | | |
|---|---|---|
| ຕາຕະລາງທີ 1.9.5 | ຄ່າຕອບແທນສະພາບໍລິຫານ ແລະ ຄະນະກຳມະການກວດກາພາຍໃນ | ສ່ວນທີ 1.9-9 |
| ຕາຕະລາງທີ 1.9.6 | ຈຳນວນພະນັກງານທັງໝົດຂອງບໍລິສັດຈົນຮອດ 30 ມິຖຸນາ 2014 | ສ່ວນທີ 1.9-10 |
| ຕາຕະລາງທີ 1.11.1 | ສະຫຼຸບລາຍລະອຽດຂອງລາຍການທີ່ກ່ຽວພັນ | ສ່ວນທີ 1.11-1 |
| ຕາຕະລາງທີ 1.12.1 | ສະແດງໃບສະຫຼຸບຊັບສິນບັດ | ສ່ວນທີ 1.12-3 |
| ຕາຕະລາງທີ 1.12.2 | ສະແດງໃບລາຍງານຜົນໄດ້ຮັບ | ສ່ວນທີ 1.12-4 |
| ຕາຕະລາງທີ 1.12.3 | ສະແດງໃບລາຍງານກະແສເງິນສົດ | ສ່ວນທີ 1.12-4 |
| ຕາຕະລາງທີ 1.12.4 | ສະແດງອັດຕາສ່ວນທາງການເງິນທີ່ສຳຄັນຂອງບໍລິສັດ | ສ່ວນທີ 1.12-5 |
| ຕາຕະລາງທີ 1.12.5 | ລາຍຮັບຈາກການຈຳໜ່າຍແຍກຕາມຜະລິດຕະພັນ | ສ່ວນທີ 1.12-7 |
| ຕາຕະລາງທີ 1.12.6 | ລາຍຮັບຈາກການຈຳໜ່າຍແຍກຕາມກຸ່ມລູກຄ້າ | ສ່ວນທີ 1.12-9 |
| ຕາຕະລາງທີ 1.12.7 | ໜີ້ຕ້ອງຮັບການຄ້າ ແລະ ຄ່າເຜື່ອໜີ້ສົງໄສຈະສູນ | ສ່ວນທີ 1.12-15 |
| ຕາຕະລາງທີ 1.12.8 | ຊັບສິນຄົງທີ່ໃນທ້າຍປີ 2011, 2012 ແລະ 2013 | ສ່ວນທີ 1.12-16 |
| ຕາຕະລາງທີ 1.12.9 | ຊັບສິນທີ່ບໍ່ມີຕົວຕົນໃນທ້າຍປີ 2011, 2012 ແລະ 2013 | ສ່ວນທີ 1.12-17 |

## ສາລະບານຮູບພາບ

| | | |
|---|---|---|
| ຮູບທີ 1.4.1 | ສະຖານີບໍລິການນ້ຳມັນ ພລັສ ແພັລຕຕິນຳ | ສ່ວນທີ 1.4-8 |
| ຮູບທີ 1.4.2 | ສະຖານີບໍລິການນ້ຳມັນ ພລັສ ໂກລ | ສ່ວນທີ 1.4-9 |
| ຮູບທີ 1.4.3 | ສະຖານີບໍລິການນ້ຳມັນ ພລັສ ມາດຕະຖານ | ສ່ວນທີ 1.4-9 |
| ຮູບທີ 1.4.4 | ສະຖານີບໍລິການນ້ຳມັນ ພລັສ ທ້ອງຖິ່ນພັດທະນາ | ສ່ວນທີ 1.4-10 |
| ຮູບທີ 1.4.5 | ຮ້ານຄ້າສະດວກຊື້ (Plus Daily Mart) | ສ່ວນທີ 1.4.10 |
| ຮູບທີ 1.4.6 | ສູນລ້າງອັດສີດ (Moly Care) | ສ່ວນທີ 1.4-11 |
| ຮູບທີ 1.4.7 | ຕູ້ກົດເງິນສົດ (ATM) | ສ່ວນທີ 1.4-12 |
| ຮູບທີ 1.4.8 | ບັດເຕີມນ້ຳມັນທີ່ໃຊ້ແທນເງິນສົດ (Fleet Card) | ສ່ວນທີ 1.4.12 |
| ຮູບທີ 1.4.9 | ທີ່ຕັ້ງຂອງສາງນ້ຳມັນໃນ 5 ແຂວງ ທົ່ວປະເທດ | ສ່ວນທີ 1.4.14 |
| ຮູບທີ 1.4.10 | ກຸ່ມລູກຄ້າຫຼັກຂອງບໍລິສັດທີ່ເປັນກຸ່ມລູກຄ້າປະເພດໂຄງການ | ສ່ວນທີ 1.4.18 |
| ຮູບທີ 1.4.11 | ກຸ່ມລູກຄ້າຫຼັກຂອງບໍລິສັດທີ່ເປັນກຸ່ມລູກຄ້າປະເພດອຸດສາຫະກຳ | ສ່ວນທີ 1.4.18 |
| ຮູບທີ 1.4.12 | ກຸ່ມລູກຄ້າປະເພດຂົນສົ່ງທົ່ວໄປ ແລະ ກຸ່ມລູກຄ້າທົ່ວໄປ | ສ່ວນທີ 1.4.19 |
| ຮູບທີ 1.4.13 | ອັດຕາສ່ວນການຈຳໜ່າຍນ້ຳມັນຂອງບໍລິສັດຈຳແນກຕາມລູກຄ້າປະຈຳປີ 2013 | ສ່ວນທີ 1.4.19 |
| ຮູບທີ 1.4.14 | ສະແດງການໃຊ້ນ້ຳມັນໂດຍແຍກຕາມຜະລິດຕະພັນ | ສ່ວນທີ 1.4.21 |
| ຮູບທີ 1.4.15 | ເຂດເສດຖະກິດພິເສດທີ່ລັດຖະບານໄດ້ອະນຸມັດ | ສ່ວນທີ 1.4.22 |
| ຮູບທີ 1.4.16 | ຈຳນວນເຂື່ອນໄຟຟ້າທັງໝົດທີ່ມີກຳລັງການຜະລິດ 29,597.3 Gwh | ສ່ວນທີ 1.4.23 |
| ຮູບທີ 1.4.17 | ແຜນການປັບປຸງ ແລະ ຍົກລະດັບເສັ້ນທາງແຕ່ເໜືອເຖິງໃຕ້ | ສ່ວນທີ 1.4.23 |
| ຮູບທີ 1.4.18 | ຂະບວນການຈັດສົ່ງນ້ຳມັນຈາກຜູ້ສະໜອງມາຍັງສາງ ແລະ ຈຳໜ່າຍໄປຍັງລູກຄ້າ | ສ່ວນທີ 1.4.26 |
| ຮູບທີ 1.9.1 | ໂຄ່ງຮ່າງການຈັດຕັ້ງ | ສ່ວນທີ 1.9-1 |
| ຮູບທີ 1.12.1 | ລາຄາຈຳໜ່າຍນ້ຳມັນໜ້າສະຖານີບໍລິການໃນວຽງຈັນ | ສ່ວນທີ 1.12-10 |

# ນິຍາມຄຳສັບ

| ຄຳສັບ | ຄວາມໝາຍ |
|---|---|
| **ບໍລິສັດ ຫຼື PTL** | ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ |
| **ບໍລິສັດທີ່ປຶກສາທາງການເງິນ ຫຼື APMLAO** | ບໍລິສັດ ຫຼັກຊັບເອພີເອັມລາວ ຈຳກັດ |
| EY | ບໍລິສັດ ເອີນແອນຢັງ ລາວ ຈຳກັດ |
| LPI | ບໍລິສັດ ລາວພຣີເມຍ ອິນເຕີເນຊັນແນລ ລໍອອຟຟິສ ຈຳກັດ |
| **ສຄຄຊ ຫຼື LSCO** | ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ |
| **ຕລຊລ ຫຼື LSX** | ຕະຫຼາດຫຼັກຊັບລາວ |
| IPO | ການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ (Initial Public Offering) |
| Par Value | ມູນຄ່າກຳນົດ |
| COCO | ບໍລິສັດລົງທຶນ ແລະ ຄຸ້ມຄອງບໍລິຫານເອງ (Company Owned Company Operated) |
| CODO | ບໍລິສັດຮ່ວມລົງທຶນ (Company Owned Dealer Operated) |
| PTN | ສະຖານີບໍລິການນ້ຳມັນ ຮູບແບບ ພລັສ ແພັລດຕິນຳ (PLUS Platinum Gas Station) |
| GLD | ສະຖານີບໍລິການນ້ຳມັນ ຮູບແບບ ພລັສ ໂກລ (PLUS Gold Gas Station) |
| STD | ສະຖານີບໍລິການນ້ຳມັນ ຮູບແບບ ພລັສ ມາດຕະຖານ (PLUS Standard Gas Station) |
| THN | ສະຖານີບໍລິການນ້ຳມັນ ຮູບແບບ ພລັສ ທ້ອງຖິ່ນພັດທະນາ (PLUS Thongthin Phathana) |
| THN-B | ສະຖານີບໍລິການນ້ຳມັນ ຮູບແບບ ພລັສ ທ້ອງຖິ່ນພັດທະນາຂະໜາດໃຫຍ່ (PLUS Thongthin Phathana-Big) |
| AEC | ປະຊາຄົມເສດຖະກິດອາຊຽນ (ASEAN Economic Community) |
| ERP | Enterprise Resource Planning |
| EDC | Electronic Data Capture |
| ATM | ຕູ້ກົດເງິນສົດ (Automatic Teller Machine) |
| **ເອກະສານລາຍງານທາງການເງິນ** | ເອກະສານລາຍງານທາງການເງິນເຊິ່ງປະກອບດ້ວຍ:<br>1) ໃບສະຫຼຸບຊັບສິມບັດ<br>2) ໃບລາຍງານຜົນໄດ້ຮັບ<br>3) ໃບລາຍງານກະແສເງິນສົດ ທີ່ໄດ້ຜ່ານການກວດສອບໂດຍ EY ໄດ້ກວດສອບ 3 ປີຍ້ອນຫຼັງຄື: ປີ 2011, 2012 ແລະ 2013 |

| ຄຳສັບ | ຄວາມໝາຍ |
|---|---|
| **ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ** | ບໍລິສັດ ຫຼັກຊັບ ລ້ານຊ້າງ ມະຫາຊົນ |
| **ໜັງສືຄ້ຳປະກັນການອອກຈຳໜ່າຍຮຸ້ນ** | ສັນຍາຄ້ຳປະກັນການອອກຈຳໜ່າຍຮຸ້ນລະຫວ່າງບໍລິສັດ ແລະ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ |
| **ການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນ** | ການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນທີ່ອອກຈຳໜ່າຍໃຫ້ແກ່ມວນຊົນຄັ້ງທຳອິດຕາມລະບຽບການຂອງ ສຄຄຊ ກ່ຽວກັບການອອກຈຳໜ່າຍຮຸ້ນ |
| **ສປປ ລາວ** | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| **ລາວກີບ (LAK)** | ສະກຸນເງິນກີບຂອງລາວທີ່ເປັນສະກຸນເງິນຕາມກົດໝາຍຂອງ ສປປ ລາວ |
| **API** | ສະຖາບັນປິໂຕຣລ້ຽມສະຫະລັດອາເມລິກາ (American Petroleum Institution) |
| **ISO 9001:2008** | ມາດຕະຖານຄຸນະພາບດ້ານການບໍລິຫານງານຂອງບໍລິສັດ |
| **ISO 14001:2004** | ມາດຕະຖານຄຸນະພາບດ້ານການຄຸ້ມຄອງສິ່ງແວດລ້ອມ |
| **OHSAS 18001:2007** | ມາດຕະຖານດ້ານຄວາມປອດໄພ ແລະ ສຸຂະອານະໄມຂອງພະນັກງານ |
| **UKAS** | ໜ່ວຍງານໃຫ້ບໍລິການຮັບຮອງມາດຕະຖານຂອງປະເທດອັງກິດ (United Kingdom Accreditation Service) |
| **ມາດຕາ 7 ຂອງກົດໝາຍວ່າດ້ວຍການຄ້ານ້ຳມັນເຊື້ອໄຟ ແຫ່ງຣາດຊະອານາຈັກໄທ ພ.ສ. 2543** | ຜູ້ໃດທີ່ເປັນຜູ້ຄ້ານ້ຳມັນທີ່ມີປະລິມານການຄ້າແຕ່ລະຊະນິດ ຫຼື ລວມກັນທຸກຊະນິດ ປີລະຕັ້ງແຕ່ໜຶ່ງແສນໂຕນຂຶ້ນໄປ ຫຼື ເປັນຜູ້ຄ້ານ້ຳມັນຊະນິດກ໊າສປິໂຕຣລ້ຽມແຫຼວແຕ່ພຽງຊະນິດດຽວທີ່ມີປະລິມານການຄ້າປີລະຄັ້ງ ແຕ່ຫ້າສິບພັນໂຕນຂຶ້ນໄປ ຕ້ອງໄດ້ຮັບໃບອະນຸຍາດຈາກນາຍົກລັດຖະມົນຕີ.<br>ການຂໍອະນຸຍາດອອກໃບອະນຸຍາດ ແລະ ຄຸນສົມບັດຂອງຜູ້ໄດ້ຮັບໃບອະນຸຍາດແມ່ນໃຫ້ເປັນໄປຕາມທີ່ກຳນົດຕາມກົດຂອງກະຊວງ.<br>ຜູ້ອອກອະນຸຍາດເປັນຜູ້ຄ້ານ້ຳມັນຕາມຄວາມໝາຍໃນມາດຕານີ້ ຈະຕ້ອງບໍ່ແມ່ນຜູ້ຄ້ານ້ຳມັນທີ່ເຄີຍຖືກຖອນໃບອະນຸຍາດຕາມມາດຕາ 34 ໂດຍຍັງບໍ່ພົ້ນກຳນົດໜຶ່ງປີນັບແຕ່ວັນທີຖືກຖອນໃບອະນຸຍາດ ແລະ ກຳມະການ, ຜູ້ຈັດການ ແລະ ບຸກຄົນຜູ້ມີອຳນາດໃນການຈັດການຂອງຜູ້ຂໍອະນຸຍາດຈະຕ້ອງບໍ່ແມ່ນ ກຳມະການ ຜູ້ຈັດການ ຫຼື ບຸກຄົນຜູ້ມີອຳນາດໃນການຈັດການຂອງຜູ້ຄ້ານ້ຳມັນເຊິ່ງເຄີຍຖືກຖອນໃບອະນຸຍາດ ໂດຍຍັງບໍ່ພົ້ນກຳນົດໜຶ່ງປີນັບແຕ່ວັນທີຖືກຖອນໃບອະນຸຍາດ. |

| ຄຳສັບ | ຄວາມໝາຍ |
|---|---|
| **ມາດຕາ 12 ຂອງກົດໝາຍว่าด้วยการค้าน้ำมันเชื้อไฟ แห่งธาดะอานาจักไท พ.ส. 2543** | ຜູ້ໃດທີ່ເປັນຜູ້ຂົນສົ່ງນ້ຳມັນເຊື້ອໄຟຕາມຊະນິດ ແລະ ປະລິມານທີ່ລັດຖະມົນຕີປະກາດກຳນົດ ຕ້ອງແຈ້ງຕໍ່ອະທິບໍດີຕາມແບບທີ່ອະທິບໍດີກຳນົດພາຍໃນຫົກສິບວັນທີ່ປະກາດດັ່ງກ່າວມີຜົນບັງຄັບໃຊ້.<br><br>ເມື່ອລັດຖະມົນຕີປະກາດຕາມວັກທີໜຶ່ງ ຫຼື ປະກາດປ່ຽນແປງຊະນິດ ຫຼື ປະລິມານນ້ຳມັນເຊື້ອໄຟທີ່ໄດ້ກຳນົດໄວ້ແລ້ວ ໃຫ້ຜູ້ຂົນສົ່ງນ້ຳມັນເຊື້ອໄຟທີ່ໄດ້ເຮັດການຂົນສົ່ງນ້ຳມັນເຊື້ອໄຟຢູ່ແລ້ວ ແລະ ຢູ່ໃນກໍລະນີທີ່ຈະຕ້ອງແຈ້ງຕໍ່ອະທິບໍດີຕາມທີ່ອະທິບໍດີກຳນົດພາຍໃນຫົກສິບວັນ ທີ່ປະກາດດັ່ງກ່າວມີຜົນບັງຄັບໃຊ້. ເມື່ອລາຍການຕາມທີ່ໄດ້ແຈ້ງໄວ້ຕາມວັກທີໜຶ່ງ ຫຼື ວັກທີສອງ ໄດ້ປ່ຽນແປງໄປ ແມ່ນໃຫ້ຜູ້ຂົນສົ່ງນ້ຳມັນແຈ້ງເພີ່ມເຕີມຕາມແບບທີ່ອະທິບໍດີກຳນົດພາຍໃນສາມສິບວັນນັບແຕ່ວັນທີປ່ຽນແປງ. |

ການສະຫຼຸບຂໍ້ມູນໃນເອກະສານສະບັບນີ້ ອາດຈະເປັນພຽງຂໍ້ມູນສ່ວນໜຶ່ງທີ່ກ່ຽວກັບການສະເໜີຂາຍຮຸ້ນສາມັນເພີ່ມທຶນ IPO ເຊິ່ງອາດຈະບໍ່ໄດ້ລະບຸທຸກຂໍ້ມູນທີ່ສຳຄັນທັງໝົດຕໍ່ນັກລົງທຶນ, ນັກລົງທຶນຄວນສຶກສາຂໍ້ມູນໃນໜັງສືຊວນຊື້ໂດຍລະອຽດລວມທັງປະເດັນທີ່ກ່ຽວຂ້ອງກັບຂໍ້ມູນທາງການເງິນ ແລະ ປັດໄຈຄວາມສ່ຽງຕ່າງໆກ່ອນຕັດສິນໃຈລົງທຶນ.

# ສ່ວນທີ 1
# ພາກສັງລວມ (Executive Summary)

**ສະຫຼຸບຂໍ້ມູນທີ່ສຳຄັນນີ້ເປັນພາກສ່ວນໜຶ່ງຂອງໜັງສືຊວນຊື້ ເຊິ່ງເປັນພຽງຂໍ້ມູນສະຫຼຸບກ່ຽວກັບການສະເໜີຂາຍ, ລັກສະນະ ແລະ ຄວາມສ່ຽງຂອງບໍລິສັດທີ່ສະເໜີອອກຈຳໜ່າຍຮຸ້ນ ("ບໍລິສັດ"). ດັ່ງນັ້ນ ນັກລົງທຶນຄວນສຶກສາຂໍ້ມູນໃຫ້ລະອຽດຈາກໜັງສືຊວນຊື້ສະບັບສົມບູນ ເຊິ່ງນັກລົງທຶນສາມາດຂໍຮັບຈາກຕົວແທນຈຳໜ່າຍຮຸ້ນ ຫຼື ບໍລິສັດ ຫຼື ອາດຈະສຶກສາຂໍ້ມູນໄດ້ຈາກໜັງສືຊວນຊື້ທີ່ບໍລິສັດຍື່ນຕໍ່ ສຄຄຊ ໄດ້ທີ່ Website ຂອງ ຕລຊລ (http://www.lsx.com.la).**

ສະຫຼຸບຂໍ້ມູນສຳຄັນຂອງການສະເໜີອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນເປັນຄັ້ງທຳອິດ ("IPO")
ໂດຍບໍລິສັດຈະຍື່ນຄຳຮ້ອງຂໍນຳຮຸ້ນສາມັນເຂົ້າຈົດທະບຽນຊື້ຂາຍໃນຕະຫຼາດຫຼັກຊັບລາວ
ໄລຍະເວລາການສະເໜີຂາຍ: ຮຸ້ນສາມັນເພີ່ມທຶນທີ່ສະເໜີອອກຈຳໜ່າຍໃຫ້ແກ່ມວນຊົນຄັ້ງທຳອິດວັນທີ 1,3-4 ທັນວາ 2014

**ຂໍ້ມູນກ່ຽວກັບການສະເໜີອອກຈຳໜ່າຍ:**

| | |
|---|---|
| ຜູ້ສະເໜີອອກຈຳໜ່າຍ: | ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) |
| ທຶນຈົດທະບຽນທີ່ຊຳລະແລ້ວ: | 350,000,000,000 ກີບ |
| ໃບທະບຽນວິສາຫະກິດເລກທີ: | 418/ຈທວ, ລົງວັນທີ 14 ຕຸລາ 2014 |
| ປະເພດທຸລະກິດ: | ນຳເຂົ້າ, ຈັດຈຳໜ່າຍນ້ຳມັນເຊື້ອໄຟ ແລະ ອາຍແກັດ ແບບຄົບວົງຈອນ ໃນ ສປປ ລາວ |
| ຈຳນວນຮຸ້ນທີ່ສະເໜີອອກຈຳໜ່າຍ: | 60,000,000 ຮຸ້ນ |
| ມູນຄ່າກຳນົດ (Par value): | 2,000 ກີບ/ຮຸ້ນ |
| ລາຄາສະເໜີອອກຈຳໜ່າຍໃຫ້ແກ່ມວນຊົນ (IPO): | 4,000 ກີບ/ຮຸ້ນ |

ສັດສ່ວນການສະເໜີຂາຍ:

1.) ສະເໜີອອກຈຳໜ່າຍໃຫ້ແກ່ຜູ້ລົງທຶນໃນ ສປປ.ລາວ ຈຳນວນ 30,000,000 ຮຸ້ນ
2.) ສະເໜີອອກຈຳໜ່າຍໃຫ້ແກ່ຜູ້ລົງທຶນໃນຕ່າງປະເທດ ຈຳນວນ 30,000,000 ຮຸ້ນ

ເວັບໄຊບໍລິສັດ: www.petrotradelaos.com

**ເປົ້າໝາຍໃນການນຳໃຊ້ເງິນທີ່ຮັບຈາກການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນ:**

| ວັດຖຸປະສົງ | ມູນຄ່າການລົງທຶນທັງໝົດ | ຈຳນວນເງິນທີ່ໃຊ້ຈາກການລະດົມທຶນ IPO | ຄາດຄະເນໄລຍະເວລາທີ່ນຳໃຊ້ເງິນຈາກການອອກຈຳໜ່າຍຫຼັກຊັບ |
|---|---|---|---|
| 1.) ລົງທຶນໃນການສ້າງສະຖານີບໍລິການນ້ຳມັນ ຈຳນວນ 20 ສະຖານີ ທົ່ວປະເທດ | ປະມານ 68 ຕື້ກີບ | ບໍ່ຫຼຸດ 54 ຕື້ກີບ | ທ້າຍປີ2014 - ຕົ້ນປີ 2015 |
| 2.) ໃຊ້ເປັນເງິນທຶນໝຸນວຽນເພື່ອບໍລິຫານການສັ່ງຊື້ນ້ຳມັນຈາກຕ່າງປະເທດ | ປະມານ 80 ຕື້ກີບ | ບໍ່ຫຼຸດ 42 ຕື້ກີບ | ປີ 2015 |
| 3.) ລົງທຶນໃນການບໍລິຫານລະບົບການຂົນສົ່ງ | ປະມານ 40 ຕື້ກີບ | ບໍ່ຫຼຸດ 24 ຕື້ກີບ | ປີ 2015 |
| ລວມ | ປະມານ 188 ຕື້ກີບ | ບໍ່ຫຼຸດ 120 ຕື້ກີບ | |

**ນະໂຍບາຍການຈ່າຍເງິນປັນຜົນ:**

ບໍລິສັດຈະຈ່າຍເງິນປັນຜົນໃຫ້ແກ່ບັນດາຜູ້ຖືຮຸ້ນໃນອັດຕາສ່ວນບໍ່ຫຼຸດ 50 ສ່ວນຮ້ອຍຂອງກຳໄລສຸດທິ ພາຍຫຼັງຫັກເງິນຄັງສຳຮອງຕ່າງໆທຸກປະເພດ ຕາມທີ່ຮັບກຳນົດໄວ້ໃນກົດລະບຽບຂອງບໍລິສັດ ແລະ ກົດໝາຍບັງຄັບ (ຖ້າມີ), ບໍລິສັດຈະບໍ່ມີການຈ່າຍເງິນປັນຜົນເມື່ອບໍລິສັດຍັງມີຂາດທຶນຕໍ່ເນື່ອງໃນປີຜ່ານມາ.

ມະຕິຕົກລົງຕ່າງໆຂອງສະພາບໍລິຫານທີ່ອະນຸມັດໃຫ້ຈ່າຍເງິນປັນຜົນ ແລະ ຈຳນວນຄັ້ງໃນການຈ່າຍເງິນປັນຜົນຕໍ່ປີ ຕ້ອງຖືກນຳສະເໜີເພື່ອຂໍອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນເສຍກ່ອນ ແລະ ຕ້ອງໃຫ້ສອດຄ່ອງກັບລະບຽບຫຼັກການທີ່ກ່ຽວຂ້ອງຕ່າງໆ.

ເຖິງຢ່າງໃດກໍ່ຕາມການຈ່າຍເງິນປັນຜົນດັ່ງກ່າວ ອາດຈະມີການປ່ຽນແປງຂຶ້ນຢູ່ກັບການພິຈາລະນາ ແລະ ອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ. ການພິຈາລະນາອາດຈະອີງໃສ່ສະພາບເສດຖະກິດ, ກະແສເງິນສົດ, ແຜນການລົງທຶນ, ເງື່ອນໄຂ ແລະ ຂໍ້ກຳນົດໃນສັນຍາຕ່າງໆທີ່ບໍລິສັດຜູກພັນຢູ່ ລວມທັງຂໍ້ຈຳກັດທາງກົດໝາຍ ແລະ ຄຽງຄູ່ກັບຄວາມພຽງພໍຂອງທຶນໃນການຮອງຮັບການຂະຫຍາຍຕົວຂອງທຸລະກິດເຊື້ອໄຟໃນອະນາຄົດ.

ບໍລິສັດຈ່າຍເງິນປັນຜົນເປັນສະກຸນເງິນກີບ ແລະ ຜູ້ຖືຮຸ້ນຈະຮັບການຍົກເວັ້ນອາກອນລາຍຮັບຈາກເງິນປັນຜົນ.

**ລາຍລະອຽດກ່ຽວກັບຜູ້ສະເໜີອອກຈຳໜ່າຍຮຸ້ນ:**

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (Petroleum Trading Lao Public Company ຫຼື "PTL") ເປັນຜູ້ດຳເນີນທຸລະກິດກ່ຽວກັບການນຳເຂົ້າ ແລະ ຈຳໜ່າຍນ້ຳມັນເຊື້ອໄຟ ແລະ ອາຍແກັດຢູ່ໃນ ສປປ ລາວ ເຊິ່ງລວມມີຜະລິດຕະພັນຫຼັກຢູ່ 5 ປະເພດຄື: 1. ນ້ຳມັນກາຊວນ (Diesel), 2.ນ້ຳມັນແອັດຊັງທຳມະດາ (Benzene Regular 91), 3. ນ້ຳມັນແອັດຊັງພິເສດ (Benzene Super 95), 4. ນ້ຳມັນເຕົາ (Bunker Oil) ແລະ 5. ນ້ຳມັນເຄື່ອງ (Lubricant) ຜ່ານສະຖານນີບໍລິການນ້ຳມັນຄົບວົງຈອນ. ນອກຈາກການຈຳໜ່າຍຜ່ານສະຖານີບໍລິການນ້ຳມັນແລ້ວ ບໍລິສັດຍັງຮັບຈຳໜ່າຍໂດຍກົງໄປຍັງລູກຄ້າໂຄງການ, ໂຮງງານອຸດສາຫະກຳ, ບໍລິສັດຂົນສົ່ງ ແລະ ຜູ້ຂາຍສົ່ງນ້ຳມັນ (Jobber) ໃນ ສປປ ລາວ.

ຜະລິດຕະພັນທີ່ບໍລິສັດນຳເຂົ້າມາຈຳໜ່າຍແມ່ນນຳເຂົ້າມາຈາກຜູ້ຄ້ານ້ຳມັນເຊື້ອໄຟຕາມມາດຕາ 7 ຂອງກົດໝາຍວ່າດ້ວຍການຄ້ານ້ຳມັນເຊື້ອໄຟແຫ່ງຣາດຊະອານາຈັກໄທ ພ.ສ 2543. ບໍລິສັດຮັບຈັດຊື້ນ້ຳມັນທີ່ມີຄຸນະພາບຈາກຜູ້ສະໜອງທີ່ມີຊື່ສຽງ ແລະ ເປັນທີ່ຍອມຮັບໃນລະດັບສາກົນຄື: Chevron (Thailand) Limited (Chevron), ESSO (Thailand) Public Company Limited (ESSO), IRPC Public Company Limited (IRPC) ແລະ The Shell Company of Thailand Limited (Shell). ນ້ຳມັນເຊື້ອໄຟທີ່ນຳເຂົ້າມາແມ່ນຈະຖືກເກັບຮັກສາໄວ້ໃນສາງນ້ຳມັນຂອງບໍລິສັດທີ່ຕັ້ງຢູ່ຕາມຕົວເມືອງ ຫຼື ຢູ່ໃນເຂດແຂວງທີ່ເປັນຈຸດຍຸດທະສາດທີ່ສຳຄັນ ແລະ ມີຊາຍແດນຕິດກັບປະເທດໄທຈຳນວນ 5 ສາງ ເຊິ່ງສາມາດບັນຈຸນ້ຳມັນຮັບ 3,610,000 ລິດ ແລ້ວຈຶ່ງນຳນ້ຳມັນດັ່ງກ່າວໄປຈຳໜ່າຍຕໍ່ຜ່ານທາງສະຖານີບໍລິການນ້ຳມັນຂອງບໍລິສັດພາຍໃຕ້ເຄື່ອງໝາຍການຄ້າ "ພລັສ" ຫຼື "PLUS" ທີ່ປັດຈຸບັນມີສາຂາຢູ່ທົ່ວ ສປປ ລາວ ຈຳນວນ 107 ສະຖານີ ໂດຍມີຮູບແບບການຄຸ້ມຄອງບໍລິຫານບັນດາສະຖານີ 2 ຮູບແບບຄື:

1) ບໍລິສັດລົງທຶນ ແລະ ບໍລິຫານເອງ (Company Owned, Company Operated: COCO) ຈຳນວນ 8 ສາຂາ
2) ບໍລິສັດຮ່ວມລົງທຶນ (Company Owned, Dealer Operated: CODO) ຈຳນວນ 99 ສາຂາ.

**ລາຍຊື່ ແລະ ສັດສ່ວນການຖືຮຸ້ນຂອງກຸ່ມຜູ້ຖືຮຸ້ນ:**

| ຜູ້ຖືຮຸ້ນ | ກ່ອນການອອກຈຳໜ່າຍຮຸ້ນ IPO | | ຫຼັງການອອກຈຳໜ່າຍຮຸ້ນ IPO | |
|---|---|---|---|---|
| | ຈຳນວນຮຸ້ນ | ສ່ວນຮ້ອຍ | ຈຳນວນຮຸ້ນ | ສ່ວນຮ້ອຍ |
| **1. ກຸ່ມຄອບຄົວຂອງ ທ່ານ ຈັນທອນ ສິດທິໄຊ** | **173,400,000** | **99.085%** | **173,400,000** | **73.789%** |
| 1.1 ທ່ານ ຈັນທອນ ສິດທິໄຊ | 129,250,000 | 73.857% | 129,250,000 | 55.000% |
| 1.2 ທ່ານ ນາງ ສະຫວັນທອງ ພິງສະຫວັນ | 43,750,000 | 25.000% | 43,750,000 | 18.617% |
| 1.3 ທ່ານ ນາງ ເວີນວິສາ ອານຸລັງສີ | 100,000 | 0.057% | 100,000 | 0.043% |
| 1.4 ທ່ານ ວຽງຄອນ ສິດທິໄຊ | 100,000 | 0.057% | 100,000 | 0.043% |
| 1.5 ທ່ານ ນາງ ມະນີວອນ ສິດທິໄຊ | 100,000 | 0.057% | 100,000 | 0.043% |
| 1.6 ທ່ານ ນາງ ສະຫວັນພອນ ພິງສະຫວັນ | 100,000 | 0.057% | 100,000 | 0.043% |
| **2. ກຸ່ມຜູ້ຖືຮຸ້ນອື່ນໆ** | **1,600,000** | **0.915%** | **1,600,000** | **0.680%** |
| 2.1 ທ່ານ ນາງ ຈັນທະດອມ ເມກາສະຫວັນ | 800,000 | 0.457% | 800,000 | 0.340% |
| 2.2 ທ່ານ ບຸນຖັນ ຈິດຕະວົງ | 400,000 | 0.229% | 400,000 | 0.170% |
| 2.3 ທ່ານ ຕະກູນສິນ ຊາພັກດີ | 400,000 | 0.229% | 400,000 | 0.170% |
| **3. ນັກລົງທຶນທົ່ວໄປ** | **-** | **-** | **60,000,000** | **25.531%** |
| **ລວມ** | **175,000,000** | **100.000%** | **235,000,000** | **100.000%** |

## ສະພາບໍລິຫານ (Board of Directors) / ຄະນະກຳມະການກວດກາພາຍໃນ (Audit Committee):

| ລ/ດ | ລາຍຊື່ | ຕຳແໜ່ງ |
|---|---|---|
| 1 | ທ່ານ ຫວ່າງ ຣັຕນະວົງ | ປະທານສະພາບໍລິຫານ / ປະທານຄະນະກຳມະການກວດກາພາຍໃນ / ສະມາຊິກອິດສະຫຼະ |
| 2 | ທ່ານ ນາງ ສະຫວັນທອງ ພົງສະຫວັນ | ຮອງປະທານສະພາບໍລິຫານ |
| 3 | ທ່ານ ຈັນທອນ ສິດທິໄຊ | ຮອງປະທານສະພາບໍລິຫານ / ຜູ້ອຳນວຍການໃຫຍ່ |
| 4 | ທ່ານ ນາງ ດາລີ ພົນເສນາ | ສະມາຊິກສະພາບໍລິຫານ / ຮອງປະທານຄະນະກຳມະການກວດກາພາຍໃນ / ສະມາຊິກອິດສະຫຼະ |
| 5 | ທ່ານ ໜູພັນ ມະຫາພົນ | ສະມາຊິກສະພາບໍລິຫານ / ກຳມະການກວດກາພາຍໃນ / ສະມາຊິກອິດສະຫຼະ |
| 6 | ທ່ານ ນາງ ຈັນທະດອມ ເມກສະຫວັນ | ສະມາຊິກສະພາບໍລິຫານ |
| 7 | ທ່ານ ບຸນຖົນ ຈິດຕະວົງ | ສະມາຊິກສະພາບໍລິຫານ |
| 8 | ທ່ານ ໂພໄຊ ຈັນທະວົງສາ | ສະມາຊິກສະພາບໍລິຫານ |
| 9 | ທ່ານ ວຽງຄອນ ສິດທິໄຊ | ສະມາຊິກສະພາບໍລິຫານ |

## ໂຄງສ້າງລາຍຮັບຂອງບໍລິສັດ:

ຕາຕະລາງລາຍຮັບແຍກຕາມຜະລິດຕະພັນ

| ລາຍລະອຽດ | ປີ 2011 | | ປີ 2012 | | ປີ 2013 | |
|---|---|---|---|---|---|---|
| | ມູນຄ່າ (ລ້ານກີບ) | % | ມູນຄ່າ (ລ້ານກີບ) | % | ມູນຄ່າ (ລ້ານກີບ) | % |
| 1. ລາຍຮັບຈາກການຈຳໜ່າຍນ້ຳມັນເຊື້ອໄຟລວມ | 902,462 | 99.71% | 1,022,507 | 100.34% | 1,080,802 | 100.54% |
| ລາຍຮັບຈາກການຂາຍນ້ຳມັນກາຊວນ | 716,446 | 79.16% | 856,412 | 84.04% | 856,004 | 79.63% |
| ລາຍຮັບຈາກການຂາຍນ້ຳມັນແອັດຊັງທຳມະດາ | 184,669 | 20.40% | 164,023 | 16.10% | 221,343 | 20.59% |
| ລາຍຮັບຈາກການຂາຍນ້ຳມັນແອັດຊັງພິເສດ | - | - | - | - | 1,139 | 0.10% |
| ລາຍຮັບຈາກການຂາຍນ້ຳມັນເຕົາ | - | - | - | - | 389 | 0.04% |
| ລາຍຮັບຈາກການຂາຍນ້ຳມັນເຄື່ອງ | 1,346 | 0.15% | 2,072 | 0.20% | 1,927 | 0.18% |
| 2. ລາຍຮັບຈາກການຈຳໜ່າຍຜະລິດຕະພັນອື່ນ | 2,618 | 0.29% | - | - | - | - |
| **ລວມລາຍຮັບຈາກການຂາຍ** | **905,080** | **100.00%** | **1,022,507** | **100.34%** | **1,080,802** | **100.54%** |
| ສ່ວນຫຼຸດສິນຄ້າ | - | - | (3,495) | (0.34%) | 5,762 | (0.54%) |
| **ລວມລາຍຮັບ-ສຸດທິ** | **905,080** | **100.00%** | **1,019,012** | **100.00%** | **1,075,040** | **100.00%** |

## ປັດໄຈຄວາມສ່ຽງ:

1. ຄວາມສ່ຽງໃນການປະກອບທຸລະກິດ
   - 1.1. ຄວາມສ່ຽງທີ່ເກີດຈາກຄວາມຜັນຜວນຂອງລາຄານ້ຳມັນ
   - 1.2. ຄວາມສ່ຽງຈາກການແຂ່ງຂັນທາງທຸລະກິດ
   - 1.3. ຄວາມສ່ຽງຈາກການເພິ່ງພາຜູ້ຄ້ານ້ຳມັນລາຍໃຫຍ່ພຽງຜູ້ດຽວ
   - 1.4. ຄວາມສ່ຽງຈາກການບໍລິຫານຈັດການຂົນສົ່ງ
   - 1.5. ຄວາມສ່ຽງກ່ຽວກັບການຕໍ່ອາຍຸສະຖານີບໍລິການແບບຮ່ວມລົງທຶນ
2. ຄວາມສ່ຽງທາງດ້ານການເງິນ
   - 2.1. ຄວາມສ່ຽງຈາກອັດຕາແລກປ່ຽນ
   - 2.2. ຄວາມສ່ຽງຈາກການໃຫ້ເງິນກູ້ຢືມແກ່ບໍລິສັດທີ່ກ່ຽວພັນ
3. ຄວາມສ່ຽງໃນການຄຸ້ມຄອງບໍລິຫານ
   - 3.1. ຄວາມສ່ຽງຈາກການເພິ່ງພາຜູ້ບໍລິຫານຫຼັກ
   - 3.2. ຄວາມສ່ຽງດ້ານການຄຸ້ມຄອງບໍລິຫານໂດຍກຸ່ມຜູ້ຖືຮຸ້ນໃຫຍ່

4. ຄວາມສ່ຽງໃນການສະເໜີຂາຍຮຸ້ນ

4.1. ຄວາມສ່ຽງຈາກການທີ່ບໍລິສັດຢູ່ລະຫວ່າງການຍື່ນຄຳຮ້ອງຂໍອະນຸຍາດຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຂໍຈົດທະບຽນໃນຕະຫຼາດຫຼັກຊັບລາວ

**ສະຫຼຸບຖານະການເງິນ ແລະ ຜົນການດຳເນີນງານ:**

| ລາຍລະອຽດ | ປີ 2011 | ປີ 2012 | ປີ 2013 |
|---|---|---|---|
| ລວມຊັບສິນ: ລ້ານກີບ | 202,814 | 280,883 | 561,573 |
| ລວມໜີ້ສິນ: ລ້ານກີບ | 105,605 | 178,768 | 192,440 |
| ລວມສ່ວນຂອງຜູ້ຖືຮຸ້ນ: ລ້ານກີບ | 97,208 | 102,114 | 369,133 |
| ລາຍຮັບຈາກການຂາຍ: ລ້ານກີບ | 905,080 | 1,019,012 | 1,075,040 |
| ຕົ້ນທຶນການຂາຍ: ລ້ານກີບ | (843,103) | (948,046) | (1,003,917) |
| ກຳໄລຂັ້ນຕົ້ນ: ລ້ານກີບ | 61,977 | 70,966 | 71,123 |
| ກຳໄລສຸດທິ: ລ້ານກີບ | 21,608 | 26,514 | 19,133 |
| ກຳໄລສຸດທິ: ຕໍ່ຮຸ້ນ | 21,608,372 | 26,514,447 | 109.33 |
| ມູນຄ່າທີ່ຕັ້ງໄວ້: ຕໍ່ຮຸ້ນ | 75,600,000 | 75,600,000 | 2,000 |
| ຈຳນວນຮຸ້ນສາມັນທີ່ຊຳລະແລ້ວ: ຮຸ້ນ | 1,000 | 1,000 | 175,000,000 |
| ອັດຕາສ່ວນໜີ້ສິນຕໍ່ສ່ວນຂອງຜູ້ຖືຮຸ້ນ (D/E): ເທົ່າ | 1.09 | 1.75 | 0.52 |
| ອັດຕາຜົນຕອບແທນຕໍ່ຊັບສິນ (ROA) : ສ່ວນຮ້ອຍ | 10.65% | 10.96% | 4.54% |
| ອັດຕາຜົນຕອບແທນຕໍ່ສ່ວນຂອງຜູ້ຖືຮຸ້ນ (ROE) : ສ່ວນຮ້ອຍ | 22.23% | 26.60% | 8.12% |

**ຄຳອະທິບາຍກ່ຽວກັບຜົນການດຳເນີນງານ ແລະ ຂໍ້ມູນທາງການເງິນ 3 ປີ (ປີ 2011- ປີ 2013):**

**<u>ຜົນການດຳເນີນງານ:</u>**

ບໍລິສັດມີລາຍຮັບຈາກການຂາຍສິນຄ້າເພີ່ມຂຶ້ນຢ່າງຕໍ່ເນື່ອງຈາກ 905,080 ລ້ານກີບ ໃນ 2011 ເພີ່ມຂຶ້ນມາເປັນ 1,019,012 ລ້ານກີບ ໃນປີ 2012 ຫຼື ເພີ່ມຂຶ້ນເທົ່າກັບ 12.59 ສ່ວນຮ້ອຍເມື່ອທຽບກັບລາຍຮັບໃນການຂາຍສິນຄ້າໃນປີຜ່ານມາ ແລະ ເພີ່ມຂຶ້ນມາເປັນ 1,075,040 ລ້ານກີບ ໃນປີ 2013 ຫຼື ເພີ່ມຂຶ້ນເທົ່າກັບ 5.50 ສ່ວນຮ້ອຍເມື່ອທຽບກັບລາຍຮັບໃນການຂາຍສິນຄ້າໃນປີຜ່ານມາ. ລາຍຮັບຫຼັກຈາກການຂາຍສິນຄ້າທີ່ສຳຄັນສ່ວນໃຫຍ່ແມ່ນມາຈາກການຈຳໜ່າຍນ້ຳມັນເຊື້ອໄຟ ເຊິ່ງເພີ່ມຂຶ້ນຢ່າງຕໍ່ເນື່ອງຕາມການຂະຫຍາຍຕົວຂອງທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟ. ໃນຊ່ວງທີ່ຜ່ານມາ ບໍລິສັດມີການລົງທຶນເພີ່ມໃນການຂະຫຍາຍສະຖານີບໍລິການນ້ຳມັນໃນຮູບແບບ CODO ແລະ ມີລິດບັນທຸກຂົນສົ່ງນ້ຳມັນເຊື້ອໄຟເພີ່ມຂຶ້ນຢ່າງຕໍ່ເນື່ອງ ອັນເປັນປັດໄຈສຳຄັນທີ່ເຮັດໃຫ້ທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟຂອງບໍລິສັດມີການຂະຫຍາຍຕົວ. ໃນຂະນະດຽວກັນຄ່າໃຊ້ຈ່າຍຂອງບໍລິສັດກໍ່ເພີ່ມຂຶ້ນໄປພ້ອມໆກັນກັບການຂະຫຍາຍຕົວຂອງທຸລະກິດ, ເນື່ອງຈາກບໍລິສັດມີຄ່າໃຊ້ຈ່າຍໃນການຂາຍ, ຄ່າໃຊ້ຈ່າຍການບໍລິຫານ ແລະ ດອກເບ້ຍຈ່າຍເພີ່ມຂຶ້ນໄດ້ແກ່: ຄ່າໃຊ້ຈ່າຍກ່ຽວກັບພະນັກງານ, ຄ່າເຊົ່າ, ຄ່າຫຼຸ້ຍຫ້ຽນ ແລະ ຄ່າໃຊ້ຈ່າຍຕັດຈ່າຍ, ຄ່າສາທາລະນຸປະโภ, ຄ່າບຳລຸງຮັກສາ ແລະ ສ້ອມແປງ ໂດຍມີແນວโน้มເພີ່ມຂຶ້ນຢ່າງຕໍ່ເນື່ອງຕາມຊັບສິນທີ່ໃຊ້ປະກອບທຸລະກິດ, ຄ່າໃຊ້ຈ່າຍດອກເບ້ຍທະນາຄານ ໂດຍບໍລິສັດມີຄ່າໃຊ້ຈ່າຍລວມເທົ່າກັບ 31,398 ລ້ານກີບ ໃນປີ 2011, ເພີ່ມຂຶ້ນເປັນ 38,615 ລ້ານກີບ ໃນປີ 2012 ແລະ ເພີ່ມຂຶ້ນເປັນ 46,683 ລ້ານກີບ ໃນປີ 2013 ຫຼື ຄິດເປັນສ່ວນຮ້ອຍເມື່ອທຽບກັບລາຍຮັບລວມຂອງແຕ່ລະປີເທົ່າກັບ 3.47 ສ່ວນຮ້ອຍຂອງລາຍຮັບຈາກການຂາຍສິນຄ້າ ໃນປີ 2011, ເພີ່ມຂຶ້ນ 3.79 ສ່ວນຮ້ອຍຂອງລາຍຮັບຈາກການຂາຍສິນຄ້າໃນປີ 2012 ແລະ ເພີ່ມຂຶ້ນເປັນ 4.34 ສ່ວນຮ້ອຍຂອງລາຍຮັບຈາກການຂາຍສິນຄ້າ ໃນປີ 2013.

ບໍລິສັດມີກຳໄລສຸດທິເທົ່າກັບ 21,608 ລ້ານກີບໃນປີ 2011, ເພີ່ມຂຶ້ນເປັນ 26,514 ລ້ານກີບ ໃນປີ 2012 ຫຼື ຂະຫຍາຍຕົວເທົ່າກັບ 22.70 ສ່ວນຮ້ອຍທຽບກັບປີ 2011, ເນື່ອງຈາກໃນປີ 2012 ບໍລິສັດມີລາຍຮັບຈາກການຂາຍສິນຄ້າເພີ່ມຂຶ້ນເປັນຈຳນວນ 1,019,012 ລ້ານກີບ ຫຼື ຄິດເປັນສ່ວນຮ້ອຍ 12.59 ສ່ວນຮ້ອຍ ຈາກປີກ່ອນ ບໍລິສັດຍັງສືບຕໍ່ຄວບຄຸມຕົ້ນທຶນຮັບຢ່າງມີປະສິດທິພາບ ໂດຍເຫັນໄດ້ຈາກຕົ້ນທຶນຂາຍຍັງມີສັດສ່ວນເທົ່າເດີມຈາກ ປີ 2011-2012 ປະມານ 93 ສ່ວນຮ້ອຍຂອງ

ລາຍຮັບຈາກການຂາຍສິນຄ້າສົ່ງຜົນໃຫ້ບໍລິສັດມີກຳໄລສຸດທິເພີ່ມຂຶ້ນ. ສຳລັບປີ 2013 ບໍລິສັດມີກຳໄລສຸດທິເທົ່າກັບ 19,133 ລ້ານກີບ ຫຼື ຫຼຸດລົງ 27.84 ສ່ວນຮ້ອຍທຽບກັບປີ 2012 ສາເຫດຈາກລາຍຈ່າຍໃນການຂາຍ ແລະ ບໍລິຫານ ເພີ່ມຂຶ້ນ 22.44 ສ່ວນຮ້ອຍທຽບກັບປີ 2012 ຈຶ່ງເຮັດໃຫ້ບໍລິສັດມີກຳໄລສຸດທິຫຼຸດລົງ. ເຖິງແມ່ນວ່າລາຍຈ່າຍທາງດ້ານດອກເບ້ຍ ແລະ ອາກອນກຳໄລຫຼຸດລົງກໍ່ຕາມ.

**<u>ຂໍ້ມູນທາງການເງິນ:</u>**

<u>ຊັບສິນລວມ</u>

ໃນວັນທີ 31 ທັນວາ 2011, 2012 ແລະ 2013 ບໍລິສັດມີຊັບສິນລວມເທົ່າກັບ 202,814 ລ້ານກີບ, 280,883 ລ້ານກີບ ແລະ 561,573 ລ້ານກີບ ຕາມລຳດັບ. ຊັບສິນລວມເພີ່ມຂຶ້ນທີ່ສຳຄັນມາຈາກການເພີ່ມຂຶ້ນຂອງອາຄານສິ່ງປຸກສ້າງ, ອຸປະກອນຮັບໃຊ້ງານ ລວມໄປເຖິງການຂະຫຍາຍສະຖານີບໍລິການນ້ຳມັນເພື່ອຮອງຮັບກັບຄວາມຕ້ອງການຂອງຜູ້ຊົມໃຊ້, ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆທີ່ເພີ່ມຂຶ້ນຈາກການຂະຫຍາຍຕົວຂອງບໍລິສັດເປັນຕົ້ນ.

<u>ໜີ້ສິນລວມ</u>

ໃນວັນທີ 31 ທັນວາ 2011, 2012 ແລະ 2013 ໜີ້ສິນທັງໝົດຂອງບໍລິສັດເທົ່າກັບ 105,605 ລ້ານກີບ, 178,768 ລ້ານກີບ ແລະ 192,440 ກີບ ຕາມລຳດັບເປັນຕົ້ນແມ່ນການເພີ່ມຂຶ້ນຂອງເງິນກູ້ຢືມໄລຍະສັ້ນ, ໄລຍະຍາວຈາກສະຖາບັນທະນາຄານ ແລະ ໜີ້ສິນພາຍໃຕ້ສັນຍາເຊົ່າສິນເຊື່ອເພື່ອໃຊ້ໃນການດຳເນີນງານ ແລະ ຂະຫຍາຍທຸລະກິດ, ໃຊ້ເປັນເງິນທຶນໝຸນວຽນຂອງທຸລະກິດ ລວມເຖິງການເພີ່ມຂຶ້ນຂອງເຈົ້າໜີ້ການຄ້າ ແລະ ເຈົ້າໜີ້ອື່ນ.

<u>ສ່ວນຂອງຜູ້ຖືຮຸ້ນ</u>

ໃນວັນທີ 31 ທັນວາ 2011-2013 ທຶນຂອງຜູ້ຖືຮຸ້ນລວມມີຈຳນວນ 97,208 ລ້ານກີບ, 102,114 ລ້ານກີບ ແລະ 369,133 ລ້ານກີບ ຕາມລຳດັບ ໂດຍມີລາຍການທີ່ສຳຄັນຄື: ທຶນຈົດທະບຽນທີ່ຊຳລະແລ້ວເທົ່າກັບ 75,600 ລ້ານກີບ, 75,600 ລ້ານກີບ ແລະ 350,000 ລ້ານກີບ ຕາມລຳດັບ ເພື່ອໃຊ້ໃນການຂະຫຍາຍ ແລະ ລົງທຶນໃນທຸລະກິດ ແລະ ມີກຳໄລສະສົມ ເທົ່າກັບ 21,608 ລ້ານກີບ, 26,514 ລ້ານກີບ ແລະ 19,133 ລ້ານກີບ ຕາມລຳດັບ.

ນັກລົງທຶນສຳພັນ: ທ່ານ ຄຳພຸດ ສົມບູນ ໂທລະສັບ: (+85621) 264834
ອີເມວ: khamphout.sb@petrotradelaos.com

## 1.1 ບໍລິສັດອອກຈຳໜ່າຍຮຸ້ນ

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (Petroleum Trading Lao Public Company) ເຊິ່ງຕໍ່ໄປນີ້ເອີ້ນວ່າ ("ບໍລິສັດ" ຫຼື "PTL") ສ້າງຕັ້ງໂດຍ ທ່ານ ຈັນທອນ ສິດທິໄຊ (ທ່ານ ຈັນທອນ) ແລະ ພັນລະຍາຄື ທ່ານ ນາງ ສະຫວັນທອງ ພິງສະຫວັນ ເຊິ່ງທັງສອງທ່ານລ້ວນແຕ່ເປັນນັກທຸລະກິດທີ່ມີຊື່ສຽງໃນ ສປປ ລາວ ແລະ ມີປະສົບການໃນການປະກອບທຸລະກິດທີ່ຫຼາກຫຼາຍເປັນຕົ້ນແມ່ນທຸລະກິດນຳເຂົ້າ ແລະ ສົ່ງອອກສິນຄ້າຫຼາຍປະເພດໃນ ສປປ ລາວ.

ທີ່ຜ່ານມາ ທັງສອງທ່ານໄດ້ມີໂອກາດເດີນທາງເພື່ອສຳຫຼວດພື້ນທີ່ໃນຕົວເມືອງຕ່າງໆທັງໃນເຂດຊຸມຊົນ ແລະ ເຂດຊົນນະບົດຫ່າງໄກສອກຫຼີກເກືອບທຸກພື້ນທີ່ໃນ ສປປ ລາວ ເຊິ່ງທ່ານໄດ້ເບິ່ງເຫັນຄວາມຫຍຸ້ງຍາກໃນການເຂົ້າເຖິງແຫຼ່ງພະລັງງານ ຫຼື ນ້ຳມັນໂດຍສະເພາະໃນເຂດພື້ນທີ່ຫ່າງໄກສອກຫຼີກ ແລະ ເຫັນວ່ານ້ຳມັນທີ່ຂາຍໃນເຂດດັ່ງກ່າວແມ່ນມີລາຄາແພງເກີນກວ່າລາຄາປົກກະຕິທີ່ລັດຖະບານກຳນົດ. ດ້ວຍເຫດນັ້ນທ່ານຈຶ່ງເຫັນໄດ້ເຖິງຄວາມຕ້ອງການໃນການຊົມໃຊ້ນ້ຳມັນ ປະກອບກັບແນວโน้มການພັດທະນາເສດຖະກິດຈາກພາກລັດຖະບານ ໂດຍຖືເອົານ້ຳມັນເປັນຊັບພະຍາກອນພື້ນຖານທີ່ສຳຄັນໃນການປະກອບສ່ວນໃນການພັດທະນາເສດຖະກິດຂອງປະເທດ. ສະນັ້ນ, ທ່ານ ຈັນທອນ ຈຶ່ງມີແນວຄວາມຄິດໃນການທີ່ຈະສ້າງສະຖານີບໍລິການນ້ຳມັນທີ່ມີຄຸນະພາບ ແລະ ລາຄາຍຸຕິທຳໃຫ້ແກ່ປະຊາຊົນໃນຂົງເຂດດັ່ງກ່າວ ແລະ ກະຈາຍທົ່ວ ສປປ ລາວ, ດ້ວຍເຫດຜົນທີ່ກ່າວມາຂ້າງເທິງນັ້ນ ຈຶ່ງເປັນຈຸດເລີ່ມຕົ້ນຂອງການສ້າງຕັ້ງບໍລິສັດຂຶ້ນໃນວັນທີ 6 ກຸມພາ 2008 ດ້ວຍທຶນຈົດທະບຽນເບື້ອງຕົ້ນ 28.80 ຕື້ກີບ ເພື່ອໃຫ້ບໍລິການນຳເຂົ້າ ແລະ ຈັດຈຳໜ່າຍນ້ຳມັນຜ່ານທາງສະຖານີບໍລິການນ້ຳມັນ, ໂຄງການກໍ່ສ້າງຕ່າງໆລວມໄປເຖິງໂຄງການກໍ່ສ້າງພື້ນຖານໂຄງລ່າງ (Infrastructure Project) ໂດຍມີສຳນັກງານໃຫຍ່ຕັ້ງຢູ່ບ້ານ ສຸນັນທາ, ເມືອງ ໄກສອນພົມວິຫານ, ແຂວງ ສະຫວັນນະເຂດ.

ນັບແຕ່ປີ 2009 ເປັນຕົ້ນມາທຸລະກິດຂອງບໍລິສັດມີການຈະເລີນເຕີບໂຕຢ່າງຕໍ່ເນື່ອງ ດ້ວຍວິໄສທັດຂອງ ທ່ານ ຈັນທອນ ແລະ ທີມຜູ້ບໍລິຫານຂອງບໍລິສັດ ທີ່ແນໃສ່ການພັດທະນາດ້ານການຄວບຄຸມຄຸນະພາບຂອງຜະລິດຕະພັນ ແລະ ຄຸນະພາບຂອງການບໍລິການ ປະກອບກັບຄວາມຕ້ອງການຊົມໃຊ້ນ້ຳມັນໃນພາກທຸລະກິດ ແລະ ພາກຄົວເຮືອນ. ໃນປີ 2009 ບໍລິສັດໄດ້ມີການລົງທຶນສ້າງຕັ້ງສາງນ້ຳມັນແຫ່ງທຳອິດຂອງບໍລິສັດຂຶ້ນທີ່ ແຂວງ ສະຫວັນນະເຂດມີບໍລິມາດບັນຈຸ 700,000 ລິດ. ນອກຈາກນີ້ ຍັງໄດ້ສ້າງສະຖານີບໍລິການນ້ຳມັນແຫ່ງທຳອິດຂຶ້ນທີ່ ນະຄອນຫຼວງວຽງຈັນຊື່ວ່າ ພລັສ 1 (Plus 1) ແລະ ໃນປີດຽວກັນນີ້ ບໍລິສັດໄດ້ມີການເປີດສະຖານີບໍລິການນ້ຳມັນລວມທັງໝົດ 14 ສະຖານີ ໃນຮູບແບບ ພລັສ ມາດຕະຖານ (Plus Standard Gas Station: STD) ແລະ ໃນສະຖານີບໍລິການຮູບແບບ ພລັສ ທ້ອງຖິ່ນພັດທະນາ (Plus Thongthin Gas Station: THN).

ບໍລິສັດໄດ້ນຳເຂົ້ານ້ຳມັນເຊື້ອໄຟຈາກໂຮງກັ່ນນ້ຳມັນທີ່ມີຊື່ສຽງ ແລະ ເປັນທີ່ຍອມຮັບໃນດ້ານຄຸນະພາບໃນລະດັບສາກົນ ໂດຍນຳເຂົ້ານ້ຳມັນຈາກຜູ້ຜະລິດໃນປະເທດໄທ ເຊິ່ງປະກອບດ້ວຍ Chevron (Thailand) Limited (Chevron), ESSO (Thailand) Public Company Limited (ESSO), IRPC Public Company Limited (IRPC) ແລະ The Shell Company of Thailand Limited (Shell). ອີງຕາມສະພາບເສດຖະກິດຂອງ ສປປ ລາວ ໄລຍະດັ່ງກ່າວທີ່ກຳລັງຢູ່ໃນຊ່ວງຂະຫຍາຍຕົວ ແລະ ຈາກການສົ່ງເສີມການລົງທຶນຂອງລັດຖະບານທີ່ສຸມໃສ່ໃນການພັດທະນາໂຄງການກໍ່ສ້າງພື້ນຖານໂຄງລ່າງ ປະກອບກັບນັກລົງທຶນຈາກຕ່າງປະເທດ ຈຶ່ງສົ່ງຜົນໃຫ້ປະລິມານຄວາມຕ້ອງການຊົມໃຊ້ນ້ຳມັນພາຍໃນປະເທດເພີ່ມຂຶ້ນ. ບໍລິສັດຈຶ່ງມີການນຳເຂົ້ານ້ຳມັນໃນປະລິມານຫຼາຍຂຶ້ນ

ເຮັດໃຫ້ຍອດຂາຍເພີ່ມຂຶ້ນ ແລະ ບໍລິສັດຈຳເປັນຕ້ອງໄດ້ຈ້າງບໍລິສັດຂົນສົ່ງພາຍໃນປະເທດເພີ່ມຂຶ້ນເພື່ອຂົນສົ່ງນ້ຳມັນໃຫ້ລູກຄ້າທັນຕາມກຳນົດເວລາ.

ໃນລະຫວ່າງປີ 2010-2011 ເປັນຊ່ວງເວລາທີ່ບໍລິສັດກຳລັງຂະຫຍາຍຕົວ ສືບເນື່ອງມາຈາກການທີ່ລັດຖະບານແຫ່ງ ສປປ ລາວ ໄດ້ອະນຸມັດໂຄງການລົງທຶນພື້ນຖານໂຄງລ່າງຕ່າງໆເຊັ່ນ: ໂຄງການສຳປະທານສ້າງເຂດເສດຖະກິດພິເສດທົ່ວປະເທດ, ໂຄງການກໍ່ສ້າງເຂື່ອນໄຟຟ້າ ແລະ ພະລັງງານໄຟຟ້າຖ່ານຫິນ ແລະ ໂຄງການສຳປະທານຂຸດຄົ້ນແຮ່ທາດຕ່າງໆ ອັນເປັນປັດໄຈສຳຄັນທີ່ສົ່ງຜົນໃຫ້ຄວາມຕ້ອງການຊົມໃຊ້ນ້ຳມັນເພີ່ມຂຶ້ນ. ດ້ວຍເຫດນີ້ທາງບໍລິສັດໄດ້ເບິ່ງເຫັນໂອກາດໃນການຂະຫຍາຍຕົວຂອງທຸລະກິດ ຈຶ່ງໄດ້ມີການເພີ່ມທຶນຈົດທະບຽນຂຶ້ນຈາກເດີມເປັນ 75.60 ຕື້ກີບ ໃນປີ 2011 ເພື່ອຮອງຮັບການລົງທຶນຂະໜາດໃຫຍ່ຂອງບໍລິສັດໃນຮູບແບບຂອງການຂະຫຍາຍສະຖານີບໍລິການນ້ຳມັນເພີ່ມຂຶ້ນອີກ ເຮັດໃຫ້ບໍລິສັດມີສະຖານີບໍລິການນ້ຳມັນລວມທັງໝົດ 72 ສະຖານີໃນຊຸມປີດັ່ງກ່າວ. ບໍລິສັດຍັງໄດ້ມີການສ້າງສາງນ້ຳມັນເພີ່ມເຕີມອີກ 3 ແຫ່ງຄື: ສາງນ້ຳມັນເມືອງ ເງິນ, ແຂວງ ໄຊຍະບູລີ ບໍລິມາດບັນຈຸ 700,000 ລິດ, ສາງນ້ຳມັນທີ່ນະຄອນຫຼວງວຽງຈັນ ບໍລິມາດບັນຈຸ 1,120,000 ລິດ ແລະ ສາງນ້ຳມັນ ເມືອງ ປາກຊັນ, ແຂວງ ບໍລິຄຳໄຊ ມີບໍລິມາດບັນຈຸ 350,000 ລິດ. ນອກຈາກນີ້ ໃນປີດັ່ງກ່າວ, ທາງບໍລິສັດຍັງໄດ້ລົງທຶນໃນລົດຂົນສົ່ງນ້ຳມັນຂອງບໍລິສັດເອງຈຳນວນທັງໝົດ 11 ຄັນ ເພື່ອເຮັດໃຫ້ສາມາດຄວບຄຸມການຂົນສົ່ງນ້ຳມັນທີ່ມີຄຸນະພາບກ່ອນສົ່ງເຖິງລູກຄ້າໃນແຕ່ລະຄັ້ງ. ດ້ວຍແນວຄວາມຄິດໃນການພັດທະນາຄຸນະພາບສິນຄ້າ ແລະ ການໃຫ້ບໍລິການທີ່ດີຢ່າງບໍ່ຢຸດຢັ້ງ ເພື່ອໃຫ້ປະຊາຊົນລາວໄດ້ໃຊ້ນ້ຳມັນທີ່ມີຄຸນະພາບໃນລາຄາທີ່ຍຸຕິທຳ ປະກອບກັບວິໄສທັດຂອງຜູ້ບໍລິຫານທີ່ຂະຫຍາຍການລົງທຶນເພື່ອຮອງຮັບການຈະເລີນເຕີບໂຕຂອງເສດຖະກິດໃນ ສປປ ລາວ ສົ່ງຜົນໃຫ້ບໍລິສັດມີຍອດຂາຍນ້ຳມັນເປັນອັນດັບ 2 ໃນ ສປປ ລາວ ໃນປີ 2011.

ໃນປີ 2012 ສືບຕໍ່ນະໂຍບາຍສ້າງສະຖານີບໍລິການນ້ຳມັນໃນຮູບແບບທີ່ຕອບສະໜອງການໃຊ້ຊີວິດປະຈຳວັນຂອງຄົນໃນເມືອງ ແລະ ໃຫ້ບໍລິການນ້ຳມັນຢ່າງວ່ອງໄວ ເຊິ່ງຮູບແບບຂອງສະຖານີເນັ້ນໃສ່ຄວາມທົນທານ ແລະ ແຂງແຮງຖືກຕ້ອງຕາມຫຼັກການໂຄງສ້າງ ແລະ ຄວາມປອດໄພສູງ. ດ້ວຍເຫດນີ້ ບໍລິສັດໄດ້ມີການລິເລີ່ມສ້າງສະຖານີບໍລິການນ້ຳມັນໃນຮູບແບບທີ່ເອີ້ນວ່າ ສະຖານີບໍລິການນ້ຳມັນ ຮູບແບບ ພລັສ ໂກລ (Plus Gold Gas Station: GLD) ຕັ້ງຢູ່ໃນເຂດຊຸມຊົນເພື່ອເຮັດໃຫ້ມີຄວາມເປັນເອກະລັກ ແລະ ເປັນສະຖານີຕົ້ນແບບຂອງສະຖານີບໍລິການນ້ຳມັນທີ່ທັນສະໄໝໃນອະນາຄົດ. ໃນປີດັ່ງກ່າວບໍລິສັດໄດ້ມີການຂະຫຍາຍສະຖານີບໍລິການນ້ຳມັນເພີ່ມອີກຈຳນວນ 26 ສະຖານີ ສົ່ງຜົນໃຫ້ມີຈຳນວນສະຖານີບໍລິການນ້ຳມັນທັງໝົດ 98 ສະຖານີ ແລະ ຍັງສາມາດຮັກສາສັດສ່ວນຂອງການຈຳໜ່າຍນ້ຳມັນຫຼາຍທີ່ສຸດເປັນອັນດັບ 2 ໃນ ສປປ ລາວ ເປັນປີທີສອງຕິດຕໍ່ກັນອີກດ້ວຍ.

ສະນັ້ນ ໃນປີ 2013 ບໍລິສັດຈຶ່ງໄດ້ເພີ່ມທຶນຈົດທະບຽນຂຶ້ນເປັນຄັ້ງທີສອງຈາກ 75.60 ຕື້ກີບ ມາເປັນ 350.00 ຕື້ກີບ ໃນວັນທີ 2 ຕຸລາ 2013 ແລະ ໄດ້ຍ້າຍສຳນັກງານໃຫຍ່ຈາກ ແຂວງ ສະຫວັນນະເຂດຂຶ້ນມາຢູ່ທີ່ ນະຄອນຫຼວງວຽງຈັນທີ່ເປັນສູນກາງທາງດ້ານເສດຖະກິດໃນ ສປປ ລາວ ລວມເຖິງເປັນສູນກາງໃນການຄຸ້ມຄອງບໍລິຫານທຸລະກິດຂອງບໍລິສັດ ເພື່ອເພີ່ມຄວາມສາມາດບົ່ມຊ້ອນໃນການແຂ່ງຂັນຈາກທັງພາຍໃນ ແລະ ຕ່າງປະເທດ. ການເພີ່ມທຶນໃນຄັ້ງນີ້ບໍລິສັດແນໃສ່ເພື່ອຂະຫຍາຍສະຖານີບໍລິການນ້ຳມັນເພີ່ມຂຶ້ນອີກ 11 ສະຖານີ, ພັດທະນາລະບົບການຄຸ້ມຄອງບໍລິຫານຄຸນະພາບສິນຄ້າ ແລະ ອົງກອນໃຫ້ມີປະສິດທິພາບສູງສຸດ ເພື່ອໃຫ້ສອດຄ່ອງກັບລະບົບທີ່ເປັນມາດຕະຖານສາກົນ ISO 9001:2008 ໃຫ້ເປັນມືອາຊີບຮອງຮັບຕະຫຼາດທີ່ມີການແຂ່ງຂັນສູງທັງພາຍໃນ ແລະ ຕ່າງປະເທດ ເປັນຕົ້ນແມ່ນການເຊື່ອມໂຍງການຄ້າກັບປະຊາຄົມເສດຖະກິດອາຊຽນ (AEC) ໃນທ້າຍປີ 2015 ນີ້, ປັບປຸງລະບົບການຂົນສົ່ງນ້ຳມັນ ແລະ ຍົກລະດັບຄວາມຮູ້ຄວາມສາມາດຂອງພະນັກງານ ເຊິ່ງໃນໄລຍະນີ້ເປັນໄລຍະທີ່ບໍລິສັດໄດ້ມີການກ້າວຜ່ານເຂົ້າສູ່ການ

ພັດທະນາຄຸນະພາບ ແລະ ຄວບຄຸມຄຸນະພາບໃນຂະບວນການດຳເນີນງານຂອງບໍລິສັດ ຈຶ່ງໄດ້ມີພັດທະນາການທີ່ສຳຄັນຕ່າງໆ ດັ່ງນີ້:

- ໃນດ້ານສະຖານີບໍລິການນ້ຳມັນ ບໍລິສັດໄດ້ມີການພັດທະນາຮູບແບບການໃຫ້ບໍລິການໃນສະຖານີບໍລິການນ້ຳມັນຢ່າງຕໍ່ເນື່ອງ ໂດຍວາງແນວທາງຮູບແບບຂອງສະຖານີບໍລິການນ້ຳມັນໃຫ້ເປັນສູນກາງ ແລະ ຕອບສະໜອງການໃຊ້ຊີວິດປະຈຳວັນຂອງຄົນໃນເມືອງ ພາຍໃຕ້ແນວຄວາມຄິດທີ່ເປັນສະຖານີບໍລິການທີ່ຄົບວົງຈອນ (Life Station) ທີ່ທັນສະໄໝ ແລະ ເປັນສູນລວມສິ່ງອຳນວຍຄວາມສະດວກຕ່າງໆເຂົ້ານຳກັນ ເພື່ອໃຫ້ສະຖານີບໍລິການນ້ຳມັນເປັນໄດ້ຫຼາຍກວ່າສະຖານີເຕີມນ້ຳມັນພຽງຢ່າງດຽວ ແຕ່ຍັງເປັນສະຖານທີ່ເຕີມຄວາມສຸກ ແລະ ບໍລິການສະດວກສະບາຍອີກດ້ວຍ. ດ້ວຍເຫດນີ້ບໍລິສັດຈຶ່ງໄດ້ລິເລີ່ມສ້າງສະຖານີບໍລິການນ້ຳມັນຮູບແບບ ພລັສ ແພັລດຕິນັມ (Plus Platinum Gas Station: PTN) ຈຳນວນ 1 ສະຖານີ ໂດຍສະຖານີບໍລິການນ້ຳມັນດັ່ງກ່າວຈະມີການໃຫ້ບໍລິການທີ່ຄົບວົງຈອນ (ລາຍລະອຽດຂອງສະຖານີບໍລິການດັ່ງກ່າວແມ່ນໄດ້ກ່າວໄວ້ໃນສ່ວນຂອງທຸລະກິດທີ່ດຳເນີນໃນປະຈຸບັນ) ແລະ ໃນປີດັ່ງກ່າວ ບໍລິສັດຍັງໄດ້ມີການເພີ່ມຈຳນວນສະຖານີບໍລິການນ້ຳມັນຂຶ້ນ 7 ສະຖານີ ເຮັດໃຫ້ມີຈຳນວນສະຖານີບໍລິການນ້ຳມັນລວມທັງໝົດ 105 ສະຖານີ ແລະ ໃນປີນີ້ບໍລິສັດຍັງຄົງຮັກສາສັດສ່ວນການຈາໜ່າຍນ້ຳມັນຫຼາຍທີ່ສຸດເປັນອັນດັບທີ 2 ໃນ ສປປ ລາວ ເປັນປີທີ 3 ຕິດຕໍ່ກັນ.
- ໃນດ້ານການພັດທະນາລະບົບໄອທີ (IT) ບໍລິສັດໄດ້ຈ້າງໃຫ້ຜູ້ຊ່ຽວຊານທາງດ້ານຊອບແວຈາກປະເທດໄທເຂົ້າມາເປັນຜູ້ຂຽນໂປແກຼມຊອບແວເພື່ອຮອງຮັບການໃຫ້ບໍລິການຊຳລະຄ່າບໍລິການດ້ວຍລະບົບຊຳລະຜ່ານບັດແທນເງິນສົດ (Fleet Card). ລະບົບດັ່ງກ່າວນີ້ ນອກຈາກຈະຊ່ວຍການຄຸ້ມຄອງທີ່ດີຂອງບໍລິສັດແລ້ວ ຍັງຊ່ວຍໃຫ້ລູກຄ້າສາມາດໃຊ້ຕິດຕາມຄ່າໃຊ້ຈ່າຍກ່ຽວກັບຄ່ານ້ຳມັນຂອງທຸລະກິດຂອງຕົນເອງໄດ້ອີກດ້ວຍ. ເພາະຄ່າໃຊ້ຈ່າຍນ້ຳມັນເປັນຕົ້ນທຶນທີ່ສຳຄັນຂອງທຸລະກິດດ້ານການຂົນສົ່ງ ແລະ ໃນຕອນນີ້ຍັງອຳນວຍຄວາມສະດວກ, ຫຼຸດຄວາມສ່ຽງຕໍ່ກັບການຊຳລະຄ່າບໍລິການດ້ວຍເງິນສົດ.
- ໃນດ້ານຄຸນະພາບຂອງການໃຫ້ບໍລິການ, ການດຳເນີນການ ແລະ ການຮັກສາຄຸນະພາບຂອງຜະລິດຕະພັນນ້ຳມັນ, ບໍລິສັດໄດ້ຮັບການຢັ້ງຢືນຄຸນະພາບຈາກມາດຕະຖານສາກົນ ໂດຍໄດ້ຮັບການຮັບຮອງຈາກໜ່ວຍງານມາດຕະຖານຂອງປະເທດອັງກິດ (UKAS) ເຊິ່ງມີລາຍລະອຽດສຳຄັນດັ່ງລຸ່ມນີ້:
  - ISO 9001: 2008 Quality Management System ມາດຕະຖານລະບົບການຄວບຄຸມຄຸນະພາບ.
  - ISO 14001: 2004 Environmental Management System ມາດຕະຖານລະບົບການຄວບຄຸມທີ່ດີຕໍ່ສິ່ງແວດລ້ອມ.
  - OHSAS 18001: 2007 Occupational Health and Safety Management Systems ລະບົບການຄວບຄຸມຄວາມປອດໄພ ແລະ ສຸກຂະອະນາໄມຂອງພະນັກງານ.

ນອກຈາກນີ້ ບໍລິສັດຍັງມີການລົງທຶນຊື້ລົດໃຫ້ບໍລິການຂົນສົ່ງນ້ຳມັນເພີ່ມຂຶ້ນອີກຈຳນວນ 23 ຄັນ ສິ່ງຜົນໃຫ້ມີລົດຂົນສົ່ງນ້ຳມັນທັງໝົດຈຳນວນ 34 ຄັນ ແລະ ໃນປີດັ່ງກ່າວນີ້ໜ່ວຍງານຂົນສົ່ງຂອງບໍລິສັດກໍ່ໄດ້ແຍກຕົວອອກມາສ້າງຕັ້ງເປັນ "ບໍລິສັດ ສິດທິ ໂລຈິດສຕິກ ລາວ ຈຳກັດ". ພ້ອມກັນນັ້ນ ບໍລິສັດຍັງໄດ້ມີການສ້າງຫ້ອງທົດລອງເພື່ອວັດແທກຄຸນະພາບຂອງນ້ຳມັນ ໂດຍໃຊ້ມາດຕະຖານວັດແທກຄ່າຄຸນນະພາບຄ່າ API ເຮັດໃຫ້ສາມາດນຳສິ່ງນ້ຳມັນທີ່ມີຄຸນະພາບໃຫ້ແກ່ປະຊາຊົນໃນ ສປປ ລາວ ຕໍ່ໄປ.

– ບໍລິສັດໄດ້ມີການແບ່ງໂຄງສ້າງການບໍລິຫານບໍລິສັດທີ່ກ່ຽວພັນກັນຢ່າງທີ່ຊັດເຈນ ເພື່ອເປັນການຮອງຮັບການເຕີບໂຕໃນໄລຍະຍາວ, ສາມາດຊ່ວຍໃນການຄຸ້ມຄອງບໍລິຫານ ແລະ ກຳນົດທິດທາງການຂະຫຍາຍຕົວຂອງໜ່ວຍງານໃຫ້ເຂັ້ມແຂງ ແລະ ມີສ່ວນສຳຄັນສົ່ງເສີມການຂະຫຍາຍຕົວ ເພື່ອເພີ່ມຊ່ອງທາງໃນການຈັດຫາແຫຼ່ງເງິນທຶນໃຫ້ກັບທຸລະກິດທີ່ມີຄວາມສາມາດບໍ່ມຊ້ອນຂອງບໍລິສັດໃນອະນາຄົດ. ໃນການແຍກໂຄງສ້າງດັ່ງກ່າວ ຍັງເປັນການຊີ້ວັດລວມເຖິງຂີດຄວາມສາມາດໃນການແຂ່ງຂັນຂອງແຕ່ລະທຸລະກິດທີ່ກ່ຽວຂ້ອງ. ບໍລິສັດ ຈຶ່ງໄດ້ມີການແຍກໜ່ວຍງານ ແລະ ສ້າງຕັ້ງບໍລິສັດເພື່ອຮອງຮັບໃນໜ່ວຍງານຕ່າງໆ ໂດຍມີລາຍລະອຽດດັ່ງລຸ່ມນີ້:

- ➢ ໜ່ວຍງານຂົນສົ່ງນ້ຳມັນ ໄດ້ແຍກຕົວເປັນ "ບໍລິສັດ ສິດທິ ໂລຈິດສຕິກ ລາວ ຈຳກັດ".
- ➢ ໜ່ວຍງານຮ້ານຄ້າສະດວກຊື້ ພລັສ ມາກ ໄດ້ແຍກຕົວເປັນ "ບໍລິສັດ ລາວເດລີ້ມາກ ຂາເຂົ້າ-ຂາອອກ ຈຳກັດ".
- ➢ ໜ່ວຍງານ ບັດເຕີມນ້ຳມັນແທນເງິນສົດ ໄດ້ແຍກຕົວເປັນ "ບໍລິສັດ ແອວ-ເທັກ ລາວ ຈຳກັດ".
- ➢ ໜ່ວຍງານສູນລ້າງອັດສີດລິດຍົນ ພາຍໃຕ້ຮູບແບບ ແຟນຊາຍ ໂມລີ້ແຄ (Moly Care) ຈາກປະເທດໄທ ໄດ້ແຍກຕົວເປັນ "ບໍລິສັດ ສຸດາພອນການຄ້າ ຂາອອກ-ຂາເຂົ້າ ແລະ ບໍລິການ ຈຳກັດ".

ໃນປີ 2014 ຈົນເຖິງປັດຈຸບັນ ບໍລິສັດຍັງສືບຕໍ່ຮັກສາຄຸນນະພາບຂອງສິນຄ້າ ແລະ ພັດທະນາບໍລິການ ລວມເຖິງການສົ່ງເສີມພາບພົດຂອງບໍລິສັດໃຫ້ເພີ່ມຂຶ້ນ. ບໍລິສັດໄດ້ເຂົ້າຮ່ວມເປັນສະມາຊິກຂອງສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດລາວ (Lao Petroleum and Gas Association) ເຊິ່ງເປັນສະມາຄົມຢູ່ພາຍໃຕ້ການຄຸ້ມຄອງຂອງສະພາການຄ້າ ແລະ ອຸດສາຫະກຳລາວ ໂດຍມີບົດບາດໜ້າທີ່ສຳຄັນໃນການຮ່ວມກຳນົດນະໂຍບາຍກ່ຽວກັບນ້ຳມັນເຊື້ອໄຟ ລວມເຖິງລາຄາຂາຍຍ່ອຍນ້ຳມັນໜ້າສະຖານີບໍລິການນ້ຳມັນໃນ ສປປ ລາວ. ນອກຈາກນີ້ ໃນເດືອນ ສິງຫາ 2014 ບໍລິສັດໄດ້ເປີດສາງນ້ຳມັນເພີ່ມອີກ 1 ສາງຄື ສາງນ້ຳມັນປາກເຊ ບໍລິມາດບັນຈຸ 640,000 ລິດ ສົ່ງຜົນໃຫ້ປັດຈຸບັນ ບໍລິສັດມີຈຳນວນສາງນ້ຳມັນທັງໝົດ 5 ສາງກະຈາຍຢູ່ຕາມຈຸດຍຸດທະສາດຕ່າງໆ ແລະ ຕາມຕົວເມືອງເສດຖະກິດທີ່ສຳຄັນທີ່ມີຊາຍແດນຕິດກັບປະເທດໄທທີ່ເປັນຜູ້ສະໜອງນ້ຳມັນຫຼັກຂອງບໍລິສັດ ເພື່ອຫຼຸດຜ່ອນຕົ້ນທຶນຄ່າຂົນສົ່ງ. ສະນັ້ນ ຈຶ່ງເຮັດໃຫ້ບໍລິສັດມີສາງນ້ຳມັນເພີ່ມຂຶ້ນເຊິ່ງສາມາດຈັດເກັບນ້ຳມັນໄດ້ສູງສຸດເຖິງ 3,610,000 ລິດ ແລະ ມີການເປີດສະຖານີບໍລິການນ້ຳມັນຮູບແບບ ພລັສ ເພັລດຕິນຳ ຈຳນວນ 2 ສະຖານີ ເຮັດໃຫ້ປັດຈຸບັນມີຈຳນວນສະຖານີບໍລິການນ້ຳມັນລວມທັງໝົດ 107 ສະຖານີທົ່ວປະເທດ. ໃນປີນີ້ ບໍລິສັດຍັງມີການເພີ່ມທຶນຈົດທະບຽນເພື່ອຮອງຮັບການສະເໜີຂາຍຮຸ້ນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ອີກຈຳນວນ 120.00 ຕື້ກີບ ໂດຍອອກຮຸ້ນສາມັນເພີ່ມທຶນຈຳນວນ 60,000,000 ຮຸ້ນ, ມູນຄ່າທີ່ກຳນົດໄວ້ (Par) 2,000 ກີບຕໍ່ຮຸ້ນ ເພື່ອຮອງຮັບການຂະຫຍາຍຕົວຂອງບໍລິສັດທີ່ຈະກ້າວຂຶ້ນເປັນບໍລິສັດຊັ້ນນຳທາງດ້ານຜູ້ຈັດຈຳໜ່າຍເຊື້ອໄຟໃນ ສປປ ລາວ ແລະ ພູມີພາກອາຊຽນຕໍ່ໄປ.

ບໍລິສັດເປັນຜູ້ດຳເນີນທຸລະກິດນຳເຂົ້ານ້ຳມັນເຊື້ອໄຟ ແລະ ອາຍແກັດອັນດັບຕົ້ນໆ ຂອງ ສປປ ລາວ ມີສ່ວນແບ່ງການຕະຫຼາດ (Market Share) ເປັນອັນດັບ 2 ໃນ ສປປ ລາວ ໂດຍອີງຕາມຍອດຂາຍຕັ້ງແຕ່ປີ 2011 ເປັນຕົ້ນມາ. ບໍລິສັດມີການຈຳໜ່າຍຜະລິດຕະພັນຫຼັກຢູ່ 5 ປະເພດຄື 1. ນ້ຳມັນກາຊອນ (Diesel), 2. ນ້ຳມັນແອັດຊັງທຳມະດາ (Benzene Regular 91), 3. ນ້ຳມັນແອັດຊັງພິເສດ (Benzene Super 95), 4. ນ້ຳມັນເຕົາ (Bunker Oil) ແລະ 5. ນ້ຳມັນເຄື່ອງ (Lubricant). ບໍລິສັດຈຳໜ່າຍນ້ຳມັນຜ່ານທາງສະຖານີບໍລິການນ້ຳມັນຂອງບໍລິສັດພາຍໃຕ້ເຄື່ອງໝາຍການຄ້າ "ພລັສ" ຫຼື "PLUS" ທີ່ປັດຈຸບັນມີສາຂາຢູ່ທົ່ວປະເທດຈຳນວນ 107 ສະຖານີ (ຂໍ້ມູນວັນທີ 30 ມິຖຸນາ 2014) ໂດຍມີຮູບແບບການຄຸ້ມຄອງບໍລິຫານບັນດາສະຖານີ 2 ຮູບແບບຄື: ບໍລິສັດລົງທຶນ ແລະ ຄຸ້ມຄອງບໍລິຫານເອງ (Company Owned, Company Operated: COCO) ຈຳນວນ 8 ສະຖານີ ແລະ ບໍລິສັດຮ່ວມລົງທຶນ

(Company Owned, Dealer Operated: CODO) ຈຳນວນ 99 ສະຖານີ. ນອກຈາກການຈຳໜ່າຍຜ່ານສະຖານີບໍລິການນ້ຳມັນແລ້ວ ບໍລິສັດຍັງໄດ້ຈຳໜ່າຍໂດຍກົງໄປຍັງລູກຄ້າໂຄງການ, ໂຮງງານອຸດສາຫະກຳ, ບໍລິສັດຂົນສົ່ງ ແລະ ຜູ້ຂາຍສົ່ງນ້ຳມັນ (Jobber) ໃນ ສປປ ລາວ.

ຕາຕະລາງທີ 1.1.1 : ສະຫຼຸບຫຍໍ້ເຫດການທີ່ພົ້ນເດັ່ນ

| ປີ | | ສະຫຼຸບຫຍໍ້ເຫດການທີ່ພົ້ນເດັ່ນ |
|---|---|---|
| ປີ 2008 | : | ➢ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ຈຳກັດ ສ້າງຕັ້ງຂຶ້ນດ້ວຍທຶນຈົດທະບຽນ 28.80 ຕື້ກີບ ໂດຍທ່ານ ຈັນທອນ ສິດທິໄຊ ແລະ ທ່ານ ນາງ ສະຫວັນທອງ ພິງສະຫວັນ ຖືຮຸ້ນໃນສັດສ່ວນ 75 ສ່ວນຮ້ອຍ ແລະ 25 ສ່ວນຮ້ອຍຕາມລຳດັບ ໂດຍມີວັດຖຸປະສົງຫຼັກຄືການນຳເຂົ້າ ແລະ ຈັດຈຳໜ່າຍນ້ຳມັນເຊື້ອໄຟຜ່ານສະຖານີບໍລິການນ້ຳມັນໃນ ສປປ ລາວ. |
| ປີ 2009 | : | ➢ ສ້າງສະຖານີບໍລິການນ້ຳມັນທີ່ໄດ້ມາດຕະຖານແຫ່ງທຳອິດຂຶ້ນທີ່ ໂພນທັນ ຊື່ວ່າ ປ້ຳນ້ຳມັນ ພລັສ 1 (Plus 1).<br>➢ ເປີດນຳໃຊ້ສາງນ້ຳມັນແຫ່ງທຳອິດ ທີ່ ແຂວງ ສະຫວັນນະເຂດ ບໍລິມາດບັນຈຸ 700,000 ລິດ. |
| ປີ 2010 | : | ➢ ໄດ້ຮັບການຮັບຮອງຄຸນນະພາບມາດຕະຖານຈາກໜ່ວຍງານ UKAS ໃນ 3 ດ້ານຄື: ISO 9001:2008 Quality Management System, ISO 14001:2004 Environmental Management System, OHSAS 18001:2007 Occupational Health and Safety Management Systems.<br>➢ ໄດ້ມີການເປີດໃຊ້ສາງນ້ຳມັນທີ່ວຽງຈັນ ບໍລິມາດບັນຈຸ 1,120,000 ລິດ ແລະ ສາງນ້ຳມັນ ເມືອງເງິນ, ແຂວງ ໄຊຍະບູລີ ບໍລິມາດບັນຈຸ 700,000 ລິດ. |
| ປີ 2011 | : | ➢ ບໍລິສັດໄດ້ມີການເພີ່ມທຶນຈົດທະບຽນເປັນ 75.60 ຕື້ກີບ ເພື່ອຮອງຮັບການເຕີບໂຕ ແລະ ການລົງທຶນໃນການຂະຫຍາຍສະຖານີບໍລິການນ້ຳມັນໃຫ້ຄວບຄຸມທຸກພື້ນທີ່ຂອງ ສປປ ລາວ.<br>➢ ມີການເປີດສະຖານີບໍລິການນ້ຳມັນໃນຮູບແບບ ພລັສ ໂກລ (GLD) ເປັນແຫ່ງທຳອິດຂຶ້ນທີ່ນະຄອນຫຼວງວຽງຈັນ.<br>➢ ໄດ້ມີການເປີດໃຊ້ສາງນ້ຳມັນທີ່ເມືອງ ປາກຊັນ, ແຂວງ ບໍລິຄຳໄຊ ບໍລິມາດບັນຈຸ 350,000 ລິດ.<br>➢ ມີສ່ວນແບ່ງທາງການຕະຫຼາດເປັນອັນດັບ 2 ທາງດ້ານທຸລະກິດເຊື້ອໄຟໃນ ສປປ ລາວ. |
| ປີ 2012 | : | ➢ ບໍລິສັດມີການເປີດສະຖານີບໍລິການນ້ຳມັນໃນຮູບແບບ ພລັສ ແພ້ລດຕິນຳ (PTN) ເປັນສະຖານນີບໍລິການນ້ຳມັນທຳອິດຂຶ້ນທີ່ນະຄອນຫຼວງວຽງຈັນ ແລະ ໃສ່ຊື່ວ່າ ພລັສ ສະຖານີບໍລິການນ້ຳມັນ ດອນກອຍ ທີ່ບ້ານ ດອນກອຍ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ.<br>➢ ສາມາດຮັກສາສ່ວນແບ່ງທາງການຕະຫຼາດອັນດັບ 2 ທາງດ້ານທຸລະກິດເຊື້ອໄຟໃນ ສປປ ລາວ.<br>➢ ນຳໃຊ້ເຕັກໂນໂລຊີ ແລະ ລະບົບໄອທີທີ່ທັນສະໄໝເຂົ້າໃນການພັດທະນາ, ຄຸ້ມຄອງບໍລິຫານວຽກງານຂາຍຜ່ານເຄື່ອງຮູດບັດ (Electronic Data Capture: EDC) ແລະ ການເກັບກຳຂໍ້ມູນຈາກສູນກາງໄປຫາບັນດາສາຂາໃນຂອບເຂດທົ່ວປະເທດດ້ວຍການສ້າງຊອບແວລະບົບບໍລິຫານຂໍ້ມູນ |

| | | |
|---|---|---|
| | | ແບບລວມສູນ ຫຼື ERP System.<br>➢ ມີການລົງທຶນສ້າງລະບົບການບໍລິຫານການຂາຍນ້ຳມັນຜ່ານບັດອີເລັກໂທຣນິກ ຫຼື ບັດເຕີມນ້ຳມັນແທນເງິນສົດ (Fleet Card) ເປັນຜູ້ທຳອິດໃນ ສປປ ລາວ ເຊິ່ງເປັນຜູ້ລິເລີ່ມນຳເອົາເຕັກໂນໂລຊີໃນການບໍລິຫານ ແລະ ຄວບຄຸມຕົ້ນທຶນຄ່າໃຊ້ຈ່າຍໃນການບໍລິຫານຂອງຫົວໜ່ວຍທຸລະກິດ ລວມເຖິງຍັງເປັນບັດທີ່ສາມາດໃຊ້ແທນເງິນສົດໃນການຊຳລະຄ່ານ້ຳມັນໃຫ້ຜູ້ມາໃຊ້ບໍລິການໃນສະຖານີບໍລິການນ້ຳມັນຂອງບໍລິສັດ. |
| **ປີ 2013** | : | ➢ ບໍລິສັດເພີ່ມທຶນຈົດທະບຽນເປັນ 350.00 ຕື້ກີບ ເພື່ອຮອງຮັບການເຕີບໂຕຂອງບໍລິສັດ ແລະ ການຂະຫຍາຍການລົງທຶນເພື່ອເປັນຜູ້ໃຫ້ບໍລິການໃນອັນດັບຕົ້ນຂອງ ສປປ ລາວ ແລະ ເພື່ອຮອງຮັບການເຕີບໂຕຂອງຄວາມຕ້ອງການນ້ຳມັນໃນ ສປປ ລາວ ແລະ ການເປີດປະຊາຄົມເສດຖະກິດອາຊຽນ (ASEAN Economic Community: AEC).<br>➢ ໄດ້ຮັບການສືບຕໍ່ຮັບຮອງຄຸນນະພາບມາດຕະຖານຈາກໜ່ວຍງານ UKAS ໃນທັງ 3 ດ້ານຄື: ISO 9001:2008, ISO 14001:2004, OHSAS 18001:2007.<br>➢ ໄດ້ມີການປັບປຸງໂຄງສ້າງບໍລິສັດ ແລະ ບໍລິສັດທີ່ກ່ຽວພັນໃຫ້ຊັດເຈນ ເພື່ອຮອງຮັບການເຕີບໂຕໃນໄລຍະຍາວ.<br>➢ ຍັງຄົງຮັກສາສ່ວນແບ່ງການຕະຫຼາດເປັນອັນດັບ 2 ຂອງຜູ້ຈຳໜ່າຍນ້ຳມັນເຊື້ອໄຟໃນ ສປປ ລາວ. |
| **ປີ 2014** | : | ➢ ບໍລິສັດໄດ້ເຂົ້າເປັນສະມາຊິກ ສະມາຄົມ ນ້ຳມັນເຊື້ອໄຟ ແລະ ອາຍແກັດລາວທີ່ຂຶ້ນກັບສະພາການຄ້າ ແລະ ອຸດສາຫະກຳລາວ.<br>➢ ອີງຕາມກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2014 ໃນວັນທີ 18 ມີຖຸນາ 2014 ມີມະຕິຕົກລົງທີ່ສຳຄັນ ດັ່ງນີ້:<br>– ຫຼຸດມູນຄ່າທີ່ກຳນົດໄວ້ຕໍ່ຮຸ້ນຈາກເດີມ 350,000,000 ກີບ ເປັນ 2,000 ກີບຕໍ່ຮຸ້ນ ສົ່ງຜົນໃຫ້ຈຳນວນຮຸ້ນຂອງບໍລິສັດເພີ່ມຂຶ້ນຈາກ 1,000 ຮຸ້ນ ເປັນ 175,000,000 ຮຸ້ນ.<br>– ໄດ້ມີການກະຈາຍຮຸ້ນຈາກຜູ້ຖືຮຸ້ນເດີມ 2 ຄົນ ມາເປັນ 9 ຄົນ ເພື່ອຮອງຮັບການສ້າງຕັ້ງ ແລະ ປ່ຽນສະຖານະພາບເປັນບໍລິສັດ ມະຫາຊົນ.<br>➢ ອີງຕາມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2014 ໃນວັນທີ 9 ຕຸລາ 2014 ມີມະຕິຕົກລົງທີ່ສຳຄັນ ດັ່ງນີ້:<br>– ອະນຸມັດການເພີ່ມທຶນຈົດທະບຽນເປັນ 470.00 ຕື້ກີບ ໂດຍການອອກຮຸ້ນສາມັນເພີ່ມທຶນຈຳນວນ 60,000,000 ຮຸ້ນ ມູນຄ່າກຳນົດ 2,000 ກີບຕໍ່ຮຸ້ນ ເພື່ອຮອງຮັບການສະເໜີຂາຍຮຸ້ນແກ່ມວນຊົນເປັນຄັ້ງທຳອິດ (IPO).<br>– ສ້າງຕັ້ງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ແລະ ກະກຽມເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ. |

**ບໍລິສັດທີ່ກ່ຽວພັນ**

ຕາຕະລາງທີ 1.1.2: ຕາຕະລາງສະຫຼຸບບໍລິສັດທີ່ກ່ຽວພັນ

| ບໍລິສັດ ຂວັນໃຈການຄ້າຂາອອກ-ຂາເຂົ້າ ຈຳກັດ (Khouanchay Trading Import - Export Co., Ltd.) | |
|---|---|
| ວັນທີສ້າງຕັ້ງ | : 1 ກັນຍາ 2011 (ອີງຕາມໃບທະບຽນວິສາຫະກິດລ່າສຸດ) |
| ທີ່ຕັ້ງສຳນັກງານໃຫຍ່ | : ຖະໜົນ ສີສະຫວ່າງວົງ, ບ້ານ ສຸນັນທາ, ເມືອງ ໄກສອນພົມວິຫານ, ແຂວງ ສະຫວັນນະເຂດ |
| ລັກສະນະການປະກອບທຸລະກິດ | : ຄ້າຂາຍຍົກບໍ່ເປັນອັນສະເພາະ |
| ທຶນຈົດທະບຽນທີ່ຊຳລະແລ້ວ | : 9,000,000,000 ກີບ |
| ຜູ້ອຳນວຍການ | : ທ່ານ ຈັນທອນ ສິດທິໄຊ |
| ຄວາມສຳພັນກັບບໍລິສັດ | : - ມີຜູ້ອຳນວຍການຮ່ວມກັນຄື ທ່ານ ຈັນທອນ ສິດທິໄຊ<br>- ເປັນບໍລິສັດທີ່ຖືຮຸ້ນໂດຍຜູ້ຖືຮຸ້ນລາຍໃຫຍ່ຂອງ PTL ຄື: ທ່ານ ຈັນທອນ ສິດທິໄຊ ຖືຮຸ້ນໃນສັດສ່ວນ 75 ສ່ວນຮ້ອຍ ແລະ ທ່ານ ນາງ ສະຫວັນທອງ ພົງສະຫວັນ ຖືຮຸ້ນໃນສັດສ່ວນ 25 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ. |

| ບໍລິສັດ ສິດທິ ໂລຈິດສຕິກ ລາວ ຈຳກັດ (Sitthi Logistic Lao Co., Ltd.) | |
|---|---|
| ວັນທີສ້າງຕັ້ງ | : 16 ສິງຫາ 2013 |
| ທີ່ຕັ້ງສຳນັກງານໃຫຍ່ | : ບ້ານ ສີບຸນເຮືອງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ |
| ລັກສະນະການປະກອບທຸລະກິດ | : ບໍລິການຂົນສົ່ງທາງບົກທັງພາຍໃນ ແລະ ຕ່າງປະເທດ |
| ທຶນຈົດທະບຽນທີ່ຊຳລະແລ້ວ | : 16,000,000,000 ກີບ |
| ຜູ້ອຳນວຍການ | : ທ່ານ ຈັນທອນ ສິດທິໄຊ |
| ຄວາມສຳພັນກັບບໍລິສັດ | : - ມີຜູ້ອຳນວຍການຮ່ວມກັນຄື ທ່ານ ຈັນທອນ ສິດທິໄຊ<br>- ເປັນບໍລິສັດທີ່ຖືຮຸ້ນໂດຍຜູ້ຖືຮຸ້ນລາຍໃຫຍ່ຂອງ PTL ຄືທ່ານ ຈັນທອນ ສິດທິໄຊ ຖືຮຸ້ນໃນສັດສ່ວນ 75 ສ່ວນຮ້ອຍ ແລະ ທ່ານ ນາງ ສະຫວັນທອງ ພົງສະຫວັນ ຖືຮຸ້ນໃນສັດສ່ວນ 25 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ. |

| ບໍລິສັດ ສິດທິ ການຄ້າສາກົນ ຂາອອກ-ຂາເຂົ້າ ຈຳກັດ (Sitthi Inter Trading Import-Export Co., Ltd) | |
|---|---|
| ວັນທີສ້າງຕັ້ງ | : 23 ກັນຍາ 2013 |
| ທີ່ຕັ້ງສຳນັກງານໃຫຍ່ | : ບ້ານ ຮ່ອງໄກ່ແກ້ວ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ |
| ລັກສະນະການປະກອບທຸລະກິດ | : ນຳເຂົ້າ: ເຄື່ອງໃຊ້ສອຍປະຈຳວັນ, ສະບຽງອາຫານ, ເຄື່ອງສຳອາງ, ເຄື່ອງດື່ມບຳລຸງສຸຂະພາບ, ເຄື່ອງກໍ່ສ້າງ, ເຄື່ອງໃຊ້ໄຟຟ້າ, ເຄື່ອງມືໃຊ້ງານອຸດສະຫະກຳ/ກະສິກຳ. ສົ່ງອອກ: ຜະລິດຕະພັນກະສິກຳ, ອຸກສາຫະກຳ, ຫັດຖະກຳ, ເຄື່ອງປ່າຂອງດົງ. |
| ທຶນຈົດທະບຽນທີ່ຊຳລະແລ້ວ | : 9,000,000,000 ກີບ |
| ຜູ້ອຳນວຍການ | : ທ່ານ ນາງ ສະຫວັນທອງ ພົງສະຫວັນ |

| ບໍລິສັດ ສິດທິ ການຄ້າສາກົນ ຂາອອກ-ຂາເຂົ້າ ຈຳກັດ<br>(Sitthi Inter Trading Import-Export Co., Ltd) | | |
|---|---|---|
| ຄວາມສຳພັນກັບບໍລິສັດ | : | - ເປັນບໍລິສັດທີ່ຖືຮຸ້ນໂດຍຜູ້ຖືຮຸ້ນຂອງ PTL ຄື: ທ່ານ ນາງ ສະຫວັນທອງ ພິງສະຫວັນ (ພັນລະຍາ ທ່ານ ຈັນທອນ) ຖືຮຸ້ນໃນສັດສ່ວນ 50 ສ່ວນຮ້ອຍ ແລະ ທ່ານ ວຽງຄອນ ສິດທິໄຊ (ນ້ອງຊາຍ ທ່ານ ຈັນທອນ) ຖືຮຸ້ນໃນສັດສ່ວນ 50 ສ່ວນຮ້ອຍ.<br>- ທ່ານ ນາງ ສະຫວັນທອງ ພິງສະຫວັນ ເປັນຜູ້ອຳນວຍການຂອງບໍລິສັດ ແລະ ເປັນຜູ້ຖືຮຸ້ນໃນ PTL ໃນສັດສ່ວນ 25 ສ່ວນຮ້ອຍ ແລະ ທ່ານ ວຽງຄອນ ສິດທິໄຊ ເປັນຜູ້ຖືຮຸ້ນ PTL ໃນສັດສ່ວນ 0.057 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ. |

| ບໍລິສັດ ແບັກແຄນຢອນລາວ ຂາເຂົ້າ-ຂາອອກ ຈຳກັດ<br>(Black Canyon (Lao) Import-Export Co., Ltd.) | | |
|---|---|---|
| ວັນທີສ້າງຕັ້ງ | : | 30 ກັນຍາ 2011 |
| ທີ່ຕັ້ງສຳນັກງານໃຫຍ່ | : | ບ້ານ ອານຸ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ |
| ລັກສະນະການປະກອບທຸລະກິດ | : | ຂາຍສະບຽງອາຫານ-ເຄື່ອງດື່ມ ແລະ ນຳເຂົ້າກາເຟ ຍີ່ຫໍ້ “Black Canyon” |
| ທຶນຈົດທະບຽນທີ່ຊຳລະແລ້ວ | : | 9,000,000,000 ກີບ |
| ຜູ້ອຳນວຍການ | : | ທ່ານ ນາງ ມະນີວອນ ສິດທິໄຊ |
| ຄວາມສຳພັນກັບບໍລິສັດ | | - ເປັນບໍລິສັດທີ່ຖືຮຸ້ນໂດຍຜູ້ຖືຮຸ້ນລາຍໃຫຍ່ຂອງ PTL ຄື: ທ່ານ ຈັນທອນ ສິດທິໄຊ ຖືຮຸ້ນໃນສັດສ່ວນ 75 ສ່ວນຮ້ອຍ ແລະ ທ່ານ ນາງ ສະຫວັນທອງ ພິງສະຫວັນ ຖືຮຸ້ນໃນສັດສ່ວນ 25 ສ່ວນຮ້ອຍ ຂອງທຶນຈົດທະບຽນທີ່ຊຳລະແລ້ວ.<br>- ຜູ້ອຳນວຍການຂອງບໍລິສັດເປັນຜູ້ຖືຮຸ້ນໃນ PTL ໃນສັດສ່ວນ 0.057 ສ່ວນຮ້ອຍ ແລະ ເປັນນ້ອງສາວຂອງ ທ່ານ ຈັນທອນ ສິດທິໄຊ. |

| ບໍລິສັດ ລາວເດລີ້ມາກ ຂາເຂົ້າ-ຂາອອກ ຈຳກັດ<br>(Lao Daily Mart Import-Export Co., Ltd.) | | |
|---|---|---|
| ວັນທີສ້າງຕັ້ງ | : | 14 ພຶດສະພາ 2013 |
| ທີ່ຕັ້ງສຳນັກງານໃຫຍ່ | : | ບ້ານ ສີບຸນເຮືອງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ |
| ລັກສະນະການປະກອບທຸລະກິດ | : | ການນຳເຂົ້າເຄື່ອງອຸປະໂພກ ແລະ ບໍລິໂພກທຸກຊະນິດເພື່ອຈຳໜ່າຍໃນຮູບແບບແຟນຊາຍ ພາຍໃຕ້ການສິນຄ້າ “PLUS Daily Mart” |
| ທຶນຈົດທະບຽນທີ່ຊຳລະແລ້ວ | : | 8,000,000,000 ກີບ |
| ຜູ້ອຳນວຍການ | : | ທ່ານ ຈັນທອນ ສິດທິໄຊ |
| ຄວາມສຳພັນກັບບໍລິສັດ | : | - ມີຜູ້ອຳນວຍການຮ່ວມກັນຄື ທ່ານ ຈັນທອນ ສິດທິໄຊ<br>- ເປັນບໍລິສັດທີ່ຖືຮຸ້ນໂດຍຜູ້ຖືຮຸ້ນລາຍໃຫຍ່ຂອງ PTL ຄືທ່ານ ຈັນທອນ ສິດທິໄຊ ຖືຮຸ້ນໃນສັດສ່ວນ 75 ສ່ວນຮ້ອຍ ແລະ ທ່ານ ນາງ ສະຫວັນທອງ ພິງສະຫວັນ ຖືຮຸ້ນໃນສັດສ່ວນ 25 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ. |

| ບໍລິສັດ ສຸດາພອນການຄ້າ ຂາອອກ-ຂາເຂົ້າ ແລະ ບໍລິການ ຈຳກັດ (Soudaphone Import-Export and Service Co.,Ltd.) | | |
|---|---|---|
| ວັນທີສ້າງຕັ້ງ | : | 12 ສິງຫາ 2013 |
| ທີ່ຕັ້ງສຳນັກງານໃຫຍ່ | : | ບ້ານ ສີບຸນເຮືອງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ |
| ລັກສະນະການປະກອບທຸລະກິດ | : | ບົວລະບັດຮັກສາ ແລະ ສ້ອມແປງລົດຍົນ ແລະ ບໍລິການຕົບແຕ່ງພາຫະນະທຸກປະເພດ ແລະ ປ່ຽນຢາງລົດໃຫຍ່ ພາຍໃຕ້ຮູບແບບແຟນຊາຍ "MOLY CARE" |
| ທຶນຈົດທະບຽນທີ່ຊຳລະແລ້ວ | : | 7,800,000,000 ກີບ |
| ຜູ້ອຳນວຍການ | : | ທ່ານ ຈັນທອນ ສິດທິໄຊ |
| ຄວາມສຳພັນກັບບໍລິສັດ | : | - ມີຜູ້ອຳນວຍການຮ່ວມກັນຄື ທ່ານ ຈັນທອນ ສິດທິໄຊ<br>- ເປັນບໍລິສັດທີ່ຖືຮຸ້ນໂດຍຜູ້ຖືຮຸ້ນລາຍໃຫຍ່ຂອງ PTL ຄື: ທ່ານ ຈັນທອນ ສິດທິໄຊ ຖືຮຸ້ນໃນສັດສ່ວນ 75 ສ່ວນຮ້ອຍ ແລະ ທ່ານ ນາງ ສະຫວັນທອງ ພິງສະຫວັນ ຖືຮຸ້ນໃນສັດສ່ວນ 25 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ. |

| ບໍລິສັດ ແວວ-ເທັກ ລາວ ຈຳກັດ (Well Tech Lao Co.,Ltd.) | | |
|---|---|---|
| ວັນທີສ້າງຕັ້ງ | : | 16 ສິງຫາ 2013 |
| ທີ່ຕັ້ງສຳນັກງານໃຫຍ່ | : | ບ້ານ ສີບຸນເຮືອງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ |
| ລັກສະນະການປະກອບທຸລະກິດ | : | ບໍລິການທີ່ປຶກສາທາງດ້ານການຄ້າ ແລະ ການລົງທຶນ ໂດຍນຳໃຊ້ເທັກໂນໂລຢີທີ່ທັນສະໄໝເຂົ້າຊ່ວຍ |
| ທຶນຈົດທະບຽນທີ່ຊຳລະແລ້ວ | : | 2,400,000,000 ກີບ |
| ຜູ້ອຳນວຍການ | : | ທ່ານ ນາງ ມະນີວອນ ສິດທິໄຊ |
| ຄວາມສຳພັນກັບບໍລິສັດ | : | - ເປັນບໍລິສັດທີ່ຖືຮຸ້ນໂດຍຜູ້ຖືຮຸ້ນຂອງ PTL ຄືທ່ານ ນາງ ມະນີວອນ ສິດທິໄຊ (ນ້ອງສາວ ທ່ານ ຈັນທອນ) ຖືຮຸ້ນໃນສັດສ່ວນ 50 ສ່ວນຮ້ອຍ ແລະ ທ່ານ ວຽງຄອນ ສິດທິໄຊ (ນ້ອງຊາຍ ທ່ານ ຈັນທອນ) ຖືຮຸ້ນໃນສັດສ່ວນ 50 ສ່ວນຮ້ອຍ ຂອງທຶນຈົດທະບຽນທີ່ຊຳລະແລ້ວ.<br>- ທ່ານ ນາງ ມະນີວອນ ສິດທິໄຊ ເປັນຜູ້ອຳນວຍການຂອງບໍລິສັດ ແລະ ເປັນຜູ້ຖືຮຸ້ນໃນ PTL ໃນສັດສ່ວນ 0.057 ສ່ວນຮ້ອຍ ແລະ ທ່ານ ວຽງຄອນ ສິດທິໄຊ ເປັນຜູ້ຖືຮຸ້ນໃນ PTL ໃນສັດສ່ວນ 0.057 ສ່ວນຮ້ອຍ. |

## 1.2 ເປົ້າໝາຍການນຳໃຊ້ເງິນທີ່ໄດ້ຈາກການອອກຈຳໜ່າຍຮຸ້ນ

ບໍລິສັດອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຈຳນວນ 60,000,000 ຮຸ້ນ ໂດຍມູນຄ່າກຳນົດ (par value) 2,000 ກີບຕໍ່ຮຸ້ນ ແລະ ຄາດການຈຳນວນເງິນທີ່ໄດ້ຈາກການອອກຈຳໜ່າຍຮຸ້ນບໍ່ຫຼຸດ 120 ຕື້ກີບ ໂດຍມີລາຍລະອຽດການລົງທຶນ ແລະ ເປົ້າໝາຍການນຳໃຊ້ເງິນທີ່ໄດ້ສະຫຼຸບຕາມຕາຕະລາງລຸ່ມນີ້:

ຕາຕະລາງທີ 1.2.1 : ເປົ້າໝາຍການນຳໃຊ້ເງິນທີ່ໄດ້ຈາກການອອກຈຳໜ່າຍຫຼັກຊັບ

| ວັດຖຸປະສົງ | ມູນຄ່າການລົງທຶນທັງໝົດ | ຈຳນວນເງິນທີ່ໃຊ້ຈາກການລະດົມທຶນ IPO | ຄາດຄະເນໄລຍະເວລາທີ່ນຳໃຊ້ເງິນຈາກການອອກຈຳໜ່າຍຮຸ້ນ |
|---|---|---|---|
| 1.) ລົງທຶນໃນການສ້າງສະຖານີບໍລິການນ້ຳມັນຈຳນວນ 20 ສະຖານີ ທົ່ວປະເທດ | ປະມານ 68 ຕື້ກີບ | ບໍ່ຫຼຸດ 54 ຕື້ກີບ | ທ້າຍປີ2014 - ຕົ້ນປີ 2015 |
| 2.) ໃຊ້ເປັນເງິນທຶນໝຸນວຽນເພື່ອບໍລິຫານການສັ່ງຊື້ນ້ຳມັນຈາກຕ່າງປະເທດ | ປະມານ 80 ຕື້ກີບ | ບໍ່ຫຼຸດ 42 ຕື້ກີບ | ປີ 2015 |
| 3.)ລົງທຶນໃນການບໍລິຫານລະບົບການຂົນສົ່ງ | ປະມານ 40 ຕື້ກີບ | ບໍ່ຫຼຸດ 24 ຕື້ກີບ | ປີ 2015 |
| **ລວມ** | **ປະມານ 188 ຕື້ກີບ** | **ບໍ່ຫຼຸດ 120 ຕື້ກີບ** | |

## 1.3 ບັນດາປັດໄຈຄວາມສ່ຽງ

ການລົງທຶນໃນຮຸ້ນສາມັນຂອງບໍລິສັດທີ່ສະເໜີຂາຍໃນຄັ້ງນີ້ມີຄວາມສ່ຽງ, ນັກລົງທຶນຄວນພິຈາລະນາຂໍ້ມູນໃນເອກະສານສະບັບນີ້ຢ່າງຮອບຄອບ ໂດຍສະເພາະປັດໄຈຄວາມສ່ຽງຕ່າງໆກ່ອນການຕັດສິນໃຈລົງທຶນໃນຮຸ້ນສາມັນຂອງບໍລິສັດດັ່ງກ່າວ. ບັນດາປັດໄຈຄວາມສ່ຽງທີ່ລະບຸໄວ້ໃນເອກະສານສະບັບນີ້ອາດຈະສົ່ງຜົນກະທົບໃນທາງລົບຕໍ່ບໍລິສັດ ແລະ ມູນຄ່າຮຸ້ນຂອງບໍລິສັດ ເຊິ່ງເປັນປັດໄຈຄວາມສ່ຽງທັງໝົດທີ່ມີຢູ່. ນອກຈາກນີ້ ອາດຈະມີປັດໄຈຄວາມສ່ຽງອື່ນໆອີກແຕ່ບໍລິສັດເຫັນວ່າ ເປັນຄວາມສ່ຽງທີ່ບໍ່ໄດ້ມີຜົນກະທົບຫຼາຍຕໍ່ພາບລວມບໍລິສັດໃນປັດຈຸບັນ ແຕ່ເຖິງຢ່າງໃດກໍ່ຕາມ ໃນອະນາຄົດຄວາມສ່ຽງຕ່າງໆເຫຼົ່ານີ້ອາດຈະເປັນຄວາມສ່ຽງທີ່ສົ່ງຜົນກະທົບຕໍ່ກັບລາຍຮັບຂອງບໍລິສັດ, ຜົນກຳໄລ, ຊັບສິນສະພາບຄ່ອງ, ແຫຼ່ງເງິນທຶນ ແລະ ໂອກາດທາງທຸລະກິດຂອງບໍລິສັດ. ດັ່ງນັ້ນ, ກ່ອນການຕັດສິນໃຈລົງທຶນນັກລົງທຶນຄວນໃຊ້ການພິຈາລະນາສຶກສາຂໍ້ມູນຢ່າງຮອບຄອບ ແລະ ປັດໄຈຄວາມສ່ຽງທັງໝົດທີ່ອາດຈະສົ່ງຜົນກະທົບຕໍ່ບໍລິສັດ ເຊິ່ງບໍ່ແມ່ນສະເພາະແຕ່ຄວາມສ່ຽງທີ່ໄດ້ລະບຸໄວ້ໃນເອກະສານສະບັບນີ້ເທົ່ານັ້ນ.

ນອກຈາກນີ້, ນັກລົງທຶນຍັງຕ້ອງສຶກສາເພີ່ມເຕີມກ່ຽວກັບຕະຫຼາດຫຼັກຊັບລາວເປັນຕົ້ນແມ່ນລະບຽບການ, ອາກອນ, ຫຼັກການໃນການຊື້-ຂາຍຫຼັກຊັບ, ສະພາບຄ່ອງໃນການຊື້-ຂາຍຫຼັກຊັບ, ຄ່າທຳນຽມ ແລະ ຄ່າໃຊ້ຈ່າຍອື່ນໆທີ່ພົວພັນເຖິງທຸລະກຳຕ່າງໆໃນການຊື້-ຂາຍຫຼັກຊັບ.

## 1. ຄວາມສ່ຽງໃນການດຳເນີນທຸລະກິດ

### 1.1 ຄວາມສ່ຽງທີ່ເກີດຈາກການຜັນຜວນຂອງລາຄານ້ຳມັນ

ເນື່ອງຈາກว่า ໃນໄລຍະຜ່ານມາຄວາມຕ້ອງການນຳໃຊ້ນ້ຳມັນມີນັບມື້ນັບສູງຂຶ້ນເລື້ອຍໆ ທັງໃນພາກການຊົມໃຊ້ທົ່ວໄປ ແລະ ໃນພາກການຜະລິດອຸດສາຫະກຳຕ່າງໆ ຈຶ່ງເຮັດໃຫ້ນ້ຳມັນເປັນທີ່ຕ້ອງການແບບທີ່ຂາດບໍ່ໄດ້ໃນການດຳລົງຊີວິດໃນໂລກປັດຈຸບັນ ເຊິ່ງສົ່ງຜົນກະທົບເຮັດໃຫ້ລາຄານ້ຳມັນດິບໃນຕະຫຼາດໂລກມີການປັບຕົວສູງຂຶ້ນຕາມກົນໄກທາງເສດຖະກິດ ສປປ ລາວ.ໃນຖານະຜູ້ນຳເຂົ້າน้ำมันจากต่างประเทด ຈຳເປັນຕ້ອງໄດ້ສັ່ງຊື້ນ້ຳມັນທີ່ມີລາຄາແພງເຂົ້າມາຂາຍໃນບາງຊ່ວງເພື່ອຕອບສະໜອງຄວາມຕ້ອງການຊົມໃຊ້ຕາມຄວາມຈຳເປັນ. ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ ໄດ້ກຳນົດລາຄາຂາຍນ້ຳມັນໃນ ສປປ ລາວ ໂດຍອ້າງອີງຈາກລາຄາຕະຫຼາດນ້ຳມັນໃນປະເທດສິງກະ�โป. ສະນັ້ນການຜັນຜວນຂຶ້ນ-ລົງຂອງລາຄານ້ຳມັນຈຶ່ງບໍ່ມີຜົນກະທົບຕໍ່ປະລິມານການນຳໃຊ້ເນື່ອງຈາກว่าน้ำมันเป็นสินค้าจำเป็ນ ແລະ ບໍ່ມີສິນຄ້າທີ່ສາມາດທົດແທນໄດ້ ແຕ່ມັນຈະສົ່ງຜົນກະທົບຕໍ່ລາຍຮັບຂອງບໍລິສັດ ໃນຂະນະທີ່ຄວາມຜັນຜວນຂອງລາຄາຕົ້ນທຶນນ້ຳມັນຈະສົ່ງຜົນກະທົບຕໍ່ກຳໄລສຸດທິຂອງບໍລິສັດ ເນື່ອງຈາກຄວາມສ່ຽງດັ່ງກ່າວເປັນຄວາມສ່ຽງທີ່ເກີດຈາກປັດໃຈພາຍນອກ. ເຊິ່ງລາຄານ້ຳມັນໃນຕະຫຼາດໂລກລວມເຖິງລາຄານ້ຳມັນທີ່ຈຳໜ່າຍຜ່ານສະຖານີບໍລິການນ້ຳມັນ ທີ່ຖືກກຳນົດໂດຍສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ ລາວ ນັ້ນບັນດາຄວາມສ່ຽງດັ່ງກ່າວເປັນຄວາມສ່ຽງທີ່ຜູ້ປະກອບການຈຳໜ່າຍນ້ຳມັນເຊື້ອໄຟຕ້ອງປະເຊີນດ້ວຍກັນທັງໝົດ, ຜົນການດຳເນີນງານຂອງຜູ້ປະກອບການແຕ່ລະເຈົ້າຂຶ້ນຢູ່ກັບຄວາມສາມາດໃນການບໍລິຫານຈັດການຕົ້ນທຶນ ລວມເຖິງການບໍລິຫານຈັດການໃນການສັ່ງຊື້ ແລະ ຄາດຄະເນສະຖານະການກ່ຽວກັບລາຄານ້ຳມັນໃນຕະຫຼາດໂລກ.

ໃນນີ້ ບໍລິສັດກໍ່ບໍ່ໄດ້ເມີນເສີຍຕໍ່ກັບຄວາມສ່ຽງຕ່າງໆເຫຼົ່ານັ້ນ, ບໍລິສັດຈຶ່ງມີການຕິດຕາມບົດວິເຄາະລາຍງານການປ່ຽນແປງຂອງລາຄານ້ຳມັນ ໃນຕະຫຼາດນ້ຳມັນປະເທດສິງກະ�โป ແລະ ມີການພັດທະນາລະບົບໄອທີໃນການກວດສອບປະລິມານນ້ຳມັນສຳຮອງຢູ່ສາງ ໂດຍທີ່ບໍລິສັດສາມາດຮູ້ປະລິມານນ້ຳມັນສຳຮອງໃນທຸກສາງທັງໝົດຂອງບໍລິສັດ ເພື່ອທີ່ຈະສາມາດຄາດຄະເນ ແລະ ກຳນົດປະລິມານການສັ່ງຊື້ນ້ຳມັນໃຫ້ເໝາະສົມກັບສະຖານະການຂອງລາຄານ້ຳມັນໃນຕະຫຼາດໂລກ

ໃນແຕ່ລະຊ່ວງໄລຍະເວລາ ນອກເໜືອຈາກນີ້ບໍລິສັດຍັງພັດທະນາລະບົບຂົນສົ່ງນ້ຳມັນໃຫ້ມີປະສິດທິພາບຫຼາຍຂຶ້ນເພື່ອທີ່ຈະສາມາດຄວບຄຸມຕົ້ນທຶນໃນການຂົນສົ່ງນ້ຳມັນຈາກຜູ້ຜະລິດມາສູ່ສາງນ້ຳມັນຂອງບໍລິສັດ ແລະ ນຳສົ່ງໄປໃຫ້ລູກຄ້າຂອງບໍລິສັດຕໍ່ໄປ ໂດຍການພັດທະນາດັ່ງກ່າວບໍລິສັດມີແຜນການໃນອະນາຄົດເຊິ່ງຈະນຳໃຊ້ເງິນຈາກການລະດົມທຶນຄັ້ງນີ້ໄປລົງທຶນພັດທະນາລະບົບຂົນສົ່ງລະຫວ່າງປະເທດ (ລາຍລະອຽດຕາມສ່ວນທີ່ **1.5 ແຜນການໃນອະນາຄົດ**) ເພື່ອພັດທະນາປະສິດທິພາບໃນການຂົນສົ່ງ ລວມເຖິງການບໍລິຫານຈັດການຕົ້ນທຶນການຂົນສົ່ງດັ່ງກ່າວເພື່ອເຮັດໃຫ້ບໍລິສັດສາມາດຫຼຸດຄວາມສ່ຽງຈາກການຜັນຜວນຂອງລາຄານ້ຳມັນທີ່ເກີດຂຶ້ນໄດ້.

**1.2 <u>ຄວາມສ່ຽງຈາກການແຂ່ງຂັນທາງທຸລະກິດ</u>**

ເນື່ອງຈາກທຸລະກິດການຈຳໜ່າຍນ້ຳມັນເຊື້ອໄຟໃນ ສປປ ລາວ ເປັນທຸລະກິດທີ່ມີການແຂ່ງຂັນສູງ ເຊິ່ງມີຜູ້ດຳເນີນທຸລະກິດດ້ານນີ້ຈຳນວນຫຼາຍ ບໍ່ວ່າຈະເປັນພາກລັດວິສາຫະກິດ ຫຼື ບໍລິສັດເອກະຊົນລາຍໃຫຍ່ທັງພາຍໃນ ແລະ ຕ່າງປະເທດ ລວມເຖິງຫົວໜ່ວຍທຸລະກິດລາຍຍ່ອຍຂະໜາດນ້ອຍ. ໃນປັດຈຸບັນມີ 16 ຫົວໜ່ວຍທຸລະກິດທີ່ດຳເນີນທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟຜ່ານທາງສະຖານີບໍລິການນ້ຳມັນ ອີງຕາມຂໍ້ມູນລ່າສຸດຂອງວັນທີ 31 ທັນວາ 2013 (ລາຍລະອຽດໃນຂໍ້ 1.4 ການດຳເນີນທຸລະກິດໃນປັດຈຸບັນ) ແລະ ມີສະຖານີບໍລິການນ້ຳມັນທັງໝົດ 1,076 ສະຖານີທົ່ວ ສປປ ລາວ. ໃນທ້າຍປີ 2013 ບໍລິສັດມີຈຳນວນສະຖານີບໍລິການນ້ຳມັນທັງໝົດ 105 ສະຖານີ ຄິດເປັນສັດສ່ວນ 9.76 ສ່ວນຮ້ອຍຂອງຈຳນວນສະຖານີບໍລິການນ້ຳມັນທັງໝົດ. ໃນອຸດສາຫະກຳຜູ້ຈຳໜ່າຍນ້ຳມັນຜ່ານສະຖານີບໍລິການ ແມ່ນມີການແຂ່ງຂັນສູງ ໂດຍສະເພາະໃນເລື່ອງຂອງສະຖານທີ່ການຕັ້ງສະຖານີບໍລິການນ້ຳມັນ ເພື່ອພະຍາຍາມດຶງດູດລູກຄ້າໃຫ້ມາໃຊ້ບໍລິການ ສົ່ງຜົນໃຫ້ບໍລິສັດມີຄວາມສ່ຽງໃນການແຂ່ງຂັນໃນທຸລະກິດ. ຖ້າຫາກບໍລິສັດປັບຕົວບໍ່ທັນຕາມການປ່ຽນແປງໃນອຸດສາຫະກຳ ຫຼື ບໍ່ສາມາດຂະຫຍາຍຈຳນວນສະຖານີບໍລິການນ້ຳມັນໄດ້ຈະເຮັດໃຫ້ສົ່ງຜົນກະທົບຕໍ່ຜົນການດຳເນີນທຸລະກິດຂອງບໍລິສັດໄດ້ໃນອະນາຄົດ.

ແຕ່ເຖິງຢ່າງໃດກໍຕາມ ບໍລິສັດໄດ້ມີວິທີການຄຸ້ມຄອງບໍລິຫານຄວາມສ່ຽງດັ່ງກ່າວ ໂດຍການພັດທະນາປັບປຸງທັງໃນສ່ວນຂອງຄຸນນະພາບສິນຄ້າ ແລະ ບໍລິການ. ບໍລິສັດໄດ້ມີການພັດທະນາຮູບແບບຂອງສະຖານີບໍລິການນ້ຳມັນ ທີ່ເປັນສູນກາງການໃຊ້ຊີວິດຂອງຄົນໃນຊຸມຊົນເມືອງ ແລະ ເປັນແຫຼ່ງລວມສິນຄ້າ ແລະ ບໍລິການເພື່ອອຳນວຍຄວາມສະດວກແກ່ຜູ້ມາໃຊ້ບໍລິການ ໃນຮູບແບບຂອງສະຖານີ ພລັສ ແພັລດຕິນຳ (PTN) ແລະ ສະຖານີ ພລັສ ໂກລ (GLD) ພາຍໃຕ້ແນວຄວາມຄິດ (Life Station) ການພັດທະນາຮູບແບບຂອງສະຖານີບໍລິການນ້ຳມັນເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າທີ່ມາໃຊ້ບໍລິການໄດ້ຮັບຜົນຕອບຮັບທີ່ດີສົ່ງຜົນເຮັດໃຫ້ລາຍຮັບຂອງບໍລິສັດຜ່ານທາງສະຖານີບໍລິການນ້ຳມັນເພີ່ມຂຶ້ນຢ່າງຕໍ່ເນື່ອງໃນປີ 2011, 2012 ແລະ 2013 ເທົ່າກັບ 270.72 ຕື້ກີບ 357.40 ຕື້ກີບ ແລະ 464.85 ຕື້ກີບ ຫຼື ເທົ່າກັບ 29.91 ສ່ວນຮ້ອຍ 35.07 ສ່ວນຮ້ອຍ ແລະ 43.24 ສ່ວນຮ້ອຍຕໍ່ຍອດຂາຍລວມຕາມລຳດັບ. ເຖິງແນວໃດກໍ່ຕາມບໍລິສັດກໍ່ບໍ່ໄດ້ຖືເບົາໃນເລື່ອງດັ່ງກ່າວ ບໍລິສັດຍັງມີໜ່ວຍງານທາງດ້ານການຕະຫຼາດທີ່ຕິດຕາມ ແລະ ພັດທະນາເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າຜູ້ມາໃຊ້ບໍລິການຢ່າງຕໍ່ເນື່ອງ. ໂດຍບໍລິສັດມີຊ່ອງທາງການສື່ສານ ແລະ ຮັບຟັງຄວາມເຫັນຈາກລູກຄ້າຜູ້ມາໃຊ້ບໍລິການຜ່ານທາງສື່ອອນໄລນ໌ ແລະ ສັງຄົມອອນໄລນ໌ (Social Media) ເຮັດໃຫ້ບໍລິສັດສາມາດຮັບຟັງຄວາມເຫັນໂດຍກົງຈາກລູກຄ້າຜູ້ມາໃຊ້ບໍລິການ ລວມເຖິງສາມາດສື່ສານໂດຍກົງໄປຍັງຜູ້ໃຊ້ບໍລິການ ເຮັດໃຫ້ບໍລິສັດສາມາດບໍລິຫານຈັດການຄວາມສ່ຽງໃນເລື່ອງດັ່ງກ່າວໄດ້.

### 1.3 ຄວາມສ່ຽງທີ່ເກີດຈາກການເພິ່ງພາຜູ້ຄ້ານ້ຳມັນລາຍໃຫຍ່

ເນື່ອງຈາກບໍລິສັດເປັນຜູ້ນຳເຂົ້າ ແລະ ຈຳໜ່າຍນ້ຳມັນເຊື້ອໄຟໃນ ສປປ ລາວ ແລະ ບໍ່ມີໂຮງກັ່ນເປັນຂອງຕົນເອງ, ບໍລິສັດຈຶ່ງໄດ້ມີການສັ່ງຊື້ນ້ຳມັນຈາກຜູ້ປະກອບການທີ່ມີຊື່ສຽງ ແລະ ເປັນທີ່ຍອມຮັບໃນລະດັບສາກົນ ຄື: IRPC Public Company Limited (IRPC) ເປັນຜູ້ຈຳໜ່າຍນ້ຳມັນໃຫ້ບໍລິສັດເປັນຫຼັກ. ໂດຍ IRPC ເປັນຜູ້ດຳເນີນທຸລະກິດປິໂຕຣເຄມີແຫ່ງທຳອິດໃນພາກພື້ນອາຊີຕາເວັນອອກສຽງໃຕ້. ໃນປັດຈຸບັນ IRPC ມີຂະໜາດກຳລັງຜະລິດຈັດເປັນອັນດັບ 3 ຂອງປະເທດໄທ ເຊິ່ງມີຊື່ສຽງ, ຄວາມໜ້າເຊື່ອຖື ແລະ ເປັນທີ່ຍອມຮັບໃນລະດັບສາກົນ. ໃນການສັ່ງຊື້ນ້ຳມັນເຊື້ອໄຟໃນປີ 2011 - 2013 ບໍລິສັດໄດ້ສັ່ງຊື້ຜະລິດຕະພັນນ້ຳມັນເຊື້ອໄຟຈາກ IRPC ຈຳນວນ 83.29 ລ້ານລິດ, 110.92 ລ້ານລິດ ແລະ 121.70 ລ້ານລິດ ຫຼື ຄິດເປັນສັດສ່ວນ 83.25 ສ່ວນຮ້ອຍ, 93.45 ສ່ວນຮ້ອຍ ແລະ 93.41 ສ່ວນຮ້ອຍຂອງປະລິມານການສັ່ງຊື້ນ້ຳມັນເຊື້ອໄຟທັງໝົດໃນແຕ່ລະປີຕາມລຳດັບ. ດ້ວຍເຫດນີ້ ຈຶ່ງຖືວ່າບໍລິສັດມີຄວາມສ່ຽງຈາກການເພິ່ງພາຜູ້ສະໜອງນ້ຳມັນລາຍໃຫຍ່ (Supplier)ໃນອະນາຄົດ. ຫາກ IRPC ມີເຫດຈຳເປັນທີ່ເຮັດໃຫ້ບໍ່ສາມາດຈຳໜ່າຍນ້ຳມັນໃຫ້ແກ່ບໍລິສັດໄດ້ ຫຼື ຈຳໜ່າຍນ້ຳມັນພຽງບາງສ່ວນທີ່ຕ່ຳກວ່າປະລິມານຄວາມຕ້ອງການຂອງບໍລິສັດ ກໍ່ຈະສົ່ງຜົນກະທົບຕໍ່ຜົນການດຳເນີນທຸລະກິດຂອງບໍລິສັດໄດ້.

ເຖິງແນວໃດກໍ່ຕາມ ບໍລິສັດ ແລະ IRPC ກໍ່ເປັນພັນທະມິດທາງການຄ້າທີ່ດີຕໍ່ກັນ, ບໍລິສັດຈຶ່ງໄດ້ມີການສັ່ງຊື້ນ້ຳມັນຈາກ IRPC ນັບຕັ້ງແຕ່ມີການສ້າງຕັ້ງເປັນຕົ້ນມາເປັນໄລຍະເວລາ 6 ປີ. ບໍລິສັດໄດ້ຕົກລົງເຮັດສັນຍາກັບ IRPC ໃນການສັ່ງຊື້ນ້ຳມັນ ໂດຍທີ່ IRPC ເປັນຜູ້ສະເໜີລາຄາມາໃຫ້ບໍລິສັດໃນວັນຈັນຂອງແຕ່ລະອາທິດ ເຊິ່ງເປັນການສະເໜີລາຄາທີ່ມີອາຍຸ 1 ອາທິດ. ການສັ່ງຊື້ນ້ຳມັນບໍລິສັດຈະໄດ້ສັ່ງຊື້ນ້ຳມັນທຸກໆວັນຈັນ, ວັນພຸດ ແລະ ວັນສຸກ. ໃນແຕ່ລະອາທິດ ບໍລິສັດໄດ້ວາງແຜນສັ່ງຊື້ໂດຍປຽບທຽບປະລິມານນ້ຳມັນສຳຮອງໃນແຕ່ລະສາງ (Daily Bulk Stock) ເຊິ່ງມີການວັດແທກທຸກໆມື້ຫຼັງເລີກການ ແລະ ການປະເມີນຄວາມຕ້ອງການຂອງລູກຄ້າເພື່ອສັ່ງຊື້ ແລະ ກຳນົດເວລາໃນການຂົນສົ່ງນ້ຳມັນຈາກໜ້າໂຮງກັ່ນໄປສູ່ສາງໃນແຕ່ລະພື້ນທີ່ໂດຍໃຊ້ເວລາປະມານ 12 ຊົ່ວໂມງ. ຜ່ານມາບໍລິສັດຍັງບໍ່ເຄີຍພົບບັນຫາໃນການສັ່ງຊື້ ແລະ ຈັດສົ່ງນ້ຳມັນຈາກ IRPC. ແຕ່ເຖິງຢ່າງໃດກໍ່ຕາມ ບໍລິສັດກໍ່ບໍ່ເຄີຍຖືເບົາໃນເລື່ອງຂອງຄວາມສ່ຽງໃນການອີງໃສ່ຜູ້ສະໜອງແຕ່ພຽງຜູ້ດຽວ. ນອກນັ້ນບໍລິສັດຍັງໄດ້ມີການຄຸ້ມຄອງບໍລິຫານການກະຈາຍຄວາມສ່ຽງດັ່ງກ່າວ ໂດຍການສັ່ງຊື້ນ້ຳມັນເຊື້ອໄຟນຳຜູ້ສະໜອງທີ່ມີຊື່ສຽງອື່ນໆອີກຕາມມາດຕາ 7 ຂອງກົດໝາຍການຄ້ານ້ຳມັນເຊື້ອໄຟ ພ.ສ.2543 ແຫ່ງຣາດຊະອານາຈັກໄທ (ລາຍລະອຽດຢູ່ໃນນິຍາມຄຳສັບ) ເຊັ່ນ: Chevron (Thailand) Limited (chevron), ESSO (Thailand) Public Company Limited (ESSO) ແລະ The Shell Company of Thailand Limited (Shell). ໃນການພິຈາລະນາການສັ່ງຊື້ຈາກຜູ້ສະໜອງອື່ນ ແມ່ນການສົມທຽບໄລຍະເວລາໃນການຂົນສົ່ງ ຈາກໜ້າໂຮງກັ່ນມາຍັງສາງຂອງບໍລິສັດ ເຊິ່ງຜູ້ສະໜອງນ້ຳມັນອື່ນສ່ວນໃຫຍ່ກໍ່ຈະຕັ້ງຢູ່ໃກ້ກັບ IRPC ຄືກັນເຊັ່ນ: ເຂດຈັງຫວັດຊົນບູລີ ແລະ ຈັງຫວັດຣະຍອງ (ປະເທດໄທ) ເຮັດໃຫ້ບໍລິສັດສາມາດຄາດຄະເນໄລຍະເວລາໃນການຂົນສົ່ງໃຫ້ສອດຄ່ອງກັບເວລາໄດ້. ການເພີ່ມຜູ້ສະໜອງອີກ 3 ແຫ່ງທີ່ເປັນໂຮງກັ່ນ ແລະ ເປັນຜູ້ຄ້ານ້ຳມັນລາຍໃຫຍ່ຂອງປະເທດໄທ ເຮັດໃຫ້ບໍລິສັດສາມາດຫຼຸດຄວາມສ່ຽງຈາກການທີ່ IRPC ບໍ່ສາມາດຈຳໜ່າຍນ້ຳມັນເຊື້ອໄຟໃຫ້ພຽງພໍຕໍ່ຄວາມຕ້ອງການນ້ຳມັນເຊື້ອໄຟຂອງບໍລິສັດ.

### 1.4 ຄວາມສ່ຽງຈາກການຄຸ້ມຄອງບໍລິຫານການຂົນສົ່ງ

ບໍລິສັດດຳເນີນທຸລະກິດນຳເຂົ້ານ້ຳມັນເຊື້ອໄຟຈາກຜູ້ສະໜອງນ້ຳມັນເຊື້ອໄຟໃນປະເທດໄທ ແລະ ມາຈຳໜ່າຍໃນ ສປປ ລາວ ຜ່ານທາງສະຖານີບໍລິການນ້ຳມັນ ແລະ ຈຳໜ່າຍໂດຍກົງເຂົ້າໂຄງການ ຫຼື ພາກສ່ວນອຸດສາຫະກຳຕ່າງໆ. ໃນການຂົນສົ່ງນ້ຳມັນເຊື້ອໄຟຈາກຜູ້ຄ້ານ້ຳມັນທີ່ສ່ວນໃຫຍ່ມີເຂດພື້ນທີ່ຕັ້ງຢູ່ຈັງຫວັດຊົນບູລີ ແລະ ຈັງຫວັດຣະຍອງ

ຂອງປະເທດໄທ, ບໍລິສັດຈະຈ້າງບໍລິສັດຂົນສົ່ງນ້ຳມັນເຊື້ອໄຟທີ່ໄດ້ຮັບອະນຸຍາດຕາມມາດຕາ 12 ຂອງກົດໝາຍວ່າດ້ວຍການຄ້ານ້ຳມັນເຊື້ອໄຟແຫ່ງຣາດຊະອານາຈັກໄທ ພສ 2543 ຄື: ບໍລິສັດ ເອສ-ວັນ ໂລຈິດຕິກສ໌ ຈຳກັດ (S1), ບໍລິສັດ ສຸທີ ແທັງເກີລ໌ ແອນດ໌ ສະເປຊຽນຊັກ ຈຳກັດ (SUTEE) ແລະ ບໍລິສັດ ວັດຊະລະຊັບ ປິໂຕຣລ້ຽມ ຈຳກັດ (WAT). ບໍລິສັດດັ່ງກ່າວ ເປັນບໍລິສັດທີ່ຜ່ານການປະເມີນຄຸນະພາບ ແລະ ຢູ່ໃນລາຍຊື່ຜູ້ຈັດສົ່ງ (Supplier List) ຂອງບໍລິສັດ ລວມເຖິງເປັນທີ່ຍອມຮັບຂອງຜູ້ຄ້ານ້ຳມັນ. ບໍລິສັດໄດ້ເອົາໃຈໃສ່ເລືອກບໍລິສັດຂົນສົ່ງທີ່ມີຄຸນະພາບ. ເນື່ອງຈາກ ນ້ຳມັນເຊື້ອໄຟເປັນສິນຄ້າທີ່ສາມາດປອມແປງ ຫຼື ສາມາດເຈືອປົນໄດ້ໃນລະຫວ່າງການຂົນສົ່ງຈາກໜ້າໂຮງກັ່ນມາຍັງສາງນ້ຳມັນຂອງບໍລິສັດໃນ ສປປ ລາວ ໃຊ້ເວລາປະມານ 12 ຊົ່ວໂມງ. ນອກຈາກນີ້ ຖ້າບໍລິສັດຂົນສົ່ງບໍ່ຄວບຄຸມເຕັກນິກດ້ານຄຸນະພາບໃຫ້ດີອາດເກີດມີນ້ຳເຂົ້າມາເຈືອປົນເຊັ່ນ: ໃນເວລາຝົນຕົກຜູ້ຂັບລົດຂົນສົ່ງອາດຈະປິດຝາບໍ່ແໜ້ນ ຫຼື ອຸປະກອນຂອງລົດຂົນສົ່ງຢູ່ໃນສະພາບໃຊ້ງານບໍ່ໄດ້ ອາດເຮັດໃຫ້ນ້ຳສາມາດຊຶມເຂົ້າໄປເຈືອປົນກັບນ້ຳມັນເຊື້ອໄຟໄດ້. ໃນອະດີດ ທາງບໍລິສັດເຄີຍພົບບັນຫານ້ຳມັນເຊື້ອໄຟທີ່ນຳມາສົ່ງໃຫ້ບໍ່ໄດ້ຄຸນະພາບຕາມມາດຕະຖານ, ບໍລິສັດຈຶ່ງໄດ້ສົ່ງນ້ຳມັນໃນລົດຄັນດັ່ງກ່າວກັບຄືນ ໂດຍຄວາມຮັບຜິດຊອບນີ້ຈະຕົກຢູ່ກັບຜູ້ຂົນສົ່ງນ້ຳມັນພຽງຝ່າຍດຽວ.

ເຖິງຢ່າງໃດກໍຕາມ ບໍລິສັດມີວິທີການຄຸ້ມຄອງບໍລິຫານຈັດການ ເພື່ອຫຼຸດຜ່ອນຄວາມສ່ຽງດັ່ງກ່າວລົງ. ບໍລິສັດຈຶ່ງເລືອກຈ້າງບໍລິສັດທີ່ຢູ່ໃນລາຍຊື່ຜູ້ຈັດສົ່ງ (Supplier List) ທີ່ຜ່ານການປະເມີນລະບົບຄວບຄຸມຄວາມປອດໄພ, ຄຸນະພາບຂອງລົດຂົນສົ່ງນ້ຳມັນ ແລະ ອຸປະກອນ, ມີການປະຕິບັດຕາມຂັ້ນຕອນໃນການຂົນສົ່ງນ້ຳມັນຢ່າງຖືກຕ້ອງ. ບໍລິສັດມີມາດຕະຖານໃນການປະເມີນຄຸນະພາບຂອງການຂົນສົ່ງນ້ຳມັນ. ນອກຈາກນີ້ ບໍລິສັດຍັງໄດ້ລົງທຶນສ້າງຫ້ອງທົດລອງເພື່ອວັດແທກຄຸນະພາບນ້ຳມັນປະຈຳແຕ່ລະສາງນ້ຳມັນທຸກແຫ່ງ. ບໍລິສັດຈະກວດສອບຄຸນະພາບຂອງນ້ຳມັນເຊື້ອໄຟໂດຍປຽບທຽບຄຸນະພາບນ້ຳມັນໜ້າໂຮງກັ່ນ ແລະ ໜ້າສາງຂອງບໍລິສັດຕາມມາດຕະຖານ API ກ່ອນຈັດສົ່ງໄປຈຳໜ່າຍທີ່ສະຖານີບໍລິການນ້ຳມັນ ຫຼື ຈຳໜ່າຍໃຫ້ຫົວໜ່ວຍທຸລະກິດທຸກຄັ້ງ. ນອກຈາກນີ້ ໃນການຂົນສົ່ງນ້ຳມັນຈາກໜ້າໂຮງກັ່ນມາເຖິງສາງນ້ຳມັນຂອງບໍລິສັດອາດຈະມີຄວາມສ່ຽງກ່ຽວກັບເລື່ອງອຸບັດຕິເຫດເກີດຂຶ້ນທີ່ເຮັດໃຫ້ສົ່ງຜົນກະທົບຕໍ່ກັບບໍລິສັດ. ດັ່ງນັ້ນ ບໍລິສັດຈຶ່ງມີຂໍ້ບັງຄັບກັບບັນດາບໍລິສັດຂົນສົ່ງນ້ຳມັນໃຫ້ຮັບປະກັນຄວາມເສຍຫາຍທີ່ອາດເກີດຂຶ້ນ ດັ່ງກ່າວ ເຊັ່ນ: ການເຮັດປະກັນໄພລົດຍົນ, ການກວດສອບລົດຂົນສົ່ງທຸກຄັ້ງກ່ອນການເດີນທາງເປັນຕົ້ນ.

## 1.5 ຄວາມສ່ຽງກ່ຽວກັບການຕໍ່ອາຍຸສັນຍາຂອງສະຖານີບໍລິການນ້ຳມັນໃນຮູບແບບຮ່ວມລົງທຶນ

ບໍລິສັດດຳເນີນທຸລະກິດນຳເຂົ້າ ແລະ ຈຳໜ່າຍນ້ຳມັນເຊື້ອໄຟຜ່ານທາງສະຖານີບໍລິການນ້ຳມັນ ເຊິ່ງຮູບແບບໃນການລົງທຶນ ແລະ ຄຸ້ມຄອງບໍລິຫານມີ 2 ຮູບແບບຄື: ຮູບແບບບໍລິສັດລົງທຶນ ແລະ ບໍລິຫານເອງ (Company Owned Company Operated: COCO) ແລະ ຮູບແບບບໍລິສັດຮ່ວມລົງທຶນ (Company Owned Dealer Operated: CODO). ໃນປັດຈຸບັນ ບໍລິສັດມີສະຖານີບໍລິການນ້ຳມັນພາຍໃຕ້ເຄື່ອງໝາຍການຄ້າ "ພລັສ" (PLUS) ທັງໝົດຈຳນວນ 107 ສະຖານີ ໂດຍແບ່ງເປັນ ຮູບແບບ COCO 8 ສະຖານີ ຫຼື ເທົ່າກັບ 7.48 ສ່ວນຮ້ອຍຂອງຈຳນວນສະຖານີບໍລິການທັງໝົດ ແລະ ຮູບແບບ CODO 99 ສະຖານີ ຫຼື ເທົ່າກັບ 92.52 ສ່ວນຮ້ອຍຂອງຈຳນວນສະຖານີບໍລິການນ້ຳມັນທັງໝົດ. ບໍລິສັດຈຳໜ່າຍນ້ຳມັນຜ່ານທາງສະຖານີບໍລິການນ້ຳມັນໃນປີ 2011 2012 ແລະ 2013 ມີມູນຄ່າທັງໝົດດັ່ງນີ້: ໃນປີ 2011 ລາຍຮັບ 270,722 ລ້ານກີບ, ໃນປີ 2012 ລາຍຮັບ 357,406 ລ້ານກີບ ແລະ ໃນປີ 2013 ລາຍຮັບ 464,853 ລ້ານກີບ ເທົ່າກັບ 29.91 ສ່ວນຮ້ອຍ, 35.07 ສ່ວນຮ້ອຍ ແລະ 43.24 ສ່ວນຮ້ອຍຂອງຍອດຂາຍລວມຕາມລຳດັບ ເຊິ່ງລາຍຮັບຈາກການຈຳໜ່າຍຜ່ານທາງສະຖານີບໍລິການນ້ຳມັນເພີ່ມຂຶ້ນຢ່າງຕໍ່ເນື່ອງ ແລະ ຖືເປັນລາຍຮັບຈາກກຸ່ມລູກຄ້າທີ່ສຳຄັນທີ່ສຸດໃນອະດີດ. ບໍລິສັດແນໃສ່ນະ�โยบายໃນການຂະຫຍາຍຕົວຂອງສະຖານີບໍລິການນ້ຳມັນໃນຮູບແບບ CODO ສົ່ງຜົນໃຫ້ບໍລິສັດສາມາດຂະຫຍາຍຈຳນວນສະຖານີບໍລິການນ້ຳມັນ

ຂອງບໍລິສັດໄດ້ຢ່າງວ່ອງໄວ ເຊິ່ງໃນການຮ່ວມລົງທຶນຂອງຮູບແບບ CODO, ບໍລິສັດຈະເປັນຜູ້ລົງທຶນໃນອຸປະກອນທີ່ກ່ຽວກັບໂຄງສ້າງສະຖານີ ແລະ ຕູ້ຈ່າຍນ້ຳມັນເປັນຕົ້ນ. ໃນນັ້ນ ຜູ້ຮ່ວມລົງທຶນຈະນຳທີ່ດິນມາເປັນສ່ວນປະກອບຂອງການຮ່ວມລົງທຶນ ໂດຍບໍລິສັດຈະເຮັດສັນຍາກັບຜູ້ຮ່ວມລົງທຶນ 2 ສັນຍາທີ່ມີອາຍຸສັນຍາເທົ່າກັນ ຄື: ສັນຍາວ່າດ້ວຍການລົງທຶນຮ່ວມ ແລະ ສັນຍາວ່າດ້ວຍການຊື້-ຂາຍນ້ຳມັນເຊື້ອໄຟ. ແຕ່ບໍລິສັດກໍ່ຍັງມີຄວາມສ່ຽງ ເນື່ອງຈາກສະຖານີບໍລິການນ້ຳມັນໃນຮູບແບບ CODO ທີ່ກວມເອົາ 92.52 ສ່ວນຮ້ອຍຂອງຈຳນວນສະຖານີບໍລິການນ້ຳມັນທັງໝົດ, ເພາະຖ້າຫາກວ່າສັນຍາຮ່ວມລົງທຶນໃນຮູບແບບ CODO ໝົດອາຍຸພ້ອມໆກັນຫຼາຍສະຖານີ ແລະ ຫາກຜູ້ຮ່ວມລົງທຶນຕ້ອງການຍົກເລີກສັນຍາວ່າດ້ວຍການລົງທຶນຮ່ວມ ແລະ ສັນຍາວ່າດ້ວຍການຊື້-ຂາຍນ້ຳມັນເຊື້ອໄຟ ຈະເຮັດໃຫ້ສົ່ງຜົນກະທົບຕໍ່ຜົນປະກອບການຂອງບໍລິສັດໄດ້.

ແຕ່ເຖິງຢ່າງໃດກໍຕາມ ຄວາມສ່ຽງດັ່ງກ່າວຍັງບໍ່ມີຜົນກະທົບໃນໄລຍະໄວໆນີ້ຕໍ່ກັບບໍລິສັດ ເນື່ອງຈາກບໍລິສັດໄດ້ເຮັດສັນຍາວ່າດ້ວຍການລົງທຶນຮ່ວມ ແລະ ສັນຍາວ່າດ້ວຍການຊື້-ຂາຍນ້ຳມັນເຊື້ອໄຟທີ່ມີອາຍຸສັນຍາຢ່າງໜ້ອຍ 20 ປີທັງ 2 ສັນຍາ. ໝາຍຄວາມວ່າບໍລິສັດມີອາຍຸສັນຍາຮ່ວມລົງທຶນກັບຜູ້ຮ່ວມລົງທຶນໃນຮູບແບບ CODO ໄລຍະສັ້ນສຸດ 14 ປີ ເຫັນວ່າຍັງບໍ່ແມ່ນໄລຍະເວລາອັນໃກ້ ແລະ ເນື້ອໃນຂອງສັນຍາຍັງລະບຸໃຫ້ສາມາດຕໍ່ອາຍຸສັນຍາອອກໄປໄດ້ອີກ 10 ປີ ແບບອັດຕະໂນມັດຫາກຄູ່ສັນຍາບໍ່ມີການແຈ້ງເປັນລາຍລັກອັກສອນລ່ວງໜ້າກ່ອນສິ້ນສຸດອາຍຸສັນຍາຢ່າງໜ້ອຍ 1 ເດືອນ.

ຕາຕະລາງທີ 1.3.1 : ສະຫຼຸບຈຳນວນສະຖານີ CODO ທີ່ຈະໝົດອາຍຸສັນຍາ

| ປີທີ່ໝົດອາຍຸສັນຍາຮ່ວມລົງທຶນ | ຈຳນວນສະຖານີ |
|---|---|
| 2028 | 1 |
| 2029 | 26 |
| 2030 | 25 |
| 2031 | 26 |
| 2032 | 13 |
| 2033 | 7 |
| 2034 | 1 |

ຕາມຕາຕະລາງຂ້າງເທິງຮູບແບບ CODO ສ່ວນໃຫຍ່ຈະໝົດອາຍຸໃນຊ່ວງເວລາໃກ້ຄຽງກັນໃນຊ່ວງປີ 2029-2032 ເຊັ່ນ: ໃນປີ 2029 ມີ 26 ສະຖານີ, ໃນປີ 2030 ມີ 25 ສະຖານີ, ໃນປີ 2031 ມີ 26 ສະຖານີ ແລະ ໃນປີ 2032 ມີ 13 ສະຖານີ. ການເພີ່ມຈຳນວນສະຖານີບໍລິການນ້ຳມັນໃນອະນາຄົດໃນໄລຍະເວລາ 5 ປີຂ້າງໜ້າ ລະຫວ່າງປີ 2014-2018 ບໍລິສັດມີແຜນທີ່ຈະຂະຫຍາຍສະຖານີບໍລິການນ້ຳມັນເພີ່ມຂຶ້ນອີກປະມານ 97 ສະຖານີ ເຊິ່ງຈະຂະຫຍາຍທັງໃນຮູບແບບ COCO ແລະ ຮູບແບບ CODO. ໂດຍການເພີ່ມຂຶ້ນຂອງຈຳນວນສະຖານີບໍລິການນ້ຳມັນໃນອະນາຄົດຈະຊ່ວຍຫຼຸດຜ່ອນຄວາມສ່ຽງຂອງຮູບແບບ CODO ທີ່ຈະໝົດອາຍຸສັນຍາພ້ອມກັນ ແລະ ອາດຈະບໍ່ຕໍ່ອາຍຸສັນຍາໃນບາງສ່ວນ.

## 2 ຄວາມສ່ຽງທາງດ້ານການເງິນ

### 2.1 ຄວາມສ່ຽງຈາກອັດຕາແລກປ່ຽນ

ບໍລິສັດນຳເຂົ້ານ້ຳມັນເຊື້ອໄຟ ແລະ ຜະລິດຕະພັນທັງໝົດມາຈາກຜູ້ຄ້ານ້ຳມັນເຊື້ອໄຟໃນປະເທດໄທ ໂດຍບໍລິສັດຈະຊຳລະຄ່ານ້ຳມັນໃນສະກຸນເງິນໂດລາສະຫະລັດ ແລະ ຊຳລະຄ່າຂົນສົ່ງໃຫ້ແກ່ບໍລິສັດຂົນສົ່ງຈາກໜ້າໂຮງກັ່ນມາຍັງສາງຂອງບໍລິສັດດ້ວຍສະກຸນເງິນບາດ ເຊິ່ງທັງ 2 ສະກຸນເງິນນັ້ນເປັນສະກຸນເງິນຫຼັກໃນການຊຳລະ ແລະ ດຳເນີນທຸລະກຳຂອງບໍລິສັດ. ແຕ່ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟແກ່ພາກສ່ວນຕ່າງໆໃນ ສປປ ລາວ, ສ່ວນໃຫຍ່ແມ່ນຈະຮັບການຊຳລະຄ່ານ້ຳມັນເຊື້ອໄຟເປັນສະກຸນເງິນກີບເປັນຫຼັກ ແລະ ບາງສ່ວນບໍລິສັດກໍ່ໄດ້ຮັບການຊຳລະຄ່ານ້ຳມັນເຊື້ອໄຟເປັນສະກຸນເງິນໂດລາສະຫະລັດ ຫຼື ເງິນບາດ ຈາກລູກຄ້າໂຄງການເປັນຕົ້ນ. ດ້ວຍເຫດທີ່ວ່າລາຍຮັບ ແລະ ລາຍຈ່າຍຕ່າງສະກຸນເງິນກັນ ຈຶ່ງເຮັດໃຫ້ບໍລິສັດມີຄວາມສ່ຽງເລື່ອງອັດຕາແລກປ່ຽນ. ໃນປັດຈຸບັນ ສປປ ລາວ ອີງຕາມການແຈ້ງການຂອງທະນາຄານແຫ່ງ ສປປ ລາວ ເລກທີ 619/ທຫລ ລົງວັນທີ 14 ສິງຫາ 2014 ວ່າດ້ວຍ ສັນຍາຊື້-ຂາຍ ເງິນຕາຕ່າງປະເທດລ່ວງໜ້າ (Forward Contract) ໄດ້ມີການປະກາດນຳໃຊ້ແລ້ວແຕ່ຍັງບໍ່ມີການໃຫ້ບໍລິການຕາມບັນດາທະນາຄານທຸລະກິດຢ່າງແຜ່ຫຼາຍເທື່ອ ສຳລັບເຄື່ອງມືທາງການເງິນອື່ນໆ ເຊັ່ນ: ການເຮັດສັນຍາຈະຊື້ຈະຂາຍເງິນຕາລ່ວງໜ້າແບບບໍ່ຜູກມັດ (Option) ຫຼື ການເຮັດສະວອບ (Swap)ຍັງບໍ່ມີທະນາຄານ ຫຼື ສະຖາບັນການເງິນແຫ່ງໃດໃຫ້ບໍລິການໃນສ່ວນຂອງເຄື່ອງມືທາງການເງິນເພື່ອບໍລິຫານຄວາມສ່ຽງອັດຕາແລກປ່ຽນ ສົ່ງຜົນໃຫ້ບໍລິສັດຕ້ອງແບກຮັບພາລະຄວາມສ່ຽງດ້ານອັດຕາແລກປ່ຽນ ເຊິ່ງອາດຈະສົ່ງຜົນກະທົບຕໍ່ຜົນການດຳເນີນທຸລະກິດຂອງບໍລິສັດ.

ເຖິງຢ່າງໃດກໍ່ຕາມ ບໍລິສັດກໍ່ມີວິທີການຄຸ້ມຄອງບໍລິຫານເລື່ອງຄວາມສ່ຽງຈາກອັດຕາແລກປ່ຽນ ໂດຍພະແນກການເງິນຈະເປັນຜູ້ຮັບຜິດຊອບໃນການບໍລິຫານຄ່າເງິນດັ່ງກ່າວຕັ້ງແຕ່ເລີ່ມກໍ່ຕັ້ງບໍລິສັດ ໂດຍຈະເປັນຜູ້ພິຈາລະນາແນວໂນ້ມຂອງອັດຕາແລກປ່ຽນໃນແຕ່ລະມື້ໂດຍສະເພາະເງິນສະກຸນໂດລາສະຫະລັດ ເຊິ່ງບໍລິສັດຈະເຮັດການປຽບທຽບເຖິງໄລຍະເວລາໃນການຊຳລະຄ່ານ້ຳມັນເຊື້ອໄຟກັບຜູ້ສະໜອງນ້ຳມັນ ແລ້ວນຳມາປຽບທຽບກັບເງິນຕາຕ່າງປະເທດໃນບັນຊີຂອງບໍລິສັດ ແລະ ມື້ທີ່ຈະໄດ້ຮັບຊຳລະຄ່າສິນຄ້າເປັນເງິນຕາຕ່າງປະເທດໃຫ້ສອດຄ່ອງກັນ (Natural Hedging). ນອກຈາກນີ້ ຫາກທາງບໍລິສັດພິຈາລະນາແລ້ວວ່າ ອັດຕາແລກປ່ຽນໃນແຕ່ລະມື້ມີແນວໂນ້ມຜັນຜວນ ທາງບໍລິສັດຈະໃຊ້ວິທີຄາດຄະເນກະແສເງິນສົດສ່ວນທີ່ເຫຼືອຈາກການດຳເນີນທຸລະກິດມາແລກປ່ຽນເປັນເງິນຕາຕ່າງປະເທດໄວ້ເພື່ອສຳຮອງສຳລັບການຊຳລະຄ່ານ້ຳມັນເຊື້ອໄຟໃຫ້ແກ່ຜູ້ສະໜອງນ້ຳມັນຕໍ່ໄປ. ໃນລະຫວ່າງປີ 2011-2013 ບໍລິສັດມີສ່ວນຕ່າງກຳໄລ (ຂາດທຶນ) ຈາກອັດຕາແລກປ່ຽນຈຳນວນ (836.31) ລ້ານກີບ, 286.53 ລ້ານກີບ ແລະ 168.27 ລ້ານກີບ ຕາມລຳດັບ. ຈາກແນວໂນ້ມໃນການຄຸ້ມຄອງບໍລິຫານອັດຕາແລກປ່ຽນຂອງບໍລິສັດ ແມ່ນມີແນວໂນ້ມປັບຕົວດີຂຶ້ນ ເຊິ່ງວິທີການທີ່ບໍລິສັດນຳໃຊ້ນັ້ນໄດ້ຜົນເປັນຢ່າງດີ. ແຕ່ວ່າບໍລິສັດເອງກໍ່ບໍ່ໄດ້ຢຸດນິ່ງໃນເລື່ອງການພັດທະນາການຄຸ້ມຄອງບໍລິຫານຄວາມສ່ຽງດັ່ງກ່າວ. ໃນອະນາຄົດຫາກມີທະນາຄານ ຫຼື ສະຖາບັນການເງິນໃດມີການອອກເຄື່ອງມືເພື່ອຮັບຮອງຄວາມສ່ຽງດັ່ງກ່າວ ບໍລິສັດຈະສຶກສາເພື່ອນຳໃຊ້ເຄື່ອງມືດັ່ງກ່າວມາໃຊ້ໃນການຫຼຸດຜ່ອນຄວາມສ່ຽງອັດຕາແລກປ່ຽນຕໍ່ໄປ.

### 2.2 ຄວາມສ່ຽງຈາກການໃຫ້ເງິນກູ້ຢືມແກ່ບໍລິສັດທີ່ກ່ຽວພັນກັນ

ບໍລິສັດມີບໍລິສັດທີ່ກ່ຽວພັນກັນເປັນຈຳນວນຫຼາຍ ເນື່ອງຈາກຜູ້ຖືຮຸ້ນໃຫຍ່ຂອງບໍລິສັດຄື ທ່ານ ຈັນທອນ ສິດທິໄຊ ແລະ ທ່ານ ນາງ ສະຫວັນທອງ ພົງສະຫວັນ ມີທຸລະກິດອື່ນໆທີ່ທັງສອງທ່ານຖືຮຸ້ນຮ່ວມກັນເປັນສ່ວນໃຫຍ່ ບາງທຸລະກິດແມ່ນແຍກຕົວອອກມາຈາກບໍລິສັດເຊັ່ນ: ບໍລິສັດ ສິດທິໂລຈິດສຕິກ ລາວ ຈຳກັດ, ບໍລິສັດ ລາວເດລີ້ມາກ ຂາ

ເຂົ້າ-ຂາອອກ ຈຳກັດ, ບໍລິສັດ ສຸດາພອນການຄ້າ ຂາອອກ-ຂາເຂົ້າ ແລະ ບໍລິການ ຈຳກັດ ແລະ ບໍລິສັດ ແວວ - ເທັກ ລາວ ຈຳກັດ ເຊິ່ງເປັນການຈັດຕັ້ງຂຶ້ນເພື່ອແຍກໜ່ວຍງານທາງທຸລະກິດລວມເຖິງການແຍກການບໍລິຫານຈັດການຢ່າງເປັນລະບົບ. ແຕ່ເນື່ອງຈາກບໍລິສັດດັ່ງກ່າວ ສ່ວນໃຫຍ່ເປັນບໍລິສັດທີ່ຈັດຕັ້ງຂຶ້ນໃໝ່ໃນປີ 2013 ແລະ ບໍລິສັດເຫຼົ່ານີ້ຍັງບໍ່ມີຄວາມພ້ອມລວມເຖິງຄວາມສາມາດໃນການເຂົ້າຫາແຫຼ່ງເງິນທຶນ. ດັ່ງນັ້ນ ທາງບໍລິສັດເຊິ່ງເປັນຜູ້ມີຖານະທາງການເງິນທີ່ເຂັ້ມແຂງລວມເຖິງມີຄວາມສາມາດໃນການເຂົ້າເຖິງແຫຼ່ງເງິນທຶນຈຶ່ງເປັນຜູ້ຮັບຜິດຊອບໃນການໃຫ້ເງິນກູ້ຢືມແກ່ບໍລິສັດທີ່ແຍກຕົວສ້າງຕັ້ງຂຶ້ນໃໝ່ເຫຼົ່ານັ້ນລວມເຖິງບໍລິສັດທີ່ມີຄວາມກ່ຽວຂ້ອງອື່ນໆຄື: ບໍລິສັດ ຂວັນໃຈການຄ້າ ຂາອອກ-ຂາເຂົ້າ ຈຳກັດ ແລະ ບໍລິສັດ ແບັກແຄນຢອນລາວ ຂາເຂົ້າ-ຂາອອກ ຈຳກັດ  ສິ່ງຜົນໃຫ້ໃນວັນທີ 31 ທັນວາ 2013 ບໍລິສັດມີເງິນໃຫ້ກູ້ຢືມແກ່ບໍລິສັດທີ່ກ່ຽວພັນກັນຈຳນວນ 21,172 ລ້ານກີບ ຫຼື ຄິດເປັນສັດສ່ວນ 3.69 ສ່ວນຮ້ອຍ ຂອງຊັບສິນລວມ ພ້ອມທັງບໍລິສັດຍັງມີໜີ້ຕ້ອງຮັບຈາກບຸກຄົນທີ່ກ່ຽວພັນກັນໂດຍລາຍການໜີ້ຕ້ອງຮັບດັ່ງກ່າວເປັນການຊຳລະເງິນແທນບຸກຄົນທີ່ກ່ຽວພັນກັນຂອງບໍລິສັດຄື ທ່ານ ຈັນທອນ ສິດທິໄຊ ຜູ້ອຳນວຍການໃຫຍ່ ແລະ ບໍລິສັດ ສິດທິໂລຈິດສຕິກ ລາວ ຈຳກັດ ຈຳນວນ 21,298 ລ້ານກີບ ຫຼື ຄິດເປັນສັດສ່ວນ 3.71 ສ່ວນຮ້ອຍ ຂອງສິນຊັບລວມໂດຍທັງສອງລາຍການມີມູນຄ່າລວມກັນເທົ່າກັບ 42,470 ລ້ານກີບ ຫຼື ຄິດເປັນສັດສ່ວນ 7.40 ສ່ວນຮ້ອຍຂອງຊັບສິນລວມ. ຖ້າຫາກບໍລິສັດທີ່ກ່ຽວພັນກັນມີຜົນປະກອບການຂາດທຶນ ຫຼື ເກີດເຫດການທີ່ສົ່ງຜົນກະທົບກັບບໍລິສັດອັນເປັນເຫດໃຫ້ບໍ່ສາມາດຊຳລະໜີ້ຄືນໃຫ້ກັບບໍລິສັດໄດ້ຈະສົ່ງຜົນກະທົບຕໍ່ຖານະທາງການເງິນຂອງບໍລິສັດເຊິ່ງຄິດເປັນສັດສ່ວນ 7.40 ສ່ວນຮ້ອຍ ຂອງຊັບສິນລວມເມື່ອວັນທີ 31 ທັນວາ 2013. ນອກຈາກນີ້ບໍລິສັດຍັງມີເງິນໃຫ້ກູ້ຢືມແກ່ຜູ້ອຳນວຍການໃຫຍ່ ຄື ທ່ານ ຈັນທອນ ສິດທິໄຊ ຈຳນວນ 36,473 ລ້ານກີບ ຫຼື ເທົ່າກັບ 6.36 ສ່ວນຮ້ອຍ ຂອງຊັບສິນລວມ ເມື່ອວັນທີ 31 ທັນວາ 2013 ເຊິ່ງລາຍການດັ່ງກ່າວເປັນລາຍການທີ່ໃນອະດີດ ທ່ານ ຈັນທອນ ໄດ້ກູ້ຢືມເງິນບໍລິສັດໄປຊື້ທີ່ດິນເພື່ອໃຊ້ເປັນຊັບສິນໃນການປະກອບທຸລະກິດຂອງບໍລິສັດ ໂດຍໃນປັດຈຸບັນທີ່ດິນທຸກຕອນທີ່ເປັນຊັບສິນໃນການດຳເນີນງານຂອງບໍລິສັດນັ້ນໄດ້ຖືກດຳເນີນການໂອນໃຫ້ເປັນຊັບສິນຂອງບໍລິສັດເປັນທີ່ຮຽບຮ້ອຍແລ້ວໃນເດືອນ ສິງຫາ 2014.

ເຖິງແມ່ນວ່າ ບໍລິສັດຈະໃຫ້ເງິນກູ້ຢືມແກ່ບໍລິສັດທີ່ກ່ຽວພັນກັນ ເຊິ່ງເປັນລາຍການທີ່ກ່ຽວພັນກັນໂດຍເຫດການເກີດຂຶ້ນໃນອະດີດກ່ອນທີ່ບໍລິສັດຈະມີການຈັດໂຄງສ້າງທາງການເງິນເພື່ອກຽມຄວາມພ້ອມເຂົ້າເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ (LSX). ແຕ່ໃນນີ້ ບໍລິສັດຍັງໄດ້ເຮັດລາຍການດັ່ງກ່າວເພື່ອຮັກສາຜົນປະໂຫຍດຂອງບໍລິສັດ ແລະ ຜູ້ຖືຮຸ້ນຂອງບໍລິສັດເປັນສຳຄັນ ໂດຍບໍລິສັດໄດ້ມີການຈັດເຮັດສັນຍາເງິນໃຫ້ກູ້ຢືມແກ່ບໍລິສັດດັ່ງກ່າວ ໂດຍມີການອັດຕາດອກເບ້ຍທີ່ 10-11 ສ່ວນຮ້ອຍຕໍ່ປີ ເຊິ່ງເປັນອັດຕາດອກເບ້ຍທີ່ເໝາະສົມເທົ່າຫຼັກການຍຸຕິທຳ (Fair Basis). ນອກຈາກນີ້ ໃນບໍລິສັດດັ່ງກ່າວຍັງໄດ້ຈັດຕັ້ງໂຄງສ້າງການບໍລິຫານງານ ລວມເຖິງນະໂຍບາຍໃນການເຮັດທຸລະກິດທີ່ຊັດເຈນ ແລະ ຍັງມີການຊອກຫາຜູ້ບໍລິຫານທີ່ມີຄວາມຮູ້ຄວາມຊຳນານລວມເຖິງປະສົບການໃນການບໍລິຫານທຸລະກິດເຫຼົ່ານີ້ເຂົ້າມາຮ່ວມເປັນຜູ້ບໍລິຫານ ຈາກການຈັດຕັ້ງໂຄງສ້າງດັ່ງກ່າວໃນບໍລິສັດທີ່ກ່ຽວພັນກັນສົ່ງຜົນໃຫ້ບໍລິສັດມີຄວາມສ່ຽງທີ່ຫຼຸດລົງຈາກການໃຫ້ເງິນກູ້ຢືມແກ່ບໍລິສັດທີ່ກ່ຽວພັນກັນ. ພາຍຫຼັງຈາກການເລີ່ມດຳເນີນງານທາງການຄ້າ ແລະ ມີຄວາມສາມາດໃນການເຂົ້າເຖິງແຫຼ່ງທຶນແລ້ວກໍ່ຈະມີການຊຳລະເງິນຄືນແກ່ບໍລິສັດ ເຊິ່ງມາຮອດປັດຈຸບັນ ບໍລິສັດດັ່ງກ່າວສາມາດຊຳລະດອກເບ້ຍລວມເຖິງເງິນກູ້ຢືມໄດ້ຕາມກຳນົດ ເຊິ່ງເປັນເຄື່ອງມືພິສູດໃນລະດັບໜຶ່ງວ່າບໍລິສັດທີ່ກ່ຽວພັນກັນມີຄວາມສາມາດໃນການຊຳລະເງິນກູ້ຢືມຄືນໃຫ້ແກ່ບໍລິສັດໄດ້. ນອກຈາກນີ້ ການສະໜັບສະໜູນທາງການເງິນໃຫ້ແກ່ບໍລິສັດດັ່ງກ່າວເຊິ່ງສ່ວນໃຫຍ່ເປັນທຸລະກິດຕໍ່ເນື່ອງໃນການຈຳໜ່າຍນ້ຳມັນເຊື້ອໄຟຂອງບໍລິສັດ ຫຼື ບໍລິການເສີມໃນສະຖານີບໍລິການນ້ຳມັນເມື່ອມີບໍລິການເສີມຈຳນວນຫຼາຍຕາມສະຖານີບໍລິການນ້ຳມັນຈະເປັນແຮງດຶງດູດໃຫ້ລູກຄ້າມາໃຊ້ບໍລິການໃນສະຖານີບໍລິການນ້ຳມັນຂອງບໍລິສັດຫຼາຍຂຶ້ນ ເຊິ່ງຈະສົ່ງຜົນດີຕໍ່ຍອດຂາຍຂອງບໍລິສັດໃນອະນາຄົດ. ພາຍຫຼັງການເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວແລ້ວບໍລິສັດມີການຈັດຕັ້ງຄະນະ

ກຳມະການກວດກາພາຍໃນ ເພື່ອພິຈາລະນາລາຍການທີ່ກ່ຽວພັນກັນທີ່ຈະເກີດຂຶ້ນໃນອະນາຄົດ ອີງໃສ່ຫຼັກການແຫ່ງຄວາມຈຳເປັນ ແລະ ຫຼັກການທີ່ເປັນທຳເພື່ອປົກປ້ອງຜົນປະ�โยດຂອງບໍລິສັດ ແລະ ຜູ້ຖືຮຸ້ນຂອງບໍລິສັດ. ນອກຈາກນີ້ ສຳລັບລາຍການທີ່ໃຫ້ກູ້ຢືມແກ່ຜູ້ອຳນວຍການໃຫຍ່ນັ້ນ ບໍລິສັດມີຄວາມສ່ຽງທີ່ອາດຈະບໍ່ໄດ້ຮັບຄືນ ແຕ່ເຖິງແນວໃດກໍ່ຕາມຄວາມສ່ຽງດັ່ງກ່າວອາດຈະບໍ່ມີຜົນກະທົບຕໍ່ຜົນປະກອບການຂອງບໍລິສັດ ແລະ ຢູ່ໃນລະດັບຕ່ຳ ເນື່ອງຈາກວ່າ ທ່ານ ຈັນທອນ ສິດທິໄຊ ເປັນຜູ້ອຳນວຍການໃຫຍ່ ແລະ ເປັນຜູ້ຖືຮຸ້ນຂອງບໍລິສັດ ເປັນຜູ້ບໍລິຫານບໍລິສັດ ມີໜ້າທີ່ຄຸ້ມຄອງທຸລະກິດຂອງບໍລິສັດ ພ້ອມກັນນັ້ນ ທ່ານ ຈັນທອນ ສິດທິໄຊ ເຊິ່ງເປັນນັກທຸລະກິດທີ່ມີຊື່ສຽງ ແລະ ມີທຸລະກິດທີ່ບໍລິຫານເປັນຈຳນວນຫຼາຍເຊິ່ງເປັນຜູ້ທີ່ມີຄວາມສາມາດໃນການຊຳລະເງິນກູ້ຢືມດັ່ງກ່າວຢ່າງແນ່ນອນ ໂດຍເງິນກູ້ຢືມທັງໝົດແມ່ນໄດ້ເຮັດໃນຮູບແບບສັນຍາເງິນກູ້ລະຫວ່າງ ທ່ານ ຈັນທອນ ກັບ ບໍລິສັດ ເຊິ່ງນິຕິກຳດັ່ງກ່າວມີຜົນຜູກພັນທາງກົດໝາຍໂດຍຖ້າໃນອະນາຄົດຫາກມີລາຍການໃນຮູບແບບດັ່ງກ່າວເກີດຂຶ້ນເຊິ່ງຖືເປັນລາຍການທີ່ກ່ຽວພັນກັນ, ບໍລິສັດຈະດຳເນີນການປະຕິບັດຕາມເກນຂອງລາຍການທີ່ກ່ຽວພັນດັ່ງກ່າວໂດຍພິຈາລະນາຫຼັກເກນແຫ່ງຄວາມຈຳເປັນ ເພື່ອປົກປ້ອງຜົນປະ�โยດບໍລິສັດ ແລະ ຜູ້ຖືຮຸ້ນຂອງບໍລິສັດກ່ອນ.

## 3 ຄວາມສ່ຽງໃນການຄຸ້ມຄອງບໍລິຫານ

### 3.1 ຄວາມສ່ຽງຈາກການເພິ່ງພາຜູ້ບໍລິຫານຫຼັກ

ເນື່ອງຈາກການດຳເນີນທຸລະກິດຂອງບໍລິສັດໃນໄລຍະ 6 ປີຜ່ານມາເປັນການບໍລິຫານງານໂດຍຜູ້ຖືຮຸ້ນລາຍໃຫຍ່ ແລະ ຜູ້ບໍລິຫານຫຼັກ ຄື ທ່ານ ຈັນທອນ ສິດທິໄຊ ເຊິ່ງມີຕຳແໜ່ງເປັນຜູ້ອຳນວຍການໃຫຍ່ຂອງບໍລິສັດ, ເປັນບຸກຄົນທີ່ມີຄວາມຮູ້, ຄວາມສາມາດ, ຄວາມຊຳນານ ແລະ ປະສົບການທັງໃນສ່ວນຂອງການຄຸ້ມຄອງບໍລິຫານ ແລະ ການຈັດສົ່ງນ້ຳມັນເຊື້ອໄຟ ການພັດທະນາຮູບແບບສະຖານີບໍລິການນ້ຳມັນ ແລະ ຊ່ອງທາງການຈັດຈຳໜ່າຍ, ແນວโน้มພາວະອຸດສາຫະກຳນ້ຳມັນໃນ ສປປ ລາວ ພ້ອມທັງມີແນວທາງໃນການຂະຫຍາຍທຸລະກິດເພື່ອສ້າງຜົນຕອບແທນ ແລະ ການຈະເລີນເຕີບໂຕຂອງບໍລິສັດໄດ້ຢ່າງຕໍ່ເນື່ອງ ສະນັ້ນ ໃນແນວທາງການວາງແຜນຍຸດທະສາດ ແລະ ການບໍລິຫານງານຂອງບໍລິສັດຈຶ່ງຈຳເປັນຕ້ອງໄດ້ອາໄສຜູ້ບໍລິຫານໃນການກຳນົດທິດທາງ ແລະ ການວາງແຜນ.

ເຖິງຢ່າງໃດກໍ່ຕາມ ທີ່ຜ່ານມາບໍລິສັດໄດ້ເລີ່ມໃຊ້ແນວທາງການບໍລິຫານຢ່າງມືອາຊີບ ເພື່ອການມອບໝາຍໜ້າທີ່ ແລະ ຄວາມຮັບຜິດຊອບໃນການເຮັດວຽກໃຫ້ແກ່ຜູ້ບໍລິຫານອື່ນ ແລະ ພະນັກງານແຕ່ລະຝ່າຍຢ່າງຊັດເຈນ, ມີການວາງແຜນລະບົບການຄວບຄຸມພາຍໃນ ລວມເຖິງລະບົບການຈັດເກັບຂໍ້ມູນ ແລະ ຖານຂໍ້ມູນທີ່ດີ ຕະຫຼອດຈົນມີການແລກປ່ຽນຂໍ້ມູນຂ່າວສານທີ່ກ່ຽວຂ້ອງລະຫວ່າງຜູ້ບໍລິຫານ ແລະ ພະນັກງານຢ່າງສະໝ່ຳສະເໝີ. ພ້ອມທັງມີການລົງທຶນດ້ານການພັດທະນາບຸກຄະລາກອນຂອງບໍລິສັດ ໂດຍສະໜັບສະໜູນໃຫ້ມີການເຝີກອົບຮົມເພື່ອເພີ່ມຄວາມຮູ້ ແລະ ທັກສະໃນການເຮັດວຽກ ເຮັດໃຫ້ບຸກຄະລາກອນຂອງບໍລິສັດມີຄວາມຮູ້ຄວາມເຂົ້າໃຈໃນບົດບາດ ແລະ ພາລະໜ້າທີ່ຮັບຜິດຊອບຂອງຕົນເປັນຢ່າງດີ ເຊິ່ງຈະຊ່ວຍຫຼຸດຜ່ອນການເພິ່ງພາຜູ້ບໍລິຫານຫຼັກພຽງຄົນໃດໜຶ່ງ.

### 3.2 ຄວາມສ່ຽງດ້ານການຄຸ້ມຄອງບໍລິຫານໂດຍກຸ່ມຜູ້ຖືຮຸ້ນລາຍໃຫຍ່

ພາຍຫຼັງການສະເໜີຂາຍຮຸ້ນສາມັນເພີ່ມທຶນ ບໍລິສັດຈະມີໂຄງສ້າງຜູ້ຖືຮຸ້ນໂດຍກຸ່ມຄອບຄົວ ທ່ານ ຈັນທອນ ສິດທິໄຊ ຮ່ວມຖືຮຸ້ນໃນບໍລິສັດຄິດເປັນສັດສ່ວນ 73.789 ສ່ວນຮ້ອຍ ຂອງຈຳນວນຮຸ້ນທັງໝົດ. ພາຍຫຼັງຈາກການອອກຈຳໜ່າຍຮຸ້ນ ເຊິ່ງຖືວ່າເປັນຜູ້ຖືຮຸ້ນໃຫຍ່ ແລະ ເປັນຜູ້ມີອຳນາດໃນການຄວບຄຸມມະຕິຕົກລົງກອງປະຊຸມຜູ້ຖືຮຸ້ນດ້ວຍຄະແນນສຽງທີ່ຫຼາຍ ໂດຍສະເພາະແມ່ນການປະຊຸມຜູ້ຖືຮຸ້ນທີ່ຖືຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງ

ທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມ ແລະ ມີສິດອອກສຽງ ຍົກເວັ້ນເລື່ອງທີ່ລະບຽບຂອງບໍລິສັດ ແລະ ກົດໝາຍທີ່ກ່ຽວຂ້ອງໄດ້ກຳນົດ. ສະນັ້ນ ຜູ້ຖືຮຸ້ນລາຍອື່ນໆຈຶ່ງອາດຈະມີຄວາມສ່ຽງໃນກໍລະນີບໍ່ສາມາດລວບລວມຄະແນນສຽງເພື່ອຄັດຄ້ານເລື່ອງທີ່ຜູ້ຖືຮຸ້ນລາຍໃຫຍ່ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນໄດ້.

## 4 ຄວາມສ່ຽງໃນການສະເໜີຂາຍຫຼັກຊັບ

### 4.1 ຄວາມສ່ຽງຈາກການທີ່ບໍລິສັດຢູ່ລະຫວ່າງການຍື່ນຄຳຮ້ອງຂໍອະນຸຍາດຈາກຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຂໍຈົດທະບຽນໃນຕະຫຼາດຫຼັກຊັບລາວ

ບໍລິສັດມີວັດຖຸປະສົງຈະສະເໜີຂາຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນໃນຄັ້ງນີ້ ແລະ ຍື່ນຄຳຮ້ອງຂໍຈົດທະບຽນຮຸ້ນໃນຕະຫຼາດຫຼັກຊັບລາວ ໃນວັນທີ 20 ຕຸລາ 2014 ໂດຍ ບໍລິສັດ ຫຼັກຊັບເອພີເອັມລາວ ຈຳກັດ ໃນຖານະເປັນທີ່ປຶກສາທາງການເງິນໄດ້ພິຈາລະນາຄຸນສົມບັດຂອງບໍລິສັດໃນເບື້ອງຕົ້ນ ແລະ ເຫັນວ່າບໍລິສັດມີຄຸນສົມບັດຄົບຖ້ວນຕາມກົດລະບຽບກົດໝາຍຂອງຕະຫຼາດຫຼັກຊັບລາວ.

ດັ່ງນັ້ນ ບໍລິສັດຈຶ່ງຍັງຄົງບໍ່ມີຄວາມແນ່ນອນໃນການທີ່ຈະໄດ້ຮັບອະນຸຍາດຈາກຕະຫຼາດຫຼັກຊັບໃນການຈົດທະບຽນໃນຕະຫຼາດຫຼັກຊັບລາວເຮັດໃຫ້ນັກລົງທຶນຍັງມີຄວາມສ່ຽງກ່ຽວກັບສະພາບຄ່ອງຂອງຮຸ້ນສາມັນຂອງບໍລິສັດໃນຕະຫຼາດຂັ້ນສອງ. ຖ້າບໍລິສັດບໍ່ສາມາດປະຕິບັດຕາມລະບຽບກົດໝາຍໄດ້ຢ່າງຄົບຖ້ວນໂດຍສະເພາະເລື່ອງການກະຈາຍການຖືຄອງຮຸ້ນຂອງຜູ້ຖືຮຸ້ນລາຍຍ່ອຍ ກໍ່ຄືບໍລິສັດຈະຕ້ອງມີຜູ້ຖືຮຸ້ນລາຍຍ່ອຍຫຼາຍກວ່າ 100 ລາຍ ແລະ ຖືຮຸ້ນລວມກັນຫຼາຍກວ່າ 10 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ. ດັ່ງນັ້ນຮຸ້ນສາມັນຂອງບໍລິສັດກໍ່ອາດບໍ່ໄດ້ຮັບອະນຸຍາດໃຫ້ເປັນຫຼັກຊັບຈົດທະບຽນໃນຕະຫຼາດຫຼັກຊັບລາວ.

## 1.4 ທຸລະກິດທີ່ດຳເນີນໃນປັດຈຸບັນ

ບໍລິສັດດຳເນີນທຸລະກິດນຳເຂົ້າ ແລະ ຈຳໜ່າຍນ້ຳມັນເຊື້ອໄຟ ແລະ ອາຍແກັດເປັນອັນດັບຕົ້ນໆຂອງ ສປປ ລາວ ເຊິ່ງມີຍອດການຈຳໜ່າຍນ້ຳມັນເຊື້ອໄຟທີ່ມີສ່ວນແບ່ງການຕະຫຼາດ (Market Share) ເປັນອັນດັບ 2 ໃນ ສປປ ລາວ ຕັ້ງແຕ່ປີ 2011 ເປັນຕົ້ນມາ. ໃນການດຳເນີນທຸລະກິດນີ້ ບໍລິສັດໄດ້ເຂົ້າເປັນສະມາຊິກຂອງສະມາຄົມເຊື້ອໄຟ ແລະ ອາຍແກັດ ລາວ ເຊິ່ງບໍລິສັດມີການຈຳໜ່າຍຜະລິດຕະພັນຫຼັກຢູ່ 5 ປະເພດຄື: 1.) ນ້ຳມັນກາຊວນ (Diesel) 2.)ນ້ຳມັນແອັດຊັງທຳມະດາ (Benzene Regular 91) 3.) ນ້ຳມັນແອັດຊັງພິເສດ (Benzene Super 95) 4.) ນ້ຳມັນເຕົາ ແລະ 5.) ນ້ຳມັນເຄື່ອງ. ຜະລິດຕະພັນທີ່ບໍລິສັດນຳເຂົ້າມາຈຳໜ່າຍແມ່ນນຳເຂົ້າມາຈາກໂຮງກັ່ນປະເທດໄທທີ່ມີຄຸນະພາບສູງ ໂດຍສະເພາະຈາກຜູ້ສະໜອງທີ່ມີຊື່ສຽງ ແລະ ເປັນທີ່ຍອມຮັບໃນດ້ານຄຸນະພາບລະດັບສາກົນຄື: Chevron (Thailand) Limited (Chevron), ESSO (Thailand) Public Company Limited (ESSO), IRPC Public Company Limited (IRPC) ແລະ The Shell Company of Thailand Limited (Shell). ຂະບວນການນຳເຂົ້ານ້ຳມັນໃນເບື້ອງຕົ້ນຈະເກັບຮັກສາໄວ້ໃນສາງນ້ຳມັນຂອງບໍລິສັດທີ່ແຈກຢາຍຢູ່ຕາມເມືອງຍຸດທະສາດທີ່ມີຊາຍແດນຕິດກັບປະເທດໄທ ຈຳນວນ 5 ສາງ ເຊິ່ງສາມາດບັນຈຸນ້ຳມັນໄດ້ທັງໝົດ 3,610,000 ລິດ ແລ້ວຈຶ່ງນຳໄປຈຳໜ່າຍຕໍ່ຜ່ານທາງສະຖານີບໍລິການນ້ຳມັນຂອງບໍລິສັດ ພາຍໃຕ້ເຄື່ອງໝາຍການຄ້າ “ພລັສ” ຫຼື “PLUS” ເຊິ່ງໃນປັດຈຸບັນມີສະຖານີບໍລິການນ້ຳມັນລວມທັງໝົດ 107 ສະຖານີທົ່ວປະເທດ (ຂໍ້ມູນວັນທີ 30 ກັນຍາ 2014) ໂດຍມີຮູບແບບການຄຸ້ມຄອງບໍລິຫານທີ່ສຳຄັນ 2 ຮູບແບບຄື: ບໍລິສັດລົງທຶນ ແລະ ບໍລິຫານເອງ (Company Owned, Company Operated: COCO) ມີ 8 ສະຖານີ ແລະ ບໍລິສັດຮ່ວມລົງທຶນ (Company Owned, Dealer Operated: CODO) ມີ 99 ສະຖານີ. ນອກຈາກການຈຳໜ່າຍຜ່ານສະຖານີບໍລິການນ້ຳມັນແລ້ວ ບໍລິສັດຍັງໄດ້ຈຳໜ່າຍໂດຍກົງໄປຍັງລູກຄ້າໂຄງການ, ໂຮງງານອຸດສາຫະກຳ, ບໍລິສັດຂົນສົ່ງ ແລະ ຜູ້ຂາຍສົ່ງນ້ຳມັນ (Jobber) ໃນ ສປປ ລາວ.

ບໍລິສັດດຳເນີນການບໍລິຫານການຈັດຈຳໜ່າຍຜ່ານສະຖານີບໍລິການນ້ຳມັນພາຍໃຕ້ເຄື່ອງໝາຍການຄ້າ PLUS ນັ້ນ ມີຮູບແບບການຄຸ້ມຄອງບໍລິຫານທັງໝົດ 2 ຮູບແບບຄື:

1. ບໍລິສັດລົງທຶນ ແລະ ບໍລິຫານເອງ (Company Owned, Company Operated: COCO) ເປັນຮູບແບບທີ່ບໍລິສັດເປັນຜູ້ລົງທຶນເອງທັງໝົດລວມທັງທີ່ດິນ, ອາຄານ, ຕູ້ຈ່າຍນ້ຳມັນ ແລະ ການລົງທຶນໃນຊັບສິນຕ່າງໆໃນ ຮູບແບບນີ້ບໍລິສັດຈະເຂົ້າມາຄຸ້ມຄອງບໍລິຫານນ້ຳມັນຕ່າງໆເອງ ໂດຍສ່ວນໃຫຍ່ສະຖານີບໍລິການນ້ຳມັນໃນຮູບ ແບບນີ້ຈະເປັນສະຖານີຕົວແບບ ແລະ ເນັ້ນການຄວບຄຸມຄຸນະພາບບໍລິການລວມທັງພາບພົດຂອງສະຖານີຕົວ ແບບນັ້ນໆເພື່ອເປັນການສ້າງຄວາມຮັບຮູ້ໃຫ້ສັງຄົມໃນເຄື່ອງໝາຍສິນຄ້າຂອງບໍລິສັດ (Brand Awareness) ແລະ ສະຖານີບໍລິການຮູບແບບນີ້ຈະເປັນສະຖານີທີ່ຄົບວົງຈອນດ້ານການບໍລິການຕ່າງໆເຊັ່ນ: ຮ້ານສະດວກຊື້, ບໍລິການ ລ້າງອັດສີດ, ຕູ້ກົດເງິນ ແລະ ບັດເຕີມນ້ຳມັນແທນເງິນສົດ. ໂດຍໃນປັດຈຸບັນເປັນຮູບແບບ COCO ມີ ຈຳນວນທັງໝົດ 8 ສະຖານີ ເຊິ່ງໃນນັ້ນມີ 3 ສະຖານີທີ່ບໍລິສັດເປັນເຈົ້າຂອງກຳມະສິດທີ່ດິນ, ສ່ວນທີ່ເຫຼືອ 5 ສະຖານີແມ່ນບໍລິສັດເຊົ່າທີ່ດິນຈາກບຸກຄົນພາຍນອກ.

2. ຮູບແບບຮ່ວມລົງທຶນ (Company Owned Dealer Operated: CODO) ເປັນຮູບແບບທີ່ບໍລິສັດຮ່ວມ ລົງທຶນກັບເຈົ້າຂອງທີ່ດິນທີ່ມີທີ່ຕັ້ງຍຸດທະສາດທີ່ເໝາະສົມໃນການຈຳໜ່າຍນ້ຳມັນ. ແຕ່ຊັບສິນຕ່າງໆທີ່ຕັ້ງໃນທີ່ ດິນນັ້ນຍັງເປັນການລົງທຶນຂອງບໍລິສັດ ເຊິ່ງບໍລິສັດຈະເຮັດສັນຍາຮ່ວມກັບຜູ້ຮ່ວມລົງທຶນ ແລະ ເຮັດສັນຍາຊື້-ຂາຍນ້ຳມັນກັບບໍລິສັດພຽງຜູ້ດຽວ ໂດຍອາຍຸຂອງສັນຍາທັງ 2 (ສັນຍາຮ່ວມລົງທຶນ ແລະ ຊື້ຂາຍນ້ຳມັນ) ຈະມີອາ ຍຸເທົ່າກັນຄື 20 ປີ. ເນື້ອໃນສັນຍາຈະກຳນົດໄວ້ວ່າບໍລິສັດຈະເປັນ ຜູ້ຈັດຫານ້ຳມັນໃຫ້ແກ່ຜູ້ຮ່ວມທຶນພຽງຜູ້ດຽວ

ເຊິ່ງການລົງທຶນໃນຮູບແບບນີ້ສາມາດຫຼຸດຂໍ້ຈຳກັດໃນການຂະຫຍາຍສະຖານີບໍລິການນ້ຳມັນ, ຫຼຸດຕົ້ນທຶນໃນການຊອກຫາທີ່ດິນທີ່ມີທີ່ຕັ້ງຍຸດທະສາດເໝາະສົມໃນການຈຳໜ່າຍ ແລະ ການສ້າງສະຖານີບໍລິການນ້ຳມັນ ແລະ ຍັງຫຼຸດມູນຄ່າການລົງທຶນຂອງບໍລິສັດອີກດ້ວຍ. ໃນປັດຈຸບັນ ບໍລິສັດມີຈຳນວນສະຖານີບໍລິການນ້ຳມັນໃນຮູບແບບ CODO ທັງໝົດ 99 ສະຖານີ.

ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟຜ່ານສະຖານີບໍລິການນ້ຳມັນຄົບວົງຈອນພາຍໃຕ້ເຄື່ອງໝາຍ "PLUS" ແມ່ນໄດ້ເນັ້ນການໃຫ້ບໍລິການທີ່ດີ, ຈຳໜ່າຍນ້ຳມັນທີ່ມີຄຸນະພາບ, ຮັບປະກັນນ້ຳມັນເຕັມລິດ ແລະ ລາຄາຕາມທີ່ລັດຖະບານກຳນົດໃນແຕ່ລະໄລຍະ ເພື່ອອຳນວຍຄວາມສະດວກໃຫ້ປະຊາຊົນລາວເຂົ້າເຖິງການຊົມໃຊ້ນ້ຳມັນຢ່າງທົ່ວເຖິງໃນທຸກລະດັບ ແລະ ທຸກພື້ນທີ່ຂອງ ສປປ ລາວ, ຕອບສະໜອງຄວາມຕ້ອງການຂອງສິນຄ້າ ແລະ ບໍລິການທີ່ຫຼາກຫຼາຍໃນຊີວິດປະຈຳວັນ (Life Style) ທີ່ແຕກຕ່າງກັນໃນແຕ່ລະພື້ນທີ່. ບໍລິສັດມີນະໂຍບາຍໃນການພັດທະນາສະຖານີບໍລິການນ້ຳມັນໃຫ້ເປັນສູນບໍລິການທີ່ຄົບວົງຈອນສຳລັບຄົນໃນເມືອງໃຫຍ່ຄື: ເປັນຈຸດນັດພົບ, ສາມາດຊື້ສິນຄ້າທີ່ຈຳເປັນ ແລະ ໃຫ້ບໍລິການທີ່ດີອື່ນໆ ເພື່ອອຳນວຍຄວາມສະດວກໃນການໃຊ້ຊີວິດທີ່ຮີບຮ້ອນຂອງຄົນໃນເຂດເມືອງໃຫຍ່. ນອກຈາກນີ້ ບໍລິສັດຍັງຄຳນຶງເຫັນເຖິງຄວາມຍາກລຳບາກຂອງປະຊາຊົນໃນຊຸມຊົນຫ່າງໄກສອກຫຼີກໃນການເຂົ້າເຖິງນ້ຳມັນເຊື້ອໄຟທີ່ມີຄຸນະພາບ ແລະ ລາຄາຍຸຕິທຳໄດ້. ບໍລິສັດໄດ້ຂະຫຍາຍສະຖານີບໍລິການນ້ຳມັນໄປສູ່ທ້ອງຖິ່ນທີ່ໃຫ້ບໍລິການນ້ຳມັນ ແລະ ຄວບຄູ່ກັບການບໍລິການອື່ນໆໄປພ້ອມໆກັນ ເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າໂດຍລາຍລະອຽດການບໍລິການອື່ນໆຂອງບໍລິສັດມີດັ່ງນີ້:

- ຮ້ານຄ້າສະດວກຊື້ພາຍໃຕ້ເຄື່ອງໝາຍການຄ້າ "ພລັສເດລີ້ມາກ" (PLUS Daily Mart) ໃຫ້ບໍລິການຈັດຈຳໜ່າຍສິນຄ້າອຸປະໂພກ ແລະ ບໍລິໂພກ ໂດຍຕັ້ງຢູ່ໃນບໍລິເວນສະຖານີບໍລິການນ້ຳມັນຂອງບໍລິສັດ ເພື່ອໃຫ້ລູກຄ້າທີ່ມາໃຊ້ບໍລິການເຕີມນ້ຳມັນມີທີ່ພັກຜ່ອນຢ່ອນໃຈ ແລະ ສາມາດຊື້ເຄື່ອງໃຊ້ສອຍທີ່ຈຳເປັນ, ຊື້ອາຫານ ແລະ ເຄື່ອງດື່ມໄດ້ສະດວກ, ເປັນຈຸດພັກລົດສຳລັບການເດີນທາງໄກໃຫ້ກັບຜູ້ຂັບຂີ່ ຫຼື ຜູ້ໃຊ້ຍານພາຫະນະໄດ້ພັກຜ່ອນ. ຮ້ານຄ້າດັ່ງກ່າວແມ່ນບໍລິຫານງານໂດຍບໍລິສັດ ລາວເດລີ້ມາກ ຂາເຂົ້າ-ຂາອອກ ຈຳກັດ (Lao Daily Mart Import-Export Co., Ltd.)
- ການບໍລິການຊຳລະຄ່ານ້ຳມັນດ້ວຍລະບົບບັດແທນເງິນສົດ (Fleet Card) ເພື່ອຕອບສະໜອງຊີວິດທີ່ຮີບດ່ວນ ແລະ ປອດໄພ. ການນຳໃຊ້ບັດດັ່ງກ່າວຍັງຊ່ວຍອຳນວຍຄວາມສະດວກໃຫ້ເຈົ້າຂອງທຸລະກິດໃນການຄວບຄຸມຕິດຕາມຄ່າໃຊ້ຈ່າຍກ່ຽວກັບນ້ຳມັນເຊື້ອໄຟ. ນອກຈາກນີ້ ການໃຫ້ບໍລິການບັດດັ່ງກ່າວ ຍັງເປັນການສ້າງໃຫ້ລູກຄ້າມີຄວາມຜູກພັນກັບການສິນຄ້າຂອງບໍລິສັດ (Brand Loyalty) ໂດຍຈະສົ່ງຜົນໃຫ້ລູກຄ້າໃຊ້ບັດແທນເງິນສົດນີ້ເຂົ້າມາໃຊ້ບໍລິການເລື້ອຍໆ. ການບໍລິການດັ່ງກ່າວຍັງບໍ່ມີການຄິດໄລ່ຄ່າບໍລິການເພີ່ມກັບທາງຜູ້ໃຊ້ບໍລິການ. ເປັນບໍລິສັດທຳອິດ ແລະ ຜູ້ດຽວທີ່ໄດ້ໃຫ້ບໍລິການນີ້ຜ່ານສະຖານີບໍລິການນ້ຳມັນ ໃນ ສປປ ລາວ. ປະເພດບັດແທນເງິນສົດມີ 3 ປະເພດດັ່ງນີ້: Save PLUS, Fleet PLUS ແລະ Easy PLUS ແລະ ການບໍລິການດັ່ງກ່າວຄຸ້ມຄອງບໍລິຫານງານໂດຍ ບໍລິສັດ ແວວ-ເທັກ ລາວ ຈຳກັດ (Well Tech Lao Co., Ltd)
- ສູນບໍລິການບຳລຸງຮັກສາລົດຍົນ, ລ້າງອັດສີດ ພາຍໃຕ້ເຄື່ອງໝາຍການຄ້າ "MOLY CARE" ເຊິ່ງເປັນມາສເຕີແຟຣນຊາຍ (Master Franchise) ຈາກປະເທດໄທທີ່ໃຫ້ບໍລິການປ່ຽນຖ່າຍນ້ຳມັນເຄື່ອງ ແລະ ລ້າງອັດສີດລົດຍົນ ເພື່ອຕອບສະໜອງຄວາມຕ້ອງການໃນການຮັກສາຄວາມສະອາດຂອງຜູ້ໃຊ້ຍານພາຫະນະ ແລະ ຕອບສະໜອງຮູບແບບການມີວິຖີຊີວິດຂອງຄົນເມືອງທີ່ໃຊ້ຊີວິດຮີບດ່ວນ ແລະ ຟ້າວຝັ່ງ ບໍ່ມີເວລາໃນ

ການບຳລຸງຮັກສາຍານພາຫະນະເອງ. ການບໍລິການດັ່ງກ່າວບໍລິຫານງານໂດຍ ບໍລິສັດ ສຸດາພອນການຄ້າ ຂາເຂົ້າ-ຂາອອກ ແລະ ບໍລິການ ຈຳກັດ (Soudaphone Import-Export and Service Co.,Ltd.)

- ໜ່ວຍບໍລິການ ຫຼື ຕູ້ບໍລິການກົດເງິນສົດ (ATM) ຂອງທະນາຄານພົງສະຫວັນ ຈຳກັດ ເປັນສູນບໍລິການ ຫຼື ການບໍລິການທາງການເງິນ ທີ່ປະກອບຢູ່ໃນສະຖານີບໍລິການນ້ຳມັນ ເປັນການປະກອບສ່ວນໃຫ້ສະຖານີເປັນສູນລວມຂອງການໃຊ້ຊີວິດຂອງຊຸມຊົນ ແລະ ຕອບສະໜອງເຖິງຄວາມຕ້ອງການທາງການເງິນຂອງຜູ້ໃຊ້ບໍລິການທີ່ສະຖານີບໍລິການນ້ຳມັນຂອງບໍລິສັດ. ການບໍລິການດັ່ງກ່າວບໍລິຫານງານໂດຍ ທະນາຄານພົງສະຫວັນ ຈຳກັດ (Phongsavanh Bank)

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ຖືເປັນບໍລິສັດທີ່ມີລະບົບການຄຸ້ມຄອງບໍລິຫານທີ່ດີ ແລະ ມີວິວັດທະນາການໃນການເຕີບໂຕຢ່າງຕໍ່ເນື່ອງຕະຫຼອດມາ ຈົນເຮັດໃຫ້ບໍລິສັດມີຍອດຂາຍເປັນອັນດັບ 2 ຕັ້ງແຕ່ປີ 2011 ເປັນຕົ້ນມາ ດ້ວຍປະສົບການຂອງຜູ້ບໍລິຫານ ແລະ ວິໄສທັດທີ່ກວ້າງໄກເຮັດໃຫ້ບໍລິສັດໄດ້ມີການພັດທະນາ ແລະ ອອກແບບຮູບແບບຂອງສະຖານີບໍລິການນ້ຳມັນໃຫ້ມີຄວາມແຕກຕ່າງໃນດ້ານພາບພົດ, ເອກະລັກ ແລະ ເນັ້ນຄວາມທັນສະໄໝ ເພື່ອໃຫ້ເປັນທີ່ດຶງດູດໃຈຂອງລູກຄ້າ ແລະ ຜູ້ມາຮັບບໍລິການຕ່າງໆ. ບໍລິສັດໄດ້ສ້າງຄວາມແຕກຕ່າງທາງດ້ານສະຖານີບໍລິການນ້ຳມັນເພື່ອໃຫ້ແທດເໝາະກັບກຸ່ມລູກຄ້າເປົ້າໝາຍເຊັ່ນ: ສະຖານີບໍລິການນ້ຳມັນ ພລັສ ແພັລຕຕິນັມ (PTN), ສະຖານີບໍລິການນ້ຳມັນ ພລັສ ໂກລ (GLD), ສະຖານີບໍລິການນ້ຳມັນ ພລັສ ມາດຕະຖານ (STD) ແລະ ສະຖານີບໍລິການນ້ຳມັນ ພລັສ ທ້ອງຖິ່ນພັດທະນາ (THN) ເຊິ່ງໃນປັດຈຸບັນກຳລັງມີການປັບປຸງສະຖານີບໍລິການນ້ຳມັນທີ່ເປັນຮູບແບບ ທ້ອງຖິ່ນພັດທະນາ (THN) ໃຫ້ກາຍມາເປັນສະຖານີບໍລິການນ້ຳມັນ ທ້ອງຖິ່ນພັດທະນາຂະໜາດໃຫຍ່ (THN-B). ນອກຈາກນີ້ ຍັງມີການເພີ່ມການບໍລິການໃນສະຖານີບໍລິການອີກເຊັ່ນ: ຮ້ານຄ້າສະດວກຊື້, ຮ້ານກາເຟ ແລະ ຮ້ານອາຫານ, ລ້າງອັດສົດ, ໜ່ວຍບໍລິການທະນາຄານ ແລະ ບໍລິການອື່ນໆ ຕາມຄວາມເໝາະສົມໃນແຕ່ລະສະຖານີບໍລິການນ້ຳມັນ.

ໃນໄລຍະ 6 ປີທີ່ຜ່ານມາ ບໍລິສັດດຳເນີນທຸລະກິດ ແລະ ບໍລິຫານຕາມແນວທາງ ວິໄສທັດ, ພາລະກິດ ທີ່ເປັນເອກະພາບກັນໃນເລື່ອງຂອງຄວາມຄິດ, ອຸດົມການ ແລະ ຫຼັກການປະຕິບັດໃນຂົງເຂດທຸກວຽກງານໄປໃນທິດທາງດຽວກັນ ໂດຍການຕັ້ງວິໄສທັດ ແລະ ພາລະກິດໃຫ້ເປັນແນວທາງຂອງອົງກອນພ້ອມທັງເປັນເຂັມທິດຊີ້ທາງໃນການປະຕິບັດງານ ບໍ່ວ່າໃນປັດຈຸບັນ ຫຼື ອະນາຄົດ. ບໍລິສັດໄດ້ບໍລິຫານງານພາຍໃຕ້ຄຳຂວັນ ແລະ ເຄື່ອງໝາຍການຄ້າ "ພລັສ" (PLUS) ທີ່ໄດ້ຜ່ານການຢັ້ງຢືນ ແລະ ຂຶ້ນທະບຽນເຄື່ອງໝາຍການຄ້າແຫ່ງຊາດຈາກ "ສຳນັກງານ ນາຍົກລັດຖະມົນຕີອົງການວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດ, ກົມຊັບສິນທາງປັນຍາ, ມາດຕະຖານ ແລະ ການວັດແທກ" ແລະ ໄດ້ຮັບການປົກປ້ອງສິດຕາມກົດລະບຽບທັງເຄື່ອງໝາຍ "PetroTrade" ແລະ ສີສັນທັງໝົດໃນໂລໂກ້.

1. <u>ຄຳຂວັນ ບໍລິສັດ</u> : ພລັສ ພະລັງງານເພື່ອຊາດ ພະລັງງານເພື່ອການພັດທະນາ
   : PLUS, Energy for The Nation, Energy for The Development.

PetroTrade

2. <u>ເຄື່ອງໝາຍການຄ້າ</u> : ພລັສ (PLUS) ເຊິ່ງເປັນທີ່ຮູ້ຈັກກັນດີຂອງສັງຄົມໃນທົ່ວປະເທດ ແລະ ສາກົນຢ່າງກວ້າງຂວາງ, ເຄື່ອງໝາຍ ພລັສ ແມ່ນສັນຍາລັກໜຶ່ງທີ່ສື່ໃຫ້ເຫັນເຖິງຄວາມທັນສະໄໝ, ຄຸນນະພາບດີ, ການບໍລິການ ແລະ ຊື່ສຽງຂອງບໍລິສັດ ດັ່ງທີ່ເຫັນໃນຮູບ.

ຄວາມໝາຍ: ການເລືອກໃຊ້ສີຟ້າ ແລະ ສີເຫຼືອງມາເປັນເຄື່ອງໝາຍການຄ້ານັ້ນແມ່ນເພື່ອຢາກໃຫ້ເກີດຄວາມໂດດເດັ່ນ, ເປັນຈຸດສ້າງຄວາມສົນໃຈ ແລະ ສາມາດຈື່ຈຳໄດ້ງ່າຍ.

3. ວິໄສທັດ : ເປັນບໍລິສັດຊັ້ນນຳທາງດ້ານພະລັງງານເຊື້ອໄຟທີ່ຄົບວົງຈອນດ້ານຜະລິດຕະພັນປີໂຕຣລ້ຽມໃນ ສປປ ລາວ ແລະ ເຊື່ອມໂຍງການຄ້າໃນລະດັບອາຊຽນ.

4. ພາລະກິດ : ສ້າງທຸລະກິດພະລັງງານເຊື້ອໄຟຂອງເອກະຊົນລາວທີ່ຄົບວົງຈອນເປັນທີ່ຍອມຮັບ ແລະ ເຊື່ອໝັ້ນຂອງສັງຄົມ ສາມາດເຊື່ອມໂຍງການຄ້າໃນລະດັບພາກພື້ນ, ສ້າງ ແລະ ແບ່ງປັນຜົນປະໂຫຍດຕໍ່ຜູ້ທີ່ມີສ່ວນກ່ຽວຂ້ອງ ແລະ ສັງຄົມພາຍໃຕ້ແນວຄວາມຄິດທີ່ວ່າ:

- **ຕ້ອງມີສະຖານີບໍລິການນ້ຳມັນໃຫ້ຄວບຄຸມທົ່ວປະເທດບໍ່ວ່າຕາມທາງໃຫຍ່, ຕົວເມືອງໃຫຍ່, ຕາມທາງນ້ອຍ, ຕົວເມືອງນ້ອຍຫ່າງໄກສອກຫຼີກ ຕອບສະໜອງໃຫ້ໄດ້ຄວາມຕ້ອງການຂອງພີ່ນ້ອງຊາວລາວໃນທົ່ວປະເທດ, ດຳລົງ ແລະ ຄົງໄວ້ເຖິງຄວາມຊື່ສັດຕໍ່ຕົນເອງ ແລະ ຜູ້ອື່ນ, ພັດທະນາລະບົບການຄຸ້ມຄອງບໍລິຫານ ຕະຫຼອດຮອດພະນັກງານໃຫ້ດີຂຶ້ນ ແລະ ເປັນມືອາຊີບຂຶ້ນໄປເລື້ອຍໆເພື່ອເປັນທ່າແຮງໃນການແຂ່ງຂັນ ແລະ ເປັນອົງກອນເຂັ້ມແຂງ, ນຳໃຊ້ເຕັກໂນ�โลຊີທີ່ທັນສະໄໝເຂົ້າໃນການພັດທະນາບໍລິສັດ ແລະ ນຳໃຊ້ເຂົ້າໃນການຄຸ້ມຄອງບໍລິຫານ.**

ດ້ວຍເຫດນັ້ນ ຈຶ່ງເຮັດໃຫ້ບໍລິສັດເປັນທີ່ຍອມຮັບຂອງລູກຄ້າທາງດ້ານຄຸນນະພາບ ແລະ ການບໍລິການ ພາຍໃຕ້ແນວຄວາມຄິດຕາມນະໂຍບາຍບໍລິສັດທີ່ວ່າ **"ເປັນເລີດໃນຮູບລັກທີ່ທັນສະໄໝ, ເປັນໜຶ່ງໃນໃຈຂອງລູກຄ້າທາງດ້ານຄຸນນະພາບສິນຄ້າ, ການບໍລິການຄວາມປອດໄພ ແລະ ສຸຂະອະນາໄມ ແລະ ສະພາບແວດລ້ອມທີ່ດີ"** ເປັນບໍລິສັດຊັ້ນນຳທາງດ້ານພະລັງງານເຊື້ອໄຟທີ່ຄົບວົງຈອນດ້ານຜະລິດຕະພັນປີໂຕຣລ້ຽມໃນ ສປປ ລາວ ແລະ ເຊື່ອມໂຍງການຄ້າໃນລະດັບອາຊຽນປະກອບກັບການບໍລິຫານຈັດການທີ່ໄດ້ຕາມມາດຖານສາກົນຈົນເຮັດໃຫ້ບໍລິສັດໄດ້ຮັບໃບຢັ້ງຢືນມາດຕະຖານສາກົນຈາກປະເທດອັງກິດ (United Kingdom Accreditation Service: UKAS) 3 ມາດຕະຖານຄື: ມາດຕະຖານດ້ານການຄຸ້ມຄອງບໍລິຫານ (ISO 9001:2008), ມາດຕະຖານການຄຸ້ມຄອງສິ່ງແວດລ້ອມ (ISO 14001:2004), ມາດຕະຖານດ້ານສຸຂະອະນາໄມ ແລະ ຄວາມປອດໄພ (OHSAS 18001:2007).

### 1.4.1 ຜະລິດຕະພັນ ແລະ ການບໍລິການ

ນ້ຳມັນແມ່ນເຊື້ອໄຟຊະນິດໜຶ່ງທີ່ລະເຫີຍໄດ້ງ່າຍ ເຊິ່ງໄດ້ມາຈາກການກັ່ນນ້ຳມັນດິບດ້ວຍການກັ່ນ ຫຼື ຄັດເອົາສະເພາະສ່ວນທີ່ເບົາພໍດີຈາກສ່ວນຕ່າງໆແລ້ວເອົາປະສົມກັນ ແລະ ປຸງແຕ່ງດ້ວຍສານເຄມີຕ່າງໆເຊັ່ນ: ແນຟຣາ (Naphtha), Isomerate, Reformate ແລະ ສານເຕີມແຕ່ງ (Additives) ເຊັ່ນ: Methyl Tertiary Butyl Ether (MTBE), ເອຕານອນ (Ethanol) ເປັນຕົ້ນ, ເພື່ອໃຫ້ເໝາະສົມສຳລັບການໃຊ້ເປັນເຊື້ອໄຟຂອງເຄື່ອງຈັກໂດຍມີຫົວທຽນເປັນໂຕຈູດລະເບີດ (Spark Ignition Internal Combustion Engine) ເຊິ່ງຄວາມສາມາດໃນການລະເຫີຍນ້ຳມັນຕ້ອງສົມດຸນກັບການເຜົາໄໝ້ໃນກະບອກສູບ ແລະ ຕ້ອງເປັນໄປຢ່າງສະໝ່ຳສະເໝີ ແລະ ຕໍ່ເນື່ອງ.

ສິນຄ້າຂອງບໍລິສັດຄື ນ້ຳມັນເຊື້ອໄຟ ແລະ ຜະລິດຕະພັນທີ່ກ່ຽວຂ້ອງກັບນ້ຳມັນເຊື້ອໄຟ ເຊິ່ງນຳເຂົ້າຈາກຜູ້ປະກອບການໂຮງກັ່ນນ້ຳມັນໃນປະເທດໄທ ເປັນຜູ້ຄ້ານ້ຳມັນເຊື້ອໄຟຕາມມາດຕາ 7 ຂອງກົດໝາຍການຄ້ານ້ຳມັນເຊື້ອໄຟ ພສ 2543 ແຫ່ງຣາດຊະອານາຈັກໄທ ໂດຍບໍລິສັດຈະຈັດຊື້ນ້ຳມັນທີ່ມີຄຸນນະພາບເປັນທີ່ຍອມຮັບໃນລະດັບສາກົນຄື: Chevron,

ESSO, IRPC ແລະ Shell ໂດຍຜະລິດຕະພັນທີ່ບໍລິສັດນຳເຂົ້າ ແລະ ຈັດຈຳໜ່າຍທີ່ສຳຄັນປະກອບດ້ວຍ 5 ປະເພດ ດັ່ງນີ້: 1)ນ້ຳມັນກາຊວນ (Diesel) 2)ນ້ຳມັນແອັດຊັງທຳມະດາ (Benzene Regular 91) 3)ນ້ຳມັນແອັດຊັງພິເສດ (Benzene Super 95) 4)ນ້ຳມັນເຕົ່າ (Bunker Oil) ແລະ 5)ນ້ຳມັນເຄື່ອງ (Engine Oil) ໂດຍມີລາຍລະອຽດດັ່ງນີ້:

## 1. ລັກສະນະຜະລິດຕະພັນນ້ຳມັນເຊື້ອໄຟ ແລະ ຜະລິດຕະພັນອື່ນໆ

### 1. ນ້ຳມັນກາຊວນ (Diesel):

ເປັນນ້ຳມັນເຊື້ອໄຟສຳລັບເຄື່ອງຈັກກາຊວນເປັນສ່ວນໜຶ່ງຂອງຜະລິດຕະພັນນ້ຳມັນດິບທີ່ໄດ້ຈາກໂຮງກັ່ນເຊັ່ນດຽວກັນກັບນ້ຳມັນແອັດຊັງ ເຊິ່ງເປັນນ້ຳມັນທີ່ເອີ້ນວ່າ ນ້ຳມັນໃສ ຫຼື Distillate Fuel ມີຊ່ວງຈຸດເດືອດປະມານ 180-370 $^{o}$C.

- ຄຸນສົມບັດເໝາະສຳລັບເຄື່ອງຍົນທີ່ມີແຮງອັດສູງ (High Compression) ມີ 2 ປະເພດຄື:

  **<u>ນ້ຳມັນກາຊວນສຳລັບເຄື່ອງຍົນຮອບໝຸນໄວ</u> (Automotive Diesel Oil)**: ເຊັ່ນ ລົດຍົນ, ລົດບັນທຸກ, ເຮືອປະມົງ, ເຮືອໂດຍສານ, ລົດແທກເຕີ້ ແລະ ເຄື່ອງກົນຈັກໜັກທຸກຊະນິດທີ່ມີຮອບໝຸນໄວເກີນ 1,000 ຮອບຕໍ່ນາທີ. ເຄື່ອງຍົນປະເພດນີ້ຈຳເປັນຕ້ອງໃຊ້ນ້ຳມັນທີ່ມີຄ່າຊີເທນສູງ ແລະ ມີການລະເຫີຍໄວ. ຖ້າບໍ່ດັ່ງນັ້ນຈະເຮັດໃຫ້ເຄື່ອງຍົນແລ່ນບໍ່ສະດວກ ນ້ຳມັນເຊື້ອໄຟປະເພດນີ້ເອີ້ນວ່າ: ນ້ຳມັນກາຊວນໝຸນໄວ (HSD: High Speed Diesel Oil).

  **<u>ນ້ຳມັນກາຊວນສຳລັບເຄື່ອງຍົນໝຸນປານກາງ ຫຼື ໝຸນຊ້າ</u> (Industrial Diesel Oil)**: ເຊັ່ນ ເຄື່ອງຈັກທີ່ຕິດຕັ້ງຢູ່ຕາມໂຮງງານຕ່າງໆທີ່ມີຮອບການເຮັດວຽກຕ່ຳປະມານ 500-1,000 ຮອບຕໍ່ນາທີ. ເຄື່ອງຍົນປະເພດນີ້ບໍ່ຕ້ອງການນ້ຳມັນກາຊວນທີ່ມີຄ່າຊີເທນສູງ ແລະການລະເຫີຍອາຍກໍ່ຈະຊ້າກວ່າ. ນ້ຳມັນເຊື້ອໄຟປະເພດນີ້ເອີ້ນວ່າ: ນ້ຳມັນກາຊວນໝຸນຊ້າ (LSD; Low Speed Diesel Oil).

  **<u>ລັກສະນະທາງເຄມີ</u>**: ການຈຸດລະເບີດ (Self-Ignition Engine) ຂອງເຄື່ອງຍົນທີ່ໃຊ້ນ້ຳມັນກາຊວນນັ້ນ ເກີດຂຶ້ນຈາກຄວາມຮ້ອນ ແລະ ແຮງອັດສູງຂອງອາກາດໃນກະບອກສູບໂດຍບໍ່ຕ້ອງໃຊ້ຫົວທຽນ.

### 2. ນ້ຳມັນແອັດຊັງທຳມະດາ (Benzene Regular 91)

ເປັນນ້ຳມັນທີ່ສະກັດມາຈາກນ້ຳມັນດິບ Crude Oil ປະສົມສານເຄມີທີ່ມີຄ່າອອກເທນ 91 ສີແດງປະກອບດ້ວຍສ່ວນປະສົມຈາກນ້ຳມັນແອັດຊັງທີ່ປາສະຈາກສານຕະກົ່ວ.

- ຄຸນສົມບັດເໝາະສຳລັບເຄື່ອງຈັກທີ່ມີອັດຕາສ່ວນກຳລັງຕ່ຳກວ່າ 8:1 ເຊິ່ງໄດ້ແກ່ ເຄື່ອງຈັກຂະໜາດນ້ອຍ, ລົດຈັກ, ເຄື່ອງປັ່ນໄຟ, ເຄື່ອງຕັດຫຍ້າ ແລະ ປ້ຳນ້ຳຂະໜາດນ້ອຍອື່ນໆ.

3. <u>ນ້ຳມັນແອັດຊັງພິເສດ (Benzene Super 95)</u>

ເປັນນ້ຳມັນທີ່ສະກັດມາຈາກນ້ຳມັນດິບ Crude Oil ປະສົມສານເຄມີທີ່ມີຄ່າອອກເທນ 95 ສີສົ້ມປະກອບດ້ວຍສ່ວນປະສົມຈາກນ້ຳມັນແອັດຊັງທີ່ປາສະຈາກສານຕະກົ່ວ.

- ຄຸນສົມບັດເໝາະສຳລັບເຄື່ອງຈັກທີ່ມີອັດຕາສ່ວນກຳລັງສູງກວ່າ 8:1 ເຊິ່ງໄດ້ແກ່: ລົດຍົນທົ່ວໄປມີລັກສະນະທາງເຄມີ ຄ່າອອກເທນຄືຕົວເລກສະແດງຄຸນສົມບັດ ການອ້ວດ (Anti-knock Quality). ໃນສະພາບການເຜົາໄໝ້ປົກກະຕິ ເມື່ອສ່ວນປະສົມຂອງອາກາດກັບເຊື້ອໄຟຖືກຈຸດລະເບີດຂຶ້ນດ້ວຍປະກາຍໄຟຈາກຫົວທຽນ ແລະ ດຳເນີນຕິດຕໍ່ກັນໄປຈົນສຸດຫ້ອງເຜົາໄໝ້ ແລະ ກໍລະນີທີ່ມີບາງສ່ວນຂອງເຊື້ອໄຟທີ່ເປວໄຟຍັງລາມໄປບໍ່ເຖິງ ບໍ່ສາມາດທົນຄວາມຮ້ອນສູງ ແລະ ຄວາມດັນສູງບໍ່ໄດ້ຈະຖືກຈຸດລະເບີດຂຶ້ນເອງ (Self-Ignition). ການຈຸດລະເບີດດັ່ງກ່າວນີ້ ມັນໄດ້ເຮັດໃຫ້ເກີດຄວາມຖີ່ສູງ ແລະ ແລ່ນເຂົ້າໄປປະທະກັບເປວໄຟທີ່ກຳລັງລາມມາຈາກຫົວທຽນເຮັດໃຫ້ເກີດ ການອ້ວດ ຫຼື ວິເຄາະມີສຽງດັງ (Pinging Sound).

4. <u>ນ້ຳມັນເຕົາ (Bunker Oil, HFO):</u>

ເປັນຜະລິດຕະພັນທີ່ໄດ້ຈາກກົ້ນໝໍ້ກັ່ນທີ່ເປັນສ່ວນຕົກຄ້າງ ແລະ ມີຄ່າ Distillate Fuels ສູງເຊິ່ງໄດ້ແກ່ ນ້ຳມັນກາສ ແລະ ນ້ຳມັນກາຊວນທີ່ລະເຫີຍ ແລະ ກັ່ນຕອງໄປຈົນໝົດແລ້ວ. ດ້ວຍເຫດນີ້ນ້ຳມັນເຕົາຈຶ່ງມີຊື່ວ່າ: Residual Fuel (ກາກກັ່ນ) ຫຼື Heavy Fuel Oils. ເນື່ອງຈາກເປັນສ່ວນທີ່ໜັກ ແລະ ຂຸ້ນໜຽວ ແລະ ຍັງບໍ່ສະດວກໃຊ້ງານໃນອຸນຫະພູມທີ່ມີຈຸດເດືອດຕັ້ງແຕ່ 37°C ໄປຈົນເຖິງ 482°C ມີສ່ວນທີ່ມີຈຸດເດືອດຕັ້ງແຕ່ 211°C - 371°C ປົນຢູ່.

- ຄຸນສົມບັດເໝາະສຳລັບການໃຊ້ງານ 3 ປະເພດດັ່ງນີ້:

1.) ໃຊ້ເປັນເຊື້ອໄຟໝໍ້ນ້ຳເພື່ອຜະລິດອາຍນ້ຳ

- **ເປັນເຊື້ອໄຟໝໍ້ນ້ຳເພື່ອຜະລິດອາຍນ້ຳຂະໜາດໃຫຍ່ທີ່ເອີ້ນວ່າ: (Co-generation)** ທີ່ມີຄວາມດັນສູງ, ອຸນຫະພູມສູງກັບເຄື່ອງກັງຫັນອາຍນ້ຳ ເພື່ອຜະລິດໄຟຟ້າໃນໂຮງໄຟຟ້າ, ໂຮງງານນ້ຳຕານ ແລະ ອື່ນໆ.
- **ເປັນເຊື້ອໄຟໝໍ້ນ້ຳເພື່ອຜະລິດອາຍນ້ຳຂະໜາດນ້ອຍທີ່ເອີ້ນວ່າ: (Process Steam)** ໃຊ້ຖ່າຍເທຄວາມຮ້ອນໃນຂະບວນການຜະລິດໃນໂຮງງານອຸດສາຫະກຳເຊັ່ນ: ການອົບຜ້າ, ຍ້ອມຜ້າ ແລະ ອົບເຈ້ຍເປັນຕົ້ນ.

2.) ໃຊ້ເປັນເຊື້ອໄຟໂດຍກົງໃນອຸດສາຫະກຳຕ່າງໆໃຊ້ໃນເຕົາເຜົາ ຫຼື ເບ້ົາຫຼອມໂລຫະ (Firing of Open hearth, Rotary or Crucible Pot Furnaces), ເຜົາໂລຫະເພື່ອເຮັດໃຫ້ເປັນເສັ້ນ(Hot Rolling Operation) ເພື່ອການຂຶ້ນຮູບ (Metal Forging) ເຜົາໂລຫະເພື່ອການຊຸບແຂງ (Metal Heat Treatment) ເຜົາໃນເຕົາເຊີຣາມິກ, ການຫຼອມແກ້ວ, ການເຜົາປູນຊີເມັນ ແລະ ປູນຂາວເປັນຕົ້ນ.

3.) ໃຊ້ເປັນເຊື້ອໄຟກັບເຄື່ອງຈັກກາຊວນຂະໜາດໃຫຍ່ທີ່ໝຸນຊ້າເຊັ່ນ: ການໃຊ້ຂັບເຄື່ອນໄຟຟ້າທີ່ຕິດຕັ້ງຢູ່ໃນໂຮງງານອຸດສາຫະກຳ ແລະ ເຮືອກຳປັ່ນຂະໜາດໃຫຍ່ທີ່ແລ່ນໃນມະຫາສະໝຸດ ເຊິ່ງເຊື້ອໄຟຈຳພວກນີ້ມີຊື່ເອີ້ນສະເພາະວ່າ: (Bunker Fuels).

5. **<u>ນ້ຳມັນເຄື່ອງ ຊັນອອຍ (Sun's oil):</u>**

ເປັນນ້ຳມັນເຄື່ອງເກຣດລວມຊະນິດສັງເຄາະ 100% (Fully Synthetic) ທີ່ມີມາດຕະຖານເປັນທີ່ຍອມຮັບ ໂດຍບໍລິສັດນຳເຂົ້າຈາກຜູ້ຈຳໜ່າຍ ໃນປະເທດໄທ ເຊິ່ງຈັດຈຳໜ່າຍພາຍໃຕ້ການສິນຄ້າ "SUN'S OIL" ໃຊ້ກັບເຄື່ອງຈັກ ການຊວນທຸກຊະນິດ ໂດຍສະເພາະເຄື່ອງຈັກທີ່ມີສະມັດຕະພາບສູງ ແລະ ເຄື່ອງຈັກທີ່ ໃຊ້ການສທຳມະຊາດ (NGV, LPG, CNG) ເຊິ່ງຜະລິດຈາກ Polyalpha Olefin (PAO) ແລະ Ester ດ້ວຍເຕັກໂນໂລຊີທີ່ທັນສະໄໝ ແລະ ຜ່ານມາດຕະຖານຈາກ ILSAC GF-5, GM Dexos1, API SN ແລະ API SN resource conserving ຈຶ່ງເຮັດໃຫ້ມີຄວາມຫຼໍ່ລື່ນສູງ ໃນສະຖານະພາບທີ່ມີ ຄວາມຄົງຕົວ ແລະ ຍັງທົນກັບຄວາມຮ້ອນໄດ້ສູງ, ຫຼຸດການສຶກຫຼໍ, ມີອາຍຸການໃຊ້ງານຍາວ, ຊ່ວຍປະຢັດການໃຊ້ນ້ຳມັນ ແລະ ຫຼຸດຜ່ອນການບຳລຸງຮັກສາ ໂດຍມີຂະໜາດບັນຈຸຕັ້ງແຕ່ 1 ລິດ, 5 ລິດ, 18 ລິດ, 200 ລິດ ແລະ ຫຼາຍກວ່າ 6,000 ລິດຂຶ້ນໄປ.

ສ່ວນໃຫຍ່ບໍລິສັດຈະຊື້ຜະລິດຕະພັນດັ່ງກ່າວຈາກໂຮງກັ່ນນ້ຳມັນປະເທດໃກ້ຄຽງເປັນສ່ວນໃຫຍ່ເຊັ່ນ: Chevron, ESSO ແລະ IRPC ເຊິ່ງຈະມີການຈຳໜ່າຍນ້ຳມັນຜ່ານສະຖານີບໍລິການນ້ຳມັນ ທີ່ມີການອອກແບບໂຄງ ສ້າງທີ່ມີເອກະລັກສະເພາະ, ເນັ້ນຄວາມແຕກຕ່າງຈາກສະຖານີບໍລິການອື່ນໆລວມເຖິງສີສັນ, ພື້ນທີ່ໃຫ້ການບໍລິການ ແລະ ມີການຈັດປະເພດສະຖານີບໍລິການນ້ຳມັນຕາມຄວາມເໝາະສົມໃນແຕ່ລະພື້ນທີ່ນ້ອຍ-ໃຫຍ່, ເຂດຊຸມຊົນເມືອງ, ແຄມທາງ ຕິດຖະໜົນໃຫຍ່ ແລະ ພື້ນທີ່ອື່ນໆຕາມເກນມາດຕະຖານທີ່ທາງບໍລິສັດກຳນົດໄວ້ ເຊິ່ງມີທັງໝົດ 107 ສະຖານີທີ່ໃຫ້ ບໍລິການໃນປັດຈຸບັນຕາມລາຍລະອຽດດັ່ງນີ້:

ຕາຕະລາງທີ 1.4.1: ສະຫຼຸບຈຳນວນສະຖານີບໍລິການນ້ຳມັນທັງໝົດ

| ປະເພດສະຖານີບໍລິການ | ຈຳນວນ | ອາຍຸສັນຍາທີ່ເຫຼືອ | COCO | CODO |
|---|---|---|---|---|
| PTN: Plus Platinum Gas Station | 5 | 16 ເຖິງ 19 ປີ | 4 | 1 |
| GLD: Plus Gold Gas Station | 7 | 15 ເຖິງ 17 ປີ | 2 | 5 |
| STD: Plus Standard Gas Station | 38 | 14 ເຖິງ 18 ປີ | 2 | 36 |
| THN: Thongthin Gas Station | 57 | 15 ເຖິງ 20 ປີ | 0 | 57 |
| **ລວມທັງໝົດ** | **107** | | **8** | **99** |

ໝາຍເຫດ: ປັດຈຸບັນສະຖານີບໍລິການທີ່ເປັນຮູບແບບ COCO ທັງໝົດ 8 ສະຖານີ ໃນນັ້ນ 3 ສະຖານີແມ່ນບໍລິສັດເປັນເຈົ້າຂອງກຳມະ ສິດ ທີ່ດິນ ແລະ ສິ່ງປຸກສ້າງ, ເຄື່ອງມື ແລະ ອຸປະກອນ ແລະ 5 ສະຖານີແມ່ນບໍລິສັດເຊົ່າທີ່ດິນສ່ວນບຸກຄົນພາຍນອກ.

ຕາຕະລາງ 1.4.2: ສະຫຼຸບຈຳນວນສະຖານີບໍລິການນ້ຳມັນແບ່ງຕາມພູມສັນຖານ

| ທີ່ຕັ້ງຂອງສະຖານີບໍລິການ | PTN | GLD | STD | THN | ລວມ |
|---|---|---|---|---|---|
| ແຂວງ ນະຄອນຫຼວງວຽງຈັນ | 4 | 4 | 12 | 24 | 44 |
| ແຂວງ ບໍລິຄຳໄຊ | 0 | 0 | 4 | 7 | 11 |
| ແຂວງ ໄຊຍະບູລີ (ເມືອງເງິນ) | 0 | 0 | 3 | 6 | 9 |
| ແຂວງ ສະຫວັນນະເຂດ | 1 | 3 | 19 | 20 | 43 |
| **ລວມທັງໝົດ** | **5** | **7** | **38** | **57** | **107** |

## 2. ຮູບແບບສະຖານີບໍລິການນ້ຳມັນ

ບໍລິສັດໄດ້ມີການແບ່ງລັກສະນະ ແລະ ປະເພດຂອງສະຖານີບໍລິການນ້ຳມັນອອກເປັນ 4 ຮູບແບບຫຼັກໂດຍມີລາຍລະອຽດດັ່ງນີ້:

1. **<u>ສະຖານີບໍລິການນ້ຳມັນ ພລັສ ແພັລຕິນັມ (PLUS Platinum Gas Station)</u>:** ຂະໜາດມາດຕະຖານຂອງສະຖານີບໍລິການນ້ຳມັນດັ່ງກ່າວ ແມ່ນມີເນື້ອທີ່ທັງໝົດປະມານ 60x80 ແມັດ, ມີຕູ້ຈ່າຍທັງໝົດ 6 ຕູ້ (2 ຕູ້ມີ 6 ຫົວຈ່າຍ ແລະ ອີກ 4 ຕູ້ ມີ 4 ຫົວຈ່າຍ) ລວມທັງໝົດ 28 ຫົວຈ່າຍ ແລະ ມີຖັງບັນຈຸນ້ຳມັນໃຕ້ດິນໃຊ້ໄວ້ເກັບນ້ຳມັນລວມທັງໝົດ 3 ຖັງ ສາມາດບັນຈຸນ້ຳມັນໄດ້ດັ່ງນີ້:
   - ແອັດຊັງພິເສດ 1 ຖັງ ບັນຈຸໄດ້ 10,000 ລິດ
   - ແອັດຊັງທຳມະດາ 1 ຖັງ ບັນຈຸໄດ້ 20,000 ລິດ
   - ກາຊວນ 1 ຖັງ ບັນຈຸໄດ້ 20,000 ລິດ

   ປັດຈຸບັນມີທັງໝົດ 5 ສະຖານີ ທີ່ເປັນຮູບແບບ COCO ທັງໝົດທີ່ໃຫ້ບໍລິການໃນນະຄອນຫຼວງວຽງຈັນ ແລະ ຕ່າງແຂວງເຊັ່ນ: ສະຖານີບໍລິການນ້ຳມັນ ພລັສ ແພັລຕິນັມທີ່ສາລາຄຳ, ດອນກອຍ, ສະຫວັນນະເຂດ ແລະ ສະຖານີບໍລິການນ້ຳມັນ ຫຼັກ 7 ເຊິ່ງທາງບໍລິສັດຫາກໍ່ເປີດໃຫ້ບໍລິການລ່າສຸດໃນເດືອນ ສິງຫາ 2014 ທີ່ຜ່ານມາ.

ຮູບທີ 1.4.1 ສະຖານີບໍລິການນ້ຳມັນ ພລັສ ແພັລຕິນັມ

ສະຖານີບໍລິການນ້ຳມັນ ຮູບແບບ ພລັສ ແພັລຕິນັມ (PTN) ເປັນສະຖານີບໍລິການນ້ຳມັນຂະໜາດໃຫຍ່ ເຊິ່ງອອກແບບມາເພື່ອຮອງຮັບການເປັນຈຸດສູນກາງ ແລະ ອຳນວຍຄວາມສະດວກໃຫ້ແກ່ຄົນໃນຊຸມຊົນໂດຍພາຍໃນພື້ນທີ່. ສະຖານີປະກອບມີຮ້ານສະດວກຊື້ ແລະ ບໍລິການອື່ນໆ ເພື່ອຮອງຮັບຮູບແບບການໃຊ້ຊີວິດປະຈຳວັນ (Life Style) ຂອງຊຸມຊົນຄົນໃນເມືອງທີ່ໃຊ້ຊີວິດແບບຮີບດ່ວນ, ອຳນວຍຄວາມສະດວກເປັນສູນກາງໃນການນັດພົບກັນຂອງຄົນໃນຊຸມຊົນ ເຊິ່ງພາຍໃນສະຖານີ PTN ຈະມີ ຮ້ານສະດວກຊື້ພາຍໃຕ້ເຄື່ອງໝາຍ “PLUS Daily Mart” ແລະ ບໍລິການອື່ນໆເຊັ່ນ: ສູນ ລ້າງອັດສີດລິດຍົນ,ປ່ຽນຖ່າຍນ້ຳມັນເຄື່ອງພາຍໃຕ້ເຄື່ອງໝາຍ “MOLY CARE”, ຮ້ານອາຫານ ແລະ ເຄື່ອງດື່ມ, ຕູ້ກົດເງິນສົດ (ATM) ຂອງທະນາຄານພົງສະຫວັນ, ບໍລິການບັດເຕີມນ້ຳມັນແທນເງິນສົດ (Fleet Card) ແລະ ຮ້ານຄ້າ ຫຼື ສູນບໍລິການອື່ນໆ.

2. **<u>ສະຖານີບໍລິການນ້ຳມັນ ພລັສ ໂກລ (Plus Gold Gas Station)</u>:** ມາດຕະຖານຂອງສະຖານີບໍລິການນ້ຳມັນມີຂະໜາດຕັ້ງແຕ່ 50 x 60 ແມັດຂຶ້ນໄປ, ມີຕູ້ຈ່າຍນ້ຳມັນທັງໝົດ 4 ຕູ້ (ມີ 2-4 ຫົວຈ່າຍລວມທັງໝົດມີປະມານ 8-12 ຫົວຈ່າຍ) ມີຖັງເກັບນ້ຳມັນ 4 ຖັງ ສາມາດບັນຈຸນ້ຳມັນໄດ້ດັ່ງນີ້:

ຮູບທີ 1.4.2

- ແອັດຊັງພິເສດ 1 ຖັງ ບັນຈຸໄດ້ 10,000 ລິດ
- ແອັດຊັງທຳມະດາ 1 ຖັງ ບັນຈຸໄດ້ 20,000 ລິດ
- ກາຊວນ 2 ຖັງ ບັນຈຸໄດ້ 20,000 ລິດ

ສະຖານີບໍລິການນ້ຳມັນຮູບແບບ ພລັສ ໂກລ (GLD) ເປັນສະຖານີບໍລິການຕາມເຂດຊຸມຊົນໃຫຍ່ ແຕ່ມີຂະໜາດເນື້ອທີ່ທີ່ນ້ອຍກວ່າຮູບແບບ ພລັສ ແພັລດຕິນຳ (PTN) ແຕ່ຍັງເນັ້ນການບໍລິການທີ່ຕອບສະໜອງວິຖີຊີວິດຂອງຄົນເມືອງ. ຕາມຮູບແບບ ພລັສ ໂກລ (GLD) ແມ່ນຖືກອອກແບບໃຫ້ຕອບສະໜອງພາບພົດທີ່ທັນສະໄໝດ້ວຍນະວັດຕະກຳດ້ານວິສະວະກຳທີ່ເປັນເອກະລັກ ໂດຍມີຮູບແບບທີ່ສະດວກ ແລະ ຫຼຸດໄລຍະເວລາໃນການກໍ່ສ້າງແຕ່ຍັງຮັກສາໄວ້ເຊິ່ງຄວາມປອດໄພ. ໂດຍຮູບແບບ ພລັສ ໂກລ (GLD) ຖືກກຳນົດເພື່ອຮອງຮັບວິຖີຊີວິດຂອງຄົນໃນຊຸມຊົນເມືອງໃຫຍ່ ພ້ອມທັງມີຮ້ານຄ້າ ແລະ ບໍລິການອື່ນໆທີ່ປະກອບໃນສະຖານີບໍລິການນ້ຳມັນປະເພດນີ້ ເຊັ່ນ: ຮ້ານສະດວກຊື້ພາຍໃຕ້ເຄື່ອງໝາຍ “PLUS Dialy Mart”, ສູນລ້າງອັດສີດລົດຍົນ ແລະ ປ່ຽນຖ່າຍນ້ຳມັນເຄື່ອງພາຍໃຕ້ເຄື່ອງໝາຍ “MOLY CARE”, ຕູ້ກົດເງິນສົດ (ATM) ຂອງທະນາຄານພົງສະຫວັນ, ບໍລິການບັດເຕີມນ້ຳມັນແທນເງິນສົດ (Fleet Card) ແລະ ຮ້ານຄ້າອື່ນໆ ໂດຍປັດຈຸບັນສະຖານີບໍລິການໃນຮູບແບບດັ່ງກ່າວນີ້ໄດ້ເປີດໃຫ້ບໍລິການແລ້ວ 7 ສະຖານີ.

3. **<u>ສະຖານີບໍລິການນ້ຳມັນ ພລັສ ມາດຕະຖານ (Plus Standard Gas Station)</u>:** ມາດຕະຖານຂອງສະຖານີບໍລິການນ້ຳມັນແມ່ນມີຂະໜາດຕັ້ງແຕ່ 40 x50 ແມັດຂຶ້ນໄປ, ມີ 3 ຕູ້ (6 ຫົວຈ່າຍ) ແລະ ມີຖັງເກັບນ້ຳມັນ 4 ຖັງ ສາມາດເກັບນ້ຳມັນໄດ້ດັ່ງນີ້:

ຮູບທີ 1.4.3

- ຖັງເກັບນ້ຳມັນແອັດຊັງທຳມະດາ ບັນຈຸໄດ້ 15,000 ລິດ
- ຖັງເກັບນ້ຳມັນ ກາຊວນ ບັນຈຸໄດ້ 20,000 ລິດ.

ສະຖານີບໍລິການນ້ຳມັນ ໃນຮູບແບບ ພລັສ ມາດຕະຖານ (STD) ເປັນສະຖານີບໍລິການທີ່ຕັ້ງຢູ່ຕາມເສັ້ນທາງໃຫຍ່ ຕາມສາຍທາງຫຼວງເຊິ່ງມີລົດຍົນສັນຈອນໄປມາເປັນຈຳນວນຫຼາຍ ແລະ ໃກ້ບໍລິເວນເຂດຊຸມຊົນເຊິ່ງຮອງຮັບການເຂົ້າມາໃຊ້ບໍລິການຂອງລູກຄ້າ ຮູບແບບ ພລັສ ມາດຕະຖານ (STD) ເປັນຮູບແບບດັ້ງເດີມຂອງບໍລິສັດ ເຊິ່ງມີພຽງແຕ່ບໍລິການນ້ຳມັນພຽງຢ່າງດຽວ ແລະ ບໍ່ມີຮ້ານຄ້າ ແລະ ບໍລິການເສີມໃດໆ ໂດຍສ່ວນຫຼາຍຮູບແບບ ພລັສ ມາດຕະຖານ (STD) ຈະເປັນການບໍລິຫານໂດຍຮູບແບບ CODO ເຊິ່ງໃນເມື່ອກ່ອນສະຖານີບໍລິການໃນຮູບແບບຄົບວົງຈອນ ກໍ່ຍັງບໍ່ເປັນທີ່ແຜ່ຫຼາຍໃນ ສປປ ລາວ ພ້ອມທັງບໍລິສັດເອງຍັງຕ້ອງການຮັກສາຄຸນະພາບຂອງສະຖານີໃນຮູບແບບດັ່ງກ່າວໄວ້ ພາຍໃຕ້ການຄຸ້ມຄອງບໍລິຫານຂອງຕົນເອງກ່ອນໃນເບື້ອງຕົ້ນ. ແຕ່ໃນອະນາຄົດອາດມີການປັບປ່ຽນພາບລັກ ຫຼື ເພີ່ມຮ້ານຄ້າ ແລະ ບໍລິການອື່ນໆເຂົ້າມາໃນສະຖານີບໍລິການນ້ຳມັນ ໃນຮູບແບບດັ່ງກ່າວ ເພື່ອຕອບສະໜອງການຂະຫຍາຍຕົວ ແລະ ຮູບແບບການໃຊ້ຊີວິດຂອງຊຸມຊົນໃນເມືອງ ໂດຍໃນ

ປັດຈຸບັນສະຖານີບໍລິການນ້ຳມັນຮູບແບບນີ້ມີບໍລິການເສີມພຽງແຕ່ ບໍລິການລ້າງອັດ ສີດ ແລະ ປ່ຽນຖ່າຍນ້ຳມັນເຄື່ອງເທົ່ານັ້ນ. ໃນປັດຈຸບັນຮູບແບບ ພລັສ ມາດຕະຖານ (STD) ມີຈຳນວນທັງໝົດ 38 ສະຖານີ.

4. **<u>ສະຖານີບໍລິການນ້ຳມັນ ພລັສ ທ້ອງຖິ່ນພັດທະນາ (Plus Thongthin Gas Station)</u>:** ມາດຕະຖານຂອງ ສະຖານີບໍລິການນ້ຳມັນ ດັ່ງກ່າວແມ່ນມີຂະໜາດຕັ້ງແຕ່ 15X20 ແມັດຂຶ້ນໄປ, ມີ 1 ຕູ້ (2 ຫົວຈ່າຍ) ມີຖັງເກັບນ້ຳມັນທັງໝົດ 2 ຖັງຄື:

ຮູບທີ 1.4.4

- ຖັງເກັບນ້ຳມັນແອັດຊັງທຳມະດາ ຈຳນວນ 6,000 ລິດ.
- ຖັງເກັບ ກາຊວນ ຂະໜາດ 10,000 ລິດ.

ສະຖານີບໍລິການໃນຮູບແບບ ພລັສ ທ້ອງຖິ່ນພັດທະນາ (THN) ເປັນສະຖານີບໍລິການຂະໜາດນ້ອຍເຊິ່ງຈະແນ່ໃສ່ເພື່ອຕອບສະໜອງການໃຊ້ນ້ຳມັນເຊື້ອໄຟຕາມເຂດຊຸມຊົນທີ່ຢູ່ຫ່າງໄກສອກຫຼີກໃຫ້ສາມາດໃຊ້ນ້ຳມັນທີ່ມີຄຸນະພາບໃນລາຄາທີ່ຍຸດຕິທຳ ໂດຍຮູບແບບ ພລັສ ທ້ອງຖິ່ນພັດທະນາ (THN) ຖືກອອກແບບເພື່ອຕອບສະໜອງວິຖີຊີວິດຂອງຊຸມຊົນໃນເຂດຊົນນະບົດ ແລະ ມີການໃຫ້ບໍລິການນ້ຳມັນເຊື້ອໄຟພຽງຢ່າງດຽວ ໂດຍຮູບແບບດັ່ງກ່າວເປັນຮູບແບບສະຖານີບໍລິການຂອງບໍລິສັດໃນຊ່ວງທຳອິດຈົນເຖິງປະຈຸບັນ ເຊິ່ງສ່ວນໃຫຍ່ເປັນການບໍລິຫານໃນຮູບແບບຂອງ CODO ໂດຍຮ່ວມລົງທຶນກັບເຈົ້າຂອງທີ່ດິນໃນເຂດພື້ນທີ່ຊຸມຊົນຫ່າງໄກຊອກຫຼີກ ແຕ່ໃນອະນາຄົດ ຫາກພື້ນທີ່ໃດມີແນວໂນ້ມມີການຂະຫຍາຍຕົວຂອງຊຸມຊົນອາດມີການປ່ຽນຮູບແບບຂອງສະຖານີບໍລິການດັ່ງກ່າວໄປເປັນຮູບແບບອື່ນທີ່ເໝາະສົມ ໃນປັດຈຸບັນມີສະຖານີ THN ທັງໝົດ 57 ສະຖານີ.

## 3.ຮູບແບບທຸລະກິດເສີມພາຍໃນສະຖານີບໍລິການນ້ຳມັນ

- **ຮ້ານຄ້າສະດວກຊື້ (Plus Daily Mart):**

ຮູບທີ 1.4.5

ເປັນອີກບໍລິການໜຶ່ງທີ່ຢູ່ໃນສະຖານີບໍລິການນ້ຳມັນ ເຊິ່ງບໍລິຫານພາຍໃຕ້ບໍລິສັດ ລາວເດລີ້ມາກ ຂາເຂົ້າ-ຂາອອກ ຈຳກັດ, ຈຳໜ່າຍສິນຄ້າທົ່ວໄປ ເຊັ່ນ: ອາຫານ, ເຄື່ອງດື່ມ, ໜັງສື, ເຄື່ອງໃຊ້ສອຍໃນຊີວິດປະຈຳວັນຕ່າງໆ ທີ່ຈຳເປັນເພື່ອໃຫ້ລູກຄ້າທີ່ເຂົ້າມາເຕີມນ້ຳມັນສາມາດພັກຊື້ເຄື່ອງໃຊ້ກັບບ້ານ ເຊິ່ງທາງຮ້ານໄດ້ໃຫ້ບໍລິການກັບລູກຄ້າຕັ້ງແຕ່ເວລາ 6:00 ໂມງເຊົ້າ ເຖິງ 9:00 ໂມງແລງ. ເຊິ່ງບໍລິສັດ ຫຼື ເຈົ້າຂອງສະຖານີບໍລິການ ນ້ຳມັນບໍ່ໄດ້ມີສ່ວນກ່ຽວຂ້ອງໃນການບໍລິຫານ ຫຼື ການແບ່ງປັນຜົນກຳໄລ (ຂາດທຶນ) ແຕ່ຢ່າງໃດ ໄດ້ຮັບພຽງຄ່າເຊົ່າພື້ນທີ່ເທົ່ານັ້ນ ປັດຈຸບັນມີທັງໝົດຢູ່ 7 ສາຂາດັ່ງຕະລາງລຸ່ມນີ້:

ຕາຕະລາງທີ 1.4.3 : ລາຍລະອຽດທີ່ຕັ້ງ ແລະ ຈຳນວນສາຂາຂອງຮ້ານຄ້າສະດວກຊື້

| ສາຂາ | ລາຍລະອຽດທີ່ຕັ້ງ |
|---|---|
| **ສາຂາທີ 1:** | ຢູ່ໃນສະຖານີບໍລິການນ້ຳມັນ ພລັສ 8, ຕັ້ງຢູ່ ບ້ານ ດອນກອຍ, ເມືອງ ສີສັດຕະນາກ, ແຂວງ ນະຄອນຫຼວງວຽງຈັນ |
| **ສາຂາທີ 2:** | ຢູ່ໃນສະຖານີບໍລິການນ້ຳມັນ ພລັສ 9, ຕັ້ງຢູ່ບ້ານ ສາລາຄຳ, ເມືອງ ຫາດຊາຍຟອງ ແຂວງ ນະຄອນຫຼວງ ວຽງຈັນ |
| **ສາຂາທີ 3:** | ຢູ່ໃນສະຖານີບໍລິການນ້ຳມັນ ພລັສ 2, ຕັ້ງຢູ່ບ້ານ ໜອງແຫ້ວ, ເມືອງ ຫາດຊາຍຟອງ, ແຂວງ ນະຄອນຫຼວງວຽງຈັນ |
| **ສາຂາທີ 4:** | ຢູ່ໃນສະຖານີບໍລິການນ້ຳມັນ ອານຸໄຊ ບໍລິການ, ຕັ້ງຢູ່ບ້ານ ຫ້ວຍຫົ້ງ, ເມືອງ ໄຊທານີ ແຂວງ ນະຄອນຫຼວງວຽງຈັນ |
| **ສາຂາທີ 5:** | ຢູ່ໃນສະຖານີບໍລິການນ້ຳມັນ ຫຼັກ 7, ຕັ້ງຢູ່ບ້ານ ພະຂາວ, ເມືອງ ໄຊທານີ ແຂວງ ນະຄອນຫຼວງວຽງຈັນ |
| **ສາຂາທີ່ 6:** | ຢູ່ໃນສະຖານີບໍລິການນ້ຳມັນ ຜາແດງ ບໍລິການ, ຕັ້ງຢູ່ບ້ານ ແສນຊຸມ, ເມືອງໂພນໂຮງ, ແຂວງ ວຽງຈັນ. |
| **ສາຂາທີ່ 7:** | ຢູ່ໃນສະຖານີບໍລິການນ້ຳມັນ ນ້ຳເພັດມີໄຊ ບໍລິການ ຕັ້ງຢູ່ ບ້ານ ແສນຊຸມ, ເມືອງ ໄກສອນພົມວິຫານ, ແຂວງສະຫວັນນະເຂດ. |

- **ສູນລ້າງອັດສີດ (Moly Care):**

ຮູບທີ 1.4.6

ບໍລິການລ້າງອັດສີດ ແລະ ອະນາໄມພາຍໃນລົດຍົນ ແລະ ພາຍນອກດ້ວຍນ້ຳຢາລ້າງ ລົດຊະນິດພິເສດ, ບໍລິການຂັດ ແລະ ເຄືອບສີລົດເຮັດໃຫ້ລົດເງົາງາມຂຶ້ນກວ່າເກົ່າ ດ້ວຍຊ່າງທີ່ມີສີມື ແລະ ຊຳນານງານທີ່ຜ່ານການເຝິກອົບຮົມຈາກຕ່າງປະເທດ ເນື່ອງ ຈາກວ່າ Moly Care ເປັນທຸລະກິດແຟນຊາຍ (Franchise) ສະນັ້ນການບໍລິການ ຈຶ່ງຈຳເປັນຕ້ອງມີມາດຕະຖານດຽວກັນ ເຊິ່ງບໍລິສັດ ຫຼື ເຈົ້າຂອງສະຖານີບໍລິການ ນ້ຳມັນບໍ່ໄດ້ມີສ່ວນກ່ຽວຂ້ອງໃນການບໍລິຫານ ຫຼື ການແບ່ງປັນຜົນກຳໄລ (ຂາດທຶນ) ແຕ່ຢ່າງໃດ ໄດ້ຮັບພຽງຄ່າເຊົ່າພື້ນທີ່ເທົ່ານັ້ນ ເຊິ່ງປັດຈຸບັນມີທັງໝົດຢູ່ 4 ສາຂາດັ່ງ ຕະລາງລຸ່ມນີ້:

ຕາຕະລາງທີ 1.4.4: ລາຍລະອຽດທີ່ຕັ້ງ ແລະ ຈຳນວນສາຂາຂອງສູນລ້າງອັດສີດ

| ສາຂາ | ລາຍລະອຽດທີ່ຕັ້ງ |
|---|---|
| **ສາຂາທີ 1:** | ຢູ່ໃນສະຖານີບໍລິການນ້ຳມັນ ພລັສ 8, ຕັ້ງຢູ່ບ້ານ ດອນກອຍ, ເມືອງ ສີສັດຕະນາກ, ແຂວງ ນະຄອນຫຼວງວຽງຈັນ |
| **ສາຂາທີ 2:** | ຢູ່ໃນສະຖານີບໍລິການນ້ຳມັນ ພລັສ 2, ຕັ້ງຢູ່ບ້ານ ໜອງແຫ້ວ, ເມືອງ ຫາດຊາຍຟອງ, ແຂວງ ນະຄອນຫຼວງວຽງຈັນ |
| **ສາຂາທີ່ 3:** | ຢູ່ໃນສະຖານີບໍລິການນ້ຳມັນ ເພັດມີໄຊ ບໍລິການ, ຕັ້ງຢູ່ບ້ານ ສະໝາມໄຊ, ເມືອງ ໄກສອນພົມວິຫານ, ແຂວງ ສະຫວັນນະເຂດ |
| **ສາຂາທີ່ 4:** | ຢູ່ສະຖານີບໍລິການນ້ຳມັນ ພອນຮຸ່ງຈະເລີນ ບໍລິການ, ຕັ້ງຢູ່ບ້ານ ໂພນສະຫວາດເໜືອ, ເມືອງ ສີໂຄດຕະບອງ, ແຂວງ ນະຄອນຫຼວງວຽງຈັນ |

- **ຕູ້ກົດເງິນສົດ (ATM) ທະນາຄານ ພົງສະຫວັນ (Phongsavanh Bank):**

ຮູບທີ 1.4.7

ເປັນອີກບໍລິການໜຶ່ງທີ່ທາງບໍລິສັດໄດ້ເລືອກເຂົ້າໄປໃນສະຖານີບໍລິການນ້ຳມັນ ເນື່ອງຈາກເຫັນວ່າຕູ້ກົດເງິນສົດ (ATM) ຈຳເປັນຕ້ອງມີເພື່ອໃຫ້ບໍລິການລູກຄ້າເຂົ້າມາແລກປ່ຽນເງິນຕາ ແລະ ເຮັດທຸລະກຳທາງການເງິນຕ່າງໆ. ບໍລິການດັ່ງກ່າວນີ້ ອາດຈະບໍ່ໄດ້ມີທຸກສະຖານີບໍລິການນ້ຳມັນ ອາດຈະມີແຕ່ສະຖານີຮູບແບບ ພລັສ ແພັລຕຕິນຳ ແລະ ຮູບແບບ ພລັສ ໂກລ ບາງສະຖານີເທົ່ານັ້ນ. ເຊິ່ງຕູ້ກົດເງິນດັ່ງກ່າວຈະຕັ້ງຢູ່ໃນສະຖານີບໍລິການນ້ຳມັນ ໃນຮູບແບບຂອງການເຊົ່າພື້ນທີ່ ເຊິ່ງບໍລິສັດ ຫຼື ເຈົ້າຂອງສະຖານີບໍລິການນ້ຳມັນບໍ່ໄດ້ມີສ່ວນກ່ຽວຂ້ອງໃນການບໍລິຫານ ຫຼື ການແບ່ງປັນຜົນກຳໄລແຕ່ຢ່າງໃດ ເປັນພຽງການບໍລິການເສີມຂອງທະນາຄານພົງສະຫວັນ ເທົ່ານັ້ນ. ປັດຈຸບັນໜ່ວຍບໍລິການດັ່ງກ່າວມີໃຫ້ບໍລິການແລ້ວຢູ່ 4 ສະຖານີຄື: ສະຖານີບໍລິການນ້ຳມັນ ພລັສ 8, ພລັສ 2, ພລັສ 3 ແລະ ພລັສ 4 ຕາມລາຍລະອຽດດັ່ງນີ້:

ຕາຕະລາງທີ 1.4.5: ລາຍລະອຽດທີ່ຕັ້ງ ແລະ ຈຳນວນສາຂາຂອງຕູ້ກົດເງິນສົດ (ATM)

| ສາຂາ | ລາຍລະອຽດທີ່ຕັ້ງ |
|---|---|
| **ສາຂາທີ 1:** | ຢູ່ໃນສະຖານີບໍລິການນ້ຳມັນ ພລັສ 8, ຕັ້ງຢູ່ບ້ານ ດອນກອຍ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ |
| **ສາຂາທີ 2:** | ຢູ່ໃນສະຖານີບໍລິການນ້ຳມັນ ພລັສ 2, ຕັ້ງຢູ່ບ້ານ ໜອງແຫ້ວ, ເມືອງ ຫາດຊາຍຟອງ, ນະຄອນຫຼວງວຽງຈັນ |
| **ສາຂາທີ 3:** | ຢູ່ໃນສະຖານີບໍລິການນ້ຳມັນ ຜາແດງ ບໍລິການ, ຕັ້ງຢູ່ບ້ານ ແສນຊຸມ, ເມືອງ ໂພນໂຮງ ແຂວງວຽງຈັນ (ຢູ່ໃນໄລຍະການຕິດຕັ້ງ) |
| **ສາຂາທີ 4:** | ຢູ່ໃນສະຖານີບໍລິການນ້ຳມັນ ຫຼັກ 7, ຕັ້ງຢູ່ບ້ານ ພະຂາວ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ. (ຢູ່ໃນໄລຍະການຕິດຕັ້ງ) |

- **ບັດເຕີມນ້ຳມັນທີ່ໃຊ້ແທນເງິນສົດ (Fleet Card):**

ຮູບທີ 1.4.8

ຮູບແບບຂອງບັດມີ 3 ຮູບແບບຄື: ບັດ ເຊັບພລັສ (Save PLUS), ຟີດພລັສ (Fleet PLUS) ແລະ ອີຊີ ພລັສ (Easy PLUS). ບັດ Fleet PLUS ແມ່ນເປັນບັດທີ່ໃຊ້ສະເພາະສຳລັບອົງກອນ ຫຼື ບໍລິສັດຕ່າງໆ ມີບັດແບບ pre-paid ແລະ post-paid, ສ່ວນບັດ ເຊັບພລັສ (Save PLUS) ແລະ ອີຊີ ພລັສ (Easy PLUS) ຈະເປັນລັກສະນະດຽວກັນ ແລະ ເປັນບັດແບບ pre-paid (ຄວາມຕັ້ງໃຈຂອງບໍລິສັດໃນຕໍ່ໜ້າແມ່ນຢາກໃຫ້ສາມາດໃຊ້ໄດ້ຫຼາຍຢ່າງ ນອກຈາກການເຕີມນ້ຳມັນ ແມ່ນຍັງສາມາດຊື້ເຄື່ອງໃນຮ້ານມິນິມາກໄດ້ (ແຕ່ຈະໃຊ້ສະເພາະພາຍໃນບໍລິສັດທີ່ກ່ຽວຂ້ອງ), ສຳລັບບັດ save plus ຈະເປັນບັດແບບ post-paid ສຳລັບບັດເຕີມນ້ຳມັນທີ່ໃຊ້ແທນເງິນສົດ ຈະຢູ່ພາຍໃຕ້ການບໍລິຫານງານຂອງ ບໍລິສັດ ແອວ-ເທັກ ລາວ ຈຳກັດໂດຍຈະມີການເຮັດສັນຍາຮ່ວມກັນກັບເຈົ້າຂອງສະຖານີບໍລິການ ໃນຮູບແບບຂອງ COCO ຫຼື CODO ໂດຍຈະມີການຄິດຄ່າທຳນຽມການບໍລິການຂອງບັດໃຊ້ແທນເງິນສົດກັບເຈົ້າຂອງສະຖານີບໍລິການນ້ຳມັນໃນອັດຕາທີ່ກຳນົດໄວ້ ຂອງຍອດການໃຊ້ຈ່າຍຜ່ານບັດດັ່ງກ່າວ. ປັດຈຸບັນນີ້ ສະຖານີບໍລິການທີ່ໃຊ້ລະບົບບັດເຕີມນ້ຳມັນມີຢູ່ 13 ສະຖານີ ທັງໃນນະຄອນຫຼວງ ແລະ ຕ່າງແຂວງ ແລະ ມີແຜນຂະຫຍາຍໃຫ້ຄວບຄຸມສະຖານີຂະໜາດໃຫຍ່ໃນຮູບແບບ ພລັສ ແພັລຕຕິນຳ (PTN) ແລະ ຮູບແບບ ພລັສ ໂກລ (GLD) ຕາມລາຍລະອຽດດັ່ງນີ້:

ຕາຕະລາງທີ 1.4.6: ລາຍລະອຽດທີ່ຕັ້ງ ແລະ ຈຳນວນສາຂາຂອງບັດເຕີມນ້ຳມັນແທນເງິນສົດ

| ສາຂາ | ລາຍລະອຽດທີ່ຕັ້ງ |
|---|---|
| **ສາຂາທີ 1:** | ຢູ່ໃນສະຖານີບໍລິການນ້ຳມັນ ພລັສ 8, ຕັ້ງຢູ່ບ້ານ ດອນກອຍ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ. |
| **ສາຂາທີ 2:** | ຢູ່ໃນສະຖານີບໍລິການນ້ຳມັນ ປ້ຳນ້ຳມັນ ພລັສ 9 ບໍລິການ, ຕັ້ງຢູ່ບ້ານ ສາລາຄຳ, ເມືອງ ຫາດຊາຍຟອງ, ນະຄອນຫຼວງວຽງຈັນ. |
| **ສາຂາທີ 3:** | ຢູ່ໃນສະຖານີບໍລິການນ້ຳມັນ ພລັສ 2, ຕັ້ງຢູ່ບ້ານ ໜອງແຫ້ວ, ເມືອງ ຫາດຊາຍຟອງ, ນະຄອນຫຼວງວຽງຈັນ |
| **ສາຂາທີ 4:** | ຢູ່ໃນສະຖານີບໍລິການນ້ຳມັນ ອານຸໄຊ ບໍລິການ, ຕັ້ງຢູ່ບ້ານ ຫ້ວຍຫົງ, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ |
| **ສາຂາທີ 5:** | ຢູ່ໃນສະຖານີບໍລິການນ້ຳມັນ ພອນຮຸ່ງເຮືອງ ບໍລິການ, ຕັ້ງຢູ່ບ້ານ ໂພນສະຫວາດເໜືອ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ |
| **ສາຂາທີ 6:** | ຢູ່ໃນສະຖານີບໍລິການນ້ຳມັນ ຄາມມີໄຊ (ພລັສ 7), ຕັ້ງຢູ່ບ້ານ ຕານມີໄຊ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ |
| **ສາຂາທີ 7:** | ຢູ່ໃນສະຖານີບໍລິການນ້ຳມັນໄທເກີ້ ບໍລິການ, ຕັ້ງຢູ່ບ້ານ ຫວ້ຍປູນ, ເມືອງ ປາກເຊ, ແຂວງ ຈຳປາສັກ |
| **ສາຂາທີ 8:** | ຢູ່ໃນສະຖານີບໍລິການນ້ຳມັນ ນ້ຳເພັດມີໄຊ ບໍລິການ ຕັ້ງຢູ່ ບ້ານ ສະໜາມໄຊ, ເມືອງ ໄກສອນພົມວິຫານ, ແຂວງ ສະຫວັນນະເຂດ |
| **ສາຂາທີ 9:** | ຢູ່ໃນສະຖານີບໍລິການນ້ຳມັນ ໂພນທັນ ບໍລິການ (ພລັສ 1), ຕັ້ງຢູ່ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ |
| **ສາຂາທີ 10:** | ຢູ່ໃນສະຖານີບໍລິການນ້ຳມັນ ວົງທອງ ບໍລິການ (ພລັສ 6), ຕັ້ງຢູ່ບ້ານ ໜອງບົວທອງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ. |
| **ສາຂາທີ່ 11:** | ຢູ່ໃນສະຖານີບໍລິການນ້ຳມັນຫຼັກ 7 , ຕັ້ງຢູ່ບ້ານ ພະຂາວ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ |
| **ສາຂາທີ່ 12:** | ຢູ່ໃນສະຖານີບໍລິການນ້ຳມັນ ຜາແດງ ບໍລິການ, ຕັ້ງຢູ່ບ້ານ ແສນສຸມ, ເມືອງ ໂພນໂຮງ, ແຂວງ ວຽງຈັນ. |
| **ສາຂາທີ່ 13:** | ຢູ່ໃນສະຖານີບໍລິການນ້ຳມັນ ໂຊກຮຸ່ງເຮືອງ ຕັ້ງຢູ່ບ້ານ ໂນນແສງຈັນ, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ |

## 4. ສາງເກັບນ້ຳມັນແອັດຊັ່ງ ແລະ ກາຊວນ

ປັດຈຸບັນ ບໍລິສັດມີສາງເກັບນ້ຳມັນທັງໝົດຢູ່ 5 ແຫ່ງທົ່ວປະເທດຕາມຊາຍແດນທີ່ໃກ້ກັບຜູ້ສະໜອງຕ່າງປະເທດ ແລະ ເປັນຈຸດຍຸດທະສາດທີ່ສຳຄັນໃນການກະຈາຍນ້ຳມັນເພື່ອໃຫ້ຄວບຄຸມພື້ນທີ່ທີ່ມີສະຖານນ້ຳມັນໃນທົ່ວປະເທດ. ພ້ອມທັງ ເປັນການຫຼຸດຕົ້ນທຶນໃນການຂົນສົ່ງເຊັ່ນ: ສາງນ້ຳມັນ ນະຄອນຫຼວງວຽງຈັນ, ສາງນ້ຳມັນ ປາກຊັນ, ສາງນ້ຳມັນ ສະຫວັນນະເຂດ, ສາງນ້ຳມັນ ເມືອງເງິນ ແລະ ສາງນ້ຳມັນ ປາກເຊ ເຊິ່ງສະແດງໃຫ້ເຫັນດັ່ງໃນພາບຕໍ່ໄປນີ້:

ຮູບທີ 1.4.9: ທີ່ຕັ້ງຂອງສາງນ້ຳມັນໃນ 5 ແຂວງ ທົ່ວປະເທດ

**1.) ສາງນ້ຳມັນສະຫວັນນະເຂດ:** ສ້າງຕັ້ງຂຶ້ນເມື່ອວັນທີ 1 ພຶດສະພາ 2009 ເຊິ່ງບໍລິສັດເປັນເຈົ້າຂອງ ແລະ ສ້າງຕັ້ງເອງ ຕັ້ງຢູ່ບ້ານ ໜອງໂກມ, ເມືອງ ໄກສອນພົມວິຫານ, ແຂວງ ສະຫວັນນະເຂດ ມີເນື້ອທີ່ 6,000 ຕາແມັດ ມີທັງໝົດ 16 ຖັງ ບັນຈຸນ້ຳມັນໄດ້ທັງໝົດ 800,000 ລິດ ໂດຍແບ່ງອອກເປັນ 3 ປະເພດດັ່ງນີ້:

- ຖັງເກັບນ້ຳມັນແອັດຊັງພິເສດ (ULG 95) ຂະໜາດບັນຈຸ 50,000 ລິດ ຈຳນວນ 1 ຖັງ.
- ຖັງເກັບນ້ຳມັນແອັດຊັງທຳມະດາ (ULG 91) ຂະໜາດບັນຈຸ 50,000 ລິດ ຈຳນວນ 5 ຖັງ.
- ຖັງເກັບນ້ຳມັນກາຊວນ (Diesel) ຂະໜາດບັນຈຸ 50,000 ລິດ ຈຳນວນ 10 ຖັງ.

**2.) ສາງນ້ຳມັນນະຄອນຫຼວງວຽງຈັນ:** ສ້າງຕັ້ງຂຶ້ນເມື່ອວັນທີ 1 ກໍລະກົດ 2010 ເຊິ່ງບໍລິສັດເປັນເຈົ້າຂອງ ແລະ ສ້າງຕັ້ງເອງ, ຕັ້ງຢູ່ບ້ານ ໜອງແຫ້ວເມືອງ ຫາດຊາຍຟອງ, ແຂວງ ນະຄອນຫຼວງວຽງຈັນ ມີເນື້ອທີ່ 9,000 ຕາແມັດ ມີທັງໝົດ 16 ຖັງ ບັນຈຸນ້ຳມັນໄດ້ທັງໝົດ 1,120,000 ລິດ ໂດຍແບ່ງອອກເປັນ 3 ປະເພດດັ່ງນີ້:

- ຖັງເກັບນ້ຳມັນແອັດຊັງພິເສດ (ULG 95) ຂະໜາດບັນຈຸ 70,000 ລິດ ຈຳນວນ 2 ຖັງ
- ຖັງເກັບນ້ຳມັນແອັດຊັງທຳມະດາ (ULG 91) ຂະໜາດບັນຈຸ 70,000 ລິດ ຈຳນວນ 4 ຖັງ
- ຖັງເກັບນ້ຳມັນກາຊວນ (Diesel) ຂະໜາດບັນຈຸ 70,000 ລິດ ຈຳນວນ 10 ຖັງ

**3.) ສາງນ້ຳມັນເມືອງເງິນ ແຂວງ ໄຊຍະບູລີ:** ສ້າງຕັ້ງຂຶ້ນເມື່ອວັນທີ 7 ທັນວາ 2010 ເຊິ່ງບໍລິສັດເປັນເຈົ້າຂອງ ເຊິ່ງຕັ້ງຢູ່ບ້ານ ເພຍງາມ, ເມືອງ ເງິນ, ແຂວງ ໄຊຍະບູລີ ມີເນື້ອທີ່ປະມານ 7,136 ຕາແມັດ ມີທັງໝົດ 18 ຖັງ ບັນຈຸນ້ຳມັນໄດ້ທັງໝົດ 700,000 ລິດ ໂດຍແບ່ງອອກເປັນ 2 ປະເພດດັ່ງນີ້:

- ຖັງເກັບນ້ຳມັນແອັດຊັງທຳມະດາ (ULG 91) ຂະໜາດບັນຈຸ 30,000 ລິດ ຈຳວນ 2 ຖັງ.
- ຖັງເກັບນ້ຳມັນກາຊວນ (Diesel) ຂະໜາດບັນຈຸ 30,000 ລິດ ຈຳນວນ 8 ຖັງ ແລະ ຂະໜາດ 50,000 ລິດ ຈຳນວນ 8 ຖັງ.

**4.) ສາງນ້ຳມັນປາກຊັນ:** ສ້າງຕັ້ງຂຶ້ນເມື່ອວັນທີ 1 ເມສາ 2011 ໃນຮູບແບບຮ່ວມທຶນລະຫວ່າງບໍລິສັດ ແລະ ເຈົ້າຂອງທີ່ດິນ ເຊິ່ງຕັ້ງຢູ່ບ້ານ ຫາງຊິງ, ເມືອງ ປາກຊັນ, ແຂວງບໍລິຄຳໄຊ ມີເນື້ອທີ່ປະມານ 19,200 ຕາແມັດ ມີທັງໝົດ 12 ຖັງ ບັນຈຸນ້ຳມັນໄດ້ທັງໝົດ 350,000 ລິດ ໂດຍແບ່ງອອກເປັນ 2 ປະເພດດັ່ງນີ້:

- ຖັງເກັບນ້ຳມັນແອັດຊັງທຳມະດາ (ULG 91) ຂະໜາດບັນຈຸ 25,000 ລິດ ຈຳນວນ 2 ຖັງ.

- ຖັງເກັບນ້ຳມັນກາຊອນ (Diesel) ຂະໜາດບັນຈຸ 25,000 ລິດ ຈຳນວນ 8 ຖັງ ແລະ ຂະໜາດ 50,000 ລິດ ຈຳນວນ 2 ຖັງ.

**5.)ສາງນ້ຳມັນປາກເຊ:** ສ້າງຕັ້ງຂຶ້ນເມື່ອວັນທີ 25 ສິງຫາ 2014 ເຊິ່ງບໍລິສັດເປັນເຈົ້າຂອງ ແລະ ສ້າງຕັ້ງເອງ ເຊິ່ງຕັ້ງຢູ່ບ້ານ ໂນນຫີນ, ເມືອງ ໂພນທອງ, ແຂວງ ຈຳປາສັກ ມີເນື້ອທີ່ປະມານ 16,568 ຕາແມັດ ມີທັງໝົດ 8 ຖັງ ບັນຈຸນ້ຳມັນໄດ້ທັງໝົດ 640,000 ລິດ ໂດຍແບ່ງອອກເປັນ 2 ປະເພດດັ່ງນີ້:

- ຖັງເກັບນ້ຳມັນແອັດຊັງທຳມະດາ (ULG 91) ຂະໜາດບັນຈຸ 80,000 ລິດ ຈຳນວນ 2 ຖັງ.
- ຖັງເກັບນ້ຳມັນກາຊອນ (Diesel) ຂະໜາດບັນຈຸ 80,000 ລິດ ຈຳນວນ 6 ຖັງ.

ຕາຕະລາງທີ 1.4.7 : ສະຫຼຸບລາຍລະອຽດຂອງສາງນ້ຳມັນ

| ລຳດັບ | ລາຍລະອຽດ | ຫົວໜ່ວຍ | ທີ່ຕັ້ງຂອງສາງນ້ຳມັນ | | | | | ລວມ |
|---|---|---|---|---|---|---|---|---|
| | | | ສາງວຽງຈັນ | ສາງສະຫວັນ | ສາງປາກຊັນ | ສາງເມືອງເງິນ | ສາງປາກເຊ | |
| 1 | **ເນື້ອທີ່** | **ຕາແມັດ** | 9,000 | 6,000 | 19,200 | 7,136 | 16,568 | 120,904 |
| 2 | **ຄວາມສາມາດບັນຈຸ** | ລິດ | 1,120,000 | 800,000 | 350,000 | 700,000 | 640,000 | 3,610,000 |
| | - ນ້ຳມັນແອັດຊັງພິເສດ | ລິດ | 140,000 | 50,000 | - | - | - | 190,000 |
| | - ນ້ຳມັນແອັດຊັງ | ລິດ | 280,000 | 250,000 | 50,000 | 60,000 | 160,000 | 800,000 |
| | - ນ້ຳມັນກາຊອນ | ລິດ | 700,000 | 500,000 | 300,000 | 640,000 | 480,000 | 2,620,000 |
| 3 | **ຈຳນວນຖັງບັນຈຸ** | ຖັງ | 16 | 16 | 12 | 18 | 8 | 70 |
| | - ນ້ຳມັນແອັດຊັງພິເສດ | ຖັງ | 2 | 1 | - | - | - | 3 |
| | - ນ້ຳມັນແອັດຊັງ | ຖັງ | 4 | 5 | 2 | 2 | 2 | 15 |
| | - ນ້ຳມັນກາຊອນ | ຖັງ | 10 | 10 | 10 | 16 | 6 | 52 |

## 1.4.2 ການຕະຫຼາດ ແລະ ພາວະການແຂ່ງຂັນ.

**ການຕະຫຼາດ**

1. **ຜະລິດຕະພັນ (Product)**

ບໍລິສັດເປັນຜູ້ນຳເຂົ້າ ແລະ ຈັດຈຳໜ່າຍນ້ຳມັນເຊື້ອໄຟທີ່ມີຄຸນະພາບໃນ ສປປ ລາວ ເຊິ່ງຜະລິດຕະພັນທີ່ຈັດຈຳໜ່າຍນັ້ນລວມມີ ນ້ຳມັນກາຊອນ, ນ້ຳມັນແອັດຊັງ ແລະ ນ້ຳມັນແອັດຊັງພິເສດ ເຊິ່ງທາງບໍລິສັດມີນະໂຍບາຍແນໃສ່ຄຸນະພາບເປັນຫຼັກເພື່ອທີ່ຈະໃຫ້ການເປັນຜູ້ຈັດຈຳໜ່າຍນ້ຳມັນທີ່ມີຄຸນະພາບໃຫ້ແກ່ປະຊາຊົນໃນທົ່ວປະເທດ ໂດຍທີ່ທາງບໍລິສັດຈະເນັ້ນໜັກເຖິງຄຸນະພາບຂອງຜະລິດຕະພັນນ້ຳມັນເຊື້ອໄຟເປັນຫຼັກ. ໂດຍມີຂະບວນການໃນການຈັດຊື້ ແລະ ຄັດເລືອກຜູ້ສະໜອງນ້ຳມັນໃນຕ່າງປະເທດທີ່ມີຊື່ສຽງ ແລະ ເປັນທີ່ຍອມຮັບໃນລະດັບມາດຕະຖານສາກົນ. ນອກຈາກນີ້ ຍັງມີລະບົບກົນໄກການຄວບຄຸມກວດກາຄຸນະພາບຕະຫຼອດເວລາ ເລີ່ມຕັ້ງແຕ່ການໃຫ້ຜູ້ສະໜອງເປັນຜູ້ກວດສອບຄຸນະພາບຂອງນ້ຳມັນຈາກໜ້າໂຮງກັ່ນກ່ອນດຳເນີນການຂົນສົ່ງ ແລະ ຍັງມີຂະບວນການກວດກາຄຸນະພາບຂອງນ້ຳມັນໜ້າສາງໃນແຕ່ລະສະຖານທີ່, ເຊິ່ງທາງບໍລິສັດຍັງໄດ້ມີການລົງທຶນໃນການສ້າງຫ້ອງທົດລອງເພື່ອປຽບທຽບກັບຄຸນະພາບໜ້າໂຮງກັ່ນ. ນອກຈາກນີ້ ບໍລິສັດຍັງມີຂະບວນການກວດກາສິ່ງປົນເປື້ອນໃນນ້ຳມັນກ່ອນ ທີ່ຈະນຳສົ່ງໄປຍັງສະຖານີບໍລິການນ້ຳມັນຕ່າງໆ. ຂະບວນການເຫຼົ່ານີ້ຈຶ່ງເປັນໄປຕາມນະ�โยบายຂອງບໍລິສັດ ທີ່ແນໃສ່ເພື່ອສົ່ງເສີມໃຫ້ບໍລິສັດສົ່ງມອບ

ນ້ຳມັນທີ່ມີຄຸນະພາບທີ່ດີແກ່ປະຊາຊົນຕະຫຼອດໄປ ເພື່ອໃຫ້ໝັ້ນໃຈວ່າ ນ້ຳມັນໄດ້ຄຸນະພາບກ່ອນການຈັດສົ່ງ ເຖິງລູກຄ້າໃນແຕ່ລະຄັ້ງ ແລະ ທັງເປັນການຮັບປະກັນວ່າລູກຄ້າທີ່ເຂົ້າມາໃຊ້ບໍລິການໃນສະຖານີບໍລິການນ້ຳ ມັນຈະໄດ້ໃຊ້ນ້ຳມັນທີ່ມີຄຸນະພາບ ແລະ ເປັນທຳ.

## 2. ລາຄາຂາຍ ແລະ ຍຸດທະສາດດ້ານລາຄາ (Price)

ບໍລິສັດບໍ່ໄດ້ມີນະ�โยบายໃນການແຂ່ງຂັນດ້ານລາຄາ ເຊິ່ງບໍລິສັດແນໃສ່ການສົ່ງມອບນ້ຳມັນທີ່ມີຄຸ ນະພາບໃຫ້ແກ່ຜູ້ຊົມໃຊ້. ເນື່ອງຈາກທຸລະກິດການຈຳໜ່າຍນ້ຳມັນເຊື້ອໄຟໃນ ສປປ ລາວ ນັ້ນເປັນທຸລະກິດທີ່ ກ່ຽວຂ້ອງກັບຄວາມໝັ້ນຄົງທາງດ້ານຍຸດທະສາດ. ສະນັ້ນ ລັດຖະບານທີ່ຕາງໜ້າໂດຍ ສະມາຄົມ ນ້ຳມັນເຊື້ອ ໄຟ ແລະ ອາຍແກັດ ລາວ ທີ່ຂຶ້ນກັບສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເຊິ່ງປະກອບມີສະມາຊິກທີ່ ເປັນຕົວແທນຈາກຜູ້ຈັດຈຳໜ່າຍນ້ຳມັນເຊື້ອໄຟທຸກພາກສ່ວນ ແລະ ຕົວແທນຈາກທາງພາກລັດຖະບານມາ ຮ່ວມເປັນຄະນະກຳມະການ ແລະ ບໍລິສັດກໍ່ໄດ້ເຂົ້າເປັນສະມາຊິກໃນໜ່ວຍງານດັ່ງກ່າວເຊັ່ນດຽວກັນ. ໃນ ການກຳນົດລາຄາຂາຍໜ້າສະຖານີບໍລິການນ້ຳມັນໃນແຕ່ລະຄັ້ງ, ສະມາຄົມຈະເຂົ້າມາມີບົດບາດເຮັດໜ້າທີ່ເປັນ ຜູ້ກຳນົດລາຄາຂາຍນ້ຳມັນໜ້າສະຖານີໃຫ້ບໍລິສັດທີ່ເປັນຜູ້ຈັດຈຳໜ່າຍໃນທົ່ວປະເທດ ກຳນົດໃຫ້ຂາຍໃນຄາລາ ດຽວກັນກັບທີ່ສະມາຄົມກຳນົດ. ການກຳນົດລາຄາແມ່ນຂຶ້ນ-ລົງຕາມກົນໄກ ແລະ ພາວະອຸດສາຫະກຳນ້ຳມັນ ໃນຕ່າງປະເທດ. ສະນັ້ນ ບໍລິສັດຈຶ່ງບໍ່ມີຍຸດທະສາດສະເພາະດ້ານໃນການກຳນົດລາຄາຂາຍດ້ວຍຕົນເອງ.

## 3. ຊ່ອງທາງການຈັດຈຳໜ່າຍ (Place)

ບໍລິສັດແນໃສ່ການສົ່ງມອບນ້ຳມັນທີ່ມີຄຸນະພາບໃຫ້ປະຊາຊົນໃນທົ່ວ ສປປ ລາວ ໃຫ້ໄດ້ໃຊ້ນ້ຳມັນທີ່ ມີຄຸນະພາບ ບໍ່ວ່າຈະເປັນຕົວເມືອງໃຫຍ່, ຕາມແຄມທາງໃຫຍ່, ໃນຕົວເມືອງນ້ອຍ ຫຼື ຕາມແຄມທາງນ້ອຍ ຜ່ານຮູບແບບສະຖານີບໍລິການນ້ຳມັນທີ່ມີແຈກຢາຍກັນຢູ່ ແລະ ຄວບຄຸມການຈຳໜ່າຍໃນທຸກພື້ນທີ່ ເຊິ່ງຮູບ ແບບຂອງສະຖານີບໍລິການທັງໝົດມີຢູ່ 4 ຮູບແບບຄື: 1. ສະຖານີບໍລິການນ້ຳມັນ ຮູບແບບ ພລັສ ແພັລດຕິນຳ (PTN), 2. ຮູບແບບ ພລັສ ໂກລ (GLD) ເຊິ່ງເປັນຮູບແບບຂອງສະຖານີບໍລິການນ້ຳມັນທີ່ເໝາະສົມກັບ ການໃຊ້ຊີວິດຂອງຄົນໃນຕົວເມືອງໃຫຍ່, 3. ສຳລັບຮູບແບບ ພລັສ ມາດຕະຖານ (STD) ເປັນສະຖານີບໍລິການ ນ້ຳມັນທີ່ຮອງຮັບຕາມເສັ້ນທາງຜ່ານໃນຕົວເມືອງ ຫຼື ຕາມເຂດຕ່າງໆ ແລະ 4. ສຳລັບ ຮູບແບບ ພລັສ ທ້ອງຖິ່ນ ພັດທະນາ (THN) ຈະເປັນການຮອງຮັບການໃຊ້ນ້ຳມັນຕາມເຂດຊົນນະບົດຫ່າງໄກສອກຫຼີກ ໂດຍບໍ່ຈຳເປັນຕ້ອງ ໃຊ້ພື້ນທີ່ຫຼາຍໃນການສ້າງ, ແຕ່ເປັນສະຖານີທີ່ຮອງຮັບຄວາມຕ້ອງການຂອງປະຊາຊົນໃນເຂດພື້ນທີ່ຊົນນະບົດໃຫ້ ສາມາດເຂົ້າເຖິງນ້ຳມັນທີ່ມີຄຸນະພາບ ແລະ ລາຄາຍຸດຕິທຳໂດຍຜ່ານສະຖານີດັ່ງກ່າວ ພ້ອມທັງເປັນການຊຸກຍູ້ ແລະ ພັດທະນາທ້ອງຖິ່ນດັ່ງກ່າວໃຫ້ກາຍມາເປັນເຂດເສດຖະກິດໃນຂົງເຂດນັ້ນໆ ເພື່ອໃຫ້ສອດຄ່ອງຕາມນະ �โยบาย ແລະ ຄຳຂັວນຂອງບໍລິສັດທີ່ວ່າ: '' ພລັສ ພະລັງງານເພື່ອຊາດ ພະລັງງານເພື່ອການພັດທະນາ".

## 4. ຍຸດທະສາດທາງດ້ານການຕະຫຼາດ ແລະ ປະຊາສຳພັນ (Promotion)

ບໍລິສັດໄດ້ມີການປະຊາສຳພັນ ແລະ ໂຄສະນາຜ່ານສື່ຕ່າງໆເພື່ອເປັນການສື່ສານອີກທັງຍັງເປັນການ ໃຫ້ປະຊາຊົນໄດ້ຮັບຊາບ ແລະ ຮູ້ຈັກກັບເຄື່ອງໝາຍການຄ້າ (Brand Awareness) ພ້ອມທັງເປັນການ ສະທ້ອນໃຫ້ເຫັນເຖິງການສິນຄ້າຂອງບໍລິສັດ ລວມໄປເຖິງຄ່ານິຍົມທີ່ມີຕໍ່ສັງຄົມ. ໃນນີ້ ກໍ່ເພື່ອໃຫ້ເຄື່ອງໝາຍ ການຄ້າ ພລັສ (PLUS) ເປັນທີ່ຮູ້ຈັກກັນໃນນາມຜູ້ໃຫ້ບໍລິການດ້ານສະຖານີບໍລິການນ້ຳມັນ. ບໍລິສັດໄດ້ມີການ ເຮັດໂຄສະນາ ແລະ ປະຊາສຳພັນຜ່ານສື່ຕ່າງໆທັງພາຍໃນ ແລະ ຕ່າງປະເທດເຊັ່ນ: ການສ້າງເທບບັນທຶກພາບ

(VTR) ເພື່ອໂຄສະນາຜ່ານສື່ໂທລະພາບ ແລະ ຜ່ານວິທະຍຸ, ພ້ອມທັງການໂຄສະນາປະຊາສຳພັນຜ່ານສື່ອີເລັກໂຕຣນິກ ສັງຄົມອອນລາຍ (Social Media) ຕ່າງໆເຊັ່ນ: ເຟສບຸກ (Facebook) ເປັນຕົ້ນ. ນອກຈາກນີ້ ເຄື່ອງມືທາງສັງຄົມອອນລາຍຍັງເປັນຊ່ອງທາງໃຫ້ບໍລິສັດໄດ້ສົນທະນາສື່ສານກັບບັນດາຜູ້ບໍລິໂພກໄດ້ໂດຍກົງ ຜູ້ບໍລິໂພກກ້າທີ່ຈະສະແດງຄວາມຄິດເຫັນ ແລະ ຂໍ້ຕຳນິຕິຊົມຕ່າງໆ ເຊິ່ງຍຸດທະສາດດັ່ງກ່າວ ບໍລິສັດສາມາດນຳເອົາຄວາມຄິດເຫັນເຫຼົ່ານັ້ນໄປປັບປຸງ ແລະ ປັບໃຊ້ເພື່ອພັດທະນາການບໍລິການຂອງບໍລິສັດໃຫ້ຕອບສະໜອງຄວາມເພິ່ງພໍໃຈຂອງລູກຄ້າໄດ້ສູງສຸດ.

ນອກຈາກນີ້ ບໍລິສັດຍັງເນັ້ນການສ້າງພາບລັກທີ່ດີໃຫ້ກັບສັງຄົມດ້ວຍການສ້າງກິດຈະກຳການຊ່ວຍເຫຼືອປະຊາຊົນຜູ້ດ້ອຍໂອກາດໃນຊົນນະບົດເຊັ່ນ: ການໃຫ້ທຶນການສຶກສາ, ແຈກສິ່ງຂອງຕ່າງໆຕາມລະດູການ ແລະ ກິດຈະກຳອື່ນໆທີ່ເປັນການສ້າງຄຸນຄ່າ (Value) ທີ່ດີໃຫ້ກັບບໍລິສັດ ແລະ ໄດ້ມີການສ້າງກິດຈະກຳດັ່ງກ່າວແບບຕໍ່ເນື່ອງ ແລະ ເປັນປະຈຳ ເຊິ່ງມັນໄດ້ເຮັດໃຫ້ບໍລິສັດໄດ້ເປັນທີ່ຮູ້ຈັກກັນຢ່າງກວ້າງຂວາງໃນທົ່ວປະເທດພາຍໃຕ້ເຄື່ອງໝາຍການຄ້າ "ພລັສ" (PLUS).

**<u>ກຸ່ມລູກຄ້າເປົ້າໝາຍ</u>**

ບໍລິສັດເປັນຜູ້ຈັດຈຳໜ່າຍນ້ຳມັນເຊື້ອໄຟເພື່ອສະໜອງຄວາມຕ້ອງການນ້ຳມັນໃນ ສປປ ລາວ ເຊິ່ງເປັນປັດໄຈທີ່ສຳຄັນໃນການພັດທະນາເສດຖະກິດໃຫ້ຂະຫຍາຍຕົວຢ່າງມີປະສິດທິພາບ. ໃນນີ້ ບໍລິສັດໄດ້ແບ່ງກຸ່ມລູກຄ້າທີ່ສຳຄັນອອກເປັນ 4 ກຸ່ມ ດັ່ງນີ້:

**1. ກຸ່ມລູກຄ້າສະຖານີບໍລິການນ້ຳມັນ:** ການຈຳໜ່າຍນ້ຳມັນຂອງບໍລິສັດແກ່ກຸ່ມລູກຄ້າກຸ່ມນີ້ເປັນການຈັດຈຳໜ່າຍໃຫ້ແກ່ຜູ້ບໍລິໂພກທີ່ມີຄວາມຕ້ອງການໃຊ້ນ້ຳມັນ ເຊິ່ງສ່ວນໃຫຍ່ເປັນພາກເອກະຊົນ ຫຼື ພາກຄົວເຮືອນເປັນສ່ວນໃຫຍ່, ໂດຍຈຳໜ່າຍຜ່ານສະຖານີບໍລິການນ້ຳມັນຂອງບໍລິສັດທີ່ຕັ້ງຢູ່ກະຈາຍທົ່ວ ສປປ ລາວ ມີທັງໝົດ 107 ສະຖານີ ໂດຍຄວບຄຸມທຸກພື້ນທີ່ທັງໃນເຂດຕົວເມືອງໃຫຍ່, ຊຸມຊົນຂະໜາດໃຫຍ່ ແລະ ຕາມເສັ້ນທາງຫຼວງທີ່ສຳຄັນຕ່າງໆ ລວມທັງພື້ນທີ່ຫ່າງໄກສອກຫຼີກ. ລູກຄ້າກຸ່ມນີ້ຖືວ່າເປັນກຸ່ມລູກຄ້າທີ່ສຳຄັນ ແລະ ມີສັດສ່ວນໃນການຊື້ກວມເອົາ 43.24 ສ່ວນຮ້ອຍຂອງປະລິມານການຈຳໜ່າຍນ້ຳມັນເຊື້ອໄຟທັງໝົດໃນປີ 2013 ຂອງບໍລິສັດ. ເຊິ່ງລູກຄ້າທີ່ເຂົ້າມາເຕີມນ້ຳມັນຜ່ານທາງສະຖານີບໍລິການນ້ຳມັນ ແມ່ນຈະພິຈາລະນາຈາກທີ່ຕັ້ງຂອງສະຖານີບໍລິການ, ພາບພົດ ແລະ ສິ່ງອຳນວຍຄວາມສະດວກອື່ນໆພາຍໃນສະຖານນີບໍລິການສົ່ງຜົນໃຫ້ບໍລິສັດສາມາດສ້າງກຸ່ມຜູ້ໃຊ້ນ້ຳມັນຜ່ານຊ່ອງທາງການຈຳໜ່າຍໃນຮູບແບບສະຖານນີບໍລິການນ້ຳມັນໄດ້.

**2. ກຸ່ມລູກຄ້າປະເພດໂຄງການສຳປະທານ ແລະ ກໍ່ສ້າງ:** ກຸ່ມລູກຄ້າເອກະຊົນທີ່ໄດ້ການສຳປະທານໃນການຂຸດຄົ້ນສຳຫຼວດແຮ່ທາດ ຫຼື ບໍລິສັດຮັບເໝົາກໍ່ສ້າງທີ່ໄດ້ຮັບໂຄງການໃນການກໍ່ສ້າງ ເຊິ່ງກຸ່ມລູກຄ້ານີ້ສ່ວນໃຫຍ່ເປັນບໍລິສັດຂະໜາດໃຫຍ່ທີ່ເປັນທີ່ຮູ້ຈັກໃນ ສປປ ລາວ ແລະ/ຫຼື ໃນລະດັບນາໆຊາດທີ່ມີໂຄງການທີ່ຈະຕ້ອງໃຊ້ເຄື່ອງຈັກໃນການດຳເນີນໂຄງການນັ້ນໆ ໂດຍຈະມີຄວາມຕ້ອງການນ້ຳມັນສຳລັບໂຄງການເປັນຈຳນວນຫຼາຍ. ລູກຄ້າກຸ່ມນີ້ຈະພິຈາລະນາເຖິງຄວາມສາມາດໃນການຈັດຫາ ແລະ ສະໜອງນ້ຳມັນເຊື້ອໄຟໃຫ້ແກ່ໂຄງການໃນສະຖານທີ່ຕັ້ງຕ່າງໆໃຫ້ກົງກັບເວລາ ລວມທັງຄຸນະພາບລາຄານ້ຳມັນທີ່ຈັດສົ່ງເພື່ອໄປຊົມໃຊ້ສຳລັບເຄື່ອງຈັກ. ໂດຍບໍລິສັດມີນະໂຍບາຍໃນການຮັກສາສາຍສຳພັນກັບລູກຄ້າເກົ່າທີ່ເຄີຍໃຊ້ບໍລິການ ລວມເຖິງການເພີ່ມຈຳນວນລູກຄ້າໃນກຸ່ມດັ່ງກ່າວ ດ້ວຍມາດຕະຖານຂອງຄຸນະພາບ ແລະ ການບໍລິການທີ່ດີຂອງບໍລິສັດເພື່ອສ້າງຄວາມປະທັບໃຈແກ່ກຸ່ມລູກຄ້າໂຄງການ. ໃນປັດຈຸບັນ ກຸ່ມລູກຄ້າໂຄງການກວມເອົາ 28.57 ສ່ວນຮ້ອຍຂອງຍອດການຈາໜ່າຍນ້ຳມັນເຊື້ອໄຟຂອງບໍລິສັດ, ຄວາມຕ້ອງການໃຊ້ນ້ຳມັນຂອງລູກຄ້າໃນກຸ່ມນີ້ຈະມີໄລຍະເວລາກຳນົດບໍ່ເກີນອາຍຸຂອງໂຄງການ ເຊິ່ງຄວາມຕ້ອງການໃຊ້ນ້ຳມັນກຸ່ມນີ້ມັກຈະມີ

ຄວາມຜັນຜວນຂຶ້ນຢູ່ກັບໂຄງການຂອງລັດຖະບານ ແລະ ອາຍຸສຳປະທານຕ່າງໆ. ລູກຄ້າທີ່ສຳຄັນຂອງກຸ່ມນີ້ມີຄື: ບໍລິສັດ ຊ.ການຊ່າງ ຈຳກັດ (ມະຫາຊົນ), ບໍລິສັດ ພອນສັກ ກຣຸບ ຈາກັດ, ບໍລິສັດ ຊິໂນໄຮໂດຣ ຈຳກັດ, ບໍລິສັດ obayashi ຈຳກັດ, ບໍລິສັດ ພັດທະນານະຄອນຫຼວງວຽງຈັນສີຫາລາດແຮ່ທາດ ຈຳກັດ ເປັນຕົ້ນ.

ຮູບທີ 1.4.10 : ກຸ່ມລູກຄ້າຫຼັກຂອງບໍລິສັດທີ່ເປັນກຸ່ມລູກຄ້າປະເພດໂຄງການ

**3. ກຸ່ມລູກຄ້າອຸດສາຫະກຳ**: ກຸ່ມລູກຄ້າອຸດສາຫະກຳສ່ວນໃຫຍ່ເປັນບໍລິສັດທີ່ນຳໃຊ້ນ້ຳມັນເຂົ້າໃນພາກການຜະລິດເປັນຫຼັກ ໂດຍມີທັງບໍລິສັດຂອງຄົນລາວ ແລະ ຈາກຕ່າງປະເທດທີ່ປະກອບທຸລະກິດໃນ ສປປ ລາວ ເຊິ່ງລູກຄ້າທີ່ສຳຄັນມີຄື: ບໍລິສັດ ພູເບ້ຍມາຍນິ່ງ ຈຳກັດ ເປັນຕົ້ນ. ການຈຳໜ່າຍນ້ຳມັນໃຫ້ແກ່ກຸ່ມນີ້ແມ່ນກວມເອົາ 13.89 ສ່ວນຮ້ອຍ ໂດຍລູກຄ້າກຸ່ມອຸດສາຫະກຳຖືວ່າເປັນກຸ່ມທີ່ມີຄວາມຕ້ອງການນ້ຳມັນຂ້ອນຂ້າງມີສະຖຽນລະພາບດີ, ບໍ່ຜັນຜວນປານໃດ. ເນື່ອງຈາກກຸ່ມລູກຄ້າດັ່ງກ່າວ ຈຳເປັນຕ້ອງໃຊ້ນ້ຳມັນເຊື້ອໄຟສຳລັບເຄື່ອງຈັກທີ່ມີການຜະລິດຢ່າງຕໍ່ເນື່ອງຕະຫຼອດປີ.

ຮູບທີ 1.4.11: ກຸ່ມລູກຄ້າຫຼັກຂອງບໍລິສັດທີ່ເປັນກຸ່ມລູກຄ້າປະເພດອຸດສາຫະກຳ

**4. ກຸ່ມລູກຄ້າຂົນສົ່ງທົ່ວໄປ ແລະ ກຸ່ມລູກຄ້າອື່ນ:** ກຸ່ມນີ້ຈະເປັນກຸ່ມຜູ້ປະກອບການໃນພາກທຸລະກິດຂົນສົ່ງ ກວມເອົາອັດຕາສ່ວນ 5.94 ສ່ວນຮ້ອຍ, ເປັນຜູ້ປະກອບການໃນສ່ວນຂອງທຸລະກິດທີ່ຈະຕ້ອງໃຊ້ລົດໃນການຂົນສົ່ງສິນຄ້າ ແລະ ປະຊາຊົນ. ລູກຄ້າໃນກຸ່ມນີ້ມີຄວາມຕ້ອງການໃຊ້ນ້ຳມັນຂຶ້ນຢູ່ກັບປະລິມານຂອງການຂົນສົ່ງ ແລະ ຂະຫຍາຍຕົວຂອງເສດຖະກິດ ເຊິ່ງມີຄວາມຕ້ອງການໃຊ້ນ້ຳມັນໃນໄລຍະຍາວ ແລະ ອາດປ່ຽນແປງໄປຕາມຊ່ວງລະດູການ. ນອກຈາກນີ້ກຸ່ມລູກຄ້າອື່ນໆຂອງບໍລິສັດຄື ຜູ້ຂາຍສົ່ງນ້ຳມັນ (jobber) ທີ່ຊື້ນ້ຳມັນຈາກທາງບໍລິສັດໃນລາຄາສົ່ງ ແລະ ນຳໄປຈຳໜ່າຍໃຫ້ແກ່ຜູ້ໃຫ້ບໍລິການຂະໜາດນ້ອຍໃນເຂດພື້ນທີ່ຕ່າງໆກວມເອົາ 8.87 ສ່ວຍຮ້ອຍ ລູກຄ້າຂອງບໍລິສັດໃນກຸ່ມນີ້ລວມມີ: ບໍລິສັດ ຈິດປະສົງ ໂດຍສານ ຈຳກັດ ເປັນຕົ້ນ.

ຮູບທີ 1.4.12 : ກຸ່ມລູກຄ້າປະເພດຂົນສົ່ງທົ່ວໄປ ແລະ ກຸ່ມລູກຄ້າທົ່ວໄປ

ຮູບທີ 1.4.13 : ອັດຕາສ່ວນການຈຳໜ່າຍນ້ຳມັນຂອງບໍລິສັດຈຳແນກຕາມລູກຄ້າປະຈຳປີ 2013




ໝາຍເຫດ: ອັດຕາສ່ວນການຈຳໜ່າຍແຍກຕາມກຸ່ມລູກຄ້າໃນປີ 2013 ຍັງບໍ່ໄດ້ລວມສ່ວນຫຼຸດສິນຄ້າໃນສັດສ່ວນ 0.54 ສ່ວນຮ້ອຍ ຂອງລາຍໄດ້ລວມສຸດທິ

ໃນອະນາຄົດ ບໍລິສັດມີແຜນທີ່ຈະຂະຫຍາຍກຸ່ມລູກຄ້າເປົ້າໝາຍໄປຍັງຕ່າງປະເທດເພື່ອຂະຫຍາຍຖານລູກຄ້າທີ່ມີຊາຍແດນຕິດກັບປະເທດເພື່ອນບ້ານຂອງ ສປປ ລາວ ເຊັ່ນ: ສປ ຈີນ, ຣາດຊະອານາຈັກກຳປູເຈຍ ແລະ ມຽນມາ.

## 1.4.3 ສະພາບອຸດສາຫະກຳ ແລະ ການແຂ່ງຂັນ.

**ສະພາບອຸດສາຫະກຳນ້ຳມັນໃນ ສປປ ລາວ**

ສປປ ລາວ ເປັນປະເທດທີ່ບໍ່ມີຊາຍແດນອອກສູ່ທະເລ ແຕ່ມີຊາຍແດນຕິດກັບ 5 ປະເທດເພື່ອນບ້ານ. ສະນັ້ນ ລັດຖະບານຈຶ່ງໄດ້ມີນະໂຍບາຍຜັນຂະຫຍາຍປ່ຽນຈາກປະເທດທີ່ບໍ່ມີທະເລໃນການຈໍລະຈອນສິນຄ້າກາຍເປັນປະເທດຍຸດທະສາດການເຊື່ອມໂຍງກັບອານຸພາກພື້ນ ແລະ ບໍລິການຜ່ານແດນ (Land-locked to Land linked). ດ້ວຍນະໂຍບາຍດັ່ງກ່າວ ຈຶ່ງເຮັດໃຫ້ລັດຖະບານຈັດສັນງົບປະມານມະຫາສານເພື່ອເລັ່ງປັບປຸງ ແລະ ພັດທະນາລະບົບໂຄງລ່າງພື້ນຖານອັນຈຳເປັນສະເພາະທີ່ເປັນການເຊື່ອມໂຍງກັບບັນດາປະເທດອ້ອມຂ້າງເຊັ່ນ: ຖະໜົນຫົນທາງ, ສາທາລະນຸປະໂພກ ລວມໄປເຖິງລະບົບສື່ສານໂທລະຄົມມະນາຄົມເພື່ອຮອງຮັບການເຂົ້າເປັນປະຊາຄົມອາຊຽນ (AEC) ໃນທ້າຍປີ 2015.

ສະພາບເສດຖະກິດໂດຍລວມນັບແຕ່ປີ 2011 ເປັນຕົ້ນມາ ເຫັນວ່າມີການຫຼຸດລົງຂອງຕົວເລກຍອດລວມກວມເອົາຜະລິດຕະພັນພາຍໃນ (GDP) ເຊິ່ງຕົວເລກສະແດງໃນປີ 2011, 2012 ແລະ 2013 ຄິດເປັນສັດສ່ວນເທົ່າກັບ 8.04 ສ່ວນຮ້ອຍ, 7.93 ສ່ວນຮ້ອຍ ແລະ 7.95 ສ່ວນຮ້ອຍ ຕາມລຳດັບ (ຂໍ້ມູນຈາກ ບົດລາຍງານເສດຖະກິດປີ 2013 ຂອງທະນາຄານແຫ່ງ ສປປ ລາວ). ໃນໄລຍະຜ່ານມາຕົວເລກດັ່ງກ່າວ ອາດຈະມີການເພີ່ມຂຶ້ນ ແລະ ຂະຫຍາຍຕົວບໍ່ຕ່ຳກວ່າ 7.9 ສ່ວນຮ້ອຍ ຕາມການຄາດຄະເນຂອງທະນາຄານ ພັດທະນາອາຊີ (ADB) ດັ່ງຕາຕະລາງດັ່ງຕໍ່ໄປນີ້:

ຕາຕະລາງທີ 1.4.8: ຕາຕະລາງສະຫຼຸບຕົວເລກ GDP ຂອງ ປີ 2012 ແລະ 2013

| ໜ່ວຍງານປະເມີນ | ປີ 2012 | ປີ 2013 |
|---|---|---|
| 1. / ADB's Asian Development Bank | 7.6 | 7.7 |
| 2. / EIU's Economist Intelligence Unit | 8.3 | 8.5 |
| 3. / IMF's International Monetary Fund. | 8.3 | 7.8 |
| 4. / World Bank | 8.0 | 7.7 |
| **ຄ່າສະເລ່ຍ (%)** | **8.10** | **7.9** |

ແຫຼ່ງທີ່ມາ : ADB's Asian Development Outlook, October 2013, EIU's Country Report, December 2013, UNCTAD, and World Bank's East Asia and Pacific Economic Update, October 2013

ພາກເສດຖະກິດໂດຍລວມຂອງ ສປປ ລາວ ໃນການຊຸກຍູ້ໃຫ້ອຸດສາຫະກຳນ້ຳມັນໃນ ສປປ ລາວ ມີການຂະຫຍາຍຕົວໃນໄລຍະຜ່ານມາ ແລະ ມີແນວโน้มທີ່ດີຂຶ້ນ ແມ່ນມີສາເຫດມາຈາກການບໍລິໂພກພາກເອກະຊົນ, ການທ່ອງທ່ຽວ ແລະ ການລົງທຶນໃສ່ການກໍ່ສ້າງໂຄງລ່າງພື້ນຖານ ໂດຍສະເພາະຂະແໜງການກໍ່ສ້າງເຂື່ອນໄຟຟ້າ, ກໍ່ສ້າງຖະໜົນຫົນທາງ ແລະ ການກໍ່ສ້າງໃນໂຄງການສຳປະທານ (ເຂດເສດຖະກິດພິເສດ) ຕ່າງໆຈາກຕ່າງປະເທດ ແລະ ອີກສ່ວນໜຶ່ງມາຈາກຂະແໜງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດຕ່າງໆ ເຊິ່ງທັງໝົດນີ້ນອກຈາກຈະເຮັດໃຫ້ຍອດລວມຜະລິດຕະພັນພາຍໃນ (GDP) ມີການຂະຫຍາຍຕົວບໍ່ຕ່ຳກວ່າ 7.9 ສ່ວນຮ້ອຍ ແລ້ວຍັງສົ່ງຜົນໃຫ້ການຊົມໃຊ້ນ້ຳມັນນັບມື້ນັບສູງຂຶ້ນເລື້ອຍໆ ແລະ ຄາດວ່າຈະມີການຊົມໃຊ້ນ້ຳມັນນັບຈາກປີ 2015 ຫາ 2020 ລວມທັງໝົດບໍ່ຕ່ຳກວ່າ 3.9 ພັນລ້ານລິດຕໍ່ປີ ແລະ ເພີ່ມຂຶ້ນສະເລ່ຍບໍ່ຕ່ຳກວ່າ 23 ສ່ວນຮ້ອຍຕໍ່ປີ. ໂດຍໃນໄລຍະຜ່ານມາລັດຖະບານໄດ້ມີນະ�โยบายຊຸກຍູ້ໃນພາກສ່ວນດັ່ງກ່າວນີ້ໃຫ້ເປັນຕົວຂັບເຄື່ອນໃນການພັດທະນາເສດຖະກິດ-ສັງຄົມໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ມີສະຖຽນລະພາບໄລຍະຍາວ.

ຄຽງຄູ່ກັນນັ້ນການຂະຫຍາຍຕົວຂອງພາກອຸດສາຫະກຳດັ່ງກ່າວຍັງສົ່ງຜົນທີ່ດີໃຫ້ຂະແໜງການສະໜອງນ້ຳມັນເຊື້ອໄຟມີການຈະເລີນເຕີບโตไปໃນທິດທາງດຽວກັນ. ເພາະນ້ຳມັນເຊື້ອໄຟເປັນປັດໄຈຫຼັກ ແລະ ສຳຄັນທີ່ສຸດທີ່ໃຊ້ເປັນພະລັງງານເຂົ້າໃນການຊ່ວຍຂັບເຄື່ອນຕາມຄວາມຕ້ອງການຊົມໃຊ້ເພື່ອການພັດທະນາ ແລະ ມີແນວโน้มจะเพิ่มขึ้นไປເລື້ອຍໆຕາມບາດກ້າວການພັດທະນາເສດຖະກິດ-ສັງຄົມຂອງລັດຖະບານໃນຊ່ວງໄລຍະເວລາ 5 ປີຈົນເຖິງປີ 2020.

ດ້ວຍເຫດຜົນດັ່ງກ່າວຈຶ່ງເຮັດໃຫ້ ສປປ ລາວ ມີຄວາມຕ້ອງການນຳໃຊ້ພະລັງງານໃນການຂັບເຄື່ອນເສດຖະກິດ ໂດຍສະເພາະນ້ຳມັນເປັນຈຳນວນຫຼາຍເພື່ອພັດທະນາໂຄງລ່າງພື້ນຖານ. ໄລຍະຜ່ານມາ ສປປ ລາວ ມີຈຳນວນຕົວເລກການນຳເຂົ້ານ້ຳມັນເປັນຈຳນວນຫຼາຍພໍສົມຄວນເພື່ອຕອບສະໜອງຄວາມຕ້ອງການໃນການພັດທະນາເສດຖະກິດດັ່ງຕົວເລກທີ່ສະແດງອອກດັ່ງນີ້: ໃນປີ 2011 ນຳເຂົ້າ 738 ລ້ານລິດ, ປີ 2012 ນຳເຂົ້າ 924 ລ້ານລິດ ແລະ ປີ 2013 ນຳເຂົ້າ 1,321 ລ້ານລິດ ເພີ່ມຂຶ້ນ 8 ສ່ວນຮ້ອຍ, 25 ສ່ວນຮ້ອຍ ແລະ 42 ສ່ວນຮ້ອຍຕາມລຳດັບ.

ຕາຕະລາງທີ 1.4.9: ຕາຕະລາງສະແດງການນຳໃຊ້ນ້ຳມັນເຊື້ອໄຟໃນ ສປປ ລາວ

| ປະເພດນ້ຳມັນ | ປີ 2011 | ປີ 2012 | ປີ 2013 |
|---|---|---|---|
| **ນ້ຳມັນແອັດຊັງພິເສດ** | 1,080,005 | 200,000 | 286,000 |
| **ນ້ຳມັນແອັດຊັງທຳມະດາ** | 165,417,444 | 249,303,808 | 356,504,445 |

| ປະເພດນ້ຳມັນ | ປີ 2011 | ປີ 2012 | ປີ 2013 |
|---|---|---|---|
| **ນ້ຳມັນກາຊວນ** | 554,215,225 | 663,151,889 | 948,307,216 |
| **ນ້ຳມັນຍົນ** | 17,823,405 | 11,633,270 | 16,635,576 |
| **ລວມທັງໝົດ** | **738,536,079** | **924,288,967** | **1,321,733,237** |

ແຫຼ່ງຂໍ້ມູນ: ສະຖິຕິຈາກກົມນຳ ເຂົ້າສົ່ງ-ອອກ, ສະບັບເລກທີ 2237/ກອດ.ບອດ, ລົງວັນທີ 05/04/2013 ກະຊວງອຸດສາຫະກຳ-ການຄ້າ.

ເພື່ອຮອງຮັບການຂະຫຍາຍຕົວທາງດ້ານເສດຖະກິດຢ່າງມີສະຖຽນລະພາບ ແລະ ຕອບສະໜອງທາງດ້ານພະລັງງານເຊື້ອໄຟໃຫ້ພຽງພໍຕາມຄວາມຕ້ອງການ. ປັດຈຸບັນ ລັດຖະບານລາວໄດ້ອະນຸຍາດສ້າງຕັ້ງບໍລິສັດ ນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ ເພື່ອເປັນການສົ່ງເສີມທາງດ້ານເງື່ອນໄຂ ແລະ ຄວາມພ້ອມໃຫ້ກັບບັນດາຜູ້ທີ່ມີຄວາມສົນໃຈ ແລະ ຕ້ອງການຢາກຈະລົງທຶນໃນຂະແໜງການນຳເຂົ້າ ແລະ ຈຳໜ່າຍນ້ຳມັນເຊື້ອໄຟຕາມລະບຽບ ແລະ ກົດໝາຍຂອງ ສປປ ລາວ ເຊິ່ງນະ�โນບາຍດັ່ງກ່າວ ໃນປັດຈຸບັນ ໄດ້ມີຕົວເລກການລົງທຶນໃນທຸລະກິດດັ່ງກ່າວລວມ 16 ບໍລິສັດໃນປີ 2013 ທີ່ໄດ້ຈົດທະບຽນດັ່ງນີ້:

ຕາຕະລາງທີ 1.4.10: ປະເພດຂອງຜູ້ຈັດຈຳໜ່າຍນ້ຳມັນໃນ ສປປ ລາວ

| ລຳດັບ | ປະເພດຂອງບໍລິສັດ | ຈຳນວນ |
|---|---|---|
| 1 | ບໍລິສັດທີ່ນຳເຂົ້າ ແລະ ຈັດຈຳໜ່າຍອາຍແກັດມີ | 6 |
| 2 | ບໍລິສັດທີ່ເປັນບໍລິສັດຂອງລັດ 100 ສ່ວນຮ້ອຍ | 3 |
| 3 | ບໍລິສັດຮ່ວມທຶນ | 2 |
| 4 | ບໍລິສັດຂອງຕ່າງປະເທດ | 3 |
| 5 | ບໍລິສັດທີ່ເປັນຂອງເອກະຊົນລາວ | 2 |

ຜະລິດຕະພັນທີ່ນຳເຂົ້າໃນປີ 2013 ປະກອບມີ: ນ້ຳມັນກາຊວນ 71 ສ່ວນຮ້ອຍ, ນ້ຳມັນແອັດຊັງທຳມະດາ 24 ສ່ວນຮ້ອຍ, ນ້ຳມັນກາດ 4 ສ່ວນຮ້ອຍ, ນ້ຳມັນເຕົາ 0.8 ສ່ວນຮ້ອຍ, ນ້ຳມັນເຄື່ອງ 0.1 ສ່ວນຮ້ອຍ ແລະ ນ້ຳມັນແອັດຊັງພິເສດ 0.1 ສ່ວນຮ້ອຍ. ໃນປັດຈຸບັນ ສປປ ລາວ ມີສະຖານີບໍລິການນ້ຳມັນລວມທັງໝົດ 1,076 ປ້ຳທົ່ວປະເທດ, ມີຂະໜາດບັນຈຸ 31,865 ແມັດກ້ອນ, ສະເລ່ຍຕໍ່ປະຊາກອນ 6,174 ຄົນ/ສະຖານີ, ພາຫະນະ 136 ຄັນ/ສະຖານີ (ລົດເບົາ-ລົດບັນທຸກ 38 ຄັນ/ສະຖານີ).

ຮູບທີ 1.4.14 : ສະແດງການໃຊ້ນ້ຳມັນໂດຍແຍກຕາມຜະລິດຕະພັນ




ແຫຼ່ງຂໍ້ມູນ: ສະຖິຕິຈາກກົມນຳ ເຂົ້າສົ່ງ-ອອກ, ສະບັບເລກທີ 2237/ກອດ.ບອດ, ລົງວັນທີ 05/04/2013 ກະຊວງອຸດສາຫະກຳ-ການຄ້າ.

### 1.6.4 ແນວໂນ້ມ ແລະ ຕົວແປທີ່ສຳຄັນ

ໂດຍປັດໃຈພື້ນຖານໃນການຊຸກຍູ້ໃຫ້ຕົວເລກຍອດຂາຍນ້ຳມັນຂອງບໍລິສັດມີການຈະເລີນເຕີບໂຕ ສ່ວນໃຫຍ່ກໍ່ຍັງແມ່ນພາກສ່ວນການຊົມໃຊ້ຂອງພາຍໃນລວມມີ ການຊົມໃຊ້ນ້ຳມັນຈາກພາກຄົວເຮືອນ (ພາຫະນະ), ຂະແໜງອຸດສາຫະກຳກໍ່ສ້າງ ແລະ ການຜະລິດທີ່ສົ່ງຜົນໃຫ້ຍອດຂາຍເພີ່ມຂຶ້ນ ແລະ ມີແນວໂນ້ວທີ່ຈະຂະຫຍາຍຕົວໄປເລື້ອຍໆ ຕາມກົນໄກເສດຖະກິດທີ່ມີການພັດທະນາເຊັ່ນ: ການເປີດປະຊາຄົມເສດຖະກິດອາຊຽນ (AEC) ແລະ ນະ�โยบายຂອງພາກລັດຖະບານຕໍ່ກັບການພັດທະນາພື້ນຖານໂຄງລ່າງ ສປປ ລາວຈົນເຖິງປີ 2020 ເພື່ອເຮັດໃຫ້ປະເທດລາວ ກາຍເປັນປະເທດທີ່ຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ.

ສະນັ້ນ, ຕົວແປທີ່ສຳຄັນໃນການຊີ້ວັດຍອດຂາຍຂອງບໍລິສັດຈຶ່ງມາຈາກແຜນຍຸດທະສາດພັດທະນາ ເສດຖະກິດ-ສັງຄົມຂອງລັດຖະບານເຊິ່ງປະກອບມີປັດໄຈທີ່ສຳຄັນດັ່ງນີ້:

- ການເພີ່ມຂຶ້ນຂອງປະຊາກອນ ແລະ ພາຫະນະ.
- ແຜນການສ້າງເຂດເສດຖະກິດພິເສດ 2020-2033,ຈຳນວນ 9 ໂຄງການທີ່ລັດຖະບານໄດ້ອະນຸມັດມີເນື້ອທີ່ ລວມ 11,000 ເຮັກຕາ, ໄລຍະເວລາສຳປະທານ 50-99 ປີ.

ຮູບທີ 1.4.15 : ເຂດເສດຖະກິດພິເສດທີ່ລັດຖະບານໄດ້ອະນຸມັດ

- ແຜນການສ້າງເຂື່ອນ ແລະ ພະລັງງານໄຟຟ້າ 2013-2020 ມີ 30 ໂຄງການ. ໃນນັ້ນປີ 2014 ມີ 4 ໂຄງການ, ປີ 2015 ມີ 11 ໂຄງການ, ປີ 2016 ມີ 5 ໂຄງການ, ປີ 2017 ມີ 5 ໂຄງການ, ປີ 2018 ມີ 1 ໂຄງການ, ປີ 2019 ມີ 1 ໂຄງການ ແລະ ປີ 2020 ມີ 3 ໂຄງການ. ເຊິ່ງມີກຳລັງການຜະລິດທັງໝົດ 29,597.3 Gwh ໄລຍະເວລາສຳປະທານ 50-99 ປີ.

ຮູບທີ 1.4.16 : ຈຳນວນເຂື່ອນໄຟຟ້າທັງໝົດທີ່ມີກຳລັງການຜະລິດ 29,597.3 Gwh




- ➢ ແຜນການຊອກຄົ້ນ ແລະ ສຳຫຼວດແຮ່ທາດ 2013-2020 ມີ 50 ໂຄງການ ມີເນື້ອທີ່ສຳປະທານ 13,000 ເຮັກຕາ ໄລຍະເວລາສຳປະທານ 20-50 ປີ.
- ➢ ແຜນການຍົກລະດັບ ແລະ ກໍ່ສ້າງເສັ້ນທາງ 2013-2020 ຢ່າງໜ້ອຍ 15 ໂຄງການ ທີ່ມີໄລຍະທາງ 3,494 ກິໂລແມັດ ແຕ່ເໜືອເຖິງໃຕ້.

ຮູບທີ 1.4.17 : ແຜນການປັບປຸງ ແລະ ຍົກລະດັບເສັ້ນທາງແຕ່ເໜືອເຖິງໃຕ້



➢ ແຜນການສ້າງທາງລົດໄຟຟ້າຄວາມໄວສູງ ແຕ່ຈຸດຊາຍແດນລາວ-ຈີນມາເຖິງນະຄອນຫຼວງວຽງຈັນ ເຊິ່ງມີໄລຍະທາງທັງໝົດປະມານ 421 ກິໂລແມັດ, ມີ 5 ສະຖານີໃຫຍ່ຄື: ສະຖານີ ບໍ່ເຕັນ, ເມືອງໄຊ, ຫຼວງພະບາງ, ວັງວຽງ ແລະ ນະຄອນຫຼວງວຽງຈັນ. ນອກຈາກນີ້ ຍັງມີສະຖານີຍ່ອຍອີກລວມທັງໝົດ 21 ສະຖານີ.

ປັດໄຈທັງໝົດທີ່ໄດ້ກ່າວມາຂ້າງເທິງນັ້ນ ລ້ວນແຕ່ເປັນປັດໄຈທີ່ສຳຄັນໃນການເຮັດໃຫ້ມີການເຕີບໂຕຕາມແຜນພັດທະນາເສດຖະກິດ-ສັງຄົມໄລຍະເວລາ 5 ປີ ຂອງພາກລັດຖະບານນັບຈາກປີ 2015-2020. ເນື່ອງຈາກເປັນໄລຍະ

ການປັບປຸງ ແລະ ພັດທະນາການກໍ່ສ້າງພື້ນຖານໂຄງລ່າງ ຂອງ ສປປ ລາວ ເພື່ອກຽມຄວາມພ້ອມເຂົ້າສູ່ປະຊາຄົມເສດຖະກິດອາຊຽນ (AEC). ສະນັ້ນ ຈາກປັດໄຈດັ່ງກ່າວ ຈຶ່ງເປັນຜົນດີເຮັດໃຫ້ການຊົມໃຊ້ນ້ຳມັນມີແນວໂນ້ມທີ່ດີຂຶ້ນໃນການຈະເລີນເຕີບໂຕຕໍ່ໄປໃນອະນາຄົດ ແລະ ຄາດວ່າຈະມີຍອດການໃຊ້ນ້ຳມັນສູງເຖິງ 3,920 ລ້ານລິດ ໃນປີ 2020 ຕາມຕາຕະລາງດັ່ງນີ້:

ຕາຕະລາງທີ 1.4.11 : ຄາດຄະເນຄວາມຕ້ອງການໃຊ້ນ້ຳມັນແຕ່ປີ 2015 - 2020

ຫົວໜ່ວຍ: ລິດ

| ປະເພດນ້ຳມັນ | ປີ 2015 | ປີ 2016 | ປີ 2017 | ປີ 2018 | ປີ 2019 | ປີ 2020 |
|---|---|---|---|---|---|---|
| **ນ້ຳມັນແອັດຊັງພິເສດ** | 368,368 | 427,307 | 512,768 | 630,705 | 744,232 | 848,424 |
| **ນ້ຳມັນແອັດຊັງທຳມະດາ** | 459,177,726 | 532,646,162 | 639,175,394 | 786,185,735 | 927,699,167 | 1,057,577,051 |
| **ນ້ຳມັນກາຊວນ** | 1,221,419,694 | 1,416,846,845 | 1,700,216,214 | 2,091,265,943 | 2,467,693,812 | 2,813,170,946 |
| **ນ້ຳມັນຍົນ** | 21,426,622 | 24,854,882 | 29,825,858 | 36,685,805 | 43,289,250 | 49,349,745 |
| **ລວມທັງໝົດ** | **1,702,392,409** | **1,974,775,195** | **2,369,730,234** | **2,914768,188** | **3,439,426,461** | **3,920,946,166** |

### 1.6.5 ການແຂ່ງຂັນ

ໃນປັດຈຸບັນ ຮູບແບບການດຳເນີນທຸລະກິດໃນຂະແໜງການນ້ຳມັນໄດ້ມີການປ່ຽນແປງ ໄປຕາມຮູບແບບທີ່ມີການແຂ່ງຂັນດ້ວຍຫຼາຍວິທີເພື່ອໃຫ້ເຂົ້າເຖິງຜູ້ຊົມໃຊ້ ເຊິ່ງຫຼາຍບໍລິສັດກໍ່ມີການນຳໃຊ້ຍຸດທະສາດທີ່ແຕກຕ່າງກັນເພື່ອດຶງດູດໃຈລູກຄ້າເຊັ່ນ: ແຈກ, ແຖມ. ການເພີ່ມບໍລິການພາຍໃນສະຖານີບໍລິການ ແລະ ໃຫ້ຄ່າການຕະຫຼາດສູງຂຶ້ນເພື່ອຍາດແຍ່ງລູກຄ້າ ແລະ ທັງເປັນການຮັກສາສ່ວນແບ່ງທາງການຕະຫຼາດຂອງບໍລິສັດ.

**<u>ການປະເມີນຄູ່ແຂ່ງຂັນໃນພາກອຸດສາຫະກຳ</u>**

ພາຍຫຼັງທີ່ລັດຖະບານແຫ່ງ ສປປ ລາວ ໄດ້ເປີດກວ້າງໃຫ້ມີການດຳເນີນທຸລະກິດ ໂດຍສະເພາະນ້ຳມັນເຊື້ອໄຟ, ບໍ່ພໍເທົ່າໃດປີກໍ່ເກີດມີບໍລິສັດເຊື້ອໄຟທັງໝົດ 16 ບໍລິສັດໃນປີ 2013. ຈາກການດຳເນີນທຸລະກິດຜ່ານມາສາມາດຈັດປະເພດກຸ່ມບໍລິສັດທີ່ດຳເນີນທຸລະກິດນ້ຳມັນເຊື້ອໄຟໂດຍອີງຕາມຄຸນນະພາບສິນຄ້າ, ຍຸດທະສາດທາງການຕະຫຼາດ, ຮູບແບບການບໍລິຫານທີ່ເປັນມາດຕະຖານ, ຄວາມຫຼາກຫຼາຍຂອງຫົວໜ່ວຍທຸລະກິດ ແລະ ປະລິມານຍອດຂາຍ ເຊິ່ງສາມາດແບ່ງກຸ່ມທຸລະກິດນ້ຳມັນອອກເປັນ 3 ກຸ່ມດັ່ງນີ້:

**<u>ກຸ່ມບໍລິສັດທີ່ມີຍອດຂາຍຫຼາຍເປັນອັນດັບຕົ້ນໆມີ 5 ບໍລິສັດຄື:</u>**

❶ລັດວິສາຫະກິດ ນ້ຳມັນເຊື້ອໄຟລາວ
❷ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ
❸ບໍລິສັດ ປຕທ ລາວ ຈຳກັດ
❹ບໍລິສັດ PV Oil ຈາກັດ
❺ບໍລິສັດ ປິໂຕຣລິແມັກ ຈຳກັດ.

**<u>ກຸ່ມບໍລິສັດທີ່ມີຍອດຂາຍຮອງລົງມາຈາກອັນດັບຕົ້ນມີ 2 ບໍລິສັດຄື:</u>**

❶ບໍລິສັດ ເຊື້ອໄຟລາວໃໝ່
❷ບໍລິສັດເຊື້ອໄຟ ເມືອງຫຼວງ

**<u>ກຸ່ມບໍລິສັດທີ່ມີຍອດຂາຍໃນລະດັບກາງເຊິ່ງລວມມີ 9 ບໍລິສັດຄື:</u>**

❶ບໍລິສັດ ດາລາຈະເລີນ
❷ບໍລິສັດ ໂລປີໂຕຣລ້ຽມ
❸ບໍລິສັດ ນ້ຳມັນເຊື້ອໄຟ ເອເຊຍ
❹ບໍລິສັດ ນ້ຳມັນ ເຊື້ອໄຟ ລ້ານຊ້າງ
❺ບໍລິສັດ Imperial Petroleum
❻ບໍລິສັດ ພະລັງງານ ບົວສະຫວັນ
❼ບໍລິສັດ ນ້ຳມັນເຊື້ອໄຟ ເພັດສະໄໝ
❽ລັດວິສາຫະກິດ ນ້ຳມັນເຊື້ອໄຟ ວຽງຈັນ
❾ລັດວິສາຫະກິດ ນ້ຳມັນເຊື້ອໄຟ ດາຟີ.

ຕາຕະລາງທີ 1.4.12: ສັດສ່ວນການຂາຍຂອງບໍລິສັດນ້ຳມັນ 16 ບໍລິສັດໃນ ສປປ ລາວ

| UNIT: LITRE | | 2008'S PERFORMANCE | | | 2009'S PERFORMANCE | | | 2010'S PERFORMANCE | | | 2011'S PERFORMANCE | | | 2012'S PERFORMANCE | | | 2013'S PERFORMANCE | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| NO. | COMPANY'S NAME | TOTAL SALES | % SHARE | RANK | TOTAL SALES | % SHARE | RANK | TOTAL SALES | % SHARE | RANK | TOTAL SALES | % SHARE | RANK | TOTAL SALES | % SHARE | RANK | TOTAL SALES | % SHARE | RANK |
| 1 | LSFC | 180,000,000 | 34.1% | 1 | 228,400,000 | 36.7% | 1 | 243,401,000 | 31.5% | 1 | 229,078,000 | 31.3% | 1 | 244,818,000 | 30.6% | 1 | 248,000,000 | 27.4% | 1 |
| 2 | PETROTRADE | 3,100,000 | 0.6% | 12 | 27,500,000 | 4.4% | 7 | 58,000,000 | 7.5% | 5 | 98,000,000 | 13.4% | 2 | 118,000,000 | 14.7% | 2 | 124,600,000 | 13.7% | 2 |
| 3 | PTTL | 45,800,000 | 8.7% | 3 | 36,480,000 | 5.9% | 6 | 45,170,000 | 5.8% | 6 | 95,200,000 | 13.0% | 4 | 116,000,000 | 14.5% | 3 | 111,090,000 | 12.3% | 3 |
| 4 | PV OIL | 109,800,000 | 20.8% | 2 | 86,840,000 | 14.0% | 2 | 92,400,000 | 11.9% | 3 | 97,000,000 | 13.3% | 3 | 95,600,000 | 11.9% | 4 | 97,000,000 | 10.7% | 4 |
| 5 | PETROLIMEX | 45,000,000 | 8.5% | 4 | 53,700,000 | 8.6% | 4 | 38,000,000 | 4.9% | 7 | 43,700,000 | 6.0% | 6 | 54,600,000 | 6.8% | 5 | 66,400,000 | 7.3% | 5 |
| 6 | ML | 45,000,000 | 8.5% | 4 | 51,300,000 | 8.2% | 5 | 78,000,000 | 10.1% | 4 | 53,000,000 | 7.3% | 5 | 50,000,000 | 6.2% | 6 | 38,000,000 | 4.2% | 7 |
| 7 | DALACHALERN | 2,800,000 | 0.5% | 13 | 3,000,000 | 0.5% | 13 | 33,000,000 | 4.3% | 8 | 17,000,000 | 2.3% | 9 | 14,500,000 | 1.8% | 10 | 65,000,000 | 7.2% | 6 |
| 8 | LAOMAI | 1,300,000 | 0.2% | 14 | 2,000,000 | 0.3% | 14 | 2,400,000 | 0.3% | 14 | 16,000,000 | 2.2% | 10 | 33,700,000 | 4.2% | 7 | 37,000,000 | 4.1% | 8 |
| 9 | LO PETROLEUM | 0 | 0.0% | 15 | 0 | 0.0% | 15 | 0 | 0.0% | 15 | 0 | 0.0% | 15 | 6,500,000 | 0.8% | 14 | 37,000,000 | 4.1% | 8 |
| 10 | LP | 8,400,000 | 1.6% | 10 | 12,000,000 | 1.9% | 12 | 11,000,000 | 1.4% | 13 | 12,000,000 | 1.6% | 12 | 10,640,000 | 1.3% | 13 | 21,200,000 | 2.3% | 11 |
| 11 | IP | 42,500,000 | 8.0% | 6 | 60,800,000 | 9.8% | 3 | 102,600,000 | 13.3% | 2 | 0 | 0.0% | 15 | 0 | 0.0% | 15 | 0 | 0.0% | 16 |
| 12 | VP | 11,600,000 | 2.2% | 8 | 18,100,000 | 2.9% | 8 | 19,700,000 | 2.5% | 10 | 12,400,000 | 1.7% | 11 | 14,800,000 | 1.8% | 9 | 5,700,000 | 0.6% | 14 |
| 13 | AP | 4,300,000 | 0.8% | 11 | 12,200,000 | 2.0% | 11 | 21,500,000 | 2.8% | 9 | 18,000,000 | 2.5% | 8 | 14,000,000 | 1.7% | 11 | 22,600,000 | 2.5% | 10 |
| 14 | PP OIL | 11,000,000 | 2.1% | 9 | 15,900,000 | 2.6% | 9 | 14,600,000 | 1.9% | 11 | 21,600,000 | 3.0% | 7 | 15,000,000 | 1.9% | 8 | 13,000,000 | 1.4% | 13 |
| 15 | BOUSAVANH | 0 | 0.0% | 15 | 0 | 0.0% | 15 | 0 | 0.0% | 15 | 10,100,000 | 1.4% | 13 | 12,500,000 | 1.6% | 12 | 18,000,000 | 2.0% | 12 |
| 16 | DAFI | 18,000,000 | 3.4% | 7 | 13,700,000 | 2.2% | 10 | 14,100,000 | 1.8% | 12 | 7,700,000 | 1.1% | 14 | 0 | 0.0% | 15 | 1,600,000 | 0.2% | 15 |
| | TOTAL | 528,600,000 | 100% | | 621,920,000 | 100% | | 773,871,000 | 100% | | 730,778,000 | 100% | | 800,658,000 | 100% | | 906,190,000 | 100% | |

## 1.4.4 ຂະບວນການຈັດຊື້ຜະລິດຕະພັນ ແລະ ບໍລິການ

**ການຈັດຊື້ຜະລິດຕະພັນ ແລະ ບໍລິການ**

ຂະບວນການຈັດຊື້ ຖືວ່າເປັນວຽກງານຫຼັກທີ່ ບໍລິສັດໃຫ້ຄວາມສຳຄັນຫຼາຍທີ່ສຸດ ເນື່ອງຈາກວ່າ ການຈັດຊື້ມັນໄດ້ສະທ້ອນໃຫ້ເຫັນເຖິງຄຸນະພາບຂອງສິນຄ້າ ແລະ ບໍລິການ, ສະທ້ອນເຖິງພາບພົດອົງກອນ. ສະນັ້ນ ບໍລິສັດຈຶ່ງໄດ້ມີ ລະບຽບ ແລະ ຂະບວນການໃນການຈັດຊື້ທີ່ເປັນລະບົບ ເພື່ອໃຫ້ໝັ້ນໃຈວ່າ ຜະລິດຕະພັນທີ່ຈັດຊື້ມານັ້ນມີຄຸນະພາບ ເປັນໄປຕາມຂໍ້ກຳນົດ. ຂະບວນການຈັດຊື້ຈະມີຂັ້ນຕອນການຄັດເລືອກ ແລະ ປະເມີນຜູ້ຂາຍ, ຂັ້ນຕອນການສັ່ງຊື້ ແລະ ການກວດຄຸນະພາບສິນຄ້າໃນແຕ່ລະຂັ້ນຕອນເຊິ່ງລາຍລະອຽດມີດັ່ງນີ້:

ຮູບທີ 1.4.18 : ຂະບວນການຈັດສົ່ງນ້ຳມັນຈາກຜູ້ສະໜອງມາຍັງສາງ ແລະ ຈຳໜ່າຍໄປຍັງລູກຄ້າ




❖ **ຜູ້ສະໜອງນ້ຳມັນ:**

ໝາຍເຖິງຜູ້ສະໜອງນ້ຳມັນໃຫ້ກັບ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ເຊິ່ງຢູ່ຕ່າງປະເທດທັງໝົດ (ປະເທດໄທ) ຜູ້ສະໜອງຫຼັກໆທີ່ບໍລິສັດເຮັດສັນຍາຊື້ຂາຍນ້ຳມັນ ລວມມີ: Chevron, ESSO , IRPC , Bangchak ແລະ Shell.

ໃນທຸກໆທ້າຍອາທິດບັນດາຜູ້ສະໜອງຈະສົ່ງລາຄານ້ຳມັນມາໃຫ້ບໍລິສັດເພື່ອໃຫ້ບໍລິສັດພິຈາລະນາລາຄາຂອງນ້ຳມັນທີ່ອາດມີການເໜັງຕີງຂຶ້ນ-ລົງ ກ່ອນທີ່ທາງບໍລິສັດຈະອອກໃບສັ່ງຊື້ (PO) ກັບບັນດາຜູ້ສະໜອງແຕ່ລະລາຍ. ເມື່ອຜູ້ສະໜອງໄດ້ຮັບໃບສັ່ງຊື້ແລ້ວຜູ້ສະໜອງຈະແຈ້ງຈຳນວນ ແລະ ລາຍລະອຽດຕ່າງໆ ລວມທັງໃຫ້ທາງບໍລິສັດຊຳລະເງິນລ່ວງໜ້າ. ພາຍຫຼັງທີ່ຜູ້ສະໜອງໄດ້ຮັບເງິນກໍ່ຈະແຈ້ງມາຍັງບໍລິສັດເພື່ອໃຫ້ບໍລິສັດນຳລົດເຂົ້າໄປທີ່ໜ້າໂຮງກັ່ນເພື່ອຮັບນ້ຳມັນ ພ້ອມທັງຮັບໃບຍັງຢືນຄຸນະພາບນ້ຳມັນ ແລະ ເອກະສານທາງພາສີຕ່າງໆ.

## ❖ ການເຂົ້າຮັບນ້ຳມັນທີ່ໜ້າໂຮງກັ່ນ

ຫຼັງຈາກທີ່ບໍລິສັດຂົນສົ່ງທີ່ໄດ້ຮັບແຈ້ງໜັງສື ຫຼື ເອກະສານຂົນສົ່ງໃຫ້ໄປຮັບນ້ຳມັນທີ່ໜ້າໂຮງກັ່ນ ຜູ້ຂົນສົ່ງກໍ່ຈະຈັດສົ່ງລົດທີ່ຢູ່ໃນລາຍຊື່ເພື່ອເຂົ້າໄປລໍຖ້າຮັບນ້ຳມັນ. ຫຼັງຈາກຮັບນ້ຳມັນຄົບຕາມປະລິມານທີ່ໄດ້ສັ່ງຊື້ແລ້ວທາງໂຮງກັ່ນກໍ່ຈະອອກໃບຢັ້ງຢືນຄຸນະພາບນ້ຳມັນໃຫ້ກັບຄົນຂັບລົດເພື່ອເປັນຫຼັກຖານ. ຫຼັງຈາກນັ້ນກໍ່ຂົນສົ່ງນ້ຳມັນຈາກໜ້າໂຮງກັ່ນມາຍັງສາງນ້ຳມັນຂອງບໍລິສັດທີ່ ສປປ ລາວ.

## ❖ ການດຳເນີນການຂົນສົ່ງລະຫວ່າງປະເທດ

ໃນການຂົນສົ່ງນ້ຳມັນໃນແຕ່ລະຄັ້ງ ບໍລິສັດຈະປະສານງານກັບບໍລິສັດຂົນສົ່ງທີ່ຢູ່ໃນລາຍຊື່ເປັນຜູ້ຂົນສົ່ງນ້ຳມັນເຊື້ອໄຟທີ່ໄດ້ຮັບອະນຸຍາດຕາມມາດຕາທີ 12 ຂອງກົດໝາຍການຄ້າມ້ຳມັນເຊື້ອໄຟ ພສ 2543 ຣາດຊະອານາຈັກໄທ ແລະ ໄດ້ຜ່ານການກວດສອບ ແລະ ການປະເມີນລົດຂົນສົ່ງແຕ່ລະຄັນ ຕາມມາດຕະຖານການຂົນສົ່ງທີ່ບໍລິສັດໄດ້ປະເມີນໄວ້ເບື້ອງຕົ້ນ ແລະ ຈົດບັນທຶກໄວ້ຢູ່ໃນປຶ້ມທະບຽນຂົນສົ່ງ.

ໃນກໍລະນີທີ່ມີລູກຄ້າໂຄງການທີ່ມີທີ່ຕັ້ງໂຄງການຕິດກັບຊາຍແດນມີການສັ່ງຊື້ນ້ຳມັນຈາກບໍລິສັດ ຫຼື ເປັນເສັ້ນທາງທີ່ລົດຂົນສົ່ງລະຫວ່າງປະເທດແລ່ນຜ່ານ, ບໍລິສັດກໍ່ຈະໃຫ້ລົດຂົນສົ່ງດຳເນີນການຈັດສົ່ງໃຫ້ກັບລູກຄ້າໂດຍກົງ (Direct Drop).

ການດຳເນີນການຂົນສົ່ງນ້ຳມັນຈາກໂຮງກັ່ນເຖິງສາງນ້ຳມັນຂອງບໍລິສັດທີ່ ສປປ ລາວ ຈະໃຊ້ເວລາຂົນສົ່ງປະມານ 12 ຊົ່ວໂມງ ເຊິ່ງໃນລະຫວ່າງການຂົນສົ່ງ ຖ້າຫາກມີອຸບັດຕິເຫດເກີດຂຶ້ນ ຫຼື ເຫດການອື່ນໆທີ່ສົ່ງຜົນກະທົບຕໍ່ຄຸນະພາບນ້ຳມັນ ເຊິ່ງຄວາມສ່ຽງຈາກການຂົນສົ່ງນ້ຳມັນທັງໝົດຈະຕົກເປັນຂອງຜູ້ຂົນສົ່ງແຕ່ພຽງຜູ້ດຽວ. ເຊິ່ງຄວາມຮັບຜິດຊອບຂອງສິນຄ້າໄດ້ຖືກຖ່າຍໂອນໄປໃຫ້ຜູ້ຂົນສົ່ງນ້ຳມັນນັບຕັ້ງແຕ່ຜູ້ຂົນສົ່ງນ້ຳມັນຮັບນ້ຳມັນອອກຈາກໂຮງກັ່ນຈົນເຖິງຈຸດນັດໝາຍ ຫຼື ປາຍທາງ.

## ❖ ການກວດສອບຄຸນະພາບນ້ຳມັນ ແລະ ປະລິມານນ້ຳມັນ

ຫຼັງຈາກທີ່ລົດຂົນສົ່ງມາເຖິງສາງນ້ຳມັນຂອງບໍລິສັດ ກໍ່ຈະເລີ່ມເຂົ້າສູ່ຂະບວນການກວດສອບນ້ຳມັນໂດຍເລີ່ມຈາກການຈອດລົດ ເພື່ອເຮັດໃຫ້ລົດຢຸດເຄື່ອນໄຫວປະມານ 20 ນາທີ ເພື່ອໃຫ້ປະລິມານນ້ຳມັນໃນຖັງບໍ່ມີການເໜັງຕີງແລ້ວ ຈຶ່ງດຳເນີນການວັດແທກປະລິມານນ້ຳມັນເພື່ອໃຫ້ເປັນໄປຕາມລະບຽບຄວາມປອດໄພ, ປ້ອງກັນບໍ່ໃຫ້ເກີດການຈຸດປະກາຍໄຟ. ຈາກນັ້ນ ຈຶ່ງມີການກວດສອບປະລິມານນ້ຳມັນທຽບໃສ່ກັບໃບແຈ້ງຂົນສົ່ງເພື່ອວັດແທກປະລິມານນ້ຳມັນໃນເບື້ອງຕົ້ນ ໂດຍທຽບກັບແປ້ນວັດລະດັບນ້ຳມັນທີ່ມີຂະໜາດວັດແທກຕັ້ງແຕ່ 3,000–5,000 ລິດຕໍ່ຖັງ. ຫຼັງຈາກນັ້ນຈຶ່ງເລີ່ມກວດສອບຄຸນະພາບນ້ຳມັນໃນຫ້ອງທົດລອງໃນແຕ່ລະສາງ ໂດຍມີການວັດແທກຄ່າຄຸນະພາບທີ່ສຳຄັນຕ່າງໆທຽບກັບໃບຢັ້ງຢືນຄຸນະພາບນ້ຳມັນໜ້າໂຮງກັ່ນ ເຊິ່ງດຳເນີນການກວດສອບຄ່າ API, ຄ່າຈຸດເຜົາໄໝ້ ແລະ ອື່ນໆ ດັ່ງຕົວຢ່າງໃນຕາຕະລາງຕໍ່ໄປນີ້.

ຕາຕະລາງທີ 1.4.13 : ຕາຕະລາງສະແດງເຖິງຄ່າມາດຕະຖານ API ຈາກໂຮງກັ່ນຂອງນ້ຳມັນກາຊວນ

| ນ້ຳມັນກາຊວນ (Diesel) | | | |
|---|---|---|---|
| Properties | Test Method | Unit | Specification |
| Appearance | Visual | | Clear |
| ASTMD Color | ASTMD 1500 | | 20 Max |
| Color Visual | Visual | | Light yellow |
| Distillation | | | |
| 10% Recovered* | ASTMD 86 | Degree C | Report |
| 50% Recovered* | ASTMD 86 | Degree C | Report |
| 90% Recovered* | ASTMD 86 | Degree C | 370 Max |
| End Point | ASTMD 86 | Degree C | |
| % Residue | ASTMD 86 | % Vol | 2.0 Max |
| Density @ 15 degree C | ASTMD 93 | Degree C | 52 Mm |
| API Gravity | ASTMD 4052 | g/mL | Report |
| Pour Point | ASTMD 4052 | | Report |
| Could Point | ASTMD 976 | | 17 Mm |

ຕາຕະລາງທີ 1.4.14 : ການດຳເນີນການກວດກາຄ່າ API ຂອງນ້ຳມັນແອັດຊັ່ງ

| ນ້ຳມັນແອັດຊັ່ງ | | | | |
|---|---|---|---|---|
| Properties | Test Method | Unit | Specification | |
| | | | ທຳມະດາ ULG 91 | ພິເສດ ULG 95 |
| Appearance | Visual | | Bright & Clear | Bright & Clear |
| ASTMD Color | ASTMD 1500 | | 0.5 - 1.5 | 0.5 - 1.5 |
| Color visual | Visual | | Light yellow | Light |
| Distillation | | | | |
| 10% Recovered* | ASTMD 86 | Degree C | 70 Max | 70 Max |
| 50% Recovered* | ASTMD 86 | Degree C | 70 - 110 | 70 - 110 |
| 90% Recovered* | ASTMD 86 | Degree C | 170 Max | 170 Max |
| End Point | ASTMD 86 | Degree C | 200 Max | 200 Max |
| % Residue | ASTMD 86 | % Vol | 2.0 Max | 2.0 Max |
| Density @ 15 degree C | ASTMD 4052 | g/mL | Report | Report |
| API Gravity | ASTMD 4052 | | Report | Report |
| Pour Point | ASTMD | | | |
| Could Point | ASTMD | | | |

ຫຼັງຈາກນັ້ນ ພະນັກງານຈະເກັບຕົວຢ່າງນ້ຳມັນຂອງລົດຂົນສົ່ງແຕ່ລະຄັນເພື່ອນຳຄ່າທີ່ທົດສອບມາທຽບກັບໃບຢັ້ງຢືນຄຸນະພາບທີ່ໂຮງກັ່ນອອກໃຫ້ໃນເບື້ອງຕົ້ນຕອນໄປຮັບນ້ຳມັນ. ແຕ່ຖ້າຫາກຄ່າທີ່ທົດສອບອອກມາບໍ່ກົງກັບໃບຢັ້ງຢືນຄຸນະພາບໜ້າໂຮງກັ່ນ ຫຼື ກວດພົບເຫັນມີສິ່ງເຈືອປົນຫຼາຍເກີນກວ່າມາດຕະຖານຍອມຮັບ (ລະບຸຄ່າຄວາມແຕກຕ່າງທີ່ຮັບໄດ້) ຈະຖືວ່າລົດຄັນດັ່ງກ່າວບໍ່ຜ່ານມາດຕະຖານ. ບໍລິສັດກໍ່ຈະລາຍງານຜົນການກວດສອບດັ່ງກ່າວໄປຍັງບໍລິສັດຜູ້

ຂົນສົ່ງຕາມເອກະສານ ຫຼື ຫຼັກຖານທີ່ປະກົດໄວ້. ແຕ່ຖ້າຫາກວ່າຜົນການທົດສອບຫາກກົງກັບໃບຢັ້ງຢືນ ຫຼື ຄ່າທີ່ຢູ່ໃນເກນມາດຕະຖານຍອມຮັບກໍ່ຈະໃຫ້ລົດຂົນສົ່ງດັ່ງກ່າວເຂົ້າສູ່ຂະບວນການຖ່າຍນ້ຳມັນລົງສູ່ຖັງເກັບນ້ຳມັນ.

**ການຖ່າຍນ້ຳມັນຈາກລົດລົງຖັງເກັບນ້ຳມັນ**: ຂະບວນການນີ້ຖືວ່າເປັນຂະບວນການສຸດທ້າຍ ຫຼັງຈາກຜ່ານການກວດສອບຈະດຳເນີນການແຍກຂົ້ວບັນຈຸໄຟຟ້າລົງໃສ່ ກ່ອນການທົດສອບສານເຈືອປົນຕ່າງໆເພື່ອໃຫ້ເປັນໄປຕາມລະບຽບການຮັກສາຄວາມປອດໄພ ແລະ ປ້ອງກັນຄວາມສ່ຽງທີ່ກໍ່ໃຫ້ເກີດຈຸດໄວໄຟ ໃນຂະນະປ່ອຍນ້ຳມັນລົງສູ່ຖັງ ເຊິ່ງໃຊ້ໄລຍະເວລາປະມານ 50-60 ນາທີຕໍ່ລົດ 1 ຄັນ.

## ❖ ຂະບວນການຄຸ້ມຄອງບໍລິຫານສາງນ້ຳມັນ

ສາງນ້ຳມັນມີໜ້າທີ່ໃນການຮັບ-ເບີກຈ່າຍນ້ຳມັນ ແລະ ລາຍງານຍອດປະລິມານນ້ຳມັນທີ່ເຫຼືອໃນແຕ່ລະມື້ (Daily Bulk Stock) ໂດຍທາງສາງນ້ຳມັນຈະດຳເນີນການເປີດ ແລະ ປິດສາງໃນເວລາ 08:00-17:00 ໂມງ ພາຍຫຼັງຈາກປິດສາງແລ້ວສາງຈະວັດແທກປະລິມານນ້ຳມັນຄົງຄ້າງໃນແຕ່ລະປະເພດ ແລະ ດຳເນີນການລາຍງານມາຍັງບໍລິສັດພາຍໃນຕອນເຊົ້າກ່ອນ 08:30 ໂມງ ໃນວັນຕໍ່ມາເພື່ອໃຊ້ເປັນຂໍ້ມູນໃນການບໍລິຫານຈັດການນ້ຳມັນຂອງບໍລິສັດຕໍ່ໄປ ຕາມລາຍລະອຽດ ແລະ ຂັ້ນຕອນດັ່ງຕໍ່ໄປນີ້:

- **ການເບີກນ້ຳມັນອອກຈາກສາງ:** ສາງຈະເປັນຜູ້ເບີກຈ່າຍນ້ຳມັນຕາມໃບຮຽກເກັບເງິນຂອງລູກຄ້າທີ່ສຳນັກງານໃຫຍ່ (ຝ່ າຍຂາຍ) ເປັນຜູ້ສົ່ງມາໃຫ້ພ້ອມທັງຈຳນວນລົດທີ່ທາງຝ່ າຍຂາຍຈັດມາ ເພື່ອລໍຖ້າຮັບນ້ຳມັນ, ຫຼັງຈາກທີ່ລົດຂົນສົ່ງນ້ຳມັນຂອງບໍລິສັດ ຂົນສົ່ງພາຍໃນມາເຖິງໜ້າສາງ. ທາງສາງກໍ່ຈະມີການກວດກາມາດຕະຖານ ແລະ ເຕັກນິກຂອງລົດຂົນສົ່ງ ແລະ ຄົນຂັບລົດຕາມແບບປະເມີນຂອງສາງ. ຫຼັງຈາກຜ່ານການກວດກາລົດແຕ່ລະຄັນແລ້ວ ກໍ່ຈະເຂົ້າແຖວລໍຖ້າເຂົ້າມາຍັງຈຸດທີ່ເປັນຫົວຈ່າຍນ້ຳມັນລົງຖັງ ຕາມປະລິມານໃນໃບສັ່ງມາແລ້ວ ເພື່ອຮັບນ້ຳມັນຕາມຈຳນວນທີ່ແຈ້ງໃນໃບຮຽກເກັບເງິນ ພ້ອມກັບອອກໃບນຳສົ່ງໃຫ້ກັບຄົນຂັບລົດ ເພື່ອເປັນຫຼັກຖານໃນການຢັ້ງຢືນຄຸນນະພາບ ແລະ ປະລິມານກ່ອນອອກຈາກສາງທຸກໆຄັ້ງ. ທັງນີ້ຄວາມຮັບຜິດຊອບທັງໝົດໃນການຂົນສົ່ງນ້ຳມັນໄປໃຫ້ລູກຄ້າ ຕົກເປັນຂອງຂົນສົ່ງໂດຍຄວາມສ່ຽງດັ່ງກ່າວຖືກໂອນຖ່າຍໄປຍັງຜູ້ຂົນສົ່ງ.
- ເມື່ອລົດຂົນສົ່ງອອກຈາກປະຕູສາງ ຖືວ່າຄວາມສ່ຽງຕ່າງໆທັງໝົດແມ່ນຈະຕົກເປັນຄວາມຮັບຜິດຊອບຂອງບໍລິສັດຜູ້ຂົນສົ່ງພາຍໃນ.
- ທຸກໆມື້ ຫຼັງ 17:00 ໂມງ ສາງຈະສະຫຼຸບຍອດເຫຼືອຂອງສາງນ້ຳມັນໃນແຕ່ລະວັນ (Daily Bulk Stock) ແລ້ວສົ່ງໃຫ້ກັບສຳນັກງານໃຫຍ່ (ຝ່ າຍຂາຍ).

## ❖ ຂະບວນການບໍລິຫານການຈັດຊື້ ແລະ ລວບລວມເອກະສານຂອງສຳນັກງານໃຫຍ່ (ຝ່ າຍຂາຍ)

**ສຳນັກງານໃຫຍ່ (ຝ່ າຍຂາຍ):** ເຮັດໜ້າທີ່ລວບລວມເອກະສານ ແລະ ລາຍງານສະຫຼຸບຍອດເຫຼືອຂອງນ້ຳມັນໃນແຕ່ລະວັນຂອງແຕ່ລະສາງປະກອບກັນເພື່ອສະຫຼຸບຍອດສັ່ງຊື້ຈາກລູກຄ້າໂຄງການ ແລະ ສະຖານີບໍລິການນ້ຳມັນ. ຝ່ າຍຂາຍຈະຕ້ອງເຮັດການປະເມີນຄວາມຕ້ອງການນ້ຳມັນ ແລະ ການສຳຮອງນ້ຳມັນໃນສາງ ເພື່ອຈະພິຈາລະນາກຳນົດປະລິມານການສັ່ງຊື້ ພ້ອມທັງວັນທີໃນການຂົນສົ່ງ. ໂດຍບໍ່ມີແຜນສັ່ງຊື້ໄວ້ລ່ວງໜ້າ ໂດຍສະເພາະແມ່ນລູກຄ້າສະຖານີບໍລິການນ້ຳມັນຂະໜາດນ້ອຍຕ່າງໆ ທີ່ມີຄວາມຕ້ອງການນ້ຳມັນບໍ່ຄົງທີ່ ເຊິ່ງຝ່ າຍຂາຍຈະເປັນຜູ້ສຳຫຼວດ ແລະ ສອບຖາມເຖິງຄວາມຕ້ອງການໂດຍກົງຜ່ານທາງໂທລະສັບ ເພື່ອລວບລວມປະລິມານນ້ຳມັນເພື່ອເປັນການຮອງຮັບຄວາມຕ້ອງການທີ່ເກີດຂຶ້ນກະທັນຫັນ (Real Time Order) ຈາກນັ້ນ ກໍ່ຈະເອົາປະລິມານທັງໝົດມາຄຳນວນໃສ່ກັບຍອດ

ທີ່ຍັງເຫຼືອໃນສາງນ້ຳມັນ ເພື່ອສັ່ງຊື້ໃຫ້ພໍດີກັບຂະໜາດບັນຈຸຂອງແທັງ (Tank) ໃນແຕ່ລະສາງ ຫຼື Balance Stock ແລະ ບໍ່ໃຫ້ຫຼຸດຕ່ຳກວ່າປະລິມານທີ່ບໍລິສັດກຳນົດ (Bulk Stock Limited) ຫຼື ບໍ່ໃຫ້ຕ່ຳກວ່າ 50 ສ່ວນຮ້ອຍຂອງຈຳນວນນ້ຳມັນທັງໝົດໃນສາງ ເພື່ອເປັນການຮອງຮັບຄວາມຕ້ອງການໃຊ້ນ້ຳມັນໄດ້ຢ່າງກະທັນຫັນ ແລະ ເປັນການຮັບປະກັນນ້ຳມັນອັນເປັນຊັບພະຍາກອນໃນການຂັບເຄື່ອນເສດຖະກິດຂອງປະເທດໄດ້ຢ່າງພຽງພໍ.

ເມື່ອຝ່າຍຂາຍໄດ້ເຮັດການປະເມີນຍອດປະລິມານໃນການສັ່ງຊື້ນ້ຳມັນແລ້ວຈະດຳເນີນການປຽບທຽບລາຄາຈາກຜູ້ສະໜອງຫຼັກເຊັ່ນ: Chevron, IRPC, ESSO, Shell ເຊິ່ງຈະມີການສະເໜີລາຄານ້ຳມັນມາຍັງບໍລິສັດໃນທຸກໆວັນຈັນຕອນເຊົ້າຂອງທຸກໆອາທິດເຊິ່ງລາຄາດັ່ງກ່າວມີກຳນົດອາຍຸ 1 ອາທິດພ້ອມທັງເປັນລາຄາທີ່ຄວບຄຸມການຊື້ຕ່ຳ 1 ອາທິດ ຫຼັງຈາກນັ້ນທາງບໍລິສັດຈຶ່ງປຽບທຽບລາຄາ ແລະ ດຳເນີນການແຈ້ງຍອດການສັ່ງຊື້ປະລິມານ ແລະ ປະສານງານກັບບໍລິສັດຂົນສົ່ງມາຮັບນ້ຳມັນ ແລະ ໃຫ້ຈັດສົ່ງໄປລົງສາງຕ່າງໆຕາມວັນ ແລະ ເວລາທີ່ກຳນົດໄວ້.

## ❖ ຂັ້ນຕອນການສັ່ງຊື້ນ້ຳມັນຂອງລູກຄ້າ ແລະ ການຈັດສົ່ງນ້ຳມັນໃຫ້ກັບລູກຄ້າ

ລູກຄ້າຂອງບໍລິສັດມີທັງໝົດ 5 ປະເພດຄື: ຕົວແທນຈຳໜ່າຍ (ສະຖານີບໍລິການນ້ຳມັນ), ລູກຄ້າອຸດສາຫະກຳ, ລູກຄ້າໂຄງການ, ລູກຄ້າຂົນສົ່ງ ແລະ ລູກຄ້າທົ່ວໄປ ເຊິ່ງການສັ່ງຊື້ກໍ່ຈະມີລັກສະນະຄ້າຍໆຄືກັນ ແລະ ອາດຈະແຕກຕ່າງກັນໄປຕາມແຕ່ລະທຸລະກິດແຕ່ລະປະເພດດັ່ງນີ້:

- **ລູກຄ້າທີ່ເປັນຕົວແທນຈຳໜ່າຍ (ສະຖານີບໍລິການນ້ຳມັນ):** ສ່ວນໃຫຍ່ລູກຄ້າຈະເປັນຝ່າຍຕິດຕໍ່ກັບຂາຍໂດຍກົງຜ່ານທາງໂທລະສັບ. ຫຼັງຈາກນັ້ນ ທາງຝ່າຍຂາຍກໍ່ຈະບັນທຶກປະລິມານການສັ່ງຊື້ແລ້ວໃຫ້ລູກຄ້າໄປໂອນເງິນຊຳລະຄ່າສິນຄ້າ ເມື່ອໄດ້ຮັບເງິນຄືບຕາມຈຳນວນແລ້ວ ຝ່າຍຂາຍກໍ່ຈະອອກໃບເກັບເງິນ (Invoice) ທີ່ລູກຄ້າສັ່ງຊື້ໄປຍັງສາງເພື່ອໃຫ້ສາງກຽມການຈັດສົ່ງນ້ຳມັນໃຫ້ກັບລູກຄ້າເພື່ອລົດຂັ້ນຕອນ ແລະ ຄ່າໃຊ້ຈ່າຍ.
- **ລູກຄ້າທີ່ເປັນໂຄງການ, ອຸດສາຫະກຳ, ຂົນສົ່ງ ແລະ ລູກຄ້າທົ່ວໄປ:** ຖ້າເປັນລູກຄ້າໂຄງການທີ່ມີແຜນສັ່ງຊື້ ແລະ ນຳໃຊ້ແນ່ນອນໃນແຕ່ລະອາທິດລ່ວງໜ້າ ຫຼື ມີໂຄງການຕິດກັບຊາຍແດນ, ບໍລິສັດຈະໃຫ້ລົດຂົນສົ່ງຕ່າງປະເທດເປັນຜູ້ໄປສົ່ງໃຫ້ກັບລູກຄ້າເອງເລີຍ.

## ❖ ຂັ້ນຕອນການຈັດສົ່ງນ້ຳມັນໃຫ້ກັບລູກຄ້າ

ໃນການໂອນຖ່າຍນ້ຳມັນໃຫ້ກັບລູກຄ້າ ທາງບໍລິສັດຈະໃຊ້ບໍລິການຂົນສົ່ງຈາກບໍລິສັດ ສິດທິໂລຈິດສຕິກ ລາວ ຈຳກັດ (STL) ເຊິ່ງໃນອາດີດເຄີຍເປັນໜ່ວຍງານໜຶ່ງຂອງບໍລິສັດ ແລະໄດ້ມີການແຍກຕົວອອກເປັນບໍລິສັດໃນປີ 2013 ໂດຍການໃຊ້ບໍລິການຂອງ STL ເພື່ອເປັນການຮັບປະກັນຄວາມພຽງພໍໃນການໃຊ້ລົດຂົນສົ່ງນ້ຳມັນໄດ້ຕາມຄວາມຕ້ອງການຂອງບໍລິສັດ ລວມເຖິງຄຸນະພາບຂອງພາຫະນະ ແລະ ຜູ້ຂັບຂີ່ ອີກທັງເປັນການຮັກສາຄວາມເຊື່ອໝັ້ນໃນການຂົນສົ່ງທີ່ປອດໄພຂອງສິນຄ້າ ເພື່ອຫຼີກລ້ຽງ ການລັກລອບປອມແປງ ຫຼື ເຈືອປົນສິນຄ້າໃນລະຫວ່າງການຂົນສົ່ງ ໂດຍຈະມີການກວດສອບຄຸນະພາບຜູ້ໃຫ້ບໍລິການຂົນສົ່ງນ້ຳມັນໃຫ້ເປັນໄປຕາມຂໍ້ກຳນົດດ້ານຄວາມປອດໄພ ເຊິ່ງລູກຄ້າເຮັດການປະເມີນຄຸນະພາບຂອງພາຫະນະ ແລະ ຜູ້ຂັບຂີ່ໂດຍໃຫ້ເປັນໄປຕາມທີ່ບໍລິສັດກຳນົດ ໂດຍຈະລາຍງານການກວດສອບກັບມາເຖິງບໍລິສັດທຸກທ້າຍເດືອນເພື່ອພິຈາລະນາ ແລະ ແຈ້ງໄປຍັງ STL ໃຫ້ພິຈາລະນາປັບປຸງການໃຫ້ບໍລິການໂດຍໃຫ້ເປັນໄປຕາມມາດຕະຖານ ແລະ ຄຸນະພາບ ແລະ ຄວາມປອດໄພຕະຫຼອດເວລາ. ທັງນີ້ເມື່ອລົດຂົນສົ່ງເດີນທາງມາເຖິງ ລູກຄ້າຈະເຮັດການກວດວັດແທກປະລິມານ ແລະ ຄຸນະພາບທີ່ຈຸດລົງນ້ຳມັນໃນແຕ່ລະຈຸດຂອງລູກຄ້າແຕ່ລະລາຍ ໂດຍຈະຕ້ອງຈອດລົດໃຫ້ຢຸດເຄື່ອນໄຫວເປັນເວລາ 15-20 ນາທີ ເພື່ອກວດປະລິມານນ້ຳມັນໃນລົດຂົນສົ່ງ ແລະ ເພື່ອ

ວັດແທກປະລິມານນ້ຳມັນຕາມໃບສັ່ງຊື້ ຈາກນັ້ນຈຶ່ງສຽບສາຍໄຟແຍກຂົ້ວບັນຈຸ ບວກ ແລະ ລົບ ຕໍ່ເຂົ້າສາຍດິນເພື່ອເປັນໄປຕາມລະບົບຄວາມປອດໄພ ແລະ ປ້ອງກັນການເກີດໄຟຟ້າສະຖິດເມື່ອສຽບສາຍດິນຮຽບຮ້ອຍແລ້ວໃຫ້ລູກຄ້າທຳການກວດສອບສິ່ງເຈືອປົນໃນນ້ຳມັນ ຫຼັງຈາກນັ້ນ ເມື່ອກວດສອບປະລິມານ ແລະ ສານເຈືອປົນແລ້ວກໍ່ເລີ່ມຖ່າຍນ້ຳມັນລົງຖັງບັນຈຸນ້ຳມັນຂອງລູກຄ້າ ເມື່ອລົງນ້ຳມັນເປັນທີ່ຮຽບຮ້ອຍແລ້ວຈຶ່ງຖືວ່າສຳເລັດຂະບວນການຈັດສົ່ງຜະລິດຕະພັນ ແລະ ບໍລິການໃຫ້ແກ່ລູກຄ້າ.

**ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການຄຸ້ມຄອງ**

ເນື່ອງຈາກວ່າ ບໍລິສັດດຳເນີນທຸລະກິດການນຳເຂົ້າ ແລະ ຈັດສົ່ງນ້ຳມັນໂດຍບໍ່ໄດ້ທຳການຜະລິດໂດຍກົງ ຈຶ່ງບໍ່ໄດ້ມີລະບົບການບຳບັດສິ່ງເສດເຫຼືອຕ່າງໆ ແຕ່ກໍ່ບໍ່ສາມາດຫຼີກລ້ຽງໄດ້ເຖິງຜົນກະທົບດັ່ງກ່າວຖ້າຫາກບໍ່ມີການຄຸ້ມຄອງບໍລິຫານທີ່ດີ ເນື່ອງຈາກ ທຸລະກິດນ້ຳມັນຈຳເປັນເປັນຕ້ອງໄດ້ມີສາງເກັບນ້ຳມັນໄວ້ເພື່ອເປັນບ່ອນກະຈາຍສິນຄ້າ ສະນັ້ນ ບໍລິສັດຈຶ່ງໄດ້ມີມາດຕະການທີ່ເຂັ້ມງວດໃນການປ້ອງກັນຄວາມເສຍຫາຍຕ່າງໆ ທີ່ອາດຈະເກີດຂຶ້ນຈາກອັກຄີໄພເນື່ອງຈາກວ່າທຸລະກິດນ້ຳມັນເປັນວັດຖຸໄວໄຟ ແລະ ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ສະພາບແວດລ້ອມ, ຊັບສິນ ແລະ ຮ່າງກາຍ ເຊິ່ງມີນລະພິດທາງອາກາດຖ້າຫາກມີການຮົ່ວຊຶມ ຫຼື ເກີດອັກຄີໄພ, ດັ່ງນັ້ນ ທາງບໍລິສັດຈຶ່ງໄດ້ອອກມາດຕະການຕ່າງໆ ເພື່ອຄວບຄຸມ ແລະ ຄຸ້ມຄອງບໍລິຫານ ເພື່ອບໍ່ໃຫ້ເກີດອັກຄີໄພທີ່ອາດຈະສົ່ງຜົນກະທົບຕໍ່ກັບສະພາບແວດລ້ອມໂດຍການສ້າງຄູ່ມືການປະຕິບັດວຽກຂອງພະນັກງານໃຫ້ເປັນລະບົບ ມາດຕະການການກວດສອບການໂອນຖ່າຍນ້ຳມັນລົງຖັງ ມາດຕະການການຝັງຖັງເກັບນ້ຳມັນໃຕ້ດິນເພື່ອປ້ອງກັນຄວາມຮ້ອນຈາກແສງແດດ.

ໃນການຄຸ້ມຄອງບໍລິຫານວຽກງານດັ່ງກ່າວ ບໍລິສັດໄດ້ມີລະບົບທີ່ກ່າວມາຂ້າງເທິງນັ້ນຕາມມາດຕະຖານລະບົບການຈັດການສິ່ງແວດລ້ອມ ISO 14001:2004, ມາດຕະຖານ ດ້ານສຸຂະອະນາໄມ ແລະ ຄວາມປອດໄພ OHSAS 18001:2007.

## 1.5 ແຜນການໃນອະນາຄົດ

ບໍລິສັດມີໂຄງການໃນອະນາຄົດເພື່ອພັດທະນາທຸລະກິດໃຫ້ຈະເລີນເຕີບໂຕຢ່າງໝັ້ນຄົງໂດຍມີລາຍລະອຽດໂຄງການດັ່ງນີ້:

### 1. ໂຄງການລົງທຶນເພີ່ມຈຳນວນສະຖານີບໍລິການນ້ຳມັນຂອງບໍລິສັດ

ສະຖານີບໍລິການນ້ຳມັນປຽບສະເໝືອນຊ່ອງທາງໃນການຈັດຈຳໜ່າຍສິນຄ້າຂອງບໍລິສັດໄປສູ່ຜູ້ຊົມໃຊ້ນ້ຳມັນໃນ ສປປ ລາວ ໂດຍມີແຜນການທີ່ຈະເພີ່ມຈຳນວນສະຖານີບໍລິການນ້ຳມັນຂຶ້ນອີກຈຳນວນ 97 ສະຖານີ ໃນອີກ 5 ປີຂ້າງໜ້າ ເພື່ອໃຫ້ຄວບຄຸມທຸກພື້ນທີ່ໃນ ສປປ ລາວ. ໃນການຂະຫຍາຍສະຖານີມີ 3 ຮູບແບບຫຼັກຄື: ພລັສ ແພລັດຕິນຳ (PTN) ປະມານ 20 ສະຖານີ, ພລັສ ໂກລ (GLD) ປະມານ 20 ສະຖານີ ແລະ ພລັສ ທ້ອງຖິ່ນພັດທະນາ (THN-B) ປະມານ 57 ສະຖານີ ເຊິ່ງການເພີ່ມຈຳນວນສະຖານີບໍລິການນ້ຳມັນດັ່ງກ່າວ ເປັນແຜນການລົງທຶນໃນໄລຍະຍາວລະຫວ່າງປີ 2014 - 2018 ເພື່ອຮັກສາຖານລູກຄ້າຜູ້ຊົມໃຊ້ນ້ຳມັນໃນ ສປປ ລາວ ພ້ອມທັງເພື່ອຮອງຮັບການຂະຫຍາຍຕົວຂອງເຂດຊຸມຊົນໃນເມືອງ ລວມເຖິງຄວາມຕ້ອງການຊົມໃຊ້ນ້ຳມັນຈາກການເຕີບໂຕຂອງເສດຖະກິດໃນ ສປປ ລາວ ອີກທັງຍັງເປັນການເພີ່ມຂີດຄວາມສາມາດໃນການແຂ່ງຂັນເພື່ອຮອງຮັບການເປີດປະຊາຄົມເສດຖະກິດອາຊຽນ (AEC) ໃນອະນາຄົດ.

ຕາຕະລາງທີ 1.5.1 : ສະແດງເຖິງຈຳນວນ ແລະ ສັດສ່ວນການຂະຫຍາຍສະຖານີບໍລິການນ້ຳມັນ

| ເປົ້າໝາຍໃນການຂະຫຍາຍ ປະເພດສະຖານີບໍລິການນ້ຳມັນ | ປີ 2014 - 2018 | ສັດສ່ວນຂອງສະຖານີບໍລິການນ້ຳມັນທີ່ເພີ່ມຂຶ້ນ(%) |
|---|---|---|
| ຮູບແບບ ພລັສ ແພລັດຕິນຳ | 20 | 20 % |
| ຮູບແບບ ພລັສ ໂກລ | 20 | 20 % |
| ຮູບແບບ ພລັສ ທ້ອງຖິ່ນພັດທະນາ | 57 | 60 % |
| **ລວມ** | **97** | **100 %** |

ຈາກການລົງທຶນເພີ່ມຈຳນວນສະຖານີບໍລິການນ້ຳມັນດັ່ງກ່າວຈະສົ່ງຜົນໃຫ້ບໍລິສັດສາມາດຂະຫຍາຍຍອດການຈຳໜ່າຍນ້ຳມັນຜ່ານທາງສະຖານີບໍລິການນ້ຳມັນລວມເຖິງການເພີ່ມຈຳນວນຖານລູກຄ້າໃນອະນາຄົດ ເຊິ່ງຈະສົ່ງຜົນໃຫ້ຜົນປະກອບການຂອງບໍລິສັດຂະຫຍາຍຕົວຢ່າງໝັ້ນຄົງ. ສຳລັບແຜນການລົງທຶນໃນສ່ວນຂອງເງິນທີ່ຮັບຈາກການລະດົມທຶນດ້ວຍການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ນັ້ນ, ບໍລິສັດຈະໃຊ້ສຳລັບແຜນການລົງທຶນໃນປີ 2015 ບໍ່ຕ່ຳກວ່າ 20 ສະຖານີ ທັງໃນຮູບແບບ COCO ແລະ CODO ຕາມຄວາມເໝາະສົມ. ໂດຍມູນຄ່າຂອງການລົງທຶນດັ່ງກ່າວປະມານ 68 ຕື້ກີບ ແລະ ຄາດວ່າຈະໃຊ້ເງິນຈາກການລະດົມທຶນຈາກ IPO ປະມານບໍ່ຫຼຸດ 54 ຕື້ກີບ ເຊິ່ງຈະເລີ່ມກໍ່ສ້າງໃນທ້າຍປີ 2014 ຫຼື ຕົ້ນປີ 2015.

### 2. ເງິນລົງທຶນໝຸນວຽນເພື່ອບໍລິຫານການສັ່ງຊື້ນ້ຳມັນຈາກຕ່າງປະເທດ

ບໍລິສັດມີໂຄງການໃນການຈັດຫານ້ຳມັນຈາກແຫຼ່ງນ້ຳມັນໃນຕ່າງປະເທດທີ່ມີສັກກະຍະພາບ ເຊິ່ງອາດເປັນການສັ່ງຊື້ນ້ຳມັນທີ່ເປັນຕົວແທນຈາກຕ່າງປະເທດນອກຊາຍຝັ່ງ (Offshore Company) ເປັນທາງເລືອກໜຶ່ງໃນການພັດທະນາຂະບວນການໃນການຈັດຫາຜະລິດຕະພັນ ເຊິ່ງນ້ຳມັນຕ້ອງມີຄຸນະພາບນຳສົ່ງມາສູ່ລູກຄ້າຂອງບໍລິສັດ ເຊິ່ງການຈັດຊື້ນ້ຳມັນຈາກບໍລິສັດຕົວແທນຈາກຕ່າງປະເທດນອກຊາຍຝັ່ງນັ້ນກໍ່ເພື່ອເປັນການຫຼຸດຕົ້ນທຶນຕໍ່ໜ່ວຍລົງ. ບໍລິສັດ

ຈະຕ້ອງເຮັດການສັ່ງຊື້ນ້ຳມັນໂດຍຂົນສົ່ງຜ່ານທາງເຮືອຂົນສົ່ງນ້ຳມັນຂະໜາດໃຫຍ່ຂອງບໍລິສັດຕົວແທນຕ່າງປະເທດນອກແຄມຝັ່ງ ເຊິ່ງການຫຼຸດຕົ້ນທຶນຕ່ຳໜ່ວຍນັ້ນ ບໍລິສັດຈະຕ້ອງເຮັດການສັ່ງຊື້ໃຫ້ເຕັມເຮືອ ເຊິ່ງຈະເຮັດໃຫ້ຕົ້ນທຶນການຂົນສົ່ງນ້ຳມັນຕ່ຳໜ່ວຍຫຼຸດລົງເກີດການປະຫຍັດຕໍ່ຂະໜາດ (Economy of Scale). ນອກຈາກນີ້ຍັງລວມເຖິງການສັ່ງຊື້ນ້ຳມັນຈາກຜູ້ຈັດຫາເຈົ້າເດີມໃນເທື່ອລະຈຳນວນຫຼາຍໆຈະຊ່ວຍສົ່ງຜົນໃຫ້ບໍລິສັດມີອຳນາດໃນການຕໍ່ລອງກັບທາງຜູ້ຈັດຫາ (Bargaining Power over Suppliers) ສົ່ງຜົນໃຫ້ບໍລິສັດສາມາດຈັດຫານ້ຳມັນດ້ວຍຕົ້ນທຶນທີ່ຖືກລົງເຊັ່ນກັນ ເຊິ່ງການຈັດຫາ ແລະ ການສັ່ງຊື້ນ້ຳມັນດັ່ງກ່າວນັ້ນ ບໍລິສັດຈະພິຈາລະນາປຽບທຽບຕົ້ນທຶນຕ່ຳໜ່ວຍຂອງນ້ຳມັນເປັນຄັ້ງໆຕໍ່ໄປ ເພື່ອເປັນການຮອງຮັບໂຄງການດັ່ງກ່າວ ເຊິ່ງໄດ້ມີການກຽມຄວາມພ້ອມໃນການເຊົ່າສາງນ້ຳມັນທີ່ຈັງຫວັດ ສະເຊີງເຊົ່າ (ປະເທດໄທ) ທີ່ມີຂະໜາດບັນຈຸ 27 ລ້ານລິດ ຈາກບໍລິສັດ ພີຊີ ສະຫຍາມ ປິໂຕຣລ້ຽມ ຈຳກັດ ໃນຮູບແບບສັນຍາ 3 ປີ ແລະ ຫາກບໍ່ມີຝ່າຍໃດຍົກເລີກສັນຍາຈະສາມາດຕໍ່ອາຍຸສັນຍາໄດ້ທຸກໆ 3 ປີ ເພື່ອຮອງຮັບການຂົນສົ່ງນ້ຳມັນທາງເຮືອ, ການບໍລິຫານການຈັດເກັບນ້ຳມັນ ແລະ ຈັດສົ່ງນ້ຳມັນທາງບົກ ເຊິ່ງບໍລິສັດຄາດການງົບລົງທຶນຢູ່ທີ່ປະມານ 80 ຕື້ກີບ ແລະ ຄາດວ່າຈະໃຊ້ເງິນຈາກການລະດົມທຶນຈາກ IPO ປະມານບໍ່ຫຼຸດ 42 ຕື້ກີບ ເຊິ່ງຈະເລີ່ມກໍ່ສ້າງໃນປີ 2015.

### 3. ໂຄງການລົງທຶນໃນການບໍລິຫານລະບົບການຂົນສົ່ງ

ບໍລິສັດມີແຜນການລົງທຶນພັດທະນາລະບົບຂົນສົ່ງເພື່ອຮອງຮັບການເຕີບໂຕຂອງບໍລິສັດເຊິ່ງເປັນໄປຕາມແຜນການໃນການຂະຫຍາຍສາຂາສະຖານີບໍລິການນ້ຳມັນອີກ 97 ສະຖານີໃນຊ່ວງລະຫວ່າງປີ 2014-2018 ນັ້ນ ຈຳເປັນຈະຕ້ອງມີການລົງທຶນພັດທະນາລະບົບຂົນສົ່ງເພື່ອຮອງຮັບການຂະຫຍາຍຕົວດັ່ງກ່າວ. ບໍລິສັດມີແຜນການໃນການລົງທຶນໃນລົດຂົນສົ່ງນ້ຳມັນເພີ່ມເຕີມ ພາຍໃຕ້ກຳມະສິດຂອງບໍລິສັດເພື່ອຮອງຮັບການເຕີບໂຕຂອງຄວາມຕ້ອງການນ້ຳມັນ ແລະ ສະຖານີບໍລິການນ້ຳມັນຂອງບໍລິສັດໃນອະນາຄົດ. ພ້ອມກັນນັ້ນບໍລິສັດຍັງສາມາດນຳສົ່ງນ້ຳມັນຈາກສາງຂອງບໍລິສັດໄປສູ່ລູກຄ້າໄດ້ຢ່າງທັນທີ ເຊິ່ງເປັນການສ້າງອັດຕາການໝຸນຮອບໃນການຈັດສົ່ງສິນຄ້າ (Turnover) ແລະ ຈະສ້າງຄວາມເພິ່ງພໍໃຈໃຫ້ກັບລູກຄ້າ ພ້ອມທັງຍັງເປັນການສ້າງຄວາມໝັ້ນຄົງໃນການນຳສົ່ງນ້ຳມັນຈາກສາງຂອງບໍລິສັດໄປສູ່ລູກຄ້າ ໂດຍເບື້ອງຕົ້ນບໍລິສັດຄາດວ່າຈະລົງທຶນໃນລົດຂົນສົ່ງນ້ຳມັນ ຈຳນວນ 25 ຄັນ ໂດຍມີລາຍລະອຽດດັ່ງນີ້:

ຕາຕະລາງທີ 1.5.2: ລາຍລະອຽດການລົງທຶນໃນການບໍລິຫານລະບົບການຂົນສົ່ງ

| ປະເພດລົດ | ລາຄາປະມານຕໍ່ໜ່ວຍ | ຈຳນວນ (ຄັນ) | ລວມມູນຄ່າ |
|---|---|---|---|
| 1.) ລົດບັນທຸກນ້ຳມັນ ຂະໜາດບັນຈຸ 40,000 ລິດ | ປະມານ 1.86 ຕື້ກີບ | 15 | ປະມານ 27.00 ຕື້ກີບ |
| 2.) ລົດບັນທຸກນ້ຳມັນ ຂະໜາດບັນຈຸ 25,000 ລິດ | ປະມານ 1.30 ຕື້ກີບ | 10 | ປະມານ 13.00 ຕື້ກີບ |
| **ລວມມູນຄ່າທັງໝົດ** | | | **ປະມານ 40.00 ຕື້ກີບ** |

ຄາດການງົບລົງທຶນຢູ່ທີ່ປະມານ 40 ຕື້ກີບ ແລະ ຄາດວ່າຈະໃຊ້ເງິນຈາກການລະດົມທຶນຈາກ IPO ປະມານບໍ່ຫຼຸດ 24 ຕື້ກີບ ເຊິ່ງຈະເລີ່ມລົງທຶນໃນປີ 2015.

ສຳລັບໂຄງການລົງທຶນເພື່ອໃຊ້ເປັນເງິນທຶນໝຸນວຽນເພື່ອບໍລິຫານການສັ່ງຊື້ນ້ຳມັນຈາກຕ່າງປະເທດ ແລະ ໂຄງການລົງທຶນໃນການບໍລິຫານລະບົບຂົນສົ່ງ ແມ່ນຈະຊ່ວຍເພີ່ມສັກກະຍາພາບໃນການຈັດຫານ້ຳມັນເຊື້ອໄຟ ແລະ ຊ່ວຍຫຼຸດການເພິ່ງພາຜູ້ຜະລິດນ້ຳມັນໃນປະເທດໄທເພື່ອເປັນການເພີ່ມຄວາມໝັ້ນຄົງ ແລະ ຫຼຸດຄວາມສ່ຽງ. ອີກທັງຍັງຊ່ວຍໃຫ້ບໍລິສັດສາມາດຫຼຸດຕົ້ນທຶນໃນການຈັດຫາ ແລະ ຂົນສົ່ງນ້ຳມັນຂອງບໍລິສັດ ເຊິ່ງຖືເປັນຕົ້ນທຶນທີ່ສຳຄັນ. ລວມເຖິງຍັງຊ່ວຍສົ່ງເສີມຂີດຄວາມສາມາດໃນການແຂ່ງຂັນຂອງບໍລິສັດອີກດ້ວຍ. ໃນເບື້ອງຕົ້ນ ທາງບໍລິສັດຄາດວ່າພາຍຫຼັງຈາກການລົງທຶນໃນໂຄງການດັ່ງກ່າວຈະເຮັດໃຫ້ບໍລິສັດມີຄວາມສາມາດໃນການສ້າງກຳໄລເພີ່ມຂຶ້ນ ຄິດເປັນອັດຕາກຳໄລສຸດທິດເພີ່ມຂຶ້ນປະມານ 1.5 - 2 ສ່ວນຮ້ອຍຂອງລາຍໄດ້ລວມ.

ສະຫຼຸບໂຄງການ ລາຍລະອຽດໂຄງການ ການລົງທຶນໃນອະນາຄົດ ແລະ ແຜນການໃຊ້ເງິນຈາກການ IPO ໂດຍມີລາຍລະອຽດສະຫຼຸບຕາມຕາຕະລາງລຸ່ມນີ້:

ຕາຕະລາງທີ 1.5.3 : ເປົ້າໝາຍການນຳໃຊ້ເງິນທີ່ໄດ້ຈາກການອອກຈຳໜ່າຍຮຸ້ນ

| ວັດຖຸປະສົງ | ມູນຄ່າການລົງທຶນທັງໝົດ | ຈຳນວນເງິນທີ່ໃຊ້ຈາກການລະດົມທຶນ IPO | ຄາດຄະເນໄລຍະເວລາທີ່ນຳໃຊ້ເງິນຈາກການອອກຈຳໜ່າຍຮຸ້ນ |
|---|---|---|---|
| 1.) ລົງທຶນໃນການສ້າງສະຖານີບໍລິການນ້ຳມັນ ຈຳນວນ 20 ສະຖານີ ທົ່ວປະເທດ | ປະມານ 68 ຕື້ກີບ | ບໍ່ຫຼຸດ 54 ຕື້ກີບ | ທ້າຍປີ2014 - ຕົ້ນປີ 2015 |
| 2.) ໃຊ້ເປັນເງິນທຶນໝຸນວຽນເພື່ອບໍລິຫານການ ສັ່ງຊື້ນ້ຳມັນຈາກຕ່າງປະເທດ | ປະມານ 80 ຕື້ກີບ | ບໍ່ຫຼຸດ 42 ຕື້ກີບ | ປີ 2015 |
| 3.) ລົງທຶນໃນການບໍລິຫານລະບົບການຂົນສົ່ງ | ປະມານ 40 ຕື້ກີບ | ບໍ່ຫຼຸດ 24 ຕື້ກີບ | ປີ 2015 |
| **ລວມ** | **ປະມານ 188 ຕື້ກີບ** | **ບໍ່ຫຼຸດ 120 ຕື້ກີບ** | |

## ແຜນທຸລະກິດໄລຍະຍາວ

ບໍລິສັດມີແຜນທຸລະກິດໄລຍະຍາວໃນການທີ່ຈະເປັນສ່ວນໜຶ່ງຂອງການພັດທະນາ ແລະ ການສຳຮອງຈັດສັນແຫຼ່ງນ້ຳມັນເຊື້ອໄຟໃຫ້ກັບປະເທດທັງໃນດ້ານການຈັດຫາ ແລະ ຈັດເກັບສຳຮອງນ້ຳມັນເຊື້ອໄຟໃຫ້ມີປະລິມານພຽງພໍເພື່ອຄວາມໝັ້ນຄົງທາງດ້ານພະລັງງານເຊື້ອໄຟຂອງ ສປປ ລາວ. ຖ້າຫາກມີຄວາມຊັດເຈນກ່ຽວກັບໂຄງການດັ່ງກ່າວ ທາງບໍລິສັດຈະເປີດເຜີຍຂໍ້ມູນຕໍ່ນັກລົງທຶນຕໍ່ໄປ ເຊິ່ງອາດຈະສົ່ງຜົນໃຫ້ບໍລິສັດຈະຕ້ອງມີການລະດົມທຶນຜ່ານເຄື່ອງມືທາງການເງິນຕ່າງໆຕໍ່ໄປ.

## 1.6 ຊັບສິນທີ່ໃຊ້ໃນການດຳເນີນທຸລະກິດ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ມີຊັບສິນເປັນຈຳນວນຫຼວງຫຼາຍ. ຊັບສິນເຫຼົ່ານີ້ໄດ້ແບ່ງອອກເປັນສີ່ປະເພດຄື: ອາຄານສິ່ງປຸກສ້າງ, ເຄື່ອງຈັກ ແລະ ວັດຖຸອຸປະກອນ, ພາຫະນະ, ເຄື່ອງໃຊ້ຫ້ອງການ. ລາຍລະອຽດຂອງຊັບສິນແຕ່ລະປະເພດແມ່ນລະບຸໄວ້ໃນຕາຕະລາງດັ່ງລຸ່ມນີ້:

ຕາຕະລາງ 1.6.1 : ມູນຄ່າຊັບສິນຕາມບັນຊີສຸດທິຂອງປີ 2013

| ລາຍການຊັບສິນ | ກຳມະສິດ | ມູນຄ່າຕາມບັນຊີສຸດທິ |
|---|---|---|
| **ຊັບສິນຄົງທີ່** | | |
| ຕຶກອາຄານ ແລະ ສິ່ງປຸກສ້າງ | ບໍລິສັດເປັນເຈົ້າຂອງ | 39,196,385,185 |
| ເຄື່ອງຈັກ ແລະ ອຸປະກອນ | ບໍລິສັດເປັນເຈົ້າຂອງ | 22,128,692,370 |
| ຍານພະຫະນະ | ບໍລິສັດເປັນເຈົ້າຂອງ | 3,056,586,805 |
| ເຄື່ອງໃຊ້ຫ້ອງການ | ບໍລິສັດເປັນເຈົ້າຂອງ | 3,254,956,167 |
| **ຊັບສິນບໍ່ມີຕົວຕົນ** | | |
| ຄອມພິວເຕີຊອບແວ | ບໍລິສັດເປັນເຈົ້າຂອງ | 506,246,793 |
| **ລວມ** | | **68,142,867,320** |

ໝາຍເຫດ: ບໍລິສັດມີການຮັບໂອນທີ່ດິນເພື່ອປະກອບທຶນ ແລະ ມີການຊື້ທີ່ດິນເພື່ອໃຊ້ໃນການດຳເນີນທຸລະກິດໃນປີ 2014 ເຊິ່ງຈະບັນທຶກເຂົ້າໃນງົບການເງິນ ປີ 2014 ເປັນຕົ້ນໄປ.

ຕາຕະລາງ ທີ 1.6.2: ລາຍການທີ່ດິນທັງໝົດທີ່ໂອນເຂົ້າມາປະກອບເປັນທຶນຂອງບໍລິສັດ

| ລ/ດ | ລາຍລະອຽດ ແລະ ທີ່ຕັ້ງ | ຂະໜາດ (ຕາແມັດ) | ກຳມະສິດ |
|---|---|---|---|
| 1 | ຖະໜົນບ້ານຫຼັກ 23 ແຍກຖະໜົນ 13 ໃຕ້ ບ້ານບໍ່ເຫຼັກ, ເມືອງ ໄຊທານີ, ແຂວງ ນະຄອນຫຼວງວຽງຈັນ | 308,248 | ບໍລິສັດເປັນເຈົ້າຂອງ |
| 2 | ຖະໜົນກຳແພງເມືອງ, ບ້ານໂພນທັນ, ເມືອງ ໄຊເສດຖາ, ແຂວງ ນະຄອນຫຼວງວຽງຈັນ | 10,506 | ບໍລິສັດເປັນເຈົ້າຂອງ |
| 3 | ຖະໜົນບ້ານຫຼັກ 36 ແຍກຖະໜົນ 13 ໃຕ້ ບ້ານ ບໍ່ເຫຼັກ, ເມືອງ ໄຊທານີ,ແຂວງ ນະຄອນຫຼວງວຽງຈັນ | 7,969 | ບໍລິສັດເປັນເຈົ້າຂອງ |
| 4 | ຖະໜົນທ່າເດື່ອ ບ້ານ ໜອງໜ້ຽວ, ເມືອງ ຫາດຊາຍຟອງ, ແຂວງ ນະຄອນຫຼວງວຽງຈັນ | 7,804 | ບໍລິສັດເປັນເຈົ້າຂອງ |
| 5 | ຖະໜົນກຳແພງເມືອງ, ບ້ານ ດອນກອຍ, ເມືອງ ສີສັດຕະນາກ, ແຂວງ ນະຄອນຫຼວງວຽງຈັນ | 4,792 | ບໍລິສັດເປັນເຈົ້າຂອງ |
| 6 | ຖະໜົນທ່າເດື່ອ ບ້ານ ໜອງແຫ້ວ, ເມືອງ ຫາດຊາຍຟອງ, ແຂວງ ນະຄອນຫຼວງວຽງຈັນ | 3,567 | ບໍລິສັດເປັນເຈົ້າຂອງ |
| 7 | ຖະໜົນດົງປ່າແລບ ບ້ານ ດົງປ່າແລບ, ເມືອງ ຈັນທະບູລີ, ແຂວງ ນະຄອນຫຼວງວຽງຈັນ | 2,154 | ບໍລິສັດເປັນເຈົ້າຂອງ |
| 8 | ຖະໜົນເລກ 9 ກິໂລເມັດທີ 22+100 ບ້ານ ໜອງໂກມ, ເມືອງ ໄກສອນ ພົມວິຫານ, ແຂວງສະຫວັນນະເຂດ | 11,134 | ບໍລິສັດເປັນເຈົ້າຂອງ |
| 9 | ຖະໜົນໝາຍເລກ 9 ກິໂລເມັດທີ 22+200 ບ້ານ ໜອງໂກມ ເມືອງ ໄກສອນ ພົມວິຫານ, ແຂວງ ສະຫວັນນະເຂດ | 6,109 | ບໍລິສັດເປັນເຈົ້າຂອງ |
| 10 | ຖະໜົນສີສະຫວ່າງວົງ ບ້ານ ສຸນັນທາ ເມືອງ ໄກສອນພົມວິຫານ, ແຂວງ ສະຫວັນນະເຂດ | 1,277 | ບໍລິສັດເປັນເຈົ້າຂອງ |
| 11 | ຖະໜົນໄກສອນພົມວິຫານ, ບ້ານ ໂນນສະຫວ່າງໃຕ້, ເມືອງ ໄກສອນພົມວິຫານ, ແຂວງສະຫວັນນະເຂດ | 1,127 | ບໍລິສັດເປັນເຈົ້າຂອງ |
| 12 | ບໍລິເວນກິໂລເມັດທີ່ 183+700 ບ້ານ ເພຍງາມ, ເມືອງ ເງິນ, ແຂວງ ໄຊຍະບູລີ | 10,675 | ບໍລິສັດເປັນເຈົ້າຂອງ |
| 13 | ຕິດຖະໜົນໝາຍເລກ 10 ບໍລິເວນຫຼັກກິໂລແມັດທີ 29+500 ບ້ານ ໂນນຫີນ, ເມືອງ ໂພນທອງ, ແຂວງ ຈຳປາສັກ | 1,920 | ບໍລິສັດເປັນເຈົ້າຂອງ |

ໝາຍເຫດ: ໃນທ້າຍປີ ວັນທີ 31 ທັນວາ 2013 ທີ່ດິນທັງໝົດນີ້ຍັງອອກຊື່ເປັນຂອງບຸກຄົນ ແລະ ໄດ້ມີການໂອນມາເປັນກຳມະສິດຂອງບໍລິສັດນັບແຕ່ເດືອນ ສິງຫາ 2014 ເປັນຕົ້ນມາ.

### 1.6.1 ສາງນ້ຳມັນ

ໃນວັນທີ 31 ທັນວາ 2013 ບໍລິສັດມີສາງນ້ຳມັນທັງໝົດ 4 ແຫ່ງ ໂດຍມີລາຍລະອຽດດັ່ງລຸ່ມນີ້:

ຕາຕະລາງທີ 1.6.3: ສະແດງເຖິງລັກສະນະກຳມະສິດທີ່ດິນ ໃນວັນທີ 31 ທັນວາ 2013

| ສາງນ້ຳມັນ | ລັກສະນະການໃຊ້ງານ | ຈຳນວນ (ຖັງ) | ຂະໜາດບັນຈຸ (ລິດ) | ລັກສະນະກຳມະສິດ |
|---|---|---|---|---|
| 1. ສາງນ້ຳມັນວຽງຈັນ | ສາງເກັບນ້ຳມັນ | 16 | 1,120,000 | ບໍລິສັດມີສິດນຳໃຊ້ທີ່ດິນຈາກບຸກຄົນທີ່ກ່ຽວພັນກັນຂອງບໍລິສັດ ແລະ ສິ່ງປຸກສ້າງ, ເຄື່ອງມື ແລະ ອຸປະກອນສຳນັກງານ |
| 2. ສາງນ້ຳມັນສະຫວັນນະເຂດ | ສາງເກັບນ້ຳມັນ | 16 | 800,000 | ບໍລິສັດມີສິດນຳໃຊ້ທີ່ດິນຈາກບຸກຄົນທີ່ກ່ຽວພັນກັນຂອງບໍລິສັດ ແລະ ສິ່ງປຸກສ້າງ, ເຄື່ອງມື ແລະ ອຸປະກອນສຳນັກງານ |
| 3. ສາງນ້ຳມັນເມືອງຊຽງເງີນ | ສາງເກັບນ້ຳມັນ | 18 | 700,000 | ບໍລິສັດມີສິດນຳໃຊ້ທີ່ດິນຈາກບຸກຄົນທີ່ກ່ຽວພັນກັນຂອງບໍລິສັດ ແລະ ສິ່ງປຸກສ້າງ, ເຄື່ອງມື ແລະ ອຸປະກອນສຳນັກງານ |
| 4. ສາງນ້ຳມັນບໍລິຄຳໄຊ | ສາງເກັບນ້ຳມັນ | 12 | 350,000 | ບໍລິສັດເຊົ່າທີ່ດິນສ່ວນບຸກຄົນພາຍນອກເພື່ອເຮັດສາງນ້ຳມັນ |
| **ລວມ** | | **62** | **2,970,000** | |

ໝາຍເຫດ: ບໍລິສັດໄດ້ມີການໂອນກຳມະສິດທີ່ດິນ 3 ຕອນເຂົ້າມາເປັນຊັບສິນຂອງບໍລິສັດ ແລະ ສ້າງສາງນ້ຳມັນຂຶ້ນອີກ 1 ແຫ່ງ, ປັດຈຸບັນຈຶ່ງມີ ສາງນ້ຳມັນເປັນຈຳນວນ 5 ແຫ່ງ ດັ່ງລາຍລະອຽດລຸ່ມນີ້:

ຕາຕະລາງທີ 1.6.4: ກຳມະສິດທີ່ດິນຫຼັງມີການໂອນເຂົ້າມາເພີ່ມ

| ສາງນ້ຳມັນ | ລັກສະນະການໃຊ້ງານ | ຈຳນວນ (ຖັງ) | ຂະໜາດ ບັນຈຸ (ລິດ) | ລັກສະນະກຳມະສິດ |
|---|---|---|---|---|
| 1. ສາງນ້ຳມັນວຽງຈັນ* | ສາງເກັບນ້ຳມັນ | 16 | 1,120,000 | ບໍລິສັດເປັນເຈົ້າຂອງກຳມະສິດທີ່ດິນ ແລະ ສິ່ງປຸກສ້າງ, ເຄື່ອງມື ແລະ ອຸປະກອນສຳນັກງານ |
| 2. ສາງນ້ຳມັນສະຫວັນນະເຂດ* | ສາງເກັບນ້ຳມັນ | 16 | 800,000 | ບໍລິສັດເປັນເຈົ້າຂອງກຳມະສິດທີ່ດິນ ແລະ ສິ່ງປຸກສ້າງ, ເຄື່ອງມື ແລະ ອຸປະກອນສຳນັກງານ |
| 3. ສາງນ້ຳມັນເມືອງຊຽງເງີນ* | ສາງເກັບນ້ຳມັນ | 18 | 700,000 | ບໍລິສັດເປັນເຈົ້າຂອງກຳມະສິດທີ່ດິນ ແລະ ສິ່ງປຸກສ້າງ, ເຄື່ອງມື ແລະ ອຸປະກອນສຳນັກງານ |
| 4. ສາງນ້ຳມັນບໍລິຄຳໄຊ | ສາງເກັບນ້ຳມັນ | 12 | 350,000 | ບໍລິສັດເຊົ່າທີ່ດິນສ່ວນບຸກຄົນເພື່ອເຮັດສາງນ້ຳມັນ |
| 5. ສາງນ້ຳມັນຈຳປາສັກ* | ສາງເກັບນ້ຳມັນ | 8 | 640,000 | ບໍລິສັດເປັນເຈົ້າຂອງກຳມະສິດທີ່ດິນ ແລະ ສິ່ງປຸກສ້າງ, ເຄື່ອງມື ແລະ ອຸປະກອນສຳນັກງານ |
| **ລວມ** | | **70** | **3,610,000** | |

**ໝາຍເຫດ**: *ປັດຈຸບັນບໍລິສັດເປັນເຈົ້າຂອງກຳມະສິດທີ່ດິນຕອນດັ່ງກ່າວຮຽບຮ້ອຍແລ້ວ

### 1.6.2 ສະຖານີບໍລິການນ້ຳມັນ

ຮູບແບບບໍລິສັດເປັນເຈົ້າຂອງ ແລະ ຄຸ້ມຄອງບໍລິຫານເອງ (Company Owned Company Operated: COCO) ເຊິ່ງເປັນຮູບແບບທີ່ບໍລິສັດເປັນຜູ້ລົງທຶນເອງໃນຊັບສິນທັງໝົດລວມທັງທີ່ດິນ, ອາຄານ, ຫົວຈ່າຍນ້ຳມັນ ແລະ ການລົງທຶນໃນຊັບສິນຕ່າງໆໃນຮູບແບບນີ້ຈະເປັນຂອງບໍລິສັດເອງທັງໝົດ ລວມທັງການບໍລິຫານຈັດການ ເຊິ່ງປັດຈຸບັນມີສະຖານີທີ່ເປັນ COCO ທັງໝົດລວມ 8 ສະຖານີ. ໃນນັ້ນລວມມີ 3 ສະຖານີທີ່ບໍລິສັດເປັນເຈົ້າຂອງກຳມະສິດທີ່ດິນ, ສ່ວນທີ່ເຫຼືອແມ່ນບໍລິສັດເຊົ່າທີ່ດິນສ່ວນບຸກຄົນ.

ຮູບແບບຮ່ວມລົງທຶນ (Company Owned Dealer Operated: CODO) ເຊິ່ງຮູບແບບດັ່ງກ່າວນີ້ຈະເອີ້ນວ່າ ບໍລິສັດເປັນເຈົ້າຂອງ ແລະ ໃຫ້ຕົວແທນຈຳໜ່າຍເປັນຜູ້ບໍລິຫານງານ, ເປັນການລົງທຶນຮ່ວມກັນລະຫວ່າງບໍລິສັດ ແລະ ບຸກຄົນທົ່ວໄປທີ່ເປັນເຈົ້າຂອງທີ່ດິນໄດ້ມີການສັນຍາຮ່ວມທຶນກັບ PTL ໂດຍທີ່ PTL ຈະເປັນຜູ້ຕິດຕັ້ງຖັງເກັບ, ຕູ້ຈ່າຍ, ອາຄານໃຫ້ກັບຕົວແທນພ້ອມທັງລະບົບການບໍລິຫານຈັດການ ແລະ ເຮັດສັນຍາຊື້ຂາຍນ້ຳມັນຈາກ PTL ແຕ່ພຽງຜູ້ດຽວເປັນເວລາຢ່າງໜ້ອຍ 20 ປີ. ປັດຈຸບັນນີ້ມີສະຖານີທີ່ເປັນຕົວແທນຈຳໜ່າຍແລ້ວທັງໝົດ 99 ສະຖານີ.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໃນຖານະເປັນຜູ້ນຳເຂົ້າ ແລະ ຈັດຈຳໜ່າຍນ້ຳມັນເຊື້ອໄຟຄົບວົງຈອນທີ່ນຳເຂົ້າຈາກຕ່າງປະເທດໂດຍສະເພາະປະເທດໄທ ແລະ ຫວຽດນາມເຊັ່ນ: ນ້ຳມັນກາຊວນ (Diesel), ນ້ຳມັນແອັດຊັງທຳມະດາ (Benzene Regular 91), ນ້ຳມັນແອັດຊັງພິເສດ (Benzene Super 95) ແລະ ນ້ຳມັນເຄື່ອງ (Lubricant) ໂດຍໃຊ້ຮູບແບບການຈັດຈຳໜ່າຍຜ່ານສະຖານີບໍລິການນ້ຳມັນ ແລະ ຂາຍໂດຍກົງເຂົ້າໂຄງການ, ອຸດສາຫະກຳຂົນສົ່ງ ແລະ ລູກຄ້າອື່ນທົ່ວໄປ ຕັ້ງແຕ່ປີ 2008 – ປັດຈຸບັນ

ຕາຕະລາງທີ 1.6.5 : ຈຳນວນສະຖານີບໍລິການນ້ຳມັນທັງໝົດ 107 ສະຖານີ

| ຮູບແບບ | ຈຳນວນສະຖານີບໍລິການ | ອາຍຸສັນຍາທີ່ເຫຼືອ | ຈຳນວນສະຖານີ ປະເພດ COCO | ຈຳນວນສະຖານີ ປະເພດ CODO |
|---|---|---|---|---|
| ພລັສ ເພັລດຕິນຳ (PTN) | 5 | 16 ເຖິງ 19 ປີ | 4 | 1 |
| ພລັສ ໂກລ (GLD) | 7 | 15 ເຖິງ 17 ປີ | 2 | 5 |
| ພລັສ ມາດຕະຖານ (STD) | 38 | 14 ເຖິງ 18 ປີ | 2 | 36 |
| ພລັສ ທ້ອງຖິ່ນພັດທະນາ (THN) | 57 | 15 ເຖິງ 20 ປີ | 0 | 57 |
| ລວມທັງໝົດ | **107** | | **8** | **99** |

ໝາຍເຫດ: ປັດຈຸບັນສະຖານີບໍລິການທີ່ເປັນຮູບແບບ COCO ທັງໝົດ 8 ສະຖານີ ໃນນັ້ນ 3 ສະຖານີແມ່ນບໍລິສັດເປັນເຈົ້າຂອງກຳມະສິດທີ່ດິນ ແລະ ສິ່ງປຸກສ້າງ, ເຄື່ອງມື ແລະ ອຸປະກອນ ແລະ 5 ສະຖານີແມ່ນບໍລິສັດເຊົ່າທີ່ດິນໄລຍະຍາວຈາກບຸກຄົນພາຍນອກ.

ຕາຕະລາງທີ 1.6.6: ສະຫຼຸບຈຳນວນປ້ຳແບ່ງຕາມພູມສັນຖານ

| ຂອບເຂດສະຖານທີ່ | PTN | GLD | STD | THN | ລວມ |
|---|---|---|---|---|---|
| ແຂວງ ນະຄອນຫຼວງວຽງຈັນ | 4 | 4 | 12 | 24 | **44** |
| ແຂວງ ບໍລິຄຳໄຊ | 0 | 0 | 4 | 7 | **11** |
| ແຂວງ ໄຊຍະບູລີ (ເມືອງເງິນ) | 0 | 0 | 3 | 6 | **9** |
| ແຂວງ ສະຫວັນນະເຂດ | 1 | 3 | 19 | 20 | **43** |
| **ລວມ** | **4** | **7** | **38** | **57** | **107** |

### 1.6.3 ສັນຍາສຳຄັນທີ່ກ່ຽວຂ້ອງໃນການດຳເນີນທຸລະກິດ

1. ສັນຍາສຳຄັນສຳລັບການຈັດຫານ້ຳມັນເຊື້ອໄຟ

ບໍລິສັດມີການເຮັດສັນຍາຊື້-ຂາຍນ້ຳມັນເຊື້ອໄຟກັບຜູ້ສະໜອງນ້ຳມັນເຊື້ອໄຟປະກອບມີ:

- ❖ ສັນຍາຊື້-ຂາຍນ້ຳມັນລະຫວ່າງບໍລິສັດ ແລະ Chevron (Thailand) Limited
- ❖ ສັນຍາຊື້-ຂາຍນ້ຳມັນລະຫວ່າງບໍລິສັດ ແລະ ESSO (Thailand) Public Company Limited
- ❖ ສັນຍາຊື້-ຂາຍຜະລິດຕະພັນປິໂຕຣລ້ຽມລະຫວ່າງບໍລິສັດ ແລະ IRPC Public Company Limited

2. ສັນຍາຮ່ວມລົງທຶນ

ສັນຍາຮ່ວມລົງທຶນເປັນສັນຍາການຮ່ວມລົງທຶນລະຫວ່າງບໍລິສັດກັບຜູ້ປະກອບການສະຖານີບໍລິການນ້ຳມັນໃນການສ້າງຕັ້ງສະຖານີແບບ CODO ໃນຮູບແບບຕ່າງໆ ໂດຍມີອາຍຸສັນຍາ 20 ປີ ແລະ ສາມາດຕໍ່ອາຍຸສັນຍາອອກໄປໄດ້ ເຊິ່ງສັນຍາດັ່ງກ່າວຈະຖືກລົງນາມຄວບຄູ່ກັບສັນຍາການຊື້-ຂາຍນ້ຳມັນກັບບໍລິສັດພຽງຜູ້ດຽວ. ບໍລິສັດມີການເຮັດສັນຍາຮ່ວມລົງທຶນກັບຜູ້ຮ່ວມລົງທຶນປະກອບມີ:

- ❖ ສັນຍາການລົງທຶນຮ່ວມກັບຜູ້ຮ່ວມທຶນຮູບແບບພລັສ ແພັລດຕິນຳ
- ❖ ສັນຍາການລົງທຶນຮ່ວມກັບຜູ້ຮ່ວມທຶນຮູບແບບພລັສ ໂກລ
- ❖ ສັນຍາການລົງທຶນຮ່ວມກັບຜູ້ຮ່ວມທຶນຮູບແບບພລັສ ມາດຕະຖານ
- ❖ ສັນຍາການລົງທຶນຮ່ວມກັບຜູ້ຮ່ວມທຶນຮູບແບບພລັສ ທ້ອງຖິ່ນພັດທະນາ

3. ສັນຍາການຊື້-ຂາຍນ້ຳມັນກັບບໍລິສັດພຽງຜູ້ດຽວ

ສັນຍາການຊື້-ຂາຍນ້ຳມັນກັບບໍລິສັດພຽງຜູ້ດຽວ ເປັນສັນຍາທີ່ຜູ້ປະກອບການສະຖານີບໍລິການນ້ຳມັນໃນຮູບແບບ CODO ເຮັດຮ່ວມກັບບໍລິສັດ ເພື່ອໃຫ້ບໍລິສັດເປັນຜູ້ຈັດຈຳໜ່າຍນ້ຳມັນມາຍັງສະຖານີບໍລິການດັ່ງກ່າວພຽງຜູ້ດຽວ ໂດຍສັນຍາດັ່ງກ່າວຈະສ້າງຂຶ້ນ ແລະ ມີອາຍຸສັນຍາເທົ່າກັບສັນຍາຮ່ວມລົງທຶນ ເຊິ່ງບໍລິສັດມີພັນທະໃນການຈັດສົ່ງນ້ຳມັນໃຫ້ແກ່ສະຖານີ CODO ດັ່ງກ່າວ ແລະ ສັນຍາດັ່ງກ່າວຍັງເປັນການສ້າງຄວາມໝັ້ນຄົງທາງດ້ານຍອດຂາຍນ້ຳມັນຂອງບໍລິສັດໃນອະນາຄົດ

ບໍລິສັດມີການເຮັດສັນຍາຊື້-ຂາຍນ້ຳມັນກັບບໍລິສັດພຽງຜູ້ດຽວກັບຜູ້ຮ່ວມລົງທຶນປະກອບມີ:

- ❖ ສັນຍາການຊື້-ຂາຍນ້ຳມັນກັບບໍລິສັດພຽງຜູ້ດຽວຮ່ວມກັບຜູ້ຮ່ວມທຶນຮູບແບບພລັສ ແພັລດຕິນຳ
- ❖ ສັນຍາການຊື້-ຂາຍນ້ຳມັນກັບບໍລິສັດພຽງຜູ້ດຽວຮ່ວມກັບຜູ້ຮ່ວມທຶນຮູບແບບພລັສ ໂກລ
- ❖ ສັນຍາການຊື້-ຂາຍນ້ຳມັນກັບບໍລິສັດພຽງຜູ້ດຽວຮ່ວມກັບຜູ້ຮ່ວມທຶນຮູບແບບພລັສ ມາດຕະຖານ
- ❖ ສັນຍາການຊື້-ຂາຍນ້ຳມັນກັບບໍລິສັດພຽງຜູ້ດຽວຮ່ວມກັບຜູ້ຮ່ວມທຶນຮູບແບບພລັສ ທ້ອງຖິ່ນພັດທະນາ

### 1.6.4 ຊັບສິນຕາມສັນຍາເຊົ່າຊື້

ບໍລິສັດມີຊັບສິນຕາມສັນຍາເຊົ່າຊື້ ໂດຍໃນວັນທີ 31 ທັນວາ 2013 ບໍລິສັດມີສັນຍາເຊົ່າລົດຂົນສົ່ງ Isuzu ເປັນຈຳນວນ 12 ຄັນ ແລະ ລົດຂົນສົ່ງ Daewoo ຈຳນວນ 15 ຄັນ ກັບບໍລິສັດລັດໃຫ້ເຊົ່າສິນເຊື່ອທະນາຄານການຄ້າຕ່າງປະເທດລາວ ພາຍໃຕ້ສັນຍາເຊົ່າ 36 ເດືອນ ແລະ 60 ເດືອນ ເມື່ອຄົບກຳນົດສັນຍາແລ້ວບໍລິສັດມີທາງເລືອກທີ່ຈະສາມາດຊື້ລົດດັ່ງກ່າວໄວ້ເປັນກຳມະສິດຂອງບໍລິສັດເອງໄດ້.

## 1.7 ຂໍ້ຂັດແຍ່ງທາງດ້ານກົດໝາຍ

### ❖ ກົດໝາຍ, ດຳລັດ ແລະ ຂໍ້ຕົກລົງທີ່ຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນໄດ້ດຳເນີນທຸລະກິດພາຍໃຕ້ກົດໝາຍວິສາຫະກິດ ແລະ ຂໍ້ຕົກລົງຂອງກະຊວງອຸດສາຫະກຳ ແລະ ການຄ້າເຊິ່ງລາຍລະອຽດດັ່ງນີ້:

1. ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 1331/ກຄ ລົງວັນທີ 28 ທັນວາ 2005 ເຊິ່ງອ້າງອີງຈາກດຳລັດດັ່ງຕໍ່ໄປນີ້:
   - ອີງຕາມດຳລັດສະບັບເລກທີ 205/ນຍ ລົງວັນທີ 11 ຕຸລາ 2005, ວ່າດ້ວຍການຄຸ້ມຄອງການສົ່ງອອກ ແລະ ນຳເຂົ້າ
   - ອີງຕາມດຳລັດສະບັບເລກທີ 206/ນຍ ລົງວັນທີ 10 ຕຸລາ 2001, ວ່າດ້ວຍທຸລະກິດຈຳໜ່າຍສິນຄ້າ
   - ອີງຕາມດຳລັດສະບັບເລກທີ 06/ນຍ ລົງວັນທີ 24 ມັງກອນ 2006, ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງການຄ້າ
2. ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງທຸລະກິດນຳເຂົ້າ ແລະ ບໍລິການຂາຍຍົກນ້ຳມັນເຊື້ອໄຟ ສະບັບເລກທີ 1785/ອຄ.ຄພນ ລົງວັນທີ 7 ກັນຍາ 2009 ເຊິ່ງອ້າງອີງຈາກກົດໝາຍ ແລະ ດຳລັດດັ່ງຕໍ່ໄປນີ້:
   - ອີງຕາມກົດໝາຍອາຍາ, ສະບັບປັບປຸງເລກທີ 12/ສພຊ, ລົງວັນທີ 10 ພະຈິກ 2005
   - ອີງຕາມດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 205/ນຍ, ລົງວັນທີ 10 ຕຸລາ 2001, ວ່າດ້ວຍການຄຸ້ມຄອງການນຳເຂົ້າ-ສົ່ງອອກສິນຄ້າ
   - ອີງຕາມດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 206/ນຍ, ລົງວັນທີ 10 ຕຸລາ 2001, ວ່າດ້ວຍທຸລະກິດຈຳໜ່າຍສິນຄ້າ
   - ອີງຕາມດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 207/ນຍ, ລົງວັນທີ 11 ຕຸລາ 2001, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ
   - ອີງຕາມດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 188/ນຍ, ລົງວັນທີ 17 ສິງຫາ 2006, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ
3. ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟຢູ່ ສປປ ລາວ ສະບັບເລກທີ 1806/ອຄ.ຄພນ ລົງວັນທີ 8 ກັນຍາ 2009 ເຊິ່ງອ້າງອີງຈາກກົດໝາຍ, ດຳລັດ ແລະ ຂໍ້ຕົກລົງ ດັ່ງຕໍ່ໄປນີ້:
   - ອີງຕາມກົດໝາຍອາຍາ, ສະບັບປັບປຸງເລກທີ 12/ສພຊ, ລົງວັນທີ 10 ພະຈິກ 2005
   - ອີງຕາມດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 206/ນຍ, ລົງວັນທີ 10 ຕຸລາ 2001, ວ່າດ້ວຍທຸລະກິດຈຳໜ່າຍສິນຄ້າ
   - ອີງຕາມດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 207/ນຍ, ລົງວັນທີ 11 ຕຸລາ 2001, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ
   - ອີງຕາມດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 188/ນຍ, ລົງວັນທີ 17 ສິງຫາ 2006, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ
   - ອີງຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ 1785/ອຄ.ຄພນ ລົງວັນທີ 7 ກັນຍາ 2009, ວ່າດ້ວຍການຄຸ້ມຄອງທຸລະກິດນຳເຂົ້າ ແລະ ບໍລິການຂາຍຍົກນ້ຳມັນເຊື້ອໄຟ

### ❖ ຂໍ້ຂັດແຍ່ງທາງກົດໝາຍ

ໃນໄລຍະການດຳເນີນທຸລະກິດຂອງບໍລິສັດ ໂດຍປົກກະຕິ ການຮ້ອງຟ້ອງ ຫຼື ຂໍ້ຂັດແຍ່ງແມ່ນສາມາດເກີດຂຶ້ນໄດ້ ເຊິ່ງອາດຈະສົ່ງຜົນໃຫ້ເກີດມີຄະດີ ຫຼື ຂັ້ນຕອນການດຳເນີນຄະດີໃນສານ. ແຕ່ໃນປັດຈຸບັນບໍລິສັດ ແລະ ບັນດາຜູ້ອຳນວຍການຂອງບໍລິສັດ ຫຼື ບັນດາຜູ້ຖືຮຸ້ນບໍ່ມີສ່ວນພົວພັນເຖິງຄະດີ ຫຼື ຂໍ້ຂັດແຍ່ງທາງກົດໝາຍໃດໆ ທີ່ອາດສົ່ງຜົນກະທົບໃນທາງລົບໃຫ້ກັບບໍລິສັດ.

ຈາກການກວດສອບຂໍ້ຂັດແຍ່ງທາງດ້ານກົດໝາຍ ບໍລິສັດໄດ້ຮັບໃບຢັ້ງຢືນຈາກສານປະຊາຊົນວ່າບໍລິສັດບໍ່ມີ ຄະດີຄົງຄ້າງຢູ່ໃນສານ ໂດຍມີລາຍລະອຽດດັ່ງນີ້:

— ໃບຢັ້ງຢືນຈາກສານປະຊາຊົນນະຄອນຫຼວງວຽງຈັນເລກທີ 30/ສປຊ.ນວ ວັນທີ 16 ຕຸລາ 2014.

## 1.8 ໂຄງສ້າງທຶນຂອງບໍລິສັດ

ປັດຈຸບັນ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ມີທຶນຈົດທະບຽນ ແລະ ທຶນທີ່ຊຳລະແລ້ວ ຈຳນວນ 350.00 ຕື້ກີບ. ໃນນີ້ໄດ້ມີການແຍກຊຳລະຄ່າຮຸ້ນອອກເປັນວັດຖຸຈຳນວນ 230.00 ຕື້ກີບ ແລະ ເປັນເງິນຈຳນວນ 120.00 ຕື້ກີບ. ພາຍຫຼັງການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນຄັ້ງນີ້ ບໍລິສັດຈະມີທຶນຈົດທະບຽນ ແລະ ທຶນທີ່ຊຳລະແລ້ວຈຳນວນ 470.00 ຕື້ກີບ ແບ່ງເປັນຮຸ້ນສາມັນຈຳນວນ 235,000,000 ຮຸ້ນ ໂດຍມີມູນຄ່າກຳນົດ (Par Value) 2,000 ກີບຕໍ່ຮຸ້ນ.

### 1.8.1 ຜູ້ຖືຮຸ້ນ

ຕາຕະລາງທີ 1.8.1: ສັດສ່ວນຜູ້ຖືຮຸ້ນຂອງບໍລິສັດກ່ອນ ແລະ ຫຼັງການອອກຈຳໜ່າຍຮຸ້ນທັງໝົດ.

| ຜູ້ຖືຮຸ້ນ | ກ່ອນການອອກຈຳໜ່າຍຮຸ້ນ IPO | | ຫຼັງການອອກຈຳໜ່າຍຮຸ້ນ IPO | |
|---|---|---|---|---|
| | ຈຳນວນຮຸ້ນ | ອັດຕາສ່ວນຮ້ອຍ (ປະມານ) | ຈຳນວນຮຸ້ນ | ອັດຕາສ່ວນຮ້ອຍ (ປະມານ) |
| **1. ກຸ່ມຄອບຄົວຂອງ ທ່ານ ຈັນທອນ ສິດທິໄຊ** | **173,400,000** | **99.085%** | **173,400,000** | **73.789%** |
| 1.1 ທ່ານ ຈັນທອນ ສິດທິໄຊ | 129,250,000 | 73.857% | 129,250,000 | 55.000% |
| 1.2 ທ່ານ ນາງ ສະຫວັນທອງ ພິງສະຫວັນ | 43,750,000 | 25.000% | 43,750,000 | 18.617% |
| 1.3 ທ່ານ ນາງ ເວີນວິສາ ອານຸລັງສີ | 100,000 | 0.057% | 100,000 | 0.043% |
| 1.4 ທ່ານ ວຽງຄອນ ສິດທິໄຊ | 100,000 | 0.057% | 100,000 | 0.043% |
| 1.5 ທ່ານ ນາງ ມະນີວອນ ສິດທິໄຊ | 100,000 | 0.057% | 100,000 | 0.043% |
| 1.6 ທ່ານ ນາງ ສະຫວັນພອນ ພິງສະຫວັນ | 100,000 | 0.057% | 100,000 | 0.043% |
| **2. ກຸ່ມຜູ້ຖືຮຸ້ນອື່ນໆ** | **1,600,000** | **0.915%** | **1,600,000** | **0.680%** |
| 2.1 ທ່ານ ນາງ ຈັນທະດອມ ເມກສະຫວັນ | 800,000 | 0.457% | 800,000 | 0.340% |
| 2.2 ທ່ານ ບຸນຖົນ ຈິດຕະວົງ | 400,000 | 0.229% | 400,000 | 0.170% |
| 2.3 ທ່ານ ຕະກູນສິນ ຊາພັກດີ | 400,000 | 0.229% | 400,000 | 0.170% |
| **3. ນັກລົງທຶນທົ່ວໄປ** | **-** | **-** | **60,000,000** | **25.531%** |
| **ລວມ** | **175,000,000** | **100.000%** | **235,000,000** | **100.000%** |

ນັບແຕ່ວັນທີທີ່ໄດ້ລະບຸໄວ້ໃນໜັງສືຊວນຊື້ສະບັບນີ້ ຜູ້ຖືຮຸ້ນ 9 ຄົນ ຂອງບໍລິສັດໃນປັດຈຸບັນຈະເປັນຜູ້ຄວບຄຸມຜົນປະໂຫຍດຂອງບໍລິສັດ ໂດຍຜ່ານການຖືຮຸ້ນໃນບໍລິສັດ 100 ສ່ວນຮ້ອຍ ຂອງຈຳນວນຮຸ້ນທັງໝົດທີ່ອອກສະເໜີຂາຍໂດຍບໍລິສັດ ຈຳນວນ 175,000,000 ຮຸ້ນ.

ພາຍຫຼັງຈາກການສະເໜີອອກຈຳໜ່າຍຮຸ້ນ IPO ຂອງບໍລິສັດສຳເລັດແລ້ວຈະສົ່ງຜົນໃຫ້ສັດສ່ວນຂອງຜູ້ຖືຮຸ້ນຂອງບໍລິສັດປ່ຽນແປງໄປດັ່ງນີ້:

- ກຸ່ມຄອບຄົວຂອງ ທ່ານ ຈັນທອນ ສິດທິໄຊ ຈະຖືຄອງຮຸ້ນໃນອັດຕາສ່ວນ 73.789 ສ່ວນຮ້ອຍ
- ຜູ້ຖືຮຸ້ນອື່ນໆຈະຖືຄອງຮຸ້ນໃນອັດຕາສ່ວນ 0.680 ສ່ວນຮ້ອຍ
- ນັກລົງທຶນທົ່ວໄປຈະຖືຄອງຮຸ້ນໃນອັດຕາສ່ວນ 25.531 ສ່ວນຮ້ອຍ

### 1.8.2 ນະໂຍບາຍການຈ່າຍເງິນປັນຜົນ

ບໍລິສັດຈະຈ່າຍເງິນປັນຜົນໃຫ້ແກ່ບັນດາຜູ້ຖືຮຸ້ນໃນອັດຕາສ່ວນບໍ່ຫຼຸດ 50 ສ່ວນຮ້ອຍ ຂອງກຳໄລສຸດທິ ພາຍຫຼັງຫັກເງິນຄັງສຳຮອງຕ່າງໆທຸກປະເພດ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງບໍລິສັດ ແລະ ຕາມທີ່ກົດໝາຍກຳນົດໄວ້ (ຖ້າມີ), ບໍລິສັດຈະບໍ່ຈ່າຍເງິນປັນຜົນເມື່ອບໍລິສັດຍັງມີຂາດທຶນຕໍ່ເນື່ອງໃນສິບປີຜ່ານມາ.

ມະຕິຕົກລົງຕ່າງໆຂອງສະພາບໍລິຫານທີ່ອະນຸມັດໃຫ້ຈ່າຍເງິນປັນຜົນ ແລະ ຈຳນວນຄັ້ງໃນການຈ່າຍເງິນປັນຜົນຕໍ່ປີຕ້ອງຖືກນຳສະເໜີເພື່ອຂໍອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນເສຍກ່ອນ ແລະ ຕ້ອງໃຫ້ສອດຄ່ອງກັບລະບຽບຫຼັກການທີ່ກ່ຽວຂ້ອງຕ່າງໆ.

ເຖິງແນວໃດກໍ່ຕາມ ອັດຕາສ່ວນບໍ່ຫຼຸດ 50 ສ່ວນຮ້ອຍ ດັ່ງກ່າວອາດມີການປ່ຽນແປງຂຶ້ນຢູ່ກັບການພິຈາລະນາ ແລະ ອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ. ການພິຈາລະນາອາດຈະອີງໃສ່ສະພາບເສດຖະກິດ, ກະແສເງິນສົດ, ແຜນການລົງທຶນ, ເງື່ອນໄຂ ແລະ ຂໍ້ກຳນົດໃນສັນຍາຕ່າງໆທີ່ບໍລິສັດຜູກພັນຢູ່ລວມທັງຂໍ້ຈຳກັດທາງກົດໝາຍ ແລະ ຄຽງຄູ່ກັບຄວາມພຽງພໍຂອງທຶນໃນການຮອງຮັບການຂະຫຍາຍຕົວຂອງທຸລະກິດເຊື້ອໄຟໃນອະນາຄົດ.

ບໍລິສັດຈະຈ່າຍເງິນປັນຜົນເປັນສະກຸນເງິນກີບ ແລະ ຜູ້ຖືຮຸ້ນຈະໄດ້ຮັບການຍົກເວັ້ນອາກອນລາຍໄດ້ຈາກເງິນປັນຜົນ.

## 1.9. ການຄຸ້ມຄອງບໍລິສັດ ແລະ ການບໍລິຫານຈັດການ

### 1.9.1 ໂຄງຮ່າງການຈັດຕັ້ງຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໃນເດືອນ ຕຸລາ 2014

ຮູບທີ 1.9.1: ໂຄ່ງຮ່າງການຈັດຕັ້ງ




### 1.9.2 ກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດ

#### ກ. ກອງປະຊຸມຜູ້ຖືຮຸ້ນ

ກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ມີດັ່ງນີ້:

1. ກອງປະຊຸມສາມັນຜູ້ຖືຮຸ້ນ: ຕ້ອງຈັດຂຶ້ນຢ່າງໜ້ອຍປີລະ 1 ຄັ້ງ ຢ່າງຊ້າພາຍໃນເດືອນ 6 ຂອງທຸກປີ.
2. ກອງປະຊຸມວິສາມັນຜູ້ຖືຮຸ້ນ: ການຈັດປະຊຸມອີງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະ ຫຼື ກົດລະບຽບບໍລິສັດ ຫຼື ກົດໝາຍທີ່ກ່ຽວຂ້ອງ.

#### ຂ. ອົງປະຊຸມຂອງກອງປະຊຸມຜູ້ຖືຮຸ້ນ

ອົງປະຊຸມຂອງກອງປະຊຸມຜູ້ຖືຮຸ້ນຂອງ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ມີດັ່ງນີ້:

- ກອງປະຊຸມສາມັນຜູ້ຖືຮຸ້ນ: ຕ້ອງມີຜູ້ເຂົ້າຮ່ວມຢ່າງໜ້ອຍສອງຄົນ ແລະ ຕ້ອງມີຈຳນວນຮຸ້ນເກີນເຄິ່ງໜຶ່ງຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.
- ກອງປະຊຸມວິສາມັນຜູ້ຖືຮຸ້ນ: ຕ້ອງມີຜູ້ເຂົ້າຮ່ວມຢ່າງໜ້ອຍສອງຄົນ ແລະ ຕ້ອງມີຈຳນວນຮຸ້ນເກີນເຄິ່ງໜຶ່ງຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ໝາຍເຫດ: ຮຸ້ນທີ່ເປັນໂມຄະຈາກການໂອນບໍ່ໃຫ້ນັບເປັນອົງປະຊຸມຂອງກອງປະຊຸມຜູ້ຖືຮຸ້ນເຖິງວ່າຜູ້ຖືຮຸ້ນນັ້ນຈະເຂົ້າຮ່ວມກໍ່ຕາມ.

#### ຄ. ສິດໃນການອອກສຽງ

ໂດຍທົ່ວໄປແລ້ວ ຜູ້ຖືຮຸ້ນມີສິດອອກສຽງຕາມຫຼັກການໜຶ່ງຮຸ້ນຕໍ່ໜຶ່ງສຽງ ມະຕິຂອງກອງປະຊຸມຜູ້ຖືຮຸ້ນຈະໄດ້ຮັບອະນຸມັດກໍ່ຕໍ່ເມື່ອມີສຽງສ່ວນຫຼາຍຈາກກອງປະຊຸມຜູ້ຖືຮຸ້ນ. ແຕ່ສຳລັບມະຕິສະເພາະຈະຕ້ອງໄດ້ຮັບການອະນຸມັດໂດຍການອອກສຽງຢ່າງໜ້ອຍສອງສ່ວນສາມຂອງຈຳນວນຜູ້ຖືຮຸ້ນ ຫຼື ຕົວແທນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ມີ

ຮຸ້ນລວມກັນແລ້ວຫຼາຍກວ່າ 80 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ. ປະເດັນທີ່ພົວພັນເຖິງບໍລິສັດດັ່ງຕໍ່ໄປນີ້ ຈຳເປັນຕ້ອງມີມະຕິສະເພາະຂອງຜູ້ຖືຮຸ້ນ:

- ການລົງຄະແນນສຽງໃນບັນຫາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ
- ການປ່ຽນແປງກົດລະບຽບ ຫຼື ສັນຍາສ້າງຕັ້ງບໍລິສັດ
- ການເພີ່ມທຶນ ຫຼື ການຫຼຸດທຶນຂອງບໍລິສັດ
- ການຄວບ ຫຼື ຍຸບເລີກບໍລິສັດ
- ການຂາຍ ຫຼື ການໂອນກິດຈະການທັງໝົດ ຫຼື ບາງສ່ວນທີ່ມີຄວາມສຳຄັນໃຫ້ບຸກຄົນອື່ນ
- ການຊື້ ຫຼື ຮັບໂອນກິດຈະການຂອງວິສາຫະກິດອື່ນ

ອີງຕາມກົດໝາຍ ວ່າດ້ວຍວິສາຫະກິດ, ຜູ້ຖືຮຸ້ນອາດຈະຖືກຫ້າມລົງຄະແນນສຽງກ່ຽວກັບບັນຫາທີ່ຕົນມີຄວາມກ່ຽວຂ້ອງ ຫຼື ອາດຈະໄດ້ຮັບກຳໄລ ຫຼື ຜົນປະ�โຫຍດໂດຍກົງ. ບັນດາສະມະຊິກທີ່ມີໜ້າເຂົ້າຮ່ວມປະຊຸມຜູ້ຖືຮຸ້ນຈະຕ້ອງກຳນົດວ່າຜູ້ຖືຮຸ້ນນັ້ນຕົກຢູ່ໃນກໍລະນີດັ່ງກ່າວນີ້ ຫຼື ບໍ່.

### 1.9.3 ຄະນະກຳມະການ ແລະ ຜູ້ບໍລິຫານ

ໂຄງສ້າງຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ແມ່ນໄດ້ມີການດັດປັບເພື່ອໃຫ້ສອດຄ່ອງກັບການຂະຫຍາຍຕົວຂອງທຸລະກິດ ແລະ ເພື່ອເຮັດໃຫ້ບໍລິສັດກາຍເປັນບໍລິສັດມະຫາຊົນຢ່າງເຕັມຮູບແບບ. ຄະນະກຳມະການ ແລະ ຜູ້ບໍລິຫານຂອງບໍລິສັດປະກອບດ້ວຍ ສະພາບໍລິຫານ 9 ທ່ານ, ຄະນະກຳມະການກວດກາພາຍໃນ 3 ທ່ານ, ຄະນະກຳມະການສະເພາະດ້ານ 3 ທ່ານ ແລະ ຄະນະອຳນວຍການຂອງບໍລິສັດ 7 ທ່ານ

.

ຕາຕະລາງທີ 1.9.1 : ລາຍຊື່ຄະນະກຳມະການ ແລະ ຜູ້ບໍລິຫານ

| ລຳດັບ | ລາຍຊື່ | ຕຳແໜ່ງ |
|---|---|---|
| I. | **ຜູ້ຖືຮຸ້ນ** | |
| II. | **ສະພາບໍລິຫານ (Board of Directors)** | |
| 1 | ທ່ານ ຫວ່າງ ຣັຕນະວົງ | ປະທານສະພາບໍລິຫານ / ປະທານຄະນະກຳມະການກວດກາພາຍໃນ / ສະມາຊິກອິດສະຫຼະ |
| 2 | ທ່ານ ນາງ ສະຫວັນທອງ ພົງສະຫວັນ | ຮອງປະທານສະພາບໍລິຫານ |
| 3 | ທ່ານ ຈັນທອນ ສິດທິໄຊ | ຮອງປະທານສະພາບໍລິຫານ / ຜູ້ອຳນວຍການໃຫຍ່ |
| 4 | ທ່ານ ນາງ ດາລີ ພົນເສນາ | ສະມາຊິກສະພາບໍລິຫານ / ຮອງປະທານຄະນະກຳມະການກວດກາພາຍໃນ / ສະມາຊິກອິດສະຫຼະ |
| 5 | ທ່ານ ໝູພັນ ມະຫາພົນ | ສະມາຊິກສະພາບໍລິຫານ / ກຳມະການກວດກາພາຍໃນ / ສະມາຊິກອິດສະຫຼະ |
| 6 | ທ່ານ ນາງ ຈັນທະດອມ ເມກສະຫວັນ | ສະມາຊິກສະພາບໍລິຫານ |
| 7 | ທ່ານ ບຸນຖົນ ຈິດຕະວົງ | ສະມາຊິກສະພາບໍລິຫານ |
| 8 | ທ່ານ ໂພໄຊ ຈັນທະວົງສາ | ສະມາຊິກສະພາບໍລິຫານ |
| 9 | ທ່ານ ວຽງຄອນ ສິດທິໄຊ | ສະມາຊິກສະພາບໍລິຫານ |
| III. | **ຄະນະກຳມະການກວດກາພາຍໃນ (Audit Committee)** | |
| 1 | ທ່ານ ຫວ່າງ ຣັຕນະວົງ | ປະທານຄະນະກຳມະການກວດກາພາຍໃນ / ສະມາຊິກອິດສະຫຼະ |
| 2 | ທ່ານ ນາງ ດາລີ ພົນເສນາ | ຮອງປະທານຄະນະກຳມະການກວດກາພາຍໃນ / ສະມາຊິກອິດສະຫຼະ |

| ລຳດັບ | ລາຍຊື່ | ຕຳແໜ່ງ |
|---|---|---|
| 3 | ທ່ານ ໜູພັນ ມະຫາພົນ | ກຳມະການກວດກາພາຍໃນ / ສະມາຊິກອິດສະຫຼະ |
| IV. | **ຄະນະກຳມະການສະເພາະດ້ານ** | |
| 1 | ທ່ານ ບຸນຖົນ ຈິດຕະວົງ | ປະທານຄະນະກຳມະການບໍລິຫານ |
| 2 | ທ່ານ ນາງ ຈັນທະດອມ ເມກສະຫວັນ | ປະທານຄະນະກຳມະການບໍລິຫານຄວາມສ່ຽງ |
| 3 | ທ່ານ ຈັນທອນ ສິດທິໄຊ | ປະທານຄະນະກຳມະການເສດຖະກິດ |
| V. | **ຄະນະອຳນວຍການ** | |
| 1 | ທ່ານ ຈັນທອນ ສິດທິໄຊ | ຜູ້ອຳນວຍການໃຫຍ່ / ຮັກສາການຮອງຜູ້ອຳນວຍການໃຫຍ່ຝ່າຍປະຕິບັດການ / ຮັກສາການຫົວໜ້າພະແນກຍຸດທະສາດອົງກອນ / ຮັກສາການຫົວໜ້າພະແນກ MIS |
| 2 | ທ່ານ ນາງ ຈັນທະດອມ ເມກສະຫວັນ | ຮັກສາການຮອງຜູ້ອຳນວຍການໃຫຍ່ຝ່າຍການເງິນ |
| 3 | ທ່ານ ໂພໄຊ ຈັນທະວົງສາ | ຜູ້ກວດສອບພາຍໃນ |
| 4 | ທ່ານ ບຸນຖົນ ຈິດຕະວົງ | ຮັກສາການຫົວໜ້າພະແນກປະຕິບັດການ |
| 5 | ທ່ານ ຕະກູນສິນ ຊາພັກດີ | ຫົວໜ້າພະແນກການຄ້າ |
| 6 | ທ່ານ ບຸນຍືນ ດວງສອນ | ຫົວໜ້າພະແນກບໍລິຫານ |
| 7 | ທ່ານ ນາງ ແສງເດືອນ ກ້ຽວສຸວັດ | ຫົວໜ້າພະແນກບັນຊີ |

**ກ. ຜູ້ມີສິດອຳນາດ ລົງລາຍເຊັນໃນເອກະສານຜູກພັນບໍລິສັດ**

ຜູ້ມີອຳນາດລົງລາຍເຊັນຜູກພັນບໍລິສັດ ປະກອບມີ ທ່ານ ຈັນທອນ ສິດທິໄຊ ລົງນາມຮ່ວມກັບທ່ານ ນາງ ສະຫວັນທອງ ພົງສະຫວັນ ພ້ອມປະທັບຕາບໍລິສັດ ມີສິດອຳນາດໃນການຮັບຮອງ, ປັບປຸງ ແລະ ລົງລາຍເຊັນ ບັນດາເອກະສານສຳຄັນຂອງບໍລິສັດ.

### 1.9.4 ຂອບເຂດອຳນາດໜ້າທີ່ ແລະ ຄວາມຮັບຜິດຊອບຂອງຄະນະກຳມະການ ແລະ ຜູ້ບໍລິຫານຂອງບໍລິສັດ

**1 ສະພາບໍລິຫານ (Board of Directors)**

**1.1 ອົງປະກອບຂອງສະພາບໍລິຫານ**

ສະພາບໍລິຫານຂອງບໍລິສັດໃນເດືອນ ຕຸລາ 2014 ປະກອບມີ 9 ທ່ານຄື:

ຕາຕະລາງທີ 1.9.2: ລາຍຊື່ຂອງອົງປະກອບສະພາບໍລິຫານ

| ລຳດັບ | ສະພາບໍລິຫານ (Board of Directors) | ຕຳແໜ່ງ |
|---|---|---|
| 1 | ທ່ານ ຫວ່າງ ຣັຕນະວົງ | ປະທານສະພາບໍລິຫານ / ສະມາຊິກອິດສະຫຼະ |
| 2 | ທ່ານ ນາງ ສະຫວັນທອງ ພົງສະຫວັນ | ຮອງປະທານສະພາບໍລິຫານ |
| 3 | ທ່ານ ຈັນທອນ ສິດທິໄຊ | ຮອງປະທານສະພາບໍລິຫານ |
| 4 | ທ່ານ ນາງ ດາລີ ພົນເສນາ | ສະມາຊິກສະພາບໍລິຫານ / ສະມາຊິກອິດສະຫຼະ |
| 5 | ທ່ານ ໜູພັນ ມະຫາພົນ | ສະມາຊິກສະພາບໍລິຫານ / ສະມາຊິກອິດສະຫຼະ |
| 6 | ທ່ານ ນາງ ຈັນທະດອມ ເມກສະຫວັນ | ສະມາຊິກສະພາບໍລິຫານ |
| 7 | ທ່ານ ບຸນຖົນ ຈິດຕະວົງ | ສະມາຊິກສະພາບໍລິຫານ |
| 8 | ທ່ານ ໂພໄຊ ຈັນທະວົງສາ | ສະມາຊິກສະພາບໍລິຫານ |
| 9 | ທ່ານ ວຽງຄອນ ສິດທິໄຊ | ສະມາຊິກສະພາບໍລິຫານ |

### 1.2 ສິດ ແລະ ໜ້າທີ່ຂອງສະພາບໍລິຫານ

- ເປັນໃຈກາງປະສານງານ ແລະ ດັດປັບວຽກງານຂອງບັນດາຜູ້ອຳນວຍການບໍລິສັດ.
- ແຕ່ງຕັ້ງຜູ້ອຳນວຍການບໍລິສັດໃດໜຶ່ງທີ່ວ່າງລົງໃນລະຫວ່າງສອງກອງປະຊຸມຜູ້ຖືຮຸ້ນ.
- ກຳນົດທິດທາງແຜນການໃນການບໍລິຫານຈັດການບໍລິສັດ ເພື່ອສະເໜີຜ່ານກອງປະຊຸມຜູ້ຖືຮຸ້ນ.
- ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງບໍລິສັດ.
- ປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບ, ດ້ວຍຄວາມລະມັດລະວັງ, ດ້ວຍຄວາມສຸດຈະລິດ ແລະ ປະຕິບັດຕາມກົດລະບຽບຂອງບໍລິສັດ, ມະຕິຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ ແລະ ຕາມລະບຽບກົດໝາຍ.
- ພິຈາລະນາແຕ່ງຕັ້ງຄະນະກຳມະການບໍລິຫານ ໂດຍຄັດເລືອກຈາກຜູ້ອຳນວຍການຂອງບໍລິສັດ ພ້ອມທັງກຳນົດຂອບເຂດສິດອຳນາດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຄະນະກຳມະການບໍລິຫານ.
- ພິຈາລະນາແຕ່ງຕັ້ງສະມາຊິກອິດສະຫຼະ ແລະ ຄະນະກຳມະການກວດກາພາຍໃນໂດຍພິຈາລະນາຈາກຄຸນສົມບັດ ແລະ ຂໍ້ຫ້າມຕ່າງໆຂອງສະມາຊິກອິດສະຫຼະ ແລະ ຄະນະກຳມະການກວດກາພາຍໃນຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຫຼື ຕາມຂໍ້ສະເໜີຂອງຜູ້ຖືຮຸ້ນ ເພື່ອພິຈາລະນາແຕ່ງຕັ້ງເປັນສະມາຊິກອິດສະຫຼະ ແລະ ຄະນະກຳມະການກວດກາພາຍໃນ.
- ພິຈາລະນາກຳນົດ ແລະ ແກ້ໄຂ ປ່ຽນແປງຜູ້ອຳນວຍການບໍລິສັດທີ່ມີສິດອຳນາດໃນການສ້າງຂໍ້ຜູກພັນກັບບໍລິສັດ.
- ແຕ່ງຕັ້ງບຸກຄົນໃດໜຶ່ງໃຫ້ດຳເນີນທຸລະກິດ ທີ່ຢູ່ພາຍໃຕ້ການຄວບຄຸມຂອງຜູ້ອຳນວຍການບໍລິສັດ ຫຼື ອາດຈະເປັນການມອບສິດໃຫ້ບຸກຄົນດັ່ງກ່າວມີສິດໃນການດຳເນີນການໃດໜຶ່ງ ພາຍໃນໄລຍະເວລາໃດໜຶ່ງ ແລະ ສາມາດຍົກເລີກໄດ້ທຸກເວລາ.
- ພິຈາລະນາ ແລະ ອະນຸມັດການມອບໂອນ-ຮັບໂອນ, ຊື້-ຂາຍ ຊັບສິນຂອງບໍລິສັດ ຍົກເວັ້ນລາຍການຊັບສິນທີ່ຕ້ອງໄດ້ຮັບການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ. ໃນການພິຈາລະນາ ແລະ ການອະນຸມັດນັ້ນ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການກ່ຽວກັບຫຼັກຊັບ.
- ພິຈາລະນາ ແລະ ອະນຸມັດລາຍການທີ່ກ່ຽວຂ້ອງກັບຊັບສິນ ຍົກເວັ້ນແຕ່ລາຍການທີ່ຈະຕ້ອງໄດ້ຮັບຄຳເຫັນດີຂອງກອງປະຊຸມຜູ້ຖືຮຸ້ນ ໃນການພິຈາລະນາ ແລະ ອະນຸມັດນັ້ນ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວກັບ ກົດໝາຍວ່າດ້ວຍຫຼັກຊັບ.
- ປະເມີນຜົນການປະຕິບັດງານ ແລະ ກຳນົດຄ່າຕອບແທນຂອງຄະນະກຳມະການ ແລະ ຜູ້ບໍລິຫານລະດັບສູງ ຊຸກຍູ້ໃຫ້ຝ່າຍບໍລິຫານ ມີລະບົບການບໍລິຫານຄວາມສ່ຽງຢ່າງເໝາະສົມ ແລະ ມີປະສິດທິພາບ.
- ຕິດຕາມ ແລະ ຊຸກຍູ້ໃຫ້ກຳນົດເປົ້າໝາຍການດຳເນີນທຸລະກິດທີ່ຈະແຈ້ງ ແລະ ສາມາດວັດຜົນໄດ້ ເພື່ອໃຊ້ໃນການກຳນົດເປົ້າໝາຍ ໃນການດຳເນີນທຸລະກິດ ໂດຍພິຈາລະນາຈາກຄວາມເໝາະສົມ ແລະ ຄວາມເປັນໄປໄດ້.

### 1.3 ວາລະການດຳລົງຕຳແໜ່ງຂອງສະພາບໍລິຫານ

ສະພາບໍລິຫານຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍກອງປະຊຸມຜູ້ຖືຮຸ້ນດ້ວຍຄະແນນສຽງສ່ວນຫຼາຍຂອງບັນດາຜູ້ຖືຮຸ້ນທີ່ໄດ້ເຂົ້າຮ່ວມໃນກອງປະຊຸມ. ສະພາບໍລິຫານທຸກທ່ານມີອາຍຸການດຳລົງຕຳແໜ່ງ 2 ປີ ແລະ ອາດຈະມີການເລືອກຕັ້ງຄືນໃໝ່ໃນສະໄໝຕໍ່ໄປໄດ້ ດັ່ງທີ່ໄດ້ມີການລະບຸໄວ້ໃນກົດລະບຽບບໍລິສັດ ຫຼື ກົດໝາຍທີ່ກ່ຽວຂ້ອງ.

### 1.4 ຜົນຕອບແທນຂອງສະພາບໍລິຫານ

ສຳລັບການຈ່າຍຄ່າຕອບແທນຂອງສະພາບໍລິຫານແມ່ນກຳນົດຈ່າຍເປັນເງິນເດືອນ 12,000,000 ກີບ/ເດືອນ/ທ່ານ. ສຳລັບການເດີນທາງມາເຂົ້າຮ່ວມກອງປະຊຸມໃນແຕ່ລະຄັ້ງແມ່ນຈະໄດ້ຮັບຄ່າເບ້ຍປະຊຸມຄື:

- ປະທານສະພາບໍລິຫານ 1,500,000 ກີບ/ຄັ້ງ/ທ່ານ

- ຮອງປະທານສະພາບໍລິຫານ 1,000,000 ກີບ/ຄັ້ງ/ທ່ານ
- ສະມາຊິກສະພາບໍລິຫານ 500,000 ກີບ/ຄັ້ງ/ທ່ານ

## 2. ຄະນະກຳມະການກວດກາພາຍໃນ (Audit Committee)

### 2.1 ອົງປະກອບຂອງຄະນະກຳມະການກວດກາພາຍໃນ

ອົງປະກອບຂອງຄະນະກຳມະການກວດກາພາຍໃນຂອງບໍລິສັດໃນເດືອນ ຕຸລາ 2014 ປະກອບມີ 3 ທ່ານຄື:

ຕາຕະລາງທີ 1.9.3: ລາຍຊື່ອົງປະກອບຂອງຄະນະກຳມະການກວດສອບພາຍໃນ

| ລຳດັບ | ຄະນະກຳມະການກວດກາພາຍໃນ | ຕຳແໜ່ງ |
|---|---|---|
| 1 | ທ່ານ ຫວ່າງ ຣັຕນະວົງ | ປະທານຄະນະກຳມະການກວດກາພາຍໃນ / ສະມາຊິກອິດສະຫຼະ |
| 2 | ທ່ານ ນາງ ດາລີ ພົນເສນາ | ຮອງປະທານຄະນະກຳມະການກວດກາພາຍໃນ /ສະມາຊິກອິດສະຫຼະ |
| 3 | ທ່ານ ໜູພັນ ມະຫາພົນ | ກຳມະການກວດກາພາຍໃນ / ສະມາຊິກອິດສະຫຼະ |

### 2.2 ຄຸນສົມບັດຂອງຄະນະກຳມະການກວດກາພາຍໃນ

- ຄຸນວຸດທິການສຶກສາລະດັບປະລິນຍາຕີຂຶ້ນໄປ ສາຂາການບັນຊີ, ກວດສອບ, ກົດໝາຍ, ການເງິນ-ການທະນາຄານ ຫຼື ບໍລິຫານທຸລະກິດ ຫຼື ຄຸນວຸດທິອື່ນໆທີ່ກ່ຽວຂ້ອງກັບທຸລະກິດຂອງບໍລິສັດ.
- ບໍ່ເຄີຍຖືກສານຕັດສິນໃຫ້ເປັນຜູ້ລົ້ມລະລາຍມາກ່ອນ ແລະ ບໍ່ເປັນຜູ້ບໍລິຫານໃນນິຕິບຸກຄົນທີ່ຖືກສານຕັດສິນໃຫ້ລົ້ມລະລາຍ.
- ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາເປັນຕົ້ນ ໃນສະຖານສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຝອກເງິນ.
- ຖືຮຸ້ນບໍ່ເກີນໜຶ່ງສ່ວນຮ້ອຍຂອງຈຳນວນຮຸ້ນທີ່ມີສິດອອກສຽງທັງໝົດຂອງບໍລິສັດທີ່ກ່ຽວຂ້ອງ.
- ບໍ່ເຄີຍ ຫຼື ເຄີຍເປັນຜູ້ອຳນວຍການທີ່ມີສ່ວນຮ່ວມໃນການບໍລິຫານ, ພະນັກງານ, ທີ່ປຶກສາທີ່ໄດ້ຮັບເງິນເດືອນປະຈຳ ຫຼື ຜູ້ທີ່ມີອຳນາດຄວບຄຸມບໍລິສັດ ແລະ ບໍລິສັດທີ່ກ່ຽວຂ້ອງ.ຍົກເວັ້ນຜູ້ກ່ຽວໄດ້ໝົດໜ້າທີ່ມາໄດ້ 2 ປີແລ້ວ ກ່ອນວັນຍື່ນຈົດທະບຽນໃນຕະຫຼາດຫຼັກຊັບລາວ ແຕ່ວ່າຂໍ້ຫ້າມດັ່ງກ່າວຈະບໍ່ລວມເອົາກຳລະນີກຳມະການອິດສະຫຼະ ເປັນພະນັກງານລັດຖະກອນ ຫຼື ທີ່ປຶກສາຂອງການຈັດຕັ້ງລັດ ເຊິ່ງເປັນຜູ້ຖືຮຸ້ນລາຍໃຫຍ່ ຫຼື ຜູ້ທີ່ມີອຳນາດຄວບຄຸມບໍລິສັດ.
- ບໍ່ເປັນບຸກຄົນ ທີ່ມີຄວາມຜູກພັນທາງສາຍເລືອດ ຫຼື ໂດຍການຈົດທະບຽນຕາມກົດໝາຍ ທີ່ເປັນພໍ່, ແມ່, ຄູ່ສົມລົດ, ພີ່ນ້ອງ ແລະ ລູກ ຂອງຜູ້ບໍລິຫານ ຫຼື ຜູ້ຖືຮຸ້ນລາຍໃຫຍ່, ຜູ້ມີອຳນາດຄວບຄຸມ ຫຼື ບຸກຄົນທີ່ຈະໄດ້ຮັບການສະເໜີໃຫ້ເປັນຜູ້ບໍລິຫານ ຫຼື ຜູ້ມີອຳນາດຄວບຄຸມບໍລິສັດ ຫຼື ບໍລິສັດ ໃນເຄືອ.
- ບໍ່ມີ ຫຼື ເຄີຍມີຄວາມສຳພັນທາງທຸລະກິດກັບບໍລິສັດໃຫຍ່, ບໍລິສັດທີ່ກ່ຽວຂ້ອງ, ຜູ້ຖືຮຸ້ນລາຍໃຫຍ່, ຜູ້ຖືຮຸ້ນທີ່ມີອຳນາດຄວບຄຸມບໍລິສັດ ໃນລັກສະນະທີ່ອາດຈະຂັດກັບການໃຊ້ການວິນິດໄສຢ່າງອິດສະຫຼະຂອງຕົນ. ລວມທັງການທີ່ບໍ່ໄດ້ເປັນ ຜູ້ຖືຮຸ້ນ ຫຼື ຜູ້ທີ່ມີອຳນາດໃນການຄວບຄຸມ ບໍລິສັດ ທີ່ມີລັກສະນະສຳພັນທາງທຸລະກິດກັບບໍລິສັດໃຫຍ່ ແລະ ບໍລິສັດທີ່ກ່ຽວຂ້ອງ ຍົກເວັ້ນໃນກໍລະນີ ທີ່ໄດ້ໝົດໜ້າທີ່ດັ່ງກ່າວມາໄດ້ 2 ປີແລ້ວ ກ່ອນການຍື່ນຈົດທະບຽນເຂົ້າຕະຫຼາດຫຼັກຊັບ.
- ບໍ່ເປັນ ຫຼື ເຄີຍເປັນຜູ້ຖືຮຸ້ນ, ຜູ້ທີ່ມີອຳນາດຄວບຄຸມໃນບໍລິສັດກວດສອບບັນຊີ ທີ່ບໍລິສັດກຳລັງຈະຈ້າງເປັນທີ່ປຶກສາດ້ານການກວດສອບບັນຊີ ຍົກເວັ້ນໃນກໍລະນີທີ່ ໄດ້ໝົດໜ້າທີ່ດັ່ງກ່າວມາໄດ້ 2 ປີແລ້ວ ກ່ອນການຍື່ນຈົດທະບຽນເຂົ້າຕະຫຼາດຫຼັກຊັບລາວ.

- ບໍ່ເປັນ ຫຼື ເຄີຍເປັນຜູ້ໃຫ້ບໍລິການທາງດ້ານວິຊາຊີບດ້ານກົດໝາຍ ຫຼື ການເງິນທີ່ໄດ້ຮັບຄ່າແຮງງານເຖິງ 500,000,000 ກີບຈາກບໍລິສັດນີ້ ແລະ ບໍລິສັດທີ່ກ່ຽວຂ້ອງ ຫຼື ຈາກຜູ້ທີ່ມີອຳນາດຄວບຄຸມຂອງບໍລິສັດ ຍົກເວັ້ນໃນກໍລະນີທີ່ໄດ້ໝົດໜ້າທີ່ດັ່ງກ່າວມາໄດ້ 2 ປີແລ້ວກ່ອນການຍື່ນຈົດທະບຽນເຂົ້າຕະຫຼາດຫຼັກຊັບລາວ.
- ບໍ່ເປັນຜູ້ອຳນວຍການທີ່ໄດ້ຮັບການແຕ່ງຕັ້ງ ເປັນຕົວແທນຂອງຜູ້ອຳນວຍການຂອງບໍລິສັດ, ຜູ້ຖືຮຸ້ນລາຍໃຫຍ່ ຫຼື ຜູ້ຖືຮຸ້ນຄົນອື່ນທີ່ມີຄວາມກ່ຽວຂ້ອງກັບຜູ້ຖືຮຸ້ນລາຍໃຫຍ່.
- ບໍ່ປະກອບກິດຈະການທີ່ມີລັກສະນະດຽວກັນ ຫຼື ເປັນການແຂ່ງຂັນກັນກັບບໍລິສັດ ແລະ ບໍລິສັດທີ່ກ່ຽວຂ້ອງ.
- ບໍ່ມີສິ່ງຂັດຂວາງອື່ນໆ ທີ່ຈະເປັນອຸປະສັກໃນການໃຫ້ຄຳເຫັນຢ່າງອິດສະຫຼະຕໍ່ການບໍລິຫານຂອງບໍລິສັດ.
- ຄຸນສົມບັດຂອງຄະນະກຳມະການກວດກາພາຍໃນ ທີ່ກ່າວມານີ້ອາດໄດ້ຮັບມອບໝາຍຈາກສະພາບໍລິຫານຂອງບໍລິສັດ ໃຫ້ຕັດສິນໃຈໃນການດຳເນີນກິດຈະການຂອງບໍລິສັດໃຫຍ່, ບໍລິສັດທີ່ກ່ຽວຂ້ອງ, ບໍລິສັດຮ່ວມ, ຜູ້ຖືຮຸ້ນລາຍໃຫຍ່ ຫຼື ຜູ້ມີອຳນາດໃນການຄວບຄຸມ ໂດຍໃຊ້ວິທີການຕັດສິນໃຈແບບອົງຄະນະ (Collective Decision).

### 2.3 ສິດ ແລະ ໜ້າທີ່ຂອງຄະນະກຳມະການກວດກາພາຍໃນ

- ສ້າງແຜນການກວດກາໃຫ້ສອດຄ່ອງກັບຂອບເຂດສິດ ແລະ ໜ້າທີ່ຂອງຕົນ ທີ່ໄດ້ຮັບມອບໝາຍຈາກສະພາບໍລິຫານ ເຊິ່ງແຜນດັ່ງກ່າວຕ້ອງກວມເອົາທຸລະກຳທີ່ສຳຄັນຂອງບໍລິສັດ ແລະ ຕ້ອງໄດ້ຮັບການຮັບຮອງຈາກສະພາບໍລິຫານ.
- ເຂົ້າຮ່ວມໃນການສ້າງແຜນການເຄື່ອນໄຫວຂອງບໍລິສັດ ເພື່ອຄວາມສະດວກໃນການຕິດຕາມກວດກາ.
- ຕິດຕາມການປະຕິບັດວຽກງານຂອງຄະນະກຳມະການຕ່າງໆ ໃຫ້ສອດຄ່ອງກັບແຜນການການເຄື່ອນໄຫວ ທີ່ກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ ໄດ້ຮັບຮອງເອົາ ພ້ອມທັງລາຍງານໃຫ້ສະພາບໍລິຫານຮັບຊາບຢ່າງເປັນປົກກະຕິ.
- ເຮັດບົດລາຍງານການກວດກາປະຈຳປີ ແລ້ວສົ່ງໃຫ້ສະພາບໍລິຫານຮັບຮອງ.
- ປະສານງານກັບຄະນະກວດກາພາຍນອກ ໃນການປະຕິບັດໜ້າທີ່ໃນການກວດກາ.
- ຕີລາຄາຄຸນນະພາບຂອງບໍລິສັດກວດສອບ, ຄວາມເປັນເອກະລາດ ແລະ ການພົວພັນກັບບຸກຄົນອື່ນໆຂອງຜູ້ກວດສອບ.
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງສະພາບໍລິຫານ.

### 2.4 ວາລະການດຳລົງຕຳແໜ່ງຂອງຄະນະກຳມະການກວດກາພາຍໃນ

ຄະນະກຳມະການກວດກາພາຍໃນຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍກອງປະຊຸມຜູ້ຖືຮຸ້ນດ້ວຍຄະແນນສຽງສ່ວນຫຼາຍຂອງບັນດາຜູ້ຖືຮຸ້ນທີ່ໄດ້ເຂົ້າຮ່ວມໃນກອງປະຊຸມ. ສະພາບໍລິຫານທຸກທ່ານມີອາຍຸການດຳລົງຕຳແໜ່ງ 2 ປີ ແລະ ອາດຈະມີການເລືອກຕັ້ງຄືນໃໝ່ໃນສະໄໝຕໍ່ໄປໄດ້ ດັ່ງທີ່ໄດ້ມີການລະບຸໄວ້ໃນກົດລະບຽບບໍລິສັດ ຫຼື ກົດໝາຍທີ່ກ່ຽວຂ້ອງ.

### 2.5 ຜົນຕອບແທນຂອງຄະນະກຳມະການກວດກາພາຍໃນ

ສຳລັບການຈ່າຍຄ່າຕອບແທນຂອງຄະນະກຳມະການກວດກາພາຍໃນແມ່ນບໍ່ໄດ້ມີການຄິດໄລ່ຈ່າຍເງິນເດືອນ ແຕ່ຈະຄິດໄລ່ການເດີນທາງມາເຂົ້າຮ່ວມກອງປະຊຸມໃນແຕ່ລະຄັ້ງແມ່ນຈະໄດ້ຮັບຄ່າເບ້ຍປະຊຸມຄື:

- ປະທານຄະນະກຳມະການກວດກາພາຍໃນ 1,500,000 ກີບ/ຄັ້ງ/ທ່ານ
- ຄະນະກຳມະການກວດກາພາຍໃນ 1,000,000 ກີບ/ຄັ້ງ/ທ່ານ.

## 3. ຄະນະກຳມະການສະເພາະດ້ານ

### 3.1 ອົງປະກອບຂອງຄະນະກຳມະການສະເພາະດ້ານ

ຄະນະກຳມະການບໍລິສັດໄດ້ແຕ່ງຕັ້ງຄະນະກຳມະການສະເພາະດ້ານເພື່ອຮັບຜິດຊອບວຽກໃນແຕ່ລະດ້ານ ປະກອບດ້ວຍ ຄະນະກຳມະການບໍລິຫານ, ຄະນະກຳມະການບໍລິຫານຄວາມສ່ຽງ ແລະ ຄະນະກຳມະການເສດຖະກິດ. ເຊິ່ງຄະນະກຳມະການສະເພາະດ້ານມີໜ້າທີ່ຕ້ອງລາຍງານການປະຕິບັດງານຕໍ່ຄະນະກຳມະການບໍລິສັດ ໃນເດືອນ ຕຸລາ 2014 ຄະນະກຳມະການສະເພາະດ້ານປະກອບມີ 3 ທ່ານຄື:

ຕາຕະລາງທີ 1.9.4 : ລາຍຊື່ອົງປະກອບຂອງຄະນະກຳມະການສະເພາະດ້ານ

| ລຳດັບ | ຄະນະກຳມະການສະເພາະດ້ານ | ຕຳແໜ່ງ |
|---|---|---|
| 1 | ທ່ານ ບຸນຖຸ້ນ ຈິດຕະວົງ | ປະທານຄະນະກຳມະການບໍລິຫານ |
| 2 | ທ່ານ ນາງ ຈັນທະດອມ ເມກສະຫວັນ | ປະທານຄະນະກຳມະການບໍລິຫານຄວາມສ່ຽງ |
| 3 | ທ່ານ ຈັນທອນ ສິດທິໄຊ | ປະທານຄະນະກຳມະການເສດຖະກິດ |

### 3.2 ສິດ ແລະ ໜ້າທີ່ຂອງຄະນະກຳມະການສະເພາະດ້ານ

**ກ. ສິດ ແລະ ໜ້າທີ່ຂອງຄະນະກຳມະການບໍລິຫານ (Executive Committee)**

- ຄົ້ນຄວ້າ, ສ້າງ ແລະ ປັບປຸງລະບຽບການເຄື່ອນໄຫວຂອງບໍລິສັດ ເພື່ອສະເໜີຕໍ່ກອງປະຊຸມສະພາບໍລິຫານ ພິຈາລະນາ.
- ຄົ້ນຄວ້າກຳນົດທິດທາງແຜນການໃນການບໍລິຫານຈັດການບໍລິສັດເພື່ອສະເໜີຕໍ່ກອງປະຊຸມສະພາບໍລິຫານ ພິຈາລະນາສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ.
- ສະຫຼຸບລາຍງານການເຄື່ອນໄຫວ ແລະ ສ້າງແຜນດຳເນີນທຸລະກິດປະຈຳປີຂອງບໍລິສັດ ເພື່ອສະເໜີຕໍ່ກອງ ປະຊຸມສະພາບໍລິຫານ ພິຈາລະນາຕໍ່ກອງປະຊຸມຜູ້ຖືຮຸ້ນ.
- ສະເໜີແຕ່ງຕັ້ງ ແລະ ປົດຕຳແໜ່ງຜູ້ອຳນວຍການບໍລິສັດຕໍ່ສະພາບໍລິຫານ ພິຈາລະນາ.
- ບໍລິຫານວຽກງານປະຈຳວັນຂອງບໍລິສັດໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນຕາມທີ່ໄດ້ກຳນົດໄວ້ໃນກົດ ລະບຽບ ແລະ ຕາມການມອບໝາຍຂອງສະພາບໍລິຫານ.
- ໃຫ້ການຮ່ວມມື, ສະໜອງຂໍ້ມູນ ແລະ ເອກະສານພ້ອມທັງຊີ້ແຈງບັນຫາຕໍ່ຄະນະກຳມະການກວດກາພາຍໃນ ບໍລິສັດກວດສອບ ແລະ ສະພາບໍລິຫານ.
- ລາຍງານການເຄື່ອນໄຫວຂອງບໍລິສັດຕໍ່ສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ.
- ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງບໍລິສັດ.

**ຂ. ສິດ ແລະ ໜ້າທີ່ຂອງຄະນະກຳມະການບໍລິຫານຄວາມສ່ຽງ (Risk Management Committee)**

- ກຳນົດນະໂຍບາຍ ແລະ ໂຄງສ້າງກ່ຽວກັບການບໍລິຫານຄວາມສ່ຽງເພື່ອສະເໜີຕໍ່ຄະນະກຳມະການບໍລິຫານ ໂດຍໃຫ້ສອດຄ່ອງຕາມທິດທາງການບໍລິຫານຄວາມສ່ຽງຕະຫຼາດພາຍໃນ ແລະ ຕ່າງປະເທດ.
- ວາງຍຸດທະສາດໃນການບໍລິຫານຄວາມສ່ຽງເພື່ອສາມາດປະເມີນ ແລະ ຕິດຕາມ ແລະ ຄວບຄຸມຄວາມສ່ຽງ ແຕ່ລະປະເພດໃຫ້ຢູ່ໃນລະດັບທີ່ສາມາດຄວບຄຸມໄດ້ ໂດຍປະສານສົມທົບກັບໜ່ວຍງານຕ່າງໆ.
- ປະເມີນຄວາມສ່ຽງໃນລະດັບບໍລິສັດ ແລະ ກຳນົດວິທີການບໍລິຫານຈັດການຄວາມສ່ຽງນັ້ນໃຫ້ຢູ່ໃນລະດັບທີ່ ສາມາດຄວບຄຸມໄດ້ ລວມທັງສາມາດຄວບຄຸມບໍລິຫານຈັດການຄວາມສ່ຽງຕາມທີ່ວາງແຜນໄວ້.

- ທົບທວນນະໂຍບາຍການບໍລິຫານຈັດການຄວາມສ່ຽງ ແລະ ພ້ອມທັງປັບປຸງໃຫ້ມີປະສິດທິພາບສູງຂຶ້ນເພື່ອຈະສາມາດຮັບມືກັບຄວາມສ່ຽງທີ່ອາດເກີດຂຶ້ນ.
- ລາຍງານຜົນຂອງການບໍລິຫານຈັດການຄວາມສ່ຽງຕໍ່ຄະນະກຳມະການບໍລິຫານຄວາມສ່ຽງ ເພື່ອສະເໜີຕໍ່ສະພາບໍລິຫານທຸກໆໄຕມາດ.
- ສ້າງຄູ່ມືກ່ຽວກັບການບໍລິຫານຈັດການຄວາມສ່ຽງ, ລະບຸຄວາມສ່ຽງດ້ານຕ່າງໆພ້ອມທັງວິເຄາະ ແລະ ປະເມີນຄວາມສ່ຽງທີ່ອາດຈະເກີດຂຶ້ນ ລວມທັງແນວโน້ມທີ່ອາດຈະເກີດຂຶ້ນ ແລະ ສົ່ງຜົນກະທົບຕໍ່ບໍລິສັດ.
- ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງບໍລິສັດ.
- ອາຍຸການໃນການດຳລົງຕຳແໜ່ງແມ່ນ 2 ປີ.

**ຄ. ສິດ ແລະ ໜ້າທີ່ຂອງຄະນະກຳມະການເສດຖະກິດ (Economic Committee)**

- ປະຕິບັດໜ້າທີ່ໃນການໃຫ້ຄຳເຫັນກ່ຽວກັບເສດຖະກິດໂດຍລວມຂອງ ສປປ ລາວ ແລະ/ຫຼື ປະເທດອື່ນທີ່ກ່ຽວຂ້ອງກັບການດຳເນີນທຸລະກິດຂອງບໍລິສັດ ລວມເຖິງໃຫ້ຄຳແນະນຳ ແລະ ໃຫ້ຄວາມເຫັນຕໍ່ສະພາບໍລິຫານໃນການຕັດສິນໃຈທີ່ສຳຄັນຕ່າງໆ ທີ່ກ່ຽວຂ້ອງກັບການດຳເນີນທຸລະກິດຂອງບໍລິສັດ.
- ມີໜ້າທີ່ໃນການໃຫ້ຄຳແນະນຳ ແລະ ໃຫ້ຄຳເຫັນເຖິງສະພາບເສດຖະກິດ ຄວາມເໝາະສົມໃນການລົງທຶນ ລວມເຖິງສະພາບໍລິຫານຕໍ່ການລົງທຶນທີ່ສຳຄັນຕ່າງໆຂອງບໍລິສັດທັງພາຍໃນ ສປປ ລາວ ແລະ/ຫຼື ຕ່າງປະເທດ ເຊິ່ງຈະເປັນການໃຫ້ຄຳເຫັນກ່ຽວກັບຄວາມເໝາະສົມໃນການພິຈາລະນາການລົງທຶນ, ຜົນຕອບແທນ ແລະ ຄວາມສ່ຽງຕ່າງໆ ລວມທັງປັດໄຈຕ່າງໆທີ່ກ່ຽວຂ້ອງກັບສະພາບເສດຖະກິດທີ່ອາດສົ່ງຜົນກະທົບຕໍ່ມູນຄ່າ ແລະ ຜົນຕອບແທນຈາກການລົງທຶນຕ່າງໆ ທີ່ຈະກະທົບໃສ່ການດຳເນີນກິດຈະການຂອງບໍລິສັດ.
- ຊ່ວຍໃຫ້ຄຳແນະນຳ ແລະ ໃຫ້ຄວາມເຫັນຕໍ່ນະໂຍບາຍໃນການສັ່ງຊື້ ແລະ ສຳຮອງນ້ຳມັນຂອງບໍລິສັດ ເພື່ອໃຫ້ສອດຄ່ອງກັບສະພາບເສດຖະກິດ ແລະ ລາຄານ້ຳມັນຈາກຜູ້ຈຳໜ່າຍ ແລະ ລາຄານ້ຳມັນໃນຕະຫຼາດໂລກ ເພື່ອໃຫ້ບໍລິສັດສາມາດບັນລຸຜົນປະໂຫຍດສູງສຸດ ແລະ ຍັງເປັນການຫຼຸດຄວາມສ່ຽງ ໃນການດຳເນີນນະໂຍບາຍການຈັດຊື້ ແລະ ສຳຮອງນ້ຳມັນເຊື້ອໄຟ ເຊິ່ງເປັນສິນຄ້າທີ່ມີຄວາມອ່ອນໄຫວຕໍ່ສະຖານະການຂອງຕະຫຼາດໂລກ ອັນຈະມີຜົນກະທົບຕໍ່ການດຳເນີນກິດຈະການຂອງບໍລິສັດໂດຍກົງ.
- ພິຈາລະນາ ແລະ ໃຫ້ຄວາມເຫັນປັບປຸງແຜນການດຳເນີນງານຂອງບໍລິສັດໃຫ້ສອດຄ່ອງກັບສະພາບເສດຖະກິດ ແລະ ລາຄານ້ຳມັນໃນ ສປປ ລາວ ແລະ ຕະຫຼາດໂລກ.
- ພິຈາລະນາໃຫ້ຄວາມເຫັນຕໍ່ນະໂຍບາຍໃນການປະຕິບັດການ ແລະ/ຫຼື ການໄດ້ຮັບຜົນຕອບແທນ ແລະ/ຫຼື ການຊຳລະສິນຄ້າ ແລະ ການບໍລິການໃນຮູບແບບຂອງເງິນຕາຕ່າງປະເທດ ເພື່ອໃຫ້ບໍລິສັດສາມາດປ້ອງກັນຄວາມສ່ຽງທີ່ອາດຈະເກີດຂຶ້ນ ແລະ ສົ່ງຜົນກະທົບຕໍ່ກິດຈະການຂອງບໍລິສັດ, ໃຫ້ຄຳເຫັນຕໍ່ການດຳເນີນນະໂຍບາຍການປ້ອງກັນຄວາມສ່ຽງ ລວມທັງການບໍລິຫານຈັດການເງິນຕາຕ່າງປະເທດ ນອກຈາກເງິນກີບ ລວມທັງທິດທາງການບໍລິຫານຈັດການເພື່ອໃຫ້ເກີດຜົນປະໂຫຍດສູງສຸດຕໍ່ບໍລິສັດ.
- ອາຍຸການໃນການດຳລົງຕຳແໜ່ງແມ່ນ 2 ປີ.

**ງ. ສິດ ແລະ ໜ້າທີ່ຂອງຜູ້ອຳນວຍການໃຫຍ່ບໍລິສັດ**

- ກຳນົດ ແລະ ສະເໜີຍຸດທະສາດ ແລະ ແຜນການທາງທຸລະກິດຕໍ່ສະພາບໍລິຫານຂອງບໍລິສັດ
- ດຳເນີນການຕາມຍຸດທະສາດ ແລະ ແຜນທາງທຸລະກິດທີ່ໄດ້ຮັບອະນຸມັດຈາກສະພາບໍລິຫານຂອງບໍລິສັດ
- ສະແຫວງຫາໂອກາດທາງທຸລະກິດທີ່ກ່ຽວຂ້ອງກັບທຸລະກິດຂອງບໍລິສັດ ລວມເຖິງທຸລະກິດໃໝ່ທີ່ມີຄວາມເປັນໄປໄດ້ເພື່ອເພີ່ມລາຍຮັບໃຫ້ແກ່ບໍລິສັດ ແລະ ພະນັກງານຂອງບໍລິສັດ ເພື່ອນຳສະເໜີຕໍ່ສະພາບໍລິຫານຂອງບໍລິສັດພິຈາລະນາ

- ດຳເນີນການ ແລະ ປະຕິບັດພາລະກິດທີ່ສະພາບໍລິຫານຂອງບໍລິສັດມອບໝາຍພາຍໃຕ້ນະໂຍບາຍຂອງສະພາບໍລິຫານຂອງບໍລິສັດ
- ອອກຄຳສັ່ງ, ອອກລະບຽບ / ປະກາດ / ບັນທຶກ ເພື່ອໃຫ້ການປະຕິບັດງານເປັນໄປຕາມນະໂຍບາຍ
- ມີອຳນາດພິຈາລະນາອະນຸມັດການກູ້ ຫຼື ຂໍສິນເຊື່ອໃດໆ ຈາກສະຖາບັນການເງິນ ລວມເຖິງການຊຳລະ ຫຼື ການໃຊ້ຈ່າຍເງິນເພື່ອທຸລະກຳຕາມປົກກະຕິຂອງທຸລະກິດບໍລິສັດເຊັ່ນ ການໃຊ້ຈ່າຍເງິນເພື່ອການລົງທຶນ ແລະ ຄ່າໃຊ້ຈ່າຍເພື່ອການດຳເນີນງານຕ່າງໆ ຕາມອຳນາດການອະນຸມັດ
- ປະສານງານ ຜູ້ບໍລິຫານ ແລະ ພະນັກງານເພື່ອປະຕິບັດຕາມນະໂຍບາຍ ແລະ ທິດທາງທລະກິດທີ່ໄດ້ຮັບຈາກຄະນະກຳມະການບໍລິສັດ
- ເບິ່ງແຍງ ແລະ ດູແລການເຮັດວຽກຂອງພະນັກງານໃຫ້ເປັນໄປຕາມນະໂຍບາຍ ແລະ ກົດລະບຽບຕ່າງໆ ລວມເຖິງການປະຕິບັດງານດ້ວຍຫຼັກການທີ່ດີໃນການດຳເນີນທຸລະກິດ
- ສົ່ງເສີມ ແລະ ພັດທະນາຄວາມຮູ້ຄວາມສາມາດ ແລະ ສັກກະຍາພາບຂອງພະນັກງານເພື່ອເພີ່ມສັກກະຍາພາບຂອງອົງກອນ
- ພິຈາລະນາຜົນປະກອບການຂອງບໍລິສັດ ແລະ ນຳສະເໜີການຈ່າຍເງິນປັນຜົນປະຈຳປີເພື່ອນຳສະເໜີໃຫ້ສະພາບໍລິຫານຂອງບໍລິສັດອະນຸມັດຕໍ່ໄປ

### 1.9.5 ລາຍຈ່າຍຄ່າຕອບແທນສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ ແລະ ຜູ້ບໍລິຫານ

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ແມ່ນໃຫ້ຄວາມສຳຄັນທີ່ສຸດຕໍ່ຊີວິດການເປັນຢູ່ຂອງພະນັກງານ, ບໍລິສັດຄຳນຶງຕະຫຼອດເວລາວ່າພະນັກງານທຸກຄົນທີ່ເຂົ້າມາເຮັດວຽກກັບບໍລິສັດຈະຕ້ອງມີຊີວິດການເປັນຢູ່ທີ່ດີ ຕະຫຼອດຮອດຊີວິດຄອບຄົວກໍ່ເຊັ່ນດຽວກັນນັ້ນກໍ່ເພື່ອຊຸກຍູ້ໃຫ້ພະນັກງານທຸກຄົນມີກຳລັງໃຈ ແລະ ສຸມເຫື່ອແຮງທັງສະຕິປັນຍາເຂົ້າໃນການປະຕິບັດໜ້າທີ່ຂອງຕົນເອງຢ່າງເຕັມທີ່.

### 1. ຄ່າຕອບແທນສະພາບໍລິຫານ ແລະ ຄະນະກຳມະການກວດກາພາຍໃນ

ອີງຕາມກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ1/2014 (ກ່ອນການຫັນເປັນບໍລິສັດມະຫາຊົນເມື່ອວັນທີ 09 ຕຸລາ 2014) ໄດ້ກຳນົດຜົນຕອບແທນໃຫ້ແກ່ສະພາບໍລິຫານ ແລະ ຄະນະກຳມະການກວດກາພາຍໃນ ໂດຍມີລາຍລະອຽດດັ່ງນີ້:

- ເບ້ຍປະຊຸມ

ຕາຕະລາງທີ 1.9.5: ຄ່າຕອບແທນສະພາບໍລິຫານ ແລະ ຄະນະກຳມະການກວດກາພາຍໃນ

| ຕຳແໜ່ງ | ຄ່າເບ້ຍປະຊຸມ ກີບ/ຄັ້ງ/ຄົນ |
|---|---|
| ປະທານສະພາບໍລິຫານ | 1,500,000 ກີບ |
| ຮອງປະທານສະພາບໍລິຫານ | 1,000,000 ກີບ |
| ສະມາຊິກສະພາບໍລິຫານ | 500,000 ກີບ |
| ປະທານຄະນະກຳມະການກວດກາພາຍໃນ | 1,500,000 ກີບ |
| ກຳມະການກວດກາພາຍໃນ | 1,000,000 ກີບ |

- ຄ່າຕອບແທນພິເສດ (ເງິນໂບນັດ)

-ບໍ່ມີ-

**2. ຄ່າຕອບແທນຜູ້ບໍລິຫານ**

ຜູ້ບໍລິຫານຈະໄດ້ຮັບຄ່າຕອບແທນປະກອບມີເງິນເດືອນ, ໂບນັດ ແລະ ສະຫວັດດີການຕ່າງໆຕາມລະບຽບຂອງບໍລິສັດ ແລະ ຕາມທີ່ກົດໝາຍທີ່ກ່ຽວຂ້ອງກຳນົດ.

**1.9.6 ບຸກຄະລາກອນບໍລິສັດ**

**ກ. ບຸກຄະລາກອນ**

ໃນເດືອນ ມິຖຸນາ 2014 ບໍລິສັດໄດ້ມີພະນັກງານທັງໝົດຈຳນວນ 123 ຄົນ

ຕາຕະລາງທີ 1.9.6: ຈຳນວນພະນັກງານທັງໝົດຂອງບໍລິສັດຈົນຮອດ 30 ມິຖຸນາ 2014

| ປີ | ເພດຊາຍ | ເພດຍິງ | ລວມ |
|---|---|---|---|
| **2011** | 62 | 33 | 95 |
| **2012** | 79 | 41 | 120 |
| **2013** | 76 | 43 | 119 |
| **30 ມິຖຸນາ 2014** | 75 | 48 | 123 |

**ຂ. ຂໍ້ພິພາກກັບບຸກຄະລາກອນ**

ນັບແຕ່ສ້າງຕັ້ງບໍລິສັດຕັ້ງແຕ່ປີ 2008 ເຖິງປັດຈຸບັນບໍລິສັດແມ່ນບໍ່ເຄີຍເກີດມີການຮ້ອງຟ້ອງທາງດ້ານແຮງງານ ແລະ ບໍ່ເຄີຍມີການປະທ້ວງ ຫຼື ຖືກສານປະຊາຊົນສັ່ງໃຫ້ຢຸດເຊົາດຳເນີນທຸລະກິດໃດໆ.

**ຄ. ນະໂຍບາຍໃນການພັດທະນາບຸກຄະລາກອນ**

ບໍລິສັດມີນະໂຍບາຍກ່ຽວກັບການພັດທະນາບຸກຄະລາກອນຂອງບໍລິສັດຢ່າງຕໍ່ເນື່ອງ ໂດຍເນັ້ນເສີມສ້າງເພື່ອໃຫ້ຄວາມຮູ້ ແລະ ພັດທະນາຄວາມສາມາດໃຫ້ແກ່ບຸກຄະລາກອນຂອງບໍລິສັດ ໂດຍການຈັດໃຫ້ມີການເຝິກອົບຮົມພາຍໃນບໍລິສັດ ແລະ ຈັດສົ່ງພະນັກງານເຂົ້າຮັບການອົບຮົມກັບໜ່ວຍງານຕ່າງໆ ຄວບຄູ່ໄປກັບການຮຽນຮູ້ການປະຕິບັດວຽກງານຕົວຈິງພາຍໃຕ້ການຄວບຄຸມ ແລະ ແນະນຳຈາກຜູ້ຄວບຄຸມແຕ່ລະຝ່າຍ. ນອກຈາກນີ້ ບໍລິສັດຍັງສົ່ງເສີມໃຫ້ບຸກຄະລາກອນໄປພັດທະນາຍົກລະດັບຄວາມຮູ້ຄວາມສາມາດ, ເພື່ອນຳມາພັດທະນາອົງກອນ. ບໍລິສັດໃຫ້ຄວາມສຳຄັນກັບການສ້າງຂວັນກຳລັງໃຈໃຫ້ກັບບຸກຄະລາກອນ ໂດຍພິຈາລະນາປັບປຸງສະຫວັດດີການ ແລະ ເບິ່ງແຍງບຸກຄະລາກອນທຸກຄົນຕາມຄວາມເໝາະສົມເພື່ອໃຫ້ບຸກຄະລາກອນມີການເຕີບໂຕໄປພ້ອມໆກັບບໍລິສັດ ແລະ ເພື່ອເພີ່ມສັກກະຍາພາບໃຫ້ແກ່ບຸກຄະລາກອນໃຫ້ມີຄວາມຮູ້ຄວາມສາມາດ ແລະ ຊຳນິຊຳນານຍິ່ງຂຶ້ນເພື່ອຮອງຮັບການເປີດປະຊາຄົມເສດຖະກິດອາຊຽນ (Asian Economic Community: AEC) ໃນປີ 2015.

## 1.10 ການກວດກາພາຍໃນ

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ມີພະແນກກວດກາພາຍໃນຂອງບໍລິສັດເອງ ທີ່ເຮັດໜ້າທີ່ປະເມີນແຕ່ລະໜ້າວຽກຂອງແຕ່ລະຝ່ຍງານໃຫ້ເປັນໄປຕາມເປົ້າໝາຍທີ່ຕັ້ງໄວ້ ເຊິ່ງໃນການກວດການັ້ນ ຝ່ຍກວດກາຈະມີການນຳໃຊ້ເຄື່ອງມືການວັດແທກດ້ວຍຄ່າ Key Performance Indicator (KPI) ເພື່ອເປັນຕົວບົ່ງບອກເຖິງຄວາມສາມາດການເຮັດວຽກໃນແຕ່ລະໜ້າວຽກຂອງຝ່ຍນັ້ນໆວ່າຈະສາມາດບັນລຸເປົ້າໝາຍທີ່ຕັ້ງໄວ້ ຫຼື ບໍ່ ແລະ ມີການນຳໃຊ້ເຄື່ອງມືການວັດແທກດ້ວຍຄ່າ Performance Management Plan (PMP) ໝາຍເຖິງເອກະສານຕິດຕາມຜົນງານປະຈຳປີຂອງແຕ່ລະບຸກຄົນ ເຊິ່ງຈະເປັນຕົວບົ່ງບອກເຖິງຄວາມສາມາດໃນການເຮັດວຽກຂອງບຸກຄະລາກອນບໍລິສັດເອງ ໂດຍການກວດກາແມ່ນຈະຈັດຂຶ້ນທຸກໆເດືອນແລ້ວນຳມາສະຫຼຸບຜົນເປັນໄຕມາດ ແລະ ເປັນປີອອກມາເພື່ອມາສົມທຽບເຖິງປະສິດທິພາບການບໍລິຫານວຽກງານຂອງບໍລິສັດ.

ໃນປັດຈຸບັນ ທາງບໍລິສັດໄດ້ຮັບການຮັບຮອງຄຸນະພາບ 3 ມາດຕະຖານຈາກ UKAS ຄື: ISO 9001:2008 ມາດຕະຖານຄຸນະພາບດ້ານການບໍລິຫານງານ, ISO 14001:2004 ມາດຕະຖານຄຸນນະພາບດ້ານການຄຸ້ມຄອງສະພາບແວດລ້ອມ ແລະ OHSAS 18001:2007 ມາດຕະຖານດ້ານຄວາມປອດໄພ ແລະ ສຸຂະອະນາໄມ.

ໂດຍລວມແລ້ວ ບໍລິສັດມີລະບົບການຄວບຄຸມພາຍໃນທີ່ດີ, ການກຳກັບດູແລກິດຈະການທີ່ດີ, ມີການຈັດເຮັດຄູ່ມືຈັດລະບົບຄຸນະພາບ, ສິ່ງແວດລ້ອມ, ສຸຂະອະນາໄມ ແລະ ຄວາມປອດໄພ (Quality, Environment, Occupational, Health and Safety Manual) ລວມໄປເຖິງວຽກງານການບໍລິຫານຄວາມສ່ຽງ. ຍ້ອນແນວນັ້ນ ບໍລິສັດຈຶ່ງກາຍເປັນບໍລິສັດທີ່ມີສັກກະຍາພາບໃນການບໍລິຫານງານ ເຊິ່ງວ່າໃນແຕ່ລະປີ ໜ່ວຍງານມາດຕະຖານ ISO ກໍ່ຈະເຂົ້າມາກວດສອບບໍລິສັດປີລະ 1 ຄັ້ງ ປະມານທ້າຍເດືອນສິງຫາ - ຕົ້ນເດືອນກັນຍາຢ່າງເປັນປົກກະຕິ.

ນອກຈາກພະແນກກວດກາພາຍໃນຂອງບໍລິສັດເອງແລ້ວ ບໍລິສັດຍັງໄດ້ວ່າຈ້າງໃຫ້ຜູ້ກວດກາພາຍນອກຄື ບໍລິສັດ ພາຍສ໌ວໍເຕີເຮົ້າສ໌ກູເປີ້ (ລາວ) ຈຳກັດ ມາເຮັດໜ້າທີ່ເປັນທີ່ປຶກສາດ້ານການກວດກາລະບົບຄວບຄຸມພາຍໃນຕັ້ງແຕ່ປີ 2014 ແລະ ຈະນຳສະເໜີບົດລາຍງານການກວດກາຕໍ່ຄະນະກຳມະການກວດກາພາຍໃນເພື່ອພິຈາລະນາ ແລະ ອອກຄວາມເຫັນກ່ຽວກັບປະສິດທິພາບ ແລະ ຄວາມພຽງພໍຂອງລະບົບຄວບຄຸມພາຍໃນຢ່າງເປັນໄລຍະ.

## 1.11 ລາຍການທີ່ກ່ຽວພັນ

ບໍລິສັດມີລາຍການທີ່ກ່ຽວພັນກັບບຸກຄົນທີ່ອາດມີສ່ວນໄດ້ສ່ວນເສຍ (Connected Person) ເຊິ່ງລາຍການລະຫວ່າງກັນທີ່ເກີດຂຶ້ນນັ້ນແມ່ນທຸລະກຳທີ່ເກີດຂຶ້ນລະຫວ່າງກຳມະການທີ່ເປັນຜູ້ຖືຮຸ້ນຂອງບໍລິສັດ ແລະ ບຸກຄົນທີ່ອາດມີສ່ວນໄດ້ສ່ວນເສຍ ເຊິ່ງລາຍການດັ່ງກ່າວໄດ້ເປີດເຜີຍໄວ້ໃນເອກະສານຊ້ອນທ້າຍບົດລາຍງານການເງິນທີ່ຖືກກວດສອບໂດຍຜູ້ກວດສອບບັນຊີຂອງບໍລິສັດ ແລະ ຄະນະກຳມະການກວດກາພາຍໃນໄດ້ໃຫ້ຄວາມເຫັນກ່ຽວກັບຄວາມເໝາະສົມຂອງການເຮັດທຸລະກຳດັ່ງກ່າວວ່າ ເປັນທຸລະກຳທີ່ເປັນໄປຕາມທຸລະກິດປົກກະຕິຂອງບໍລິສັດ ຫຼື ມີຄວາມສົມເຫດສົມຜົນ ມີການກຳນົດລາຄາ ແລະ ເງື່ອນໄຂອື່ນໆຕາມລາຄາຕະຫຼາດ ເຊັ່ນດຽວກັບການກຳນົດລາຄາໃຫ້ກັບບຸກຄົນ ຫຼື ກິດຈະການອື່ນທີ່ບໍ່ກ່ຽວຂ້ອງກັນ ແລະ ເພື່ອຮັບປະກັນບໍ່ໃຫ້ມີການຖ່າຍເທຜົນປະ�โຫຍດລະຫວ່າງບໍລິສັດ, ບໍລິສັດທີ່ກ່ຽວຂ້ອງ ແລະ ບຸກຄົນທີ່ອາດມີສ່ວນໄດ້ສ່ວນເສຍ.

ລາຍລະອຽດຂອງລາຍການລະຫວ່າງກັນສາມາດເບິ່ງໄດ້ຢູ່ເອກະສານຊ້ອນທ້າຍບົດລາຍງານການເງິນ ຂໍ້ທີ 28 ໜ້າທີ 29-31.

ຕາຕະລາງທີ 1.11.1 : ສະຫຼຸບລາຍລະອຽດຂອງລາຍການລະຫວ່າງກັນ

| ບໍລິສັດ/ບຸກຄົນທີ່ອາດມີສ່ວນໄດ້ສ່ວນເສຍ | ຄວາມສຳພັນ | ທຸລະກຳທີ່ກ່ຽວພັນ (ມີ= √, ບໍ່ມີ= X) |
|---|---|---|
| | | ງວດປີ 2013 ວັນທີ 31 ທັນວາ 2013 |
| 1. ບໍລິສັດ ຂວັນໃຈການຄ້າ ຂາອອກ-ຂາເຂົ້າ ຈຳກັດ (Khouanchay Import - Export Co.,Ltd.)<br>ທຸລະກິດ: ຄ້າຂາຍຍົກບໍ່ເປັນອັນສະເພາະ<br>ຜູ້ອຳນວຍການ: ທ່ານ ຈັນທອນ ສິດທິໄຊ | - ທ່ານ ຈັນທອນ ສິດທິໄຊ ດຳລົງຕຳແໜ່ງ ຜູ້ອຳນວຍການ/ມີອຳນາດລົງລາຍເຊັນ ແລະ ເປັນຜູ້ຖືຮຸ້ນຂອງບໍລິສັດ ຂວັນໃຈການຄ້າ ຂາອອກ-ຂາເຂົ້າ ຈຳກັດ ຖືຮຸ້ນໃນສັດສ່ວນ 75 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ.<br>- ທ່ານ ນາງ ສະຫວັນທອງ ພິງສະຫວັນ ເປັນຜູ້ຖືຮຸ້ນຂອງບໍລິສັດ ຂວັນໃຈການຄ້າ ຂາອອກ-ຂາເຂົ້າ ຈຳກັດ ຖືຮຸ້ນໃນສັດສ່ວນ 25 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ.<br>- ທ່ານ ຈັນທອນ ສິດທິໄຊ ດຳລົງຕຳແໜ່ງ ຮອງປະທານສະພາບໍລິຫານ/ຜູ້ອຳນວຍການໃຫຍ່/ເປັນຜູ້ມີອຳນາດລົງລາຍເຊັນໃນບໍລິສັດ ແລະ ເປັນຜູ້ຖືຮຸ້ນໃຫຍ່ ຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ຖືຮຸ້ນໃນສັດສ່ວນ 55 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ (ຫຼັງການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ:IPO).<br>  - ທ່ານ ນາງ ສະຫວັນທອງ ພິງສະຫວັນ ດຳລົງຕຳແໜ່ງ ຮອງປະທານສະພາບໍລິຫານ/ເປັນຜູ້ມີອຳນາດລົງລາຍເຊັນໃນບໍລິສັດ ແລະ ເປັນຜູ້ຖືຮຸ້ນຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໃນສັດສ່ວນ 18.617 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ (ຫຼັງການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ:IPO). | √ |
| 2. ທ່ານ ຈັນທອນ ສິດທິໄຊ | - ທ່ານ ຈັນທອນ ສິດທິໄຊ ດຳລົງຕຳແໜ່ງ ຮອງປະທານສະພາບໍລິຫານ/ຜູ້ອຳນວຍການໃຫຍ່/ເປັນຜູ້ມີອຳນາດລົງລາຍເຊັນໃນບໍລິສັດ ແລະ ເປັນຜູ້ຖືຮຸ້ນໃຫຍ່ ຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ຖືຮຸ້ນໃນສັດສ່ວນ 55 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ (ຫຼັງການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ: IPO). | √ |

| ບໍລິສັດ/ບຸກຄົນທີ່ອາດມີສ່ວນໄດ້ສ່ວນເສຍ | ຄວາມສຳພັນ | ທຸລະກຳທີ່ກ່ຽວພັນ (ມີ= √, ບໍ່ມີ= X) ງວດປີ 2013 ວັນທີ 31 ທັນວາ 2013 |
|---|---|---|
| 3. ສະຖານີບໍລິການນ້ຳມັນ ໂພນທັນ ພລັສ 1 (Phonthan Plus Gas Station Plus 1) | - ທ່ານ ຈັນທອນ ສິດທິໄຊ ເປັນເຈົ້າຂອງສະຖານີບໍລິການນ້ຳມັນ ໂພນທັນ ພລັສ 1 ເຊິ່ງເປັນສະຖານີທີ່ຮ່ວມລົງທຶນ ລະຫວ່າງ ທ່ານ ຈັນທອນ ສິດທິໄຊ ແລະ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ເພື່ອສ້າງສະຖານີບໍລິການນ້ຳມັນຕົວແບບໃຫ້ກັບບໍລິສັດ ໄດ້ມີການເຮັດສັນຍາຊື້-ຂາຍນ້ຳມັນ ແລະ ຕົກແຕ່ງສະຖານີບໍລິການ ໃນການບໍລິຫານຈັດການແມ່ນ ທ່ານ ຈັນທອນ ໄດ້ຈ້າງບຸກຄົນພາຍນອກມາບໍລິຫານ. | √ |
| 4. ບໍລິສັດ ສິດທິໂລຈິດສຕິກ ລາວ ຈຳກັດ (Sitthi Logistic Lao Co., Ltd.)<br>ທຸລະກິດ: ບໍລິການຂົນສົ່ງທາງບົກທັງພາຍໃນ ແລະ ຕ່າງປະເທດ<br>ຜູ້ອຳນວຍການ: ທ່ານ ຈັນທອນ ສິດທິໄຊ | - ທ່ານ ຈັນທອນ ສິດທິໄຊ ດຳລົງຕຳແໜ່ງ ຜູ້ອຳນວຍການ/ຜູ້ມີອຳນາດລົງລາຍເຊັນແລະ ເປັນຜູ້ຖືຮຸ້ນຂອງບໍລິສັດ ສິດທິໂລຈິດສຕິກ ລາວ ຈຳກັດ ຖືຮຸ້ນໃນສັດສ່ວນ 75 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ.<br>- ທ່ານ ນາງ ສະຫວັນທອງ ພົງສະຫວັນ ເປັນຜູ້ຖືຮຸ້ນຂອງບໍລິສັດ ສິດທິໂລຈິດສຕິກ ລາວ ຈຳກັດ ຖືຮຸ້ນໃນສັດສ່ວນ 25 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ.<br>- ທ່ານ ຈັນທອນ ສິດທິໄຊ ດຳລົງຕຳແໜ່ງ ຮອງປະທານສະພາບໍລິຫານ/ຜູ້ອຳນວຍການໃຫຍ່/ເປັນຜູ້ມີອຳນາດລົງລາຍເຊັນໃນບໍລິສັດ ແລະ ເປັນຜູ້ຖືຮຸ້ນໃຫຍ່ ຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ຖືຮຸ້ນໃນສັດສ່ວນ 55 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ (ຫຼັງການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ:IPO).<br>- ທ່ານ ນາງ ສະຫວັນທອງ ພົງສະຫວັນ ດຳລົງຕຳແໜ່ງ ຮອງປະທານສະພາບໍລິຫານ/ເປັນຜູ້ມີອຳນາດລົງລາຍເຊັນໃນບໍລິສັດ ແລະ ເປັນຜູ້ຖືຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໃນສັດສ່ວນ 18.617 ສ່ວນຮ້ອຍ ຂອງທຶນຈົດທະບຽນທີ່ຊຳລະແລ້ວ (ຫຼັງການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ:IPO). | √ |
| 5. ບໍລິສັດ ສິດທິ ການຄ້າສາກົນ ຂາອອກ-ຂາເຂົ້າ ຈຳກັດ (Sitthi Inter Trading Import-Export Co.,Ltd)<br>ທຸລະກິດ: ນຳເຂົ້າ: ເຄື່ອງໃຊ້ສອຍປະຈຳວັນ, ສະບຽງອາຫານ, ເຄື່ອງສຳອາງ, ເຄື່ອງດື່ມບຳລຸງສຸຂະພາບ, ເຄື່ອງກໍ່ສ້າງ, ເຄື່ອງໃຊ້ໄຟຟ້າ, ເຄື່ອງມືຮັບໃຊ້ວຽກງານອຸດສາຫະກຳ ແລະ ກະສິກຳ.<br>ສົ່ງອອກ: ຜະລິດຕະພັນກະສິກຳ, ອຸດສາຫະກຳ, ຫັດຖະກຳ ແລະ ເຄື່ອງປ່າຂອງດົງ.<br>ຜູ້ອຳນວຍການ: ທ່ານ ນາງ ສະຫວັນທອງ ພົງສະຫວັນ | - ທ່ານ ນາງ ສະຫວັນທອງ ພົງສະຫວັນ ດຳລົງຕຳແໜ່ງ ຜູ້ອຳນວຍການ/ມີອຳນາດລົງລາຍເຊັນ ແລະ ເປັນຜູ້ຖືຮຸ້ນຂອງບໍລິສັດ ສິດທິ ການຄ້າສາກົນ ຂາອອກ-ຂາເຂົ້າ ຈຳກັດ ຖືຮຸ້ນໃນສັດສ່ວນ 50 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ.<br>- ທ່ານ ວຽງຄອນ ສິດທິໄຊ ເປັນຜູ້ຖືຮຸ້ນຂອງບໍລິສັດ ສິດທິ ການຄ້າສາກົນ ຂາອອກ-ຂາເຂົ້າ ຈຳກັດ ຖືຮຸ້ນໃນສັດສ່ວນ 50 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ ແລະ ເປັນນ້ອງຊາຍຂອງທ່ານ ຈັນທອນ ສິດທິໄຊ.<br>- ທ່ານ ນາງ ສະຫວັນທອງ ພົງສະຫວັນ ດຳລົງຕຳແໜ່ງ ຮອງປະທານສະພາບໍລິຫານ/ເປັນຜູ້ມີອຳນາດລົງລາຍເຊັນໃນບໍລິສັດ ແລະ ເປັນຜູ້ຖືຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໃນສັດສ່ວນ 18.617 ສ່ວນຮ້ອຍ ຂອງທຶນຈົດທະບຽນທີ່ຊຳລະແລ້ວ (ຫຼັງການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ:IPO).<br>- ທ່ານ ວຽງຄອນ ສິດທິໄຊ ດຳລົງຕຳແໜ່ງສະມະຊິກສະພາບໍລິຫານ(ຜູ້ອຳນວຍການບໍລິສັດ) ແລະ ເປັນຜູ້ຖືຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໃນສັດສ່ວນ 0.043 ສ່ວນຮ້ອຍ ຂອງທຶນຈົດທະບຽນທີ່ຊຳລະແລ້ວ (ຫຼັງການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນ:ຄັ້ງທຳອິດIPO). | X |
| 6. ບໍລິສັດ ແບັກແຄນຢອນລາວ ຂາເຂົ້າ-ຂາອອກ ຈຳກັດ (Black Canyon (Lao) Import- | - ທ່ານ ຈັນທອນ ສິດທິໄຊ ເປັນຜູ້ຖືຮຸ້ນຂອງບໍລິສັດ ແບັກແຄນຢອນລາວ ຂາເຂົ້າ-ຂາອອກ ຈຳກັດ ຖືຮຸ້ນໃນສັດສ່ວນ 50 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ. | √ |

| ບໍລິສັດ/ບຸກຄົນທີ່ອາດມີສ່ວນໄດ້ສ່ວນເສຍ | ຄວາມສຳພັນ | ທຸລະກຳທີ່ກ່ຽວພັນ (ມີ= √, ບໍ່ມີ= X) ງວດປີ 2013 ວັນທີ 31 ທັນວາ 2013 |
|---|---|---|
| Export Co.,Ltd)<br>ທຸລະກິດ:ຂາຍຍົກ ສະບຽງອາຫານ, ເຄື່ອງດື່ມ ຢາສູບ ແລະ ນຳເຂົ້າກາເຟ ຍີ່ຫໍ້ "Black Canyon"<br>ຜູ້ອຳນວຍການ: ທ່ານ ນາງ ມະນີວອນ ສິດທິໄຊ | - ທ່ານ ນາງ ມະນີວອນ ສິດທິໄຊ ດຳລົງຕຳແໜ່ງ ຜູ້ອຳນວຍການ/ມີອຳນາດລົງລາຍເຊັນໃນບໍລິສັດ ແບັກແຄນຢອນລາວ ຂາເຂົ້າ-ຂາອອກ ຈຳກັດ ຖືຮຸ້ນໃນສັດສ່ວນ 50 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ ແລະ ເປັນນ້ອງສາວຂອງທ່ານ ຈັນທອນ ສິດທິໄຊ.<br>- ທ່ານ ຈັນທອນ ສິດທິໄຊ ດຳລົງຕຳແໜ່ງ ຮອງປະທານສະພາບໍລິຫານ/ຜູ້ອຳນວຍການໃຫຍ່/ເປັນຜູ້ມີອຳນາດລົງລາຍເຊັນໃນບໍລິສັດ ແລະ ເປັນຜູ້ຖືຮຸ້ນໃຫຍ່ ຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ຖືຮຸ້ນໃນສັດສ່ວນ 55 ສ່ວຍຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ (ຫຼັງການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນ:IPO).<br>- ທ່ານ ນາງ ມະນີວອນ ສິດທິໄຊ ເປັນຜູ້ຖືຮຸ້ນບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໃນສັດສ່ວນ 0.043 ສ່ວນຮ້ອຍ ຂອງທຶນຈົດທະບຽນທີ່ຊຳລະແລ້ວ (ຫຼັງການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ:IPO). | |
| 7. ບໍລິສັດ ລາວເດລີ້ມາກ ຂາເຂົ້າ-ຂາອອກ ຈຳກັດ (Lao Daily Mart Import-Export Co., Ltd.)<br>ທຸລະກິດ:ການນຳເຂົ້າເຄື່ອງອຸປະໂພກ ແລະ ບໍລິໂພກທຸກຊະນິດເພື່ອຈຳໜ່າຍໃນຮູບແບບແຟນຊາຍ ພາຍໃຕ້ການສິນຄ້າ "PLUS Daily Mart"<br>ຜູ້ອຳນວຍການ: ທ່ານ ຈັນທອນ ສິດທິໄຊ | - ທ່ານ ຈັນທອນ ສິດທິໄຊ ດຳລົງຕຳແໜ່ງ ຜູ້ອຳນວຍການ/ມີອຳນາດລົງລາຍເຊັນ ແລະ ເປັນຜູ້ຖືຮຸ້ນຂອງບໍລິສັດ ລາວເດລີ້ມາກ ຂາເຂົ້າ-ຂາອອກ ຈຳກັດ ຖືຮຸ້ນໃນສັດສ່ວນ 75 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ.<br>- ທ່ານ ນາງ ສະຫວັນທອງ ພົງສະຫວັນ ເປັນຜູ້ຖືຮຸ້ນຂອງບໍລິສັດ ລາວເດລີ້ມາກ ຂາເຂົ້າ-ຂາອອກ ຈຳກັດ ຖືຮຸ້ນໃນສັດສ່ວນ 25 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ.<br>- ທ່ານ ຈັນທອນ ສິດທິໄຊ ດຳລົງຕຳແໜ່ງ ຮອງປະທານສະພາບໍລິຫານ/ຜູ້ອຳນວຍການໃຫຍ່/ເປັນຜູ້ມີອຳນາດລົງລາຍເຊັນໃນບໍລິສັດ ແລະ ເປັນຜູ້ຖືຮຸ້ນໃຫຍ່ ຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ຖືຮຸ້ນໃນສັດສ່ວນ 55 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ (ຫຼັງການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ:IPO).<br>- ທ່ານ ນາງ ສະຫວັນທອງ ພົງສະຫວັນ ດຳລົງຕຳແໜ່ງ ຮອງປະທານສະພາບໍລິຫານ/ເປັນຜູ້ມີອຳນາດລົງລາຍເຊັນໃນບໍລິສັດ ແລະ ເປັນຜູ້ຖືຮຸ້ນຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໃນສັດສ່ວນ 18.617 ສ່ວນຮ້ອຍ ຂອງທຶນຈົດທະບຽນທີ່ຊຳລະແລ້ວ (ຫຼັງການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ:IPO). | √ |
| 8. ບໍລິສັດ ສຸດາພອນການຄ້າ ຂາອອກ-ຂາເຂົ້າ ແລະ ບໍລິການ ຈຳກັດ (Soudaphone Import-Export and Service Co.,Ltd.)<br>ທຸລະກິດ:ບົວລະບັດຮັກສາ ແລະ ສ້ອມແປງ ລົດຍົນ ແລະ ບໍລິການຕົບແຕ່ງພາຫະນະ ທຸກປະເພດ ແລະ ປ່ຽນຢາງລົດໃຫຍ່ ພາຍໃຕ້ແຟນຊາຍ "MOLY CARE"<br>ຜູ້ອຳນວຍການ: ທ່ານ ຈັນທອນ ສິດທິໄຊ | - ທ່ານ ຈັນທອນ ສິດທິໄຊ ດຳລົງຕຳແໜ່ງ ຜູ້ອຳນວຍການ/ມີອຳນາດລົງລາຍເຊັນ ແລະ ເປັນຜູ້ຖືຮຸ້ນຂອງບໍລິສັດ ສຸດາພອນການຄ້າ ຂາອອກ-ຂາເຂົ້າ ແລະ ບໍລິການ ຈຳກັດ ຖືຮຸ້ນໃນສັດສ່ວນ 75 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ.<br>- ທ່ານ ນາງ ສະຫວັນທອງ ພົງສະຫວັນ ເປັນຜູ້ຖືຮຸ້ນຂອງບໍລິສັດ ສຸດາພອນການຄ້າ ຂາອອກ-ຂາເຂົ້າ ແລະ ບໍລິການ ຈຳກັດ ຖືຮຸ້ນໃນສັດສ່ວນ 25 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ.<br>- ທ່ານ ຈັນທອນ ສິດທິໄຊ ດຳລົງຕຳແໜ່ງ ຮອງປະທານສະພາບໍລິຫານ/ຜູ້ອຳນວຍການໃຫຍ່/ເປັນຜູ້ມີອຳນາດລົງລາຍເຊັນໃນບໍລິສັດ ແລະ ເປັນຜູ້ຖືຮຸ້ນໃຫຍ່ ຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ຖືຮຸ້ນໃນສັດສ່ວນ 55 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ (ຫຼັງການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ:IPO).<br>- ທ່ານ ນາງ ສະຫວັນທອງ ພົງສະຫວັນ ດຳລົງຕຳແໜ່ງ ຮອງປະທານສະພາບໍລິຫານ/ເປັນຜູ້ມີອຳນາດລົງລາຍເຊັນໃນບໍລິສັດ ແລະ ເປັນຜູ້ຖືຮຸ້ນຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໃນສັດສ່ວນ 18.617 ສ່ວນຮ້ອຍ ຂອງທຶນຈົດທະບຽນທີ່ຊຳລະແລ້ວ (ຫຼັງການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ:IPO). | √ |

| ບໍລິສັດ/ບຸກຄົນທີ່ອາດມີສ່ວນໄດ້ສ່ວນເສຍ | ຄວາມສຳພັນ | ທຸລະກຳທີ່ກ່ຽວພັນ (ມີ= √, ບໍ່ມີ= X) ງວດປີ 2013 ວັນທີ 31 ທັນວາ 2013 |
|---|---|---|
| 9. ບໍລິສັດ ແອວ-ເທັກ ລາວ ຈຳກັດ (Well Tech Lao Co.,Ltd.)<br>ທຸລະກິດ: ບໍລິການທີ່ປຶກສາທາງດ້ານການຄ້າ ແລະ ການລົງທຶນ ໂດຍນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າຊ່ວຍ<br>ຜູ້ອຳນວຍການ: ທ່ານ ນາງ ມະນີວອນ ສິດທິໄຊ | - ທ່ານ ນາງ ມະນີວອນ ສິດທິໄຊ ດຳລົງຕຳແໜ່ງ ຜູ້ອຳນວຍການ/ມີອຳນາດລົງລາຍເຊັນ/ເປັນຜູ້ຖືຮຸ້ນຂອງບໍລິສັດ ແອວ-ເທັກ ລາວ ຈຳກັດ ຖືຮຸ້ນໃນສັດສ່ວນ 50 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ ແລະ ເປັນນ້ອງສາວຂອງທ່ານ ຈັນທອນ ສິດທິໄຊ.<br>- ທ່ານ ວຽງຄອນ ສິດທິໄຊ ເປັນຜູ້ຖືຮຸ້ນຂອງບໍລິສັດ ແອວ-ເທັກ ລາວ ຈຳກັດ ຖືຮຸ້ນໃນສັດສ່ວນ 50 ສ່ວນຮ້ອຍຂອງທຶນຈົດທະບຽນທີ່ຊຳລະແລ້ວ ແລະ ເປັນນ້ອງຊາຍຂອງທ່ານ ຈັນທອນ ສິດທິໄຊ.<br>- ທ່ານ ນາງ ມະນີວອນ ສິດທິໄຊ ເປັນຜູ້ຖືຮຸ້ນບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໃນສັດສ່ວນ 0.043 ສ່ວນຮ້ອຍ ຂອງທຶນຈົດທະບຽນທີ່ຊຳລະແລ້ວ (ຫຼັງການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ:IPO).<br>- ທ່ານ ວຽງຄອນ ສິດທິໄຊ ດຳລົງຕຳແໜ່ງ ສະມະຊິກສະພາບໍລິຫານ(ຜູ້ອຳນວຍການບໍລິສັດ) ແລະ ເປັນຜູ້ຖືຮຸ້ນຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໃນສັດສ່ວນ 0.043 ສ່ວນຮ້ອຍ ຂອງທຶນຈົດທະບຽນທີ່ຊຳລະແລ້ວ (ຫຼັງການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ:IPO). | √ |
| 10. ສະຖານີບໍລິການນ້ຳມັນ ແຊນຊຸມ ພລັສ 2 (Sumson Plus Gas Station Plus 2) | - ທ່ານ ຈັນທອນ ສິດທິໄຊ ເປັນເຈົ້າຂອງສະຖານີບໍລິການນ້ຳມັນ ແສນຊຸມ ພລັສ 4 ເຊິ່ງເປັນສະຖານີທີ່ຮ່ວມລົງທຶນ ລະຫວ່າງ ທ່ານ ຈັນທອນ ສິດທິໄຊ ແລະ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ເພື່ອສ້າງສະຖານີບໍລິການນ້ຳມັນຕົວແບບໃຫ້ກັບບໍລິສັດ ໄດ້ມີການເຮັດສັນຍາຊື້-ຂາຍນ້ຳມັນ ແລະ ຕົກແຕ່ງສະຖານີບໍລິການ ໃນການບໍລິຫານຈັດການແມ່ນ ທ່ານ ຈັນທອນ ສິດທິໄຊ ໄດ້ຈ້າງບຸກຄົນພາຍນອກມາບໍລິຫານ. | √ |

## 2. ຄວາມເຫັນຂອງຄະນະກຳມະການກວດກາພາຍໃນ

ໃນລາຍງານຄະນະກຳມະການກວດກາພາຍໃນ ຄັ້ງທີ 1/2014 ເມື່ອວັນທີ 16 ຕຸລາ 2014 ຄະນະກຳມະການກວດກາພາຍໃນໄດ້ໃຫ້ຄວາມສຳຄັນກັບການກວດສອບລາຍການທີ່ກ່ຽວພັນຕ່າງໆ ໂດຍຍຶດຫຼັກການທີ່ວ່າ ທຸລະກຳທີ່ເກີດຂຶ້ນ ແລະ ຍອມຮັບໄດ້ແມ່ນຕ້ອງຢູ່ໃນຂອບເຂດຫຼັກການດັ່ງນີ້:

1. ເປັນທຸລະກຳທີ່ມີຄວາມຈຳເປັນ ແລະ ເປັນປະໂຫຍດຕໍ່ບໍລິສັດ ແລະ ຜູ້ຖືຮຸ້ນລາຍຍ່ອຍ ແລະ ລາຍໃຫຍ່ໂດຍເທົ່າທຽມກັນ.
2. ທຸລະກຳທີ່ເປັນໄປຕາມການດຳເນີນທຸລະກິດປົກກະຕິຂອງບໍລິສັດຈະຕ້ອງມີການກຳນົດລາຄາ ແລະ ເງື່ອນໄຂຕາມລາຄາຕະຫຼາດ ເຊັ່ນດຽວກັບການກຳນົດລາຄາໃຫ້ກັບບຸກຄົນ ຫຼື ກິດຈະການອື່ນທີ່ບໍ່ກ່ຽວຂ້ອງກັນ.
3. ຈະຕ້ອງຜ່ານການອະນຸມັດຕາມລະບຽບທີ່ບໍລິສັດກຳນົດ ແລະ/ຫຼື ໄດ້ຮັບອະນຸມັດຈາກຜູ້ມີອຳນາດອະນຸມັດ.

ສຳລັບການຄ້າຂາຍສິນຄ້າຂອງບໍລິສັດກັບບໍລິສັດໃນທີ່ກ່ຽວພັນ ແລະ ບໍລິສັດທີ່ມີສ່ວນໄດ້ສ່ວນເສຍແມ່ນໃຊ້ລາຄາດຽວກັນກັບການຄ້າຂາຍກັບບຸກຄົນພາຍນອກທົ່ວໄປ ສ່ວນທຸລະກຳກູ້ຢືມເງິນແມ່ນໃຊ້ອັດຕາດອກເບ້ຍສະເລ່ຍຂອງທະນາຄານທຸລະກິດໃນ ສປປ ລາວ ມາເປັນຫຼັກການ.

## 3. ມາດຕະການ ຫຼື ຂັ້ນຕອນການອະນຸມັດການເຮັດລາຍການທີ່ກ່ຽວພັນ

ບໍລິສັດໃຫ້ຄວາມສຳຄັນໃນການພິຈາລະນາທຸລະກຳຕ່າງໆຢ່າງໂປ່ງໃສ ແລະ ຕ້ອງເປັນປະໂຫຍດຕໍ່ບໍລິສັດເປັນສຳຄັນ ດັ່ງນັ້ນ ຈຶ່ງໃຫ້ຄວາມສຳຄັນຕໍ່ການປ້ອງກັນທຸລະກຳທີ່ອາດມີສ່ວນໄດ້ສ່ວນເສຍທາງຜົນປະໂຫຍດ ໂດຍມີຫຼັກການທີ່ສຳຄັນໃນການພິຈາລະນາອະນຸມັດລາຍການທີ່ກ່ຽວພັນກັນດັ່ງນີ້:

- ຫຼັກການຄວາມຈຳເປັນ ໃນການເຂົ້າເຮັດທຸລະກຳຈະຕ້ອງເປັນປະໂຫຍດຕໍ່ບໍລິສັດ ມີຈະລິຍະທຳໃນການດຳເນີນທຸລະກິດໂດຍຈະປະຕິບັດຕາມກົດລະບຽບບໍລິສັດ ຫຼື ກົດໝາຍທີ່ກ່ຽວຂ້ອງ.
- ຫຼັກການລາຄາຍຸດຕິທຳ ໂດຍພິຈາລະນາຕາມຄວາມເໝາະສົມທາງດ້ານລາຄາທີ່ຝ່າຍບໍລິຫານເຫັນສົມຄວນອະນຸມັດວ່າມີເງື່ອນໄຂຕ່າງໆ ເປັນໄປຕາມລັກສະນະການດຳເນີນການຄ້າປົກກະຕິໃນຕະຫຼາດປຽບທຽບກັບລາຄາທີ່ເກີດຂຶ້ນກັບບຸກຄົນພາຍນອກ ລວມເຖິງໃຫ້ຄວາມເຫັນກ່ອນສະເໜີຂໍອະນຸມັດຕໍ່ສະພາບໍລິຫານ ແລະ/ຫຼື ຜູ້ຖືຮຸ້ນ (ແລ້ວແຕ່ກໍລະນີ) ໃຫ້ພິຈາລະນາອະນຸມັດທຸລະກຳຕາມຄວາມເໝາະສົມ.
- ໃນກໍລະນີທີ່ຄະນະກຳມະການກວດກາພາຍໃນບໍ່ມີຄວາມຊຳນານໃນການພິຈາລະນາທຸລະກຳທີ່ເກີດຂຶ້ນ ຈະໃຫ້ບໍລິສັດຈັດໃຫ້ມີຜູ້ຊ່ຽວຊານອິດສະຫຼະ ຫຼື ຜູ້ກວດສອບບັນຊີຂອງບໍລິສັດເປັນຜູ້ໃຫ້ຄວາມເຫັນກ່ຽວກັບລາຍການທີ່ກ່ຽວພັນກັນດັ່ງກ່າວເພື່ອນຳໄປປະກອບການຕັດສິນໃຈຂອງຄະນະກຳມະການກວດກາພາຍໃນ ແລະ/ຫຼື ສະພາບໍລິຫານ ແລະ/ຫຼື ຜູ້ຖືຮຸ້ນ (ແລ້ວແຕ່ກໍລະນີ) ເຊິ່ງຜູ້ທີ່ອາດມີຄວາມຂັດແຍ່ງ ຫຼື ຜູ້ມີສ່ວນໄດ້ສ່ວນເສຍໃນການເຮັດລາຍການທີ່ກ່ຽວພັນກັນແມ່ນຈະບໍ່ມີສິດອອກສຽງໃນການອະນຸມັດດຳເນີນລາຍການ.

## 4. ນະໂຍບາຍ ແນວໂນ້ມການດຳເນີນລາຍການທີ່ກ່ຽວພັນໃນອານາຄົດ

ເມື່ອບໍລິສັດເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວແລ້ວ ສະພາບໍລິຫານຈະເອົາໃຈໃສ່ເບິ່ງແຍງໃຫ້ບໍລິສັດປະຕິບັດໃຫ້ເປັນໄປຕາມກົດໝາຍວ່າດ້ວຍຫຼັກຊັບ ແລະ ແຈ້ງການຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມເຖິງຂໍ້ບັງຄັບ ແຈ້ງການ ຄຳສັ່ງ ຫຼື ຂໍ້ກຳນົດຂອງຕະຫຼາດຫຼັກຊັບລາວ ລວມເຖິງການປະຕິບັດຕາມລະບຽບກ່ຽວ

ກັບການເປີດເຜີຍຂໍ້ມູນ ການເຮັດລາຍການທີ່ກ່ຽວພັນກັນ ແລະ ການໄດ້ມາ ຫຼື ຈຳໜ່າຍຊັບສິນຂອງບໍລິສັດ ຫຼື ບໍລິສັດທີ່ກ່ຽວຂ້ອງລວມທັງປະຕິບັດຕາມມາດຕະຖານບັນຊີທີ່ກຳນົດ.

ສະນັ້ນ, ຫາກເກີດມີລາຍການທີ່ກ່ຽວພັນຂອງບໍລິສັດ ຫຼື ບໍລິສັດທີ່ກ່ຽວຂ້ອງເກີດຂຶ້ນກັບບຸກຄົນທີ່ອາດມີຄວາມຂັດແຍ່ງ ຫຼື ຜູ້ມີສ່ວນໄດ້ສ່ວນເສຍ ຫຼື ອາດມີຄວາມຂັດແຍ່ງທາງຜົນປະໂຫຍດໃນອະນາຄົດ ບໍລິສັດຈະໃຫ້ຄະນະກຳມະການກວດກາພາຍໃນເປັນຜູ້ໃຫ້ຄວາມເຫັນກ່ຽວກັບຄວາມຈຳເປັນຂອງການເຂົ້າໄປເຮັດທຸລະກຳ ແລະ ຄວາມເໝາະສົມດ້ານລາຄາຂອງທຸລະກຳນັ້ນ ໂດຍພິຈາລະນາເບິ່ງເງື່ອນໄຂຕ່າງໆໃຫ້ເປັນໄປຕາມລັກສະນະການດຳເນີນການຄ້າປົກກະຕິໃນຕະຫຼາດ ແລະ ມີການປຽບທຽບລາຄາທີ່ເກີດຂຶ້ນກັບບຸກຄົນພາຍນອກ.

ດັ່ງນັ້ນ, ບໍລິສັດຈຶ່ງສະຫຼຸບແນວທາງການເຮັດທຸລະກຳທີ່ກ່ຽວພັນໃນອະນາຄົດ ເຊິ່ງສາມາດສະຫຼຸບເປັນປະເດັນໄດ້ດັ່ງນີ້:

1. ການຊື້-ຂາຍຜະລິດຕະພັນ ແລະ ບໍລິການໃນຮູບແບບຂອງການຄ້າປົກກະຕິ: ທຸລະກຳດັ່ງກ່າວຍັງຄົງມີການດຳເນີນການເປັນທຸລະກຳການຊື້-ຂາຍປົກກະຕິບົນຫຼັກການເຊັ່ນດຽວກັນກັບການຊື້-ຂາຍໃຫ້ບຸກຄົນພາຍນອກ (Arm's length basis) ເຊິ່ງທຸລະກຳດັ່ງກ່າວມີລາຍລະອຽດດັ່ງລຸ່ມນີ້:
   1.1 ທຸລະກຳທີ່ໃຊ້ບໍລິການ ບໍລິສັດ ສິດທິ ໂລຈິດສຕິກ ລາວ ຈຳກັດໃນການຂົນສົ່ງນ້ຳມັນຈາກສາງນ້ຳມັນຂອງບໍລິສັດໄປຍັງສະຖານີບໍລິການນ້ຳມັນຂອງລູກຄ້າ(ຫຼື ສະຖານທີ່ຕາມທີ່ລູກຄ້າສັ່ງ)
   1.2 ທຸລະກຳທີ່ ບໍລິສັດ ສິດທິ ໂລຈິດສຕິກ ລາວ ຈຳກັດ ສັ່ງຊື້ນ້ຳມັນກັບບໍລິສັດ
   1.3 ທຸລະກຳ ການຊຳລະຄ່າບໍລິການສຳລັບການໃຊ້ຈ່າຍຜ່ານບັດແທນເງິນສົດໃນສະຖານີຮູບແບບ COCO ໃຫ້ແກ່ບໍລິສັດ ແວວ-ແທັກ ລາວ ຈຳກັດ
   1.4 ທຸລະກຳການສັ່ງຊື້ສິນຄ້າຈາກບໍລິສັດ ຂວັນໃຈການຄ້າ ຂາອອກ-ຂາເຂົ້າ ຈຳກັດ
   1.5 ທຸລະກຳການສັ່ງຊື້ສິນຄ້າຈາກບໍລິສັດ ສິດທິການຄ້າສາກົນ ຂາອອກ-ຂາເຂົ້າ ຈຳກັດ

   ໂດຍທຸລະກຳດັ່ງກ່າວຈະເປັນການເຮັດທຸລະກຳປົກກະຕິໃນການດຳເນີນທຸລະກິດຂອງບໍລິສັດ ແລະ ຈະເຮັດໃຫ້ເປັນໄປຕາມລະບຽບ ແລະ ມາດຕະການໃນການເຮັດທຸລະກຳລະຫວ່າງກັນ.
2. ທຸລະກຳການຊຳລະເງິນແທນໃນອານາຄົດ ພາຍຫຼັງຈາກເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວແລ້ວ ທຸລະກຳດັ່ງກ່າວຈະບໍ່ເກີດຂຶ້ນອີກໃນອານາຄົດ.
3. ທຸລະກຳການໃຫ້ກູ້ຢືມເງິນແກ່ບໍລິສັດ ຫຼື ບຸກຄົນທີ່ກ່ຽວພັນ ພາຍຫຼັງຈາກເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວແລ້ວ ທຸລະກຳດັ່ງກ່າວຈະບໍ່ເກີດຂຶ້ນອີກໃນອານາຄົດ ສຳລັບທຸລະກຳທີ່ເກີດຂຶ້ນກ່ອນການເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວແລ້ວນັ້ນ ບໍລິສັດ ຫຼື ບຸກຄົນທີ່ກ່ຽວພັນຈະດຳເນີນການຕາມຂໍ້ຜູກພັນຂອງສັນຍາດັ່ງກ່າວ.
4. ທຸລະກຳການໃຫ້ເຊົ່າຊັບສິນທີ່ເກີດຂຶ້ນພາຍຫຼັງຈາກການເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວແມ່ນຈະໃຫ້ມີການປະເມີນລາຄາເຊົ່າຊັບສິນນັ້ນໆທຸກຄັ້ງຕາມທີ່ມີການຕໍ່ສັນຍາ.

## 1.12 ຜົນການດຳເນີນງານ ແລະ ຂໍ້ມູນຖານະການເງິນ

### 1.12.1 ງົບການເງິນ

**ສະຫຼຸບລາຍງານການກວດສອບບັນຊີ**

ງົບກວດສອບ : ງົບການເງິນສຳລັບງວດບັນຊີປີ 2011-2012-2013

ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ ເປັນຜູ້ກວດສອບບັນຊີ ເຊິ່ງໄດ້ຮັບອະນຸຍາດຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໂດຍໄດ້ປະຕິບັດກວດສອບບັນຊີຕາມມາດຕະຖານການກວດສອບບັນຊີທີ່ຮັບຮອງໂດຍທົ່ວໄປ ຈາກຂໍ້ມູນການກວດສອບນັ້ນຜູ້ກວດສອບໃຫ້ຄຳເຫັນຢ່າງມີເງື່ອນໄຂ ດັ່ງນີ້:

ພວກຂ້າພະເຈົ້າບໍ່ສາມາດເຂົ້າຮ່ວມສັງເກດການກວດນັບເຄື່ອງໃນສາງຂອງບໍລິສັດ ໃນວັນທີ 31 ທັນວາ 2012, 31 ທັນວາ 2011 ແລະ 31 ທັນວາ 2010 ເນື່ອງຈາກວ່າ ພວກຂ້າພະເຈົ້າ ບໍ່ໄດ້ຮັບການແຕ່ງຕັ້ງໃຫ້ເປັນຜູ້ກວດສອບຂອງບໍລິສັດ. ອີງຕາມເອກະສານທີ່ບໍລິສັດສະໜອງໃຫ້ ພວກຂ້າພະເຈົ້າບໍ່ສາມາດຢັ້ງຢືນເຄື່ອງໃນສາງຂອງບໍລິສັດ ໃນວັນທີ 31 ທັນວາ 2012, 31 ທັນວາ 2011 ແລະ 31 ທັນວາ 2010 ແລະ ບໍ່ສາມາດຮັບຮູ້ໄດ້ວ່າລາຍການດັດແກ້ຕົວເລກສຳລັບທ້າຍປີ ໃນວັນທີ 31 ທັນວາ 2012, 31 ທັນວາ 2011 ແລະ 31 ທັນວາ 2010.

ບໍລິສັດ ບໍ່ສາມາດແຍກຕົວເລກໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ ລະຫວ່າງປຶ້ມບັນທຶກບັນຊີ ແລະ ເອກະສານຢັ້ງຢືນ ວັນທີ 31 ທັນວາ 2013 ແລະ 31 ທັນວາ 2012. ອີງຕາມເອກະສານທີ່ບໍລິສັດສະໜອງໃຫ້ເຫັນວ່າຍັງບໍ່ພຽງພໍເພື່ອຢັ້ງຢືນຍອດເຫຼືອໜີ້ຕ້ອງຮັບດັ່ງກ່າວ ວັນທີ 31 ທັນວາ 2013 ແລະ 31 ທັນວາ 2012 ແລະ ບໍ່ສາມາດຮັບຮູ້ໄດ້ວ່າລາຍການດັດແກ້ຕົວເລກສຳລັບທ້າຍປີ ໃນວັນທີ 31 ທັນວາ 2013 ແລະ 31 ທັນວາ 2012.

ຜູ້ກວດສອບບັນຊີ ແລະ ໃຫ້ຄວາມເຫັນໂດຍຜູ້ກວດສອບບັນຊີ

ພວກຂ້າພະເຈົ້າ ບໍ່ໄດ້ຮັບເອກະສານສະໜັບສະໜູນທີ່ພຽງພໍ ໃນການກວດສອບ ລາຍຮັບຈາກອັດຕາດອກເບ້ຍເງິນກູ້ຂອງບໍລິສັດທີ່ກ່ຽວຂ້ອງກັບພາກສ່ວນທີ່ກ່ຽວຂ້ອງມູນຄ່າ 533,878,096 ກີບ, 969,825,109 ກີບ ແລະ 969,825,109 ກີບ ໃນປີ 2011, 2012 ແລະ 2013 ຕາມລຳດັບ, ເນື່ອງຈາກການບັນທຶກບັນຊີຍັງບໍ່ຖືກຕ້ອງເຮັດໃຫ້ບໍ່ສາມາດຄິດໄລ່ ແລະ ບັນທຶກລາຍຮັບຈາກອັດຕາດອກເບ້ຍດັ່ງກ່າວໄດ້. ດັ່ງນັ້ນ, ພວກຂ້າພະເຈົ້າບໍ່ສາມາດຮັບຮູ້ໄດ້ວ່າລາຍການດັດແກ້ຕົວເລກ ສຳລັບທ້າຍປີ ໃນວັນທີ 31 ທັນວາ 2013, 31 ທັນວາ 2012 ແລະ 31 ທັນວາ 2011.

ພວກຂ້າພະເຈົ້າ ບໍ່ໄດ້ຮັບເອກະສານສະໜັບສະໜູນທີ່ພຽງພໍ ເພື່ອຢັ້ງຢືນຍອດເຫຼືອໜີ້ຕ້ອງສິ່ງອາກອນກຳໄລ ມູນຄ່າ 2,600,910,526 ກີບ ນະວັນທີ 31 ທັນວາ 2010. ເນື່ອງຈາກຍອດທີ່ບັນທຶກຕາມບັນຊີບໍ່ຖືກຕ້ອງ ດັ່ງນັ້ນ, ໃນລະຫວ່າງໄລຍະເວລາ 3 ປີນັບແຕ່ປີ 2011-2013 ບໍລິສັດໄດ້ມີການໄລ່ລຽງອາກອນລາຍຮັບກັບເຈົ້າໜ້າທີ່ສວຍສາອາກອນໂດຍອີງຕາມການພິຈາລະນາວິທີໄລ່ລຽງອາກອນລາຍຮັບ, ເປັນຕົ້ນ ແມ່ນອີງຕາມປະລິມານຍອດຂາຍ ແລະ ພິຈາລະນາຕາມມາດຕະຖານອັດຕາການຄິດໄລ່ອາກອນກຳໄລຕໍ່ກັບຈຳນວນລິດທີ່ໄດ້ຂາຍ. ເຖິງບໍສອດຄ່ອງກັນຕາມວິທີການໃນລະບຽບການທີ່ມີທົ່ວໄປຕາມລະບຽບການວ່າດ້ວຍອາກອນລາຍຮັບນັ້ນ ແນວໃດກໍ່ຕາມອາກອນລາຍຮັບຂອງບໍລິສັດໃນໄລຍະ 3 ປີ ແມ່ນໄດ້ຖືກກວດສອບໂດຍເຈົ້າໜ້າທີ່ສວຍສາອາກອນທ້ອງຖິ່ນ. ຂ້າພະເຈົ້າບໍ່ສາມາດພິຈາລະນາໄດ້ວ່າວິທີການທີ່ບໍລິສັດຊຳລະໄປນັ້ນຈະຖືກກວດສອບຈາກກົມພາສີ ແລະ ອາດຈະສົ່ງຜົນກະທົບຕໍ່ການປ່ຽນແປງເຖິງຄ່າໃຊ້ຈ່າຍອາກອນກຳໄລດັ່ງກ່າວໃນລາຍງານຜົນໄດ້ຮັບໃນປີ 2011-2013 ເຊິ່ງອາດຈະສົ່ງຜົນ

ກະທົບຕໍ່ຈຳນວນອາກອນກຳໄລຄ້າງຈ່າຍທີ່ລາຍງານໃນລາຍງານຊັບສິນ

ບໍລິສັດບໍ່ສາມາດສະໜອງການບັນທຶກບັນຊີທີ່ພຽງພໍເພື່ອສະໜັບສະໜຸນ ຍອດເຫຼືອໜີ້ຕ້ອງສິ່ງອາກອນມູນຄ່າເພີ່ມ ("ອມພ") ວັນທີ 31 ທັນວາ 2010 ມູນຄ່າ 1,217,950,447 ກີບ ແລະ ບໍ່ສາມາດສະໜອງການບັນທຶກບັນຊີທີ່ພຽງພໍເພື່ອແກ້ໄຂຄວາມແຕກຕ່າງກັນລະຫວ່າງການເສຍອາກອນມູນຄ່າເພີ່ມຕາມກົດໝາຍ ແລະ ຕາມທີ່ບໍລິສັດໄດ້ບັນທຶກໃນບັນຊີ ສຳລັບທ້າຍປີ ວັນທີ 31 ທັນວາ 2013, 31 ທັນວາ 2012 ແລະ 31 ທັນວາ 2011. ດັ່ງນັ້ນ, ບໍລິສັດຄວນເອົາຍອດເຫຼືອໜີ້ຕ້ອງສິ່ງອາກອນມູນຄ່າເພີ່ມກັບໄປເປັນລາຍຮັບທາງການເງິນ ໃນທ້າຍປີ ວັນທີ 31 ທັນວາ 2012 ແລະ 31 ທັນວາ 2013 ໃນມູນຄ່າ 5,769,691,523 ກີບ ແລະ 8,287,846,766, ກີບ ຕາມລຳດັບ, ເນື່ອງຈາກວ່າຍອດເຫຼືອດັ່ງກ່າວບໍ່ມີເອກະສານສະໜັບສະໜູນທີ່ພຽງພໍ. ດັ່ງນັ້ນ, ພວກຂ້າພະເຈົ້າຈຶ່ງບໍ່ສາມາດຮັບຮູ້ໄດ້ວ່າລາຍການດັດແກ້ຕົວເລກ ສຳລັບທ້າຍປີ ວັນທີ 31 ທັນວາ 2013, 31 ທັນວາ 2012 ແລະ 31 ທັນວາ 2011 .

**ການອອກຄຳເຫັນແບບມີເງື່ອນໄຂ**

ໃນຄວາມເຫັນຂອງພວກຂ້າພະເຈົ້າ, ຍົກເວັ້ນຜົນກະທົບທີ່ອາດຈະເກີດຂຶ້ນຈາກບັນຫາສຳຄັນທີ່ໄດ້ລະບຸໄວ້ໃນວັກພື້ນຖານການອອກຄຳເຫັນແບບມີເງື່ອນໄຂຂ້າງເທິງ, ພວກຂ້າພະເຈົ້າເຫັນວ່າ ບົດລາຍງານການເງິນຂອງບໍລິສັດ ສຳລັບທ້າຍປີ ວັນທີ 31 ທັນວາ 2013, 31 ທັນວາ 2012 ແລະ 31 ທັນວາ 2011 ໄດ້ຖືກກະກຽມ ໂດຍອີງຕາມນະ�โยบายການບັນຊີຕາມທີ່ໄດ້ລະບຸໃນເອກະສານຊ້ອນທ້າຍ ເລກທີ 3 ຂອງບົດລາຍງານການເງິນ.

## 1.12.2 ຕາຕາລາງສະຫຼຸບສະຖານະການເງິນ ແລະ ຜົນການດຳເນີນງານ

### ກ.ໃບສະຫຼຸບຊັບສິນບັດ: ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ຕາຕະລາງທີ 1.12.1 : ສະແດງໃບສະຫຼຸບຊັບສິນບັດ

| ໃບສະແດງຖານະການເງິນ | 31 ທັນວາ 2011 | | 31 ທັນວາ 2012 | | 31 ທັນວາ 2013 | |
|---|---|---|---|---|---|---|
| | ລ້ານກີບ | % | ລ້ານກີບ | % | ລ້ານກີບ | % |
| **ຊັບສິນໝຸນວຽນ** | | | | | | |
| ເງິນສົດ ແລະ ເງິນຝາກທະນາຄານ | 4,537 | 2.24 | 8,316 | 2.96 | 9,424 | 1.68 |
| ລູກໜີ້ການຄ້າ | 47,164 | 23.25 | 72,424 | 25.78 | 88,466 | 15.75 |
| ຄ່າໃຊ້ຈ່າຍລ່ວງໜ້າຄ່າສິນຄ້າ | 8,792 | 4.34 | 10,781 | 3.84 | 526 | 0.09 |
| ລູກໜີ້ຄ້າງຮັບ | 28,248 | 13.93 | 19,113 | 6.80 | 286,202 | 50.96 |
| ສິນຄ້າໃນສາງ | 8,571 | 4.23 | 7,587 | 2.70 | 12,291 | 2.19 |
| ຊັບສິນໝຸນວຽນອື່ນໆ | 20,555 | 10.14 | 22,241 | 7.92 | 2,943 | 0.52 |
| ຊັບສິນໝຸນວຽນລວມ | **117,867** | **58.12** | **140,463** | **50.01** | **399,852** | **71.20** |
| **ຊັບສິນທີ່ບໍ່ໝຸນວຽນ** | | | | | | |
| ຊັບສິນຄົງທີ | 55,539 | 27.38 | 69,007 | 24.57 | 67,637 | 12.04 |
| ສັບສິນບໍ່ມີຕົວຕົນຄົງທີ | 623 | 0.31 | 588 | 0.21 | 506 | 0.09 |
| ຊັບສິນຕາມສັນຍາເຊົ່າຊື້ | 11,110 | 5.48 | 21,686 | 7.72 | 18,276 | 3.25 |
| ຊັບສິນເພື່ອການລົງທຶນ | 484 | 0.24 | 434 | 0.15 | 408 | 0.07 |
| ຊັບສິນໃນລະຫว่างການກໍ່ສ້າງ | 3,552 | 1.75 | 2,639 | 0.94 | 17,248 | 3.07 |
| ເງິນລົງທຶນໄລຍະຍາວ | 8,449 | 4.17 | 19,391 | 6.90 | 21,173 | 3.77 |
| ໜີ້ຕ້ອງຮັບໄລຍະຍາວອື່ນໆ | 5,190 | 2.56 | 26,675 | 9.50 | 36,474 | 6.49 |
| ຊັບສິນບໍ່ໝຸນວຽນລວມ | **84,946** | **41.88** | **140,420** | **49.99** | **161,721** | **28.80** |
| **ຊັບສິນລວມທັງໝົດ** | **202,814** | **100.00** | **280,883** | **100.00** | **561,573** | **100.00** |
| **ໜີ້ສິນ ແລະ ທຶນ** | | | | | | |
| **ໜີ້ສິນໝຸນວຽນ** | | | | | | |
| ເງິນກູ້ຢືມໄລຍະສັ້ນ | 70,642 | 34.83 | 134,271 | 47.80 | 158,199 | 28.17 |
| ເຈົ້າໜີ້ການຄ້າ | 4,954 | 2.44 | 14,562 | 5.18 | 17,576 | 3.13 |
| ເງິນຮັບລ່ວງໜ້າຄ່າສິນຄ້າ | 620 | 0.31 | 696 | 0.25 | 547 | 0.10 |
| ພາສີຄ້າງຈ່າຍ | 19,697 | 9.71 | 15,040 | 5.35 | 7,331 | 1.31 |
| ຄ່າໃຊ້ຈ່າຍຄ້າງຈ່າຍ | 300 | 0.15 | 28 | 0.01 | 18 | 0.00 |
| ເຈົ້າໜີ້ອື່ນ | 4,232 | 2.09 | 4,563 | 1.62 | 1,098 | 0.20 |
| ໜີ້ສິນໝຸນວຽນລວມ | **100,447** | **49.53** | **169,162** | **60.23** | **184,769** | **32.90** |
| **ໜີ້ສິນບໍ່ໝຸນວຽນ** | | | | | | |
| ເງິນກູ້ຢືມໄລຍະຍາວ | 5,159 | 2.54 | 9,606 | 3.42 | 7,671 | 1.37 |
| ໜີ້ສິນບໍ່ໝຸນວຽນລວມ | **5,159** | **2.54** | **9,606** | **3.42** | **7,671** | **1.37** |
| **ໜີ້ສິນລວມທັງໝົດ** | **105,605** | **52.07** | **178,768** | **63.65** | **192,440** | **34.27** |
| **ທຶນຈາກຜູ້ຖືຮຸ້ນ** | | | | | | |
| ທຶນຈົດທະບຽນ | 75,600 | 37.28 | 75,600 | 26.92 | 350,000 | 62.32 |
| ກຳໄລສະສົມທີ່ຍັງບໍ່ໄດ້ຈັດສັນ | 21,608 | 10.65 | 26,514 | 9.44 | 19,133 | 3.41 |
| ທຶນຈາກຜູ້ຖືຮຸ້ນລວມ | **97,208** | **47.93** | **102,114** | **36.35** | **369,133** | **65.73** |
| **ທຸນຈາກຜູ້ຖືຮຸ້ນ ແລະ ໜີ້ສິນລວມທັງໝົດ** | **202,814** | **100.00** | **280,883** | **100.00** | **561,573** | **100.00** |

## ຂ. ໃບລາຍງານຜົນໄດ້ຮັບ: ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ຕາຕະລາງທີ 1.12.2 : ສະແດງໃບລາຍງານຜົນໄດ້ຮັບ

| ໃບລາຍງານຜົນໄດ້ຮັບ | ປີ 2011 | | ປີ 2012 | | ປີ 2013 | |
|---|---|---|---|---|---|---|
| | ລ້ານກີບ | ສັດສ່ວນ | ລ້ານກີບ | ສັດສ່ວນ | ລ້ານກີບ | ສັດສ່ວນ |
| ລາຍຮັບຈາກການຂາຍ | 905,080 | 100.00 | 1,019,012 | 100.00 | 1,075,040 | 100.00 |
| ຕົ້ນທຶນຂາຍ | (843,103) | 93.15 | (948,046) | 93.04 | (1,003,917) | 93.38 |
| **ກຳໄລຂັ້ນຕົ້ນ** | **61,977** | **6.85** | **70,966** | **6.96** | **71,123** | **6.62** |
| ລາຍຮັບອື່ນ-ສຸດທິ | 0 | 0.00 | 56 | 0.01 | 667 | 0.06 |
| ລາຍຈ່າຍໃນການບໍລິຫານ | (16,719) | 1.85 | (23,995) | 2.35 | (31,021) | 2.89 |
| ລາຍຈ່າຍໃນການຂາຍ | (14,679) | 1.62 | (14,676) | 1.44 | (16,329) | 1.52 |
| **ຄ່າໃຊ້ຈ່າຍໃນການດຳເນີນງານລວມ-ສຸດທິ** | **(31,398)** | **3.47** | **(38,615)** | **3.79** | **(46,683)** | **4.34** |
| **ກຳໄລຈາກການດຳເນີນງານ** | **30,579** | **3.38** | **32,351** | **3.17** | **24,441** | **2.27** |
| ດອກເບ້ຍຮັບ | 2,042 | 0.23 | 9,212 | 0.90 | 18,599 | 1.73 |
| ດອກເບ້ຍຈ່າຍ | (8,016) | 0.89 | (12,281) | 1.21 | (20,772) | 1.93 |
| **ກຳໄລກ່ອນອາກອນກຳໄລ** | **24,606** | **2.72** | **29,281** | **2.87** | **22,268** | **2.07** |
| ອາກອນກຳໄລ | (2,997) | 0.33 | (2,767) | 0.27 | (3,135) | 0.29 |
| **ກຳໄລສຸດທິປະຈຳປີ** | **21,608** | **2.39** | **26,514** | **2.60** | **19,133** | **1.77** |

## ຄ. ໃບລາຍງານກະແສເງິນສົດ: ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ຕາຕະລາງທີ 1.12.3: ສະແດງໃບລາຍງານກະແສເງິນສົດ

| ໃບລາຍງານກະແສເງິນສົດ | ປີ 2011 | ປີ 2012 | ປີ 2013 |
|---|---|---|---|
| | ລ້ານກີບ | ລ້ານກີບ | ລ້ານກີບ |
| ກະແສເງິນສົດສຸດຈາກກິດຈະກຳການດຳເນີນງານ | (7,775) | 819 | 9,284 |
| ກະແສເງິນສົດສຸດທິຈາກກິດຈະກຳການລົງທຶນ | (33,670) | (65,117) | (30,168) |
| ກະແສເງິນສົດສຸດທິຈາກກິດຈະກຳການເງິນ | 42,699 | 68,076 | 21,992 |
| **ເງິນສົດສຸດທິ ເພີ່ມຂຶ້ນ/(ຫຼຸດລົງ)** | **1,255** | **3,778** | **1,108** |
| ເງິນສົດໃນວັນຕົ້ນງວດ | 3,283 | 4,537 | 8,316 |
| ເງິນສົດໃນວັນສິ້ນງວດ | 4,537 | 8,316 | 9,424 |

## ງ. ຕາຕາລາງອັດຕາສ່ວນທາງການເງິນທີ່ສຳຄັນ

ຕາຕະລາງທີ 1.12.4: ສະແດງອັດຕາສ່ວນທາງການເງິນທີ່ສຳຄັນຂອງບໍລິສັດ

| ອັດຕາສ່ວນທາງການເງິນ | | ກວດສອບແລ້ວ | | |
|---|---|---|---|---|
| | | ປີ 2011 | ປີ 2012 | ປີ 2013 |
| **ອັດຕາສ່ວນສະພາບຄ່ອງ (Liquidity ratio)** | | | | |
| ອັດຕາສ່ວນສະພາບຄ່ອງ | ເທົ່າ | 1.17 | 0.83 | 2.16 |
| ອັດຕາສ່ວນສະພາບຄ່ອງໝຸນວຽນ | ເທົ່າ | 0.51 | 0.48 | 0.53 |
| ອັດຕາສ່ວນສະພາບຄ່ອງກະແສເງິນ | ເທົ່າ | (0.08) | 0.01 | 0.05 |
| ອັດຕາສ່ວນໝຸນວຽນລູກໜີ້ການຄ້າ | ເທົ່າ | 18.47* | 16.31 | 12.71 |
| ໄລຍະເວລາເກັບໜີ້ສະເລ່ຍ | ວັນ | 19.50 | 22.07 | 28.32 |
| ອັດຕາສ່ວນໝຸນວຽນສິນຄ້າຄົງເຫຼືອ | ເທົ່າ | 98.36* | 117.34 | 101.01 |
| ໄລຍະເວລາຂາຍສິນຄ້າສະເລ່ຍ | ວັນ | 3.66 | 3.07 | 3.56 |
| ອັດຕາສ່ວນໝຸນວຽນເຈົ້າໜີ້ການຄ້າ | ເທົ່າ | 170.17* | 97.15 | 62.47 |
| ໄລຍະເວລາຊຳລະໜີ້ເຈົ້າໜີ້ການຄ້າ | ວັນ | 2.12 | 3.71 | 5.76 |
| ໄລຍະເວລາໝຸນວຽນເງິນສົດ | ວັນ | 21.04 | 21.43 | 26.12 |
| **ອັດຕາສ່ວນສະແດງຄວາມສາມາດໃນການຫາກຳໄລ (Profitability ratio)** | | | | |
| ອັດຕາກຳໄລຂັ້ນຕົ້ນ | % | 6.85 | 6.96 | 6.62 |
| ອັດຕາກຳໄລຈາກການດຳເນີນງານ | % | 3.38 | 3.17 | 2.27 |
| ອັດຕາກຳໄລອື່ນ | % | (0.06) | 0.00 | 0.00 |
| ອັດຕາສ່ວນເງິນສົດຕໍ່ການສ້າງກຳໄລ | % | (25.42) | 2.53 | 37.99 |
| ອັດຕາກຳໄລສຸດທິ | % | 2.39 | 2.60 | 1.77 |
| ອັດຕາຜົນຕອບແທນຜູ້ຖືຮຸ້ນ | % | 22.23* | 26.60 | 8.12 |
| **ອັດຕາສ່ວນສະແດງປະສິດທິພາບໃນການດຳເນີນງານ (Efficiency ratio)** | | | | |
| ອັດຕາຜົນຕອບແທນຈາກຊັບສິນ | % | 10.65* | 10.96 | 4.54 |
| ອັດຕາຜົນຕອບແທນຈາກຊັບສິນຖາວອນ | % | 33.14* | 32.14 | 22.27 |
| ອັດຕາການໝຸນຂອງຊັບສິນ | ເທົ່າ | 4.46* | 4.21 | 2.56 |
| **ອັດຕາສ່ວນວິເຄາະນະໂຍບາຍທາງການເງິນ (Financial policy ratio)** | | | | |
| ອັດຕາສ່ວນໜີ້ສິນຕໍ່ສ່ວນຂອງຜູ້ຖືຮຸ້ນ | ເທົ່າ | 1.09 | 1.75 | 0.52 |
| ອັດຕາສ່ວນຄວາມສາມາດຊຳລະດອກເບ້ຍ | ເທົ່າ | 0.26 | 1.51 | 1.74 |
| ອັດຕາສ່ວນຄວາມສາມາດຊຳລະພາລະຜູກພັນ (cash basis) | ເທົ່າ | (0.02) | 0.00 | 0.01 |
| ອັດຕາການຈ່າຍເງິນປັນຜົນ | % | 0.00 | 0.00 | 0.00 |

**ໝາຍເຫດ**: ລາຍການທີ່ມີເຄື່ອງໝາຍ*ເປັນການຄຳນວນໂດຍບໍ່ໄດ້ໃຊ້ຄ່າສະເລ່ຍເນື່ອງຈາກວ່າບໍ່ມີຂໍ້ມູນທາງການເງິນໃນປີ 2010 ມາຄຳນວນຫາຄ່າສະເລ່ຍ ດັ່ງນັ້ນຈຶ່ງພິຈາລະນາຄຳນວນຈາກງົບການເງິນປີ 2011 ເທົ່ານັ້ນ

## 1.12.3 ຄຳອະທິບາຍການວິເຄາະຖານະການເງິນ ແລະ ຜົນການດຳເນີນງານ

### 1. ຜົນການດຳເນີນງານ

**<u>ພາບລວມຂອງຜົນການດຳເນີນງານທີ່ຜ່ານມາ</u>**

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ເຊິ່ງຕໍ່ໄປນີ້ເອີ້ນວ່າ "ບໍລິສັດ" ຫຼື "PTL" ເປັນຜູ້ດຳເນີນທຸລະກິດນຳເຂົ້າ ແລະ ຈຳໜ່າຍນ້ຳມັນເຊື້ອໄຟເປັນອັນດັບຕົ້ນໆຂອງ ສປປ ລາວ ເຊິ່ງມີຍອດການຈຳໜ່າຍນ້ຳມັນເຊື້ອໄຟ ທີ່ມີສ່ວນແບ່ງການຕະຫຼາດ (Market Share) ເປັນອັນດັບ 2 ໃນ ສປປ ລາວ ຕັ້ງແຕ່ປີ 2011 ເປັນຕົ້ນມາ ນອກຈາກນີ້ບໍລິສັດຍັງໄດ້ເຂົ້າເປັນສະມາຊິກຂອງສະມາຄົມເຊື້ອໄຟ ແລະ ອາຍແກັດລາວ ເຊິ່ງໃນນີ້ບໍລິສັດມີການຈຳໜ່າຍຜະລິດຕະພັນຫຼັກຢູ່ 5 ປະເພດ ຄື: 1.) ນ້ຳມັນກາຊວນ (Diesel) 2.) ນ້ຳມັນແອັດຊັງທຳມະດາ (Benzene Regular 91) 3.) ນ້ຳມັນແອັດຊັງພິເສດ (Benzene Super 95) 4.) ນ້ຳມັນເຕົາ ແລະ 5.) ນ້ຳມັນເຄື່ອງ. ເຊິ່ງຜະລິດຕະພັນທີ່ບໍລິສັດນຳເຂົ້າມາຈຳໜ່າຍແມ່ນນຳເຂົ້າມາຈາກໂຮງກັ່ນປະເທດໄທ ທີ່ມີຊື່ສຽງ ແລະ ເປັນທີ່ຍອມຮັບໃນດ້ານຄຸນນະພາບລະດັບສາກົນຄື: Chevron (Thailand) Limited (Chevron), ESSO (Thailand) Public Company Limited (ESSO), IRPC Public Company Limited (IRPC) ແລະ The Shell Company of Thailand Limited (Shell) ໂດຍນຳເຂົ້າມາຈັດເກັບໃນສາງນ້ຳມັນຂອງບໍລິສັດທີ່ກະຈາຍຕົວຢູ່ຕາມເມືອງຍຸດທະສາດທີ່ມີຊາຍແດນຕິດກັບປະເທດໄທ ຈຳນວນ 5 ສາງ ເຊິ່ງມີປະລິມານບັນຈຸທັງໝົດ 3,610,000 ລິດ ແລ້ວຈຶ່ງນຳໄປຈຳໜ່າຍຕໍ່ຜ່ານທາງສະຖານີບໍລິການນ້ຳມັນຂອງບໍລິສັດພາຍໃຕ້ເຄື່ອງໝາຍການຄ້າ "ພລັສ" ຫຼື "PLUS" ປັດຈຸບັນມີສາຂາຢູ່ທົ່ວທັງ ສປປ ລາວ ຈຳນວນ 107 ສະຖານີ ໂດຍມີຮູບແບບການຈັດການທີ່ສຳຄັນ 2 ຮູບແບບຄື: ບໍລິສັດລົງທຶນ ແລະ ບໍລິຫານເອງ (Company Owned, Company Operated: COCO) ຈຳນວນ 8 ສະຖານີ ແລະ ບໍລິສັດຮ່ວມລົງທຶນ (Company Owned, Dealer Operated: CODO) ຈຳນວນ 99 ສະຖານີ. ນອກຈາກການຈຳໜ່າຍຜ່ານສະຖານີບໍລິການນ້ຳມັນແລ້ວ ບໍລິສັດຍັງໄດ້ຈຳໜ່າຍໂດຍກົງໄປຍັງລູກຄ້າໂຄງການ, ຂະແໜງການອຸດສາຫະກຳ, ບໍລິສັດຂົນສົ່ງ ແລະ ຜູ້ຄ້ານ້ຳມັນ (Jobber) ໃນ ສປປ ລາວ.

ເມື່ອພິຈາລະນາຜົນການດຳເນີນງານໃນຊ່ວງທີ່ຜ່ານມາເຫັນວ່າ ບໍລິສັດມີລາຍຮັບຈາກການຂາຍສິນຄ້າເພີ່ມຂຶ້ນຢ່າງຕໍ່ເນື່ອງເທົ່າກັບ 905,080 ລ້ານກີບ ໃນ 2011 ເພີ່ມຂຶ້ນມາເປັນ 1,019,012 ລ້ານກີບ ໃນປີ 2012 ຫຼື ເພີ່ມຂຶ້ນເທົ່າກັບ 12.59 ສ່ວນຮ້ອຍເມື່ອທຽບກັບລາຍຮັບໃນການຂາຍສິນຄ້າໃນປີຜ່ານມາ ແລະ ເພີ່ມຂຶ້ນມາເປັນ 1,075,040 ລ້ານກີບ ໃນປີ 2013 ຫຼື ເພີ່ມຂຶ້ນເທົ່າກັບ 5.50 ສ່ວນຮ້ອຍເມື່ອທຽບກັບລາຍຮັບໃນການຂາຍສິນຄ້າໃນປີຜ່ານມາ. ເຊິ່ງລາຍໄດ້ຫຼັກຈາກການຂາຍສິນຄ້າທີ່ສຳຄັນສ່ວນໃຫຍ່ແມ່ນມາຈາກການຈຳໜ່າຍນ້ຳມັນເຊື້ອໄຟ ເຊິ່ງເພີ່ມຂຶ້ນຢ່າງຕໍ່ເນື່ອງຕາມການຂະຫຍາຍຕົວຂອງທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟ. ໃນຊ່ວງທີ່ຜ່ານມາ ບໍລິສັດມີການລົງທຶນເພີ່ມຢ່າງຕໍ່ເນື່ອງໃນການຂະຫຍາຍສະຖານີບໍລິການນ້ຳມັນໃນຮູບແບບ CODO ແລະ ມີລົດຂົນສົ່ງນ້ຳມັນເຊື້ອໄຟເພີ່ມຂຶ້ນຢ່າງຕໍ່ເນື່ອງ ອັນເປັນປັດໄຈສຳຄັນທີ່ເຮັດໃຫ້ທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟຂອງບໍລິສັດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ໃນຂະນະດຽວກັນ ຄ່າໃຊ້ຈ່າຍຂອງບໍລິສັດກໍ່ເພີ່ມຂຶ້ນໄປພ້ອມໆກັນກັບການຂະຫຍາຍຕົວຂອງທຸລະກິດ ເນື່ອງຈາກບໍລິສັດມີຄ່າໃຊ້ຈ່າຍໃນການຂາຍ, ຄ່າໃຊ້ຈ່າຍການບໍລິຫານ ແລະ ລ່າຍຈ່າຍທາງດ້ານດອກເບ້ຍເພີ່ມຂຶ້ນ ໄດ້ແກ່: ຄ່າໃຊ້ຈ່າຍກ່ຽວກັບພະນັກງານ, ຄ່າເຊົ່າ, ຄ່າຫຼ້ຍຫ້ຽນ ແລະ ຄ່າໃຊ້ຈ່າຍຕັດຈ່າຍ, ຄ່າສາທາລະນຸປະโภ, ຄ່າບຳລຸງຮັກສາ ແລະ ສ້ອມແປງ ໂດຍມີແນວโน້ມເພີ່ມຂຶ້ນຢ່າງຕໍ່ເນື່ອງຕາມຊັບສິນທີ່ໃຊ້ປະກອບທຸລະກິດ, ຄ່າໃຊ້ຈ່າຍດອກເບ້ຍທະນາຄານ ໂດຍບໍລິສັດມີຄ່າໃຊ້ຈ່າຍລວມເທົ່າກັບ 31,398 ລ້ານກີບ ໃນປີ 2011, ເພີ່ມຂຶ້ນເປັນ 38,615 ລ້ານກີບ ໃນປີ 2012 ແລະ ເພີ່ມຂຶ້ນເປັນ 46,683 ລ້ານກີບ ໃນປີ 2013 ຫຼື ຄິດເປັນສ່ວນຮ້ອຍເມື່ອທຽບກັບລາຍຮັບລວມຂອງແຕ່ລະປີເທົ່າກັບ 3.47 ສ່ວນຮ້ອຍຂອງລາຍຮັບຈາກການຂາຍສິນຄ້າ ໃນປີ 2011, ເພີ່ມຂຶ້ນ 3.79 ສ່ວນ

ຮ້ອຍຂອງລາຍຮັບຈາກການຂາຍສິນຄ້າໃນປີ 2012 ແລະ ເພີ່ມຂຶ້ນເປັນ 4.34 ສ່ວນຮ້ອຍຂອງລາຍຮັບຈາກການຂາຍສິນຄ້າ ໃນປີ 2013.

ບໍລິສັດມີກຳໄລສຸດທິເທົ່າກັບ 21,608 ລ້ານກີບໃນປີ 2011, ເພີ່ມຂຶ້ນເປັນ 26,514 ລ້ານກີບ ໃນປີ 2012 ຫຼື ຂະຫຍາຍຕົວເທົ່າກັບ 22.70 ສ່ວນຮ້ອຍທຽບກັບປີ 2011, ເນື່ອງຈາກໃນປີ 2012 ບໍລິສັດມີລາຍຮັບຈາກການຂາຍສິນຄ້າເພີ່ມຂຶ້ນເປັນຈຳນວນ 113,932 ລ້ານກີບ ຫຼື ຄິດເປັນສ່ວນຮ້ອຍ 12.59 ສ່ວນຮ້ອຍ ຈາກປີກ່ອນ ບໍລິສັດຍັງສືບຕໍ່ຄວບຄຸມຕົ້ນທຶນໄດ້ຢ່າງມີປະສິດທິພາບ ໂດຍເຫັນໄດ້ຈາກ ຕົ້ນທຶນຂາຍຍັງມີສັດສ່ວນເທົ່າເດີມຈາກ ປີ 2011-2012 ປະມານ 93 ສ່ວນຮ້ອຍຂອງລາຍຮັບຈາກການຂາຍສິນຄ້າ ເຊິ່ງສົ່ງຜົນໃຫ້ບໍລິສັດມີກຳໄລສຸດທິເພີ່ມຂຶ້ນ. ສຳລັບປີ 2013 ບໍລິສັດມີກຳໄລສຸດທິເທົ່າກັບ 19,133 ລ້ານກີບ ຫຼື ຫຼຸດລົງ 27.84 ສ່ວນຮ້ອຍທຽບກັບປີ 2012 ສາເຫດຈາກ ລາຍຈ່າຍໃນການຂາຍ ແລະ ບໍລິຫານ ເພີ່ມຂຶ້ນ 22.44 ສ່ວນຮ້ອຍທຽບກັບປີ 2012.

## 1.12.4 ການວິເຄາະຜົນການດຳເນີນງານ

1) **ລາຍຮັບ**

➢ **ລາຍຮັບຈາກການຂາຍສິນຄ້າ**

ຕັ້ງແຕ່ປີ 2011 ເຖິງ 2013 ບໍລິສັດມີລາຍຮັບລວມຈາກການຈຳໜ່າຍນ້ຳມັນເພີ່ມຂຶ້ນຢ່າງຕໍ່ເນື່ອງ ໂດຍໃນປີ 2011 ບໍລິສັດມີລາຍຮັບເທົ່າກັບ 902,462 ລ້ານກີບ, ສ່ວນໃນປີ 2012 ເທົ່າກັບ 1,019,012 ລ້ານກີບ ເພີ່ມຂຶ້ນ 12.59 ສ່ວນຮ້ອຍເມື່ອປຽບທຽບກັບຊ່ວງເວລາດຽວກັນຂອງປີກ່ອນ ແລະ ໃນປີ 2013 ເພີ່ມຂຶ້ນເປັນ 1,075,040 ລ້ານກີບ ເຊິ່ງມີການເພີ່ມຂຶ້ນເທົ່າກັບ 5.50 ສ່ວນຮ້ອຍເມື່ອປຽບທຽບກັບໄລຍະດຽວກັນຂອງປີກ່ອນ. ສ່ວນສາເຫດຫຼັກຂອງການເພີ່ມຂຶ້ນຂອງລາຍຮັບຢ່າງຕໍ່ເນື່ອງດັ່ງກ່າວແມ່ນມາຈາກການເພີ່ມຂຶ້ນຂອງສະຖານີບໍລິການນ້ຳມັນ ເຊິ່ງສາມາດວິເຄາະການເຕີບໂຕຂອງລາຍໄດ້ເປັນ 2 ລັກສະນະຄືດັ່ງນີ້:

### 1.1 ໂຄງສ້າງລາຍຮັບແຍກຕາມຜະລິດຕະພັນ

ບໍລິສັດມີລາຍຮັບສ່ວນໃຫຍ່ຈາກການຈຳໜ່າຍນ້ຳມັນເຊື້ອໄຟ 5 ປະເພດດັ່ງນີ້: ນ້ຳມັນກາຊວນ; ນ້ຳມັນແອັດຊັງທຳມະດາ; ນ້ຳມັນແອັດຊັງພິເສດ; ນ້ຳມັນເຕົາ ແລະ ນ້ຳມັນເຄື່ອງ ໂດຍບໍລິສັດຈະຈຳໜ່າຍໃນຮູບແບບຂອງການຊື້ມາຂາຍໄປ (Trading)

ຕາຕະລາງທີ 1.12.5: ລາຍຮັບຈາກການຈຳໜ່າຍແຍກຕາມຜະລິດຕະພັນ

| ລາຍລະອຽດ | ປີ 2011 | | ປີ 2012 | | ປີ 2013 | |
|---|---|---|---|---|---|---|
| | ມູນຄ່າ (ລ້ານກີບ) | % | ມູນຄ່າ (ລ້ານກີບ) | % | ມູນຄ່າ (ລ້ານກີບ) | % |
| 1. ລາຍຮັບຈາກການຈຳໜ່າຍນ້ຳມັນເຊື້ອໄຟລວມ | 902,462 | 99.71% | 1,022,507 | 100.34% | 1,080,802 | 100.54% |
| ລາຍຮັບຈາກການຂາຍນ້ຳມັນກາຊວນ | 716,446 | 79.16% | 856,412 | 84.04% | 856,004 | 79.63% |
| ລາຍຮັບຈາກການຂາຍນ້ຳມັນແອັດຊັງທຳມະດາ | 184,669 | 20.40% | 164,023 | 16.10% | 221,343 | 20.59% |
| ລາຍຮັບຈາກການຂາຍນ້ຳມັນແອັດຊັງພິເສດ | - | - | - | - | 1,139 | 0.10% |
| ລາຍຮັບຈາກການຂາຍນ້ຳມັນເຕົາ | - | - | - | - | 389 | 0.04% |
| ລາຍຮັບຈາກການຂາຍນ້ຳມັນເຄື່ອງ | 1,346 | 0.15% | 2,072 | 0.20% | 1,927 | 0.18% |
| 2. ລາຍຮັບຈາກການຈຳໜ່າຍຜະລິດຕະພັນອື່ນ | 2,618 | 0.29% | - | - | - | - |

| ລາຍລະອຽດ | ປີ 2011 | | ປີ 2012 | | ປີ 2013 | |
|---|---|---|---|---|---|---|
| | ມູນຄ່າ (ລ້ານກີບ) | % | ມູນຄ່າ (ລ້ານກີບ) | % | ມູນຄ່າ (ລ້ານກີບ) | % |
| **ລວມລາຍຮັບຈາກການຂາຍ** | **905,080** | **100.00%** | **1,022,507** | **100.34%** | **1,080,802** | **100.54%** |
| **ສ່ວນຫຼຸດສິນຄ້າ** | - | - | (3,495) | (0.34%) | 5,762 | (0.54%) |
| **ລວມລາຍຮັບ-ສຸດທິ** | **905,080** | **100.00%** | **1,019,012** | **100.00%** | **1,075,040** | **100.00%** |

ລາຍຮັບຈາກການຈຳໜ່າຍນ້ຳມັນທຸກປະເພດ ໃນປີ 2011 ປີ 2012 ແລະ ປີ 2013 ເທົ່າກັບ 902,462 ລ້ານກີບ 1,022,507 ລ້ານກີບ ແລະ 1,080,802 ລ້ານກີບ ຕາມລຳດັບ ໂດຍຈະເຫັນໄດ້ວ່າລາຍໄດ້ຈາກການຈຳໜ່າຍນ້ຳມັນລວມເພີ່ມຂຶ້ນຢ່າງຕໍ່ເນື່ອງເຊິ່ງເກີດຈາກສາເຫດຫຼັກດັ່ງຕໍ່ໄປນີ້:

➢ <u>ລາຍຮັບຈາກການຂາຍນ້ຳມັນກາຊວນ</u>

ບໍລິສັດມີສັດສ່ວນການຈຳໜ່າຍນ້ຳມັນກາຊວນສູງທີ່ສຸດເມື່ອປຽບທຽບກັບຜະລິດຕະພັນນ້ຳມັນປະເພດອື່ນໆ ໂດຍໃນປີ 2011 ບໍລິສັດມີລາຍຮັບຈາກການຈຳໜ່າຍນ້ຳມັນກາຊວນເທົ່າກັບ 716,446 ລ້ານກີບ ຫຼື ຄິດເປັນສັດສ່ວນ 79.16 ສ່ວນຮ້ອຍຂອງລາຍຮັບລວມສຸດທິ ສ່ວນໃນປີ 2012 ເທົ່າກັບ 856,412 ລ້ານກີບ ຫຼື ຄິດເປັນສັດສ່ວນ 84.04 ສ່ວນຮ້ອຍຂອງລາຍໄດ້ສຸດທິ ແລະ ໃນປີ 2013 ເທົ່າກັບ 856,004 ລ້ານກີບ ຫຼື ຄິດເປັນ 79.63 ສ່ວນຮ້ອຍຂອງລາຍຮັບລວມສຸດທິ.

ຈາກຕາຕະລາງລາຍຮັບຈາກການຈຳໜ່າຍແຍກຕາມຜະລິດຕະພັນຂ້າງເທິງ ຈະເຫັນໄດ້ວ່າບໍລິສັດມີລາຍຮັບຈາກການຈຳໜ່າຍນ້ຳມັນກາຊວນໃນປີ 2012 ເພີ່ມຂຶ້ນ 19.54 ສ່ວນຮ້ອຍຈາກປີ 2011 ໂດຍສາເຫດຂອງການເພີ່ມຂຶ້ນຢ່າງມີເນື້ອໃນສຳຄັນດັ່ງກ່າວເກີດຈາກປະລິມານການຈຳໜ່າຍນ້ຳມັນກາຊວນ ເນື່ອງຈາກມີຈຳນວນໂຄງການທີ່ບໍລິສັດສະໜອງນ້ຳມັນໃຫ້ເພີ່ມຂຶ້ນເປັນຕົ້ນແມ່ນ ໂຄງການຂຸດຄົ້ນແຮ່ເຫຼັກ, ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ. ປະກອບກັບລາຄາສະເລ່ຍຂອງນ້ຳມັນກາຊວນທີ່ປັບຕົວສູງຂຶ້ນຈາກປີຜ່ານມາ. ສ່ວນໃນປີ 2013 ເຖິງແມ່ນວ່າປະລິມານການຈຳໜ່າຍນ້ຳມັນກາຊວນຈະເພີ່ມຂຶ້ນຈາກປີ 2012 ແຕ່ບໍລິສັດມີລາຍຮັບຈາກການຜະລິດຕະພັນນີ້ຫຼຸດລົງ 0.05 ສ່ວນຮ້ອຍຈາກປີ 2012 ເນື່ອງຈາກລາຄາສະເລ່ຍຂອງຂອງນ້ຳມັນກາຊວນຫຼຸດລົງຕາມລາຄານ້ຳມັນໃນຕະຫຼາດໂລກ.

➢ <u>ລາຍຮັບຈາກການຂາຍນ້ຳມັນແອັດຊັງທຳມະດາ</u>

ບໍລິສັດມີລາຍຮັບຈາກການຈຳໜ່າຍນ້ຳມັນແອັດຊັງທຳມະດາ ໃນປີ 2011, 2012 ແລະ 2013 ເທົ່າກັບ 184,669 ລ້ານກີບ, 164,023 ລ້ານກີບ ແລະ 221,343 ລ້ານກີບ ຫຼື ຄິດເປັນສັດສ່ວນ 20.40 ສ່ວນຮ້ອຍ 16.10 ສ່ວນຮ້ອຍ ແລະ 20.59 ສ່ວນຮ້ອຍ ຂອງລາຍຮັບລວມສຸດທິ ແຕ່ລະປີ ຕາມລຳດັບ.

ໃນປີ 2012 ບໍລິສັດມີລາຍຮັບຈາກການຈຳໜ່າຍນ້ຳມັນແອັດຊັງທຳມະດາຫຼຸດລົງ 11.18 ສ່ວນຮ້ອຍຈາກປີ 2011 ໂດຍມີສາເຫດຫຼັກມາຈາກປະລິມານການຈຳໜ່າຍທີ່ຫຼຸດລົງ ເຖິງແມ່ນວ່າຈະມີການເພີ່ມຂຶ້ນຂອງສະຖານີບໍລິການນ້ຳມັນ ແລະ ລາຄາສະເລ່ຍຈະເພີ່ມຂຶ້ນເລັກໜ້ອຍກໍ່ຕາມ ເຖິງຢ່າງໃດກໍ່ຕາມໃນປີ 2013 ບໍລິສັດມີລາຍຮັບຈາກການຈຳໜ່າຍນ້ຳມັນແອັດຊັງທຳມະດາເພີ່ມຂຶ້ນ 34.95 ສ່ວນຮ້ອຍຈາກປີ 2012 ເຊິ່ງສາເຫດຫຼັກເກີດຈາກປະລິມານການຈຳໜ່າຍທີ່ເພີ່ມຂຶ້ນ ເນື່ອງຈາກການເພີ່ມຂຶ້ນຂອງສະຖານີບໍລິການນ້ຳມັນ.

➢ ລາຍຮັບຈາກການຂາຍນ້ຳມັນແອັດຊັງພິເສດ

ບໍລິສັດເລີ່ມທົດລອງຈຳໜ່າຍນ້ຳມັນແອັດຊັງພິເສດຂຶ້ນໃນປີ 2013 ເຊິ່ງມີຍອດຂາຍເທົ່າກັບ 1,139 ລ້ານກີບ ຫຼື ເທົ່າກັບ 0.10 ສ່ວນຮ້ອຍຂອງລາຍຮັບຈາກການຈຳໜ່າຍນ້ຳມັນລວມ ເນື່ອງຈາກບໍລິສັດເຫັນໂອກາດທາງທຸລະກິດທີ່ຜູ້ໃຊ້ລົດຍົນມີຈຳນວນເພີ່ມຂຶ້ນ ເຊິ່ງກຸ່ມລູກຄ້າດັ່ງກ່າວມີຄວາມຕ້ອງການໃຊ້ນ້ຳມັນເຊື້ອໄຟທີ່ມີຄ່າອອກເທນສູງ ເພື່ອຮອງຮັບ ແລະ ຕອບສະໜອງກັບລົດຍົນທີ່ມີການຂັບເຄື່ອນຄວາມໄວສູງ ໂດຍບໍລິສັດທົດລອງຈຳໜ່າຍສະເພາະໃນສ່ວນຂອງສະຖານີບໍລິການນ້ຳມັນທີ່ມີຢູ່ໃນຕົວເມືອງໃຫຍ່ເປັນຫຼັກ.

➢ ລາຍຮັບຈາກການຂາຍນ້ຳມັນເຕົ້າ

ບໍລິສັດເລີ່ມມີການຈຳໜ່າຍນ້ຳມັນເຕົ້າໃນປີ 2013 ໂດຍມີຍອດຂາຍເທົ່າກັບ 389 ລ້ານກີບ ຫຼື ເທົ່າກັບ 0.04 ສ່ວນຮ້ອຍຂອງລາຍຮັບຈາກການຈຳໜ່າຍນ້ຳມັນລວມ ເນື່ອງຈາກບໍລິສັດເຫັນໂອກາດທາງທຸລະກິດ ໂດຍເບິ່ງເຫັນຄວາມຕ້ອງການຂອງລູກຄ້າຕໍ່ກັບສິນຄ້າດັ່ງກ່າວ. ບໍລິສັດຈຶ່ງດຳເນີນການຈັດຫາຜະລິດຕະພັນດັ່ງກ່າວມາຈຳໜ່າຍໃຫ້ແກ່ລູກຄ້າໃນ ສປປ ລາວ ແຕ່ບໍລິສັດບໍ່ໄດ້ມີນະໂຍບາຍໃນການສັ່ງຊື້ມາສຳຮອງເອົາໄວ້ທີ່ສາງນ້ຳມັນຂອງບໍລິສັດ. ຖ້າຫາກວ່າລູກຄ້າມີຄວາມຕ້ອງການສັ່ງຊື້ ບໍລິສັດຈຶ່ງປະສານງານຈັດຫາມາຈຳໜ່າຍໃຫ້ແກ່ລູກຄ້າ.

➢ ລາຍຮັບຈາກການຂາຍນ້ຳມັນເຄື່ອງ

ໃນປີ 2011, 2012 ແລະ 2013 ບໍລິສັດມີລາຍຮັບຈາກການຂາຍນ້ຳມັນເຄື່ອງເທົ່າກັບ 1,346 ລ້ານກີບ, 2,072 ລ້ານກີບ ແລະ 1,927 ລ້ານກີບ ຕາມລຳດັບ ຫຼື ຄິດເປັນສັດສ່ວນ 0.15 ສ່ວນຮ້ອຍ, 0.20 ສ່ວນຮ້ອຍ ແລະ 0.18 ສ່ວນຮ້ອຍຕາມລຳດັບ ຂອງລາຍຮັບຈາກການຈຳໜ່າຍນ້ຳມັນລວມໃນແຕ່ລະປີ ຕາມລຳດັບ ການຫຼຸດລົງຂອງລາຍຮັບຈາກການຂາຍຜະລິດຕະພັນດັ່ງກ່າວໃນປີ 2013 ເນື່ອງຈາກວ່າພາວະເສດຖະກິດມີການສະລໍຕົວຈຶ່ງເຮັດໃຫ້ປະລິມານການຂາຍຫຼຸດລົງ.

## 1.2 ໂຄງສ້າງລາຍຮັບແຍກຕາມກຸ່ມລູກຄ້າ

ບໍລິສັດມີລາຍຮັບຈາກການຂາຍນ້ຳມັນເຊື້ອໄຟແບ່ງອອກຕາມກຸ່ມລູກຄ້າສຳຄັນ 5 ກຸ່ມດັ່ງນີ້:

ຕາຕະລາງທີ 1.12.6 : ລາຍຮັບຈາກການຈຳໜ່າຍແຍກຕາມກຸ່ມລູກຄ້າ

| ລາຍລະອຽດ | ປີ 2011 | | ປີ 2012 | | ປີ 2013 | |
|---|---|---|---|---|---|---|
| | ມູນຄ່າ (ລ້ານກີບ) | (%) | ມູນຄ່າ (ລ້ານກີບ) | (%) | ມູນຄ່າ (ລ້ານກີບ) | (%) |
| 1. **ລາຍຮັບຈາກການຈຳໜ່າຍນ້ຳມັນເຊື້ອໄຟລວມ** | 902,462 | 99.71% | 1,022,507 | 100.34% | 1,080,802 | 100.54% |
| ລາຍຮັບຈາກການຈຳໜ່າຍເຂົ້າໂຄງການ | 150,376 | 16.61% | 270,804 | 26.58% | 307,134 | 28.57% |
| ລາຍຮັບຈາກການຈຳໜ່າຍເຂົ້າອຸດສະຫະກຳ | 161,023 | 17.79% | 213,950 | 21.00% | 149,292 | 13.89% |
| ລາຍຮັບຈາກການຈຳໜ່າຍໃຫ້ສະຖານີບໍລິການນ້ຳມັນ | 270,722 | 29.91% | 357,406 | 35.07% | 464,853 | 43.24% |
| - ລາຍຮັບຈາກການຈຳໜ່າຍໃຫ້ສະຖານີ PTN | - | - | - | - | 24,053 | 2.24% |
| - ລາຍຮັບຈາກການຈຳໜ່າຍໃຫ້ສະຖານີ GLD | 688 | 0.08% | 31,411 | 3.08% | 70,946 | 6.60% |
| - ລາຍຮັບຈາກການຈຳໜ່າຍໃຫ້ສະຖານີ STD | 163,751 | 18.09% | 195,970 | 19.23% | 227,817 | 21.19% |
| - ລາຍຮັບຈາກການຈຳໜ່າຍໃຫ້ສະຖານີ THN | 106,283 | 11.74% | 130,025 | 12.76% | 142,037 | 13.21% |
| ລາຍຮັບຈາກການຈຳໜ່າຍໃຫ້ຜູ້ບໍລິການຂົນສົ່ງ | 47,573 | 5.26% | 58,664 | 5.76% | 64,174 | 5.97% |
| ລາຍຮັບຈາກການຈຳໜ່າຍໃຫ້ລູກຄ້າອື່ນ | 272,768 | 30.14% | 121,682 | 11.94% | 95,350 | 8.87% |

| ລາຍລະອຽດ | ປີ 2011 | | ປີ 2012 | | ປີ 2013 | |
|---|---|---|---|---|---|---|
| | ມູນຄ່າ (ລ້ານກີບ) | (%) | ມູນຄ່າ (ລ້ານກີບ) | (%) | ມູນຄ່າ (ລ້ານກີບ) | (%) |
| 2. ລາຍຮັບມາຈາກການຈຳໜ່າຍຜະລິດຕະພັນອື່ນ | 2,618 | 0.29% | - | - | - | - |
| **ລວມລາຍຮັບຈາກການຂາຍ** | **905,080** | **100.00%** | **1,022,507** | **100.34%** | **1,080,802** | **100.54%** |
| ສ່ວນຫຼຸດສິນຄ້າ | - | - | (3,495) | (0.34%) | (5,762) | (0.54%) |
| **ລວມລາຍຮັບ-ສຸດທິ** | **905,080** | **100.00%** | **1,019,012** | **100.00%** | **1,075,040** | **100.00%** |

➢ ລາຍຮັບຈາກການຈຳໜ່າຍນ້ຳມັນເຊື້ອໄຟໃຫ້ສະຖານີບໍລິການນ້ຳມັນ

ໃນໄລຍະປີ 2011, 2012 ແລະ 2013 ບໍລິສັດມີລາຍຮັບຈາກການຈຳໜ່າຍນ້ຳມັນເຊື້ອໄຟສ່ວນໃຫຍ່ໄດ້ມາຈາກການຈຳໜ່າຍຜ່ານສະຖານີບໍລິການນ້ຳມັນໂດຍໃນປີ 2011 ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟໃຫ້ສະຖານີບໍລິການນ້ຳມັນ ເທົ່າກັບ 270,722 ລ້ານກີບ ຄິດເປັນສັດສ່ວນ 29.91 ສ່ວນຮ້ອຍຂອງລາຍໄດ້ຈາກການຈຳໜ່າຍນ້ຳມັນເຊື້ອໄຟສຸດທິ, ໃນຂະນະທີ່ໃນປີ 2012 ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟໃຫ້ສະຖານີບໍລິການນ້ຳມັນເທົ່າກັບ 357,406 ລ້ານກີບ ຄິດເປັນ 35.07 ສ່ວນຮ້ອຍຂອງລາຍໄດ້ຈາກການຈຳໜ່າຍນ້ຳມັນເຊື້ອໄຟສຸດທິ ແລະ ໃນປີ 2013 ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟໃຫ້ສະຖານີບໍລິການນ້ຳມັນ ເທົ່າກັບ 464,853 ລ້ານກີບ ຄິດເປັນສັດສ່ວນ 43.24 ສ່ວນຮ້ອຍ ຂອງລາຍຮັບຈາກການຈຳໜ່າຍນ້ຳມັນເຊື້ອໄຟສຸດທິ ເຊິ່ງບໍລິສັດຈະຈຳໜ່າຍນ້ຳມັນທຸກປະເພດໃຫ້ແກ່ສະຖານີບໍລິການນ້ຳມັນ.

ໃນໄລຍະປີ 2011, 2012 ແລະ 2013 ບໍລິສັດມີລາຍຮັບຈາກການຈຳໜ່າຍນ້ຳມັນເຊື້ອໄຟໃຫ້ສະຖານີບໍລິການນ້ຳມັນເພີ່ມຂຶ້ນຢ່າງຕໍ່ເນື່ອງ ໂດຍໃນປີ 2012 ເພີ່ມຂຶ້ນຄິດເປັນສັດສ່ວນເທົ່າກັບ 32.02 ສ່ວນຮ້ອຍຂອງຍອດຂາຍຈາກປີກ່ອນ ໃນຂະນະທີ່ປີ 2013 ລາຍຮັບດັ່ງກ່າວເພີ່ມຂຶ້ນຄິດເປັນສັດສ່ວນເທົ່າກັບ 30.06 ສ່ວນຮ້ອຍຂອງຍອດຂາຍຈາກປີກ່ອນ. ສາເຫດຫຼັກທີ່ເຮັດໃຫ້ການຈຳໜ່າຍນ້ຳມັນເຊື້ອໄຟໃຫ້ສະຖານີບໍລິການນ້ຳມັນເພີ່ມຂຶ້ນຢ່າງຕໍ່ເນື່ອງເກີດຈາກການທີ່ບໍລິສັດເພີ່ມຈຳນວນສະຖານີບໍລິການນ້ຳມັນທີ່ບໍລິສັດຮ່ວມລົງທຶນ (CODO) ຢ່າງຕໍ່ເນື່ອງໃນຊ່ວງປີທີ່ຜ່ານມາ.

ຮູບທີ 1.12.1 ສະແດງລາຄາຈຳໜ່າຍນ້ຳມັນໜ້າສະຖານີບໍລິການໃນວຽງຈັນ



ນອກຈາກນີ້ ປັດໄຈທາງດ້ານລາຄາກໍ່ຍັງມີຜົນທີ່ເຮັດໃຫ້ການເພີ່ມຂຶ້ນ ຫຼື ຫຼຸດລົງຂອງລາຍຮັບຈາກການຈຳໜ່າຍນ້ຳມັນເຊື້ອໄຟຜ່ານສະຖານີບໍລິການນ້ຳມັນຂອງບໍລິສັດ ໂດຍລາຄາຂາຍຍ່ອຍນ້ຳມັນ (ລາຄາຂາຍໜ້າປ້ຳ) ນ້ຳມັນແອັດຊັງພິເສດສະເລ່ຍໃນປີ 2011, 2012 ແລະ 2013 ເທົ່າກັບ 11,462 ກີບ/ລິດ, 11,876 ກີບ/ລິດ ແລະ 11,404 ກີບ/ລິດ ຕາມລຳດັບ, ນ້ຳມັນແອັດຊັງທຳມະດາສະເລ່ຍໃນປີ 2011, 2012 ແລະ 2013 ເທົ່າກັບ 10,395 ກີບ/ລິດ, 10,624 ກີບ/ລິດ ແລະ 10,070 ກີບ/ລິດ ຕາມລຳດັບ ແລະ ລາຄາຂອງນ້ຳມັນກາຊວນສະເລ່ຍໃນປີ 2011, 2012 ແລະ 2013 ເທົ່າກັບ 9,252 ກີບ/ລິດ, 9,472 ກີບ/ລິດ ແລະ 9,032 ກີບ/ລິດ ຕາມລຳດັບ. ດັ່ງນັ້ນ ລາຍຮັບຈາກການຂາຍນ້ຳມັນເຊື້ອໄຟຜ່ານສະຖານີບໍລິການນ້ຳມັນຂອງບໍລິສັດຈຶ່ງເພີ່ມຂຶ້ນຢ່າງຕໍ່ເນື່ອງ ເຫັນໄດ້ຈາກການເພີ່ມຂຶ້ນຂອງປະລິມານຈຳໜ່າຍນ້ຳມັນໃນປີ 2011, 2012 ແລະ 2013 ທັງນີ້ລາຄາຂາຍນ້ຳມັນເຊື້ອໄຟໜ້າສະຖານີບໍລິການນ້ຳມັນແຕ່ລະປະເພດຈະປັບຕົວເພີ່ມຂຶ້ນ ຫຼື ຫຼຸດລົງ ຕາມຕົ້ນທຶນສິນຄ້າ ຫຼື ອາດມີບາງກໍລະນີທີ່ບໍ່ສາມາດຄວບຄຸມໄດ້ ເຊັ່ນ: ລັດຖະບານອອກມາດຕະການຄວບຄຸມລາຄາການຈຳໜ່າຍນ້ຳມັນເຊື້ອໄຟ ແລະ ການປັບເພີ່ມ ຫຼື ຫຼຸດລົງຂອງອັດຕາການເກັບພາສີອາກອນ ເປັນຕົ້ນ.

➢ <u>ລາຍຮັບຈາກການຈຳໜ່າຍເຂົ້າໂຄງການ</u>

ໃນໄລຍະປີ 2011, 2012 ແລະ 2013 ບໍລິສັດມີລາຍຮັບຈາກການຈຳໜ່າຍເຂົ້າໂຄງການເທົ່າກັບ 150,376 ລ້ານກີບ, 270,804 ລ້ານກີບ ແລະ 307,134 ລ້ານກີບ ຄິດເປັນສັດສ່ວນ 16.61 ສ່ວນຮ້ອຍ, 26.58 ສ່ວນຮ້ອຍ ແລະ 28.57 ສ່ວນຮ້ອຍຂອງລາຍຮັບຈາກການຈຳໜ່າຍນ້ຳມັນລວມໃນແຕ່ລະປີ ຕາມລຳດັບ ໃນປີ 2012 ບໍລິສັດມີລາຍຮັບຈາກການຈຳໜ່າຍເຂົ້າໂຄງການເພີ່ມຂຶ້ນຄິດເປັນສັດສ່ວນເທົ່າກັບ 80.08 ສ່ວນຮ້ອຍຂອງຍອດຂາຍຈາກປີກ່ອນ ໃນຂະນະທີ່ປີ 2013 ເພີ່ມຂຶ້ນຄິດເປັນສັດສ່ວນເທົ່າກັບ 13.42 ສ່ວນຮ້ອຍຂອງຍອດຂາຍຈາກປີກ່ອນ. ໂດຍຜະລິດຕະພັນທີ່ບໍລິສັດຈຳໜ່າຍເຂົ້າໂຄງການສ່ວນໃຫຍ່ແມ່ນນ້ຳມັນກາຊວນ ແລະ ແອັດຊັງ.

ປັດໄຈສຳຄັນທີ່ພາໃຫ້ການຈຳໜ່າຍເຂົ້າໂຄງການເພີ່ມຂຶ້ນນັ້ນ ເນື່ອງຈາກບໍລິສັດໄດ້ຂະຫຍາຍລູກຄ້າໂຄງການເພີ່ມຂຶ້ນ ຕາມໂຄງການທີ່ມີຂະໜາດໃຫຍ່ທີ່ຖືກອະນຸມັດໂດຍລັດຖະບານ ເຊິ່ງເຫັນໄດ້ວ່າການເພີ່ມຂຶ້ນຂອງການຈຳໜ່າຍນ້ຳມັນແມ່ນເພີ່ມຂຶ້ນຕາມປະເພດບັນດາໂຄງການຂອງລັດເປັນຕົ້ນແມ່ນ:

1.) ໂຄງການສຳປະທານສ້າງເຂດເສດຖະກິດພິເສດທົ່ວປະເທດ
2.) ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ ແລະ ພະລັງງານໄຟຟ້າຖ່ານຫີນ
3.) ໂຄງການສຳປະທານ ແລະ ຂຸດຄົ້ນແຮ່ທາດຕ່າງໆ
4.) ໂຄງການພັດທະນາໂຄງລ່າງພື້ນຖານປະເທດເຊັ່ນ: ປັບປຸງເສັ້ນທາງ, ຂົວ ແຕ່ເໜືອເຖິງໃຕ້ ແລະ ໂຄງການລິດໄຟຟ້າຄວາມໄວສູງ.

➢ <u>ລາຍຮັບຈາກການຈຳໜ່າຍເຂົ້າຂະແໜງການອຸດສາຫະກຳ</u>

ນອກຈາກລາຍຮັບສຳຄັນໃນການຈຳໜ່າຍນ້ຳມັນເຊື້ອໄຟເຂົ້າໂຄງການແລ້ວ ບໍລິສັດຍັງມີລາຍຮັບຫຼັກອີກຈຳນວນໜຶ່ງໃນການຈຳໜ່າຍນ້ຳມັນເຊື້ອໄຟເຂົ້າຂະແໜງການອຸດສາຫະກຳ ໂດຍໃນປີ 2011, 2012 ແລະ 2013 ບໍລິສັດມີລາຍຮັບເທົ່າກັບ 161,023 ລ້ານກີບ, 213,950 ລ້ານກີບ ແລະ 149,292 ລ້ານກີບ ຫຼື ຄິດເປັນສັດສ່ວນເທົ່າກັບ 17.79 ສ່ວນຮ້ອຍ, 21.00 ສ່ວນຮ້ອຍ ແລະ 13.89 ສ່ວນຮ້ອຍຂອງລາຍຮັບຈາກການຈຳໜ່າຍນ້ຳມັນເຊື້ອໄຟລວມໃນແຕ່ລະປີຕາມລຳດັບ ໂດຍຜະລິດຕະພັນທີ່ບໍລິສັດຈຳໜ່າຍເຂົ້າຂະແໜງການອຸດສາຫະກຳສ່ວນໃຫຍ່ຈະເປັນນ້ຳມັນກາຊວນ ແລະ ແອັດຊັງ.

ໃນໄລຍະປີ 2012 ບໍລິສັດມີລາຍຮັບຈາກການຈຳໜ່າຍເຂົ້າຂະແໜງການອຸດສາຫະກຳເພີ່ມຂຶ້ນຄິດເປັນສັດສ່ວນເທົ່າກັບ 32.87 ສ່ວນຮ້ອຍຈາກປີກ່ອນໜ້າ. ປັດໄຈທີ່ເຮັດໃຫ້ລາຍຮັບເພີ່ມຂຶ້ນ ເນື່ອງຈາກໃນໄລຍະປີ 2012 ນັ້ນອຸດສາຫະກຳຂົນສົ່ງ ແລະ ອຸດສາຫະກຳບໍ່ແຮ່ມີການຂະຫຍາຍຕົວ ໂດຍໃນໄລຍະປີ 2013 ບໍລິສັດມີລາຍຮັບຈາກການຈຳໜ່າຍເຂົ້າຂະແໜງການອຸດສາຫະກຳຫຼຸດລົງຄິດເປັນ 30.22 ສ່ວນຮ້ອຍຈາກປີກ່ອນໜ້າ ເນື່ອງຈາກບໍລິສັດເນັ້ນໃຫ້ຄວາມສຳຄັນໃນການຂະຫຍາຍການຈຳໜ່າຍນ້ຳມັນຜ່ານສະຖານີບໍລິການນ້ຳມັນຫຼາຍກວ່າການຈຳໜ່າຍເຂົ້າໂຮງງານອຸດສາຫະກຳ ຈຶ່ງສົ່ງຜົນໃຫ້ລາຍຮັບຫຼຸດລົງ.

➢ <u>ລາຍຮັບຈາກການຈຳໜ່າຍໃຫ້ລູກຄ້າອື່ນ</u>

ບໍລິສັດມີລາຍຮັບຈາກການຈຳໜ່າຍໃຫ້ແກ່ລູກຄ້າອື່ນໂດຍສະເພາະແມ່ນ ຈຳໜ່າຍຜ່ານຜູ້ຄ້າລາຍຍ່ອຍເພື່ອຈຳໜ່າຍໃຫ້ແກ່ເຂດຫ່າງໄກສອກຫຼີກເປັນຕົ້ນແມ່ນ ໂຄງການກໍ່ສ້າງຂະໜາດນ້ອຍ, ສະຖານີບໍລິການນ້ຳມັນຂະໜາດນ້ອຍ ໂດຍໃນປີ 2011, 2012 ແລະ 2013 ລາຍຮັບມາຈາກການຈຳໜ່າຍໃຫ້ລູກຄ້າອື່ນເທົ່າກັບ 272,768 ລ້ານກີບ, 121,682 ລ້ານກີບ ແລະ ຫຼຸດລົງເຫຼືອ 95,350 ລ້ານກີບ ຕາມລຳດັບ ຄິດເປັນສັດສ່ວນ 30.14 ສ່ວນຮ້ອຍ, 11.94 ສ່ວນຮ້ອຍ ແລະ 8.87 ສ່ວນຮ້ອຍຂອງລາຍຮັບຈາກການຈຳໜ່າຍນ້ຳມັນລວມໃນແຕ່ລະປີ ຕາມລຳດັບ.

ຖ້າທຽບໃສ່ປີຜ່ານມາຈະເຫັນວ່າລາຍຮັບຈາກການຈຳໜ່າຍນ້ຳມັນໃຫ້ລູກຄ້າອື່ນຫຼຸດລົງຄື ໃນປີ 2013 ເທົ່າກັບ 55.39 ສ່ວນຮ້ອຍ ແລະ ໃນປີ 2013 ຫຼຸດລົງເທົ່າກັບ 21.64 ສ່ວນຮ້ອຍ ເນື່ອງມາຈາກໃນໄລຍະປີ 2011 ເປັນຕົ້ນມາ ບໍລິສັດໄດ້ໃຫ້ຄວາມສຳຄັນໃນການຂະຫຍາຍການຈຳໜ່າຍນ້ຳມັນຜ່ານສະຖານີບໍລິການນ້ຳມັນຫຼາຍກວ່າ ສົ່ງຜົນໃຫ້ລາຍໄດ້ໃນການຈຳໜ່າຍໃຫ້ແກ່ລູກຄ້າອື່ນຫຼຸດລົງຢ່າງຕໍ່ເນື່ອງນັບຈາກປີ 2011 ເປັນຕົ້ນມາ.

➢ <u>ລາຍຮັບອື່ນ</u>

ລາຍຮັບອື່ນຂອງບໍລິສັດສ່ວນໃຫຍ່ເປັນລາຍຮັບທີ່ເກີດຂຶ້ນຄັ້ງດຽວ ເຊັ່ນ: ໃນປີ 2011 ບໍລິສັດບໍ່ມີລາຍຮັບອື່ນ ໃນຂະນະທີ່ໃນປີ 2012 ເຖິງ 2013 ບໍລິສັດມີລາຍຮັບອື່ນຈາກການຂາຍຊັບສິນຄົງທີ່ທີ່ບໍລິສັດບໍ່ໄດ້ໃຊ້ງານອອກໄປເທົ່າກັບ 152 ລ້ານກີບ ແລະ 5,166 ລ້ານກີບຕາມລຳດັບ.

➢ <u>ລາຍຮັບຈາກດອກເບ້ຍຮັບ</u>

ບໍລິສັດມີລາຍຮັບຈາກດອກເບ້ຍຮັບເຊິ່ງເກີດຈາກການໃຫ້ເງິນກູ້ຢືມແກ່ບັນດາພາກສ່ວນທຸລະກິດທີ່ມີຄວາມກ່ຽວຂ້ອງກັນ ໂດຍໄລຍະປີ 2011, 2012 ແລະ 2013 ບໍລິສັດມີລາຍຮັບຈາກດອກເບ້ຍຮັບເພີ່ມຂຶ້ນຢ່າງຕໍ່ເນື່ອງ ເຊິ່ງເທົ່າກັບ 2,042 ລ້ານກີບ, 9,212 ລ້ານກີບ ແລະ 18,599 ລ້ານກີບ ຕາມລາດັບ ສາເຫດຫຼັກທີ່ເຮັດໃຫ້ລາຍຮັບຈາກດອກເບ້ຍຮັບເພີ່ມຂຶ້ນເກີດຈາກການເພີ່ມຂຶ້ນຂອງຈຳນວນເງິນໃຫ້ກູ້ຢືມຕະຫຼອດຊ່ວງໄລຍະເວລາ 3 ປີ.

## 2) <u>ຕົ້ນທຶນຂາຍສິນຄ້າ ແລະ ກຳໄລຂັ້ນຕົ້ນ</u>

ຕົ້ນທຶນຂາຍປະກອບມີ: ຕົ້ນທຶນສິນຄ້າ, ຄ່າຂົນສົ່ງ ແລະ ພາສີນຳເຂົ້າ ໂດຍສາມາດແຍກຕົ້ນທຶນຕາມປະເພດຜະລິດຕະພັນດັ່ງນີ້:

1. ນ້ຳມັນເຊື້ອໄຟປະກອບມີ: ນ້ຳມັນກາຊວນ, ນ້ຳມັນແອັດຊັງທຳມະດາ 91 ແລະ ນ້ຳມັນແອັດຊັງພິເສດ 95;
2. ນ້ຳມັນເຄື່ອງ

ບໍລິສັດມີຕົ້ນທຶນຂາຍສິນຄ້າຂ້ອນຂ້າງຄົງທີ່ ເຊິ່ງສະແດງໃຫ້ເຫັນເຖິງຄວາມສາມາດໃນການບໍລິຫານຕົ້ນທຶນຂາຍສິນຄ້າທີ່ມີປະສິດທິພາບ ແລະ ສາມາດຮັກສາອັດຕາກຳໄລຂັ້ນຕົ້ນໃຫ້ຢູ່ໃນລະດັບທີ່ໃກ້ຄຽງກັນຕະຫຼອດໄລຍະເວລາ 3 ປີ ໂດຍໃນປີ 2011, 2012 ແລະ 2013 ບໍລິສັດມີຕົ້ນທຶນຂາຍສິນຄ້າລວມເທົ່າກັບ 843,103 ລ້ານກີບ, 948,045 ລ້ານກີບ ແລະ 1,003,917 ລ້ານກີບ ຫຼື ຄິດເປັນສັດສ່ວນ 93.15 ສ່ວນຮ້ອຍ, 93.04 ສ່ວນຮ້ອຍ ແລະ 93.38 ສ່ວນຮ້ອຍຂອງລາຍຮັບລວມຈາກການຂາຍສິນຄ້າໃນແຕ່ລະປີຕາມລຳດັບ.

➢ <u>ຕົ້ນທຶນໃນການຂາຍນ້ຳມັນເຊື້ອໄຟ</u>

ຕົ້ນທຶນໃນການຂາຍນ້ຳມັນເຊື້ອໄຟປະກອບມີ: ຕົ້ນທຶນນ້ຳມັນທີ່ບໍລິສັດຊື້ຈາກຜູ້ສະໜອງນ້ຳມັນຈາກປະເທດໄທເຊັ່ນ: IRPC, ESSO, CHEVRON ແລະ SHELL ເຊິ່ງບໍລິສັດມີຕົ້ນທຶນໃນການຂາຍນ້ຳມັນເຊື້ອໄຟແຕ່ປີ 2011, 2012 ແລະ 2013 ເທົ່າກັບ 841,893 ລ້ານກີບ, 946,153 ລ້ານກີບ ແລະ 1,002,294 ລ້ານກີບ ຕາມລຳດັບ ຫຼື ຄິດເປັນສັດສ່ວນເທົ່າກັບ 93.16 ສ່ວນຮ້ອຍ, 92.72 ສ່ວນຮ້ອຍ ແລະ 92.90 ສ່ວນຮ້ອຍຂອງລາຍຮັບຈາກການຈຳໜ່າຍນ້ຳມັນເຊື້ອໄຟໃນແຕ່ລະປີຕາມລຳດັບ.

➢ <u>ຕົ້ນທຶນການຂາຍນ້ຳມັນເຄື່ອງ</u>

ບໍລິສັດມີຕົ້ນທຶນໃນການຂາຍນ້ຳມັນເຄື່ອງແຕ່ປີ 2011, 2012 ແລະ 2013 ເທົ່າກັບ 1,210 ລ້ານກີບ, 1,892 ລ້ານກີບ ແລະ 1,623 ລ້ານກີບ ຫຼື ເທົ່າກັບ 89.87 ສ່ວນຮ້ອຍ, 91.32 ສ່ວນຮ້ອຍ ແລະ 84.24 ສ່ວນຮ້ອຍຂອງລາຍຮັບຈາກການຈຳໜ່າຍນ້ຳມັນເຄື່ອງໃນແຕ່ລະປີຕາມລຳດັບ.

ຈາກຂໍ້ມູນດັ່ງກ່າວຂ້າງເທິງນັ້ນຈະເຫັນໄດ້ວ່າບໍລິສັດມີສັດສ່ວນຕົ້ນທຶນການຂາຍນ້ຳມັນເຊື້ອໄຟສູງກວ່າຕົ້ນທຶນຈາກການຂາຍນ້ຳມັນເຄື່ອງໂດຍສະເພາະໃນປີ 2013 ສູງເຖິງ 8.66 ສ່ວນຮ້ອຍ. ດັ່ງນັ້ນ ສັດສ່ວນການຂາຍນ້ຳມັນເຊື້ອໄຟທີ່ສູງເຖິງ 90 ສ່ວນຮ້ອຍຂອງລາຍຮັບຈາກການຂາຍນ້ຳມັນລວມ ຈຶ່ງສົ່ງຜົນໃຫ້ສັດສ່ວນຕົ້ນທຶນລວມຈາກການຂາຍນ້ຳມັນສູງຂຶ້ນ.

### 3) <u>ຄ່າໃຊ້ຈ່າຍໃນການດຳເນີນງານ</u>

ຄ່າໃຊ້ຈ່າຍໃນການດຳເນີນງານຂອງບໍລິສັດປະກອບດ້ວຍຄ່າໃຊ້ຈ່າຍໃນການຂາຍ ແລະ ຄ່າໃຊ້ຈ່າຍໃນການບໍລິຫານໂດຍຄ່າໃຊ້ຈ່າຍສ່ວນໃຫຍ່ປະກອບມີ ຄ່າໃຊ້ຈ່າຍກ່ຽວກັບພະນັກງານ, ຄ່າເຊົ່າ, ຄ່າຫຼຸ້ຍຫ້ຽນ ແລະ ຄ່າໃຊ້ຈ່າຍຕັດຈ່າຍ, ຄ່າສາທາລະນຸປະโภກ, ຄ່າບຳລຸງຮັກສາ ແລະ ສ້ອມແປງ.

ໃນໄລຍະປີ 2011, 2012 ແລະ 2013 ຄ່າໃຊ້ຈ່າຍໃນການດຳເນີນງານຂອງບໍລິສັດມີແນວໂນ້ມເພີ່ມຂຶ້ນຢ່າງຕໍ່ເນື່ອງໂດຍໃນປີ 2011 ບໍລິສັດມີຄ່າໃຊ້ຈ່າຍໃນການດຳເນີນງານເທົ່າກັບ 31,398 ລ້ານກີບ ຫຼື ຄິດເປັນສັດສ່ວນ 3.47 ສ່ວນຮ້ອຍຂອງລາຍຮັບລວມຈາກການຂາຍນ້ຳມັນ, ສ່ວນປີ 2012 ບໍລິສັດມີຄ່າໃຊ້ຈ່າຍໃນການດຳເນີນງານເທົ່າກັບ 38,670 ລ້ານກີບ ຫຼື ຄິດເປັນສັດສ່ວນ 3.79 ສ່ວນຮ້ອຍ ຂອງລາຍຮັບລວມຈາກການຂາຍນ້ຳມັນ ເຊິ່ງເພີ່ມຂຶ້ນຄິດເປັນສັດສ່ວນ 23.16 ສ່ວນຮ້ອຍຂອງຄ່າໃຊ້ຈ່າຍໃນການດຳເນີນງານໃນປີກ່ອນໜ້າ ແລະ ໃນປີ 2013 ບໍລິສັດມີຄ່າໃຊ້ຈ່າຍໃນການດຳເນີນງານ ເທົ່າກັບ 47.349 ລ້ານກີບ ຫຼື ຄິດເປັນສັດສ່ວນ 4.40 ສ່ວນຮ້ອຍຂອງລາຍຮັບລວມຈາກການຂາຍນ້ຳມັນ ເຊິ່ງເພີ່ມຂຶ້ນ ຄິດເປັນສັດສ່ວນ 22.44 ສ່ວນຮ້ອຍຂອງຄ່າໃຊ້ຈ່າຍໃນການດຳເນີນງານໃນປີກ່ອນໜ້າ ເຊິ່ງຈະເຫັນໄດ້ວ່າບໍລິສັດມີຄ່າໃຊ້ຈ່າຍໃນການດຳເນີນງານເພີ່ມຂຶ້ນໃນປີ 2013 ເນື່ອງຈາກບໍລິສັດມີຄ່າໃຊ້ຈ່າຍເພີ່ມຂຶ້ນເຊັ່ນ:

ຄ່າໃຊ້ຈ່າຍດ້ານການບໍລິຫານ, ດ້ານບຸກຄະລາກອນ, ຄ່າໃຊ້ຈ່າຍການຕະຫຼາດ, ຄ່າໃຊ້ຈ່າຍທາງດ້ານຄວາມປອດໄພ, ລະບົບໂປຣແກຣມ ເປັນຕົ້ນ.

4) **ລາຍຈ່າຍທາງການເງິນ-ສຸດທິ**

ບໍລິສັດມີລາຍຈ່າຍທາງການເງິນປະກອບມີ: ດອກເບ້ຍຈ່າຍ ແລະ ຂາດທຶນຈາກອັດຕາແລກປ່ຽນ ເຊິ່ງໃນປີ 2011, 2012 ແລະ 2013 ບໍລິສັດມີລາຍຈ່າຍດັ່ງກ່າວເທົ່າກັບ 8,016 ລ້ານກີບ, 12,281 ລ້ານກີບ ແລະ 20,772 ລ້ານກີບ ຕາມລຳດັບ. ໃນຂະນະທີ່ບໍລິສັດກໍ່ມີລາຍຮັບທາງການເງິນປະກອບມີ: ດອກເບ້ຍຮັບ, ສ່ວນຫຼຸດຈາກຜູ້ສະໜອງ, ກຳໄລຈາກອັດຕາແລກປ່ຽນ, ດັດແກ້ອາກອນມູນຄ່າເພີ່ມເພື່ອໃຫ້ຖືກຕ້ອງຕາມຫຼັກການບັນຊີ ແລະ ອື່ນໆ ເຊິ່ງໃນປີ 2011, 2012 ແລະ 2013 ບໍລິສັດມີລາຍຮັບທາງເງິນເທົ່າກັບ 2,041 ລ້ານກີບ, 9,211 ລ້ານກີບ ແລະ 18,599 ລ້ານກີບ ຕາມລຳດັບ. ຈາກຂໍ້ມູນດັ່ງກ່າວຂ້າງເທິງນັ້ນ ຈະເຫັນໄດ້ວ່າບໍລິສັດມີລາຍຈ່າຍທາງການເງິນ-ສຸດທິຫຼຸດລົງຢ່າງຕໍ່ເນື່ອງ.

5) **ກຳໄລສຸດທິ ແລະ ອັດຕາກຳໄລສຸດທິ**

ບໍລິສັດມີກຳໄລສຸດທິໃນປີ 2011 ເທົ່າກັບ 21,608 ລ້ານກີບ ຫຼື ຄິດເປັນອັດຕາກຳໄລສຸດທິ 2.39 ສ່ວນຮ້ອຍ ຂອງລາຍຮັບລວມຈາກການຈຳໜ່າຍນ້ຳມັນ, ສ່ວນໃນປີ 2012 ບໍລິສັດມີກຳໄລສຸດທິເພີ່ມຂຶ້ນເປັນ 26,514 ລ້ານກີບ ຫຼື ຄິດເປັນອັດຕາກຳໄລສຸດທິ 2.60 ສ່ວນຮ້ອຍຂອງລາຍຮັບລວມຈາກການຈຳໜ່າຍນ້ຳມັນ ໂດຍອັດຕາກຳໄລທີ່ເພີ່ມຂຶ້ນ ໃນປີ 2012 ເກີດຈາກບໍລິສັດມີລາຍຮັບຈາກການຂາຍສິນຄ້າເພີ່ມຂຶ້ນ. ໃນປີ 2013 ບໍລິສັດມີກຳໄລສຸດທິເທົ່າກັບ 19,133 ລ້ານກີບ ຄິດເປັນອັດຕາກຳໄລສຸດທິ 1.78 ສ່ວນຮ້ອຍຂອງລາຍຮັບລວມຈາກການຈຳໜ່າຍນ້ຳມັນ ໂດຍສາເຫດຫຼັກທີ່ອັດຕາສ່ວນກຳໄລສຸດທິໃນປີ 2013 ຫຼຸດລົງ ເກີດຂຶ້ນຈາກການເພີ່ມຂຶ້ນຂອງຄ່າໃຊ້ຈ່າຍ ບໍ່ວ່າຈະເປັນຄ່າໃຊ້ຈ່າຍໃນການຂາຍ, ຄ່າໃຊ້ຈ່າຍດ້ານການບໍລິຫານ, ຄ່າໃຊ້ຈ່າຍດ້ານບຸກຄະລາກອນ, ຄ່າໃຊ້ຈ່າຍການຕະຫຼາດ, ຄ່າໃຊ້ຈ່າຍທາງດ້ານຄວາມປອດໄພ, ຄ່າໃຊ້ຈ່າຍໃນການຊື້ລະບົບໂປຣແກຣມເປັນຕົ້ນ. ລວມທັງການເພີ່ມຂຶ້ນຫຼາຍຂອງດອກເບ້ຍຈ່າຍ ເນື່ອງຈາກໃນຊ່ວງປີ 2013 ບໍລິສັດມີການຂະຫຍາຍທຸລະກິດ ແລະ ເພີ່ມຈຳນວນສະຖານີບໍລິການນ້ຳມັນຫຼາຍສະຖານີ.

## 1.12.5 ຖານະທາງການເງິນຂອງບໍລິສັດ

### 1. ຊັບສິນ

ໃນວັນທີ 31 ທັນວາ ຂອງປີ 2011, 2012 ແລະ 2013 ບໍລິສັດ ມີຊັບສິນລວມ ເທົ່າກັບ 202,814 ລ້ານກີບ, 280,883 ລ້ານກີບ ແລະ 561,573 ລ້ານກີບຕາມລຳດັບ. ໂດຍລາຍການທີ່ສຳຄັນທີ່ສົ່ງຜົນຕໍ່ການປ່ຽນແປງໃນຊັບສິນລວມຂອງບໍລິສັດມີດັ່ງນີ້:

#### 1.1 ເງິນສົດ ແລະ ເງິນຝາກທະນາຄານ

ໃນວັນທີ 31 ທັນວາ ຂອງປີ 2011 ບໍລິສັດມີລາຍການເງິນສົດ ແລະ ເງິນຝາກທະນາຄານເທົ່າກັບ 4,537 ລ້ານກີບ ຫຼື ເທົ່າກັບ 2.24 ສ່ວນຮ້ອຍ ຂອງຊັບສິນລວມ. ໃນຂະນະທີ່ໃນວັນທີ 31 ທັນວາ 2012 ບໍລິສັດມີລາຍການເງິນສົດ ແລະ ເງິນຝາກທະນາຄານເພີ່ມຂຶ້ນ 3,778 ລ້ານກີບຈາກປີກ່ອນໜ້າເປັນ 8,316 ລ້ານກີບ ຫຼື ເທົ່າກັບ 2.96 ສ່ວນຮ້ອຍຂອງຊັບສິນລວມ. ໂດຍການເພີ່ມຂຶ້ນດັ່ງກ່າວມີສາເຫດຫຼັກຈາກກຳໄລຈາກການດຳເນີນງານທີ່ເພີ່ມຂຶ້ນຈຳນວນ 4,676 ລ້ານກີບ ເນື່ອງຈາກລາຍຮັບຈາກການຈຳໜ່າຍນ້ຳມັນ ແລະ ລາຍໄດ້ອື່ນໆ ທີ່ເພີ່ມຫຼາຍຂຶ້ນ ເຖິງແມ່ນວ່າບໍລິສັດ

ຈະມີການໃຫ້ກູ້ຢືມແກ່ກິດຈະການທີ່ກ່ຽວຂ້ອງກັນອອກໄປຈຳນວນ 48,738 ລ້ານກີບ ແຕ່ບໍລິສັດຍັງມີເງິນທຶນໝຸນວຽນຈາກການກູ້ຢືມຈາກສະຖາບັນການເງິນ.

ໃນວັນທີ 31 ທັນວາ 2013 ບໍລິສັດມີລາຍການເງິນສົດ ແລະ ເງິນຝາກທະນາຄານເທົ່າກັບ 9,424 ລ້ານກີບ ຫຼື ເທົ່າກັບ 1.68 ສ່ວນຮ້ອຍຂອງຊັບສິນລວມທັງໝົດ ໂດຍແຫຼ່ງທີ່ມາຂອງເງິນສົດສ່ວນໃຫຍ່ຍັງຄົງມາຈາກກຳໄລຈາກການດຳເນີນງານຂອງບໍລິສັດ.

### 1.2 ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ

ໃນວັນທີ 31 ທັນວາ 2011 ບໍລິສັດມີໜີ້ຕ້ອງຮັບການຄ້າສຸດທິ 47,164 ລ້ານກີບ ໃນວັນທີ່ 31 ທັນວາ 2012 ເທົ່າກັບ 72,424 ລ້ານກີບ ແລະ 31 ທັນວາ 2013 ເທົ່າກັບ 88,466 ລ້ານກີບ ໂດຍໜີ້ຕ້ອງຮັບການຄ້າທີ່ເພີ່ມຂຶ້ນຕະຫຼອດໄລຍະເວລາ 3 ປີ ເກີດຈາກລູກໜີ້ການຄ້າທີ່ເພີ່ມຂຶ້ນຕາມລາຍຮັບທີ່ເຕີບໂຕຂຶ້ນໃນແຕ່ລະປີ.

ຕາຕະລາງທີ **1.12.7** : ໜີ້ຕ້ອງຮັບການຄ້າ ແລະ ຄ່າເຜື່ອໜີ້ສົງໃສຈະສູນ

| ລູກໜີ້ການຄ້າ | ທ້າຍປີ 2011 ລ້ານກີບ | % | ທ້າຍປີ 2012 ລ້ານກີບ | % | ທ້າຍປີ 2013 ລ້ານກີບ | % |
|---|---|---|---|---|---|---|
| ລູກໜີ້ການຄ້າຈາກຄູ່ຮ່ວມທຸລະກິດ | 1,591 | 3.25 | 2,445 | 3.22 | 2,954 | 3.17 |
| ລູກໜີ້ທາງການຄ້າ | 47,422 | 96.75 | 73,466 | 96.78 | 90,278 | 96.83 |
| ລວມລູກໜີ້ການຄ້າກ່ອນໜີ້ສົງໃສຈະສູນ | **49,013** | **100** | **75,912** | **100** | **93,232** | **100** |
| ຄ່າເຜື່ອໜີ້ສົງໃສຈະສູນ | 1,849 | 3.92 | 3,487 | 4.82 | 4,766 | 5.39 |
| ລວມລູກໜີ້ການຄ້າ | **47,164** | **100** | **72,424** | **100** | **88,466** | **100** |

ບໍລິສັດມີໜີ້ຕ້ອງຮັບອື່ນໆ ໃນວັນທີ 31 ທັນວາ ຂອງປີ 2011, 2012 ແລະ 2013 ເທົ່າກັບ 28,248 ລ້ານກີບ 19,113 ລ້ານກີບ ແລະ 286,202 ລ້ານກີບ ຕາມລຳດັບ. ໂດຍໃນປີ 2013 ບໍລິສັດມີໜີ້ຕ້ອງຮັບອື່ນໆ ເພີ່ມຂຶ້ນເຖິງ 267,089 ລ້ານກີບ. ເນື່ອງຈາກ ບໍລິສັດມີການເພີ່ມທຶນຈົດທະບຽນເປັນ 350,000 ລ້ານກີບ ຕາມມະຕິຕົກລົງຂອງຄະນະບໍລິຫານ ລົງວັນທີ 26 ທັນວາ 2011, 24 ທັນວາ 2012, 23 ທັນວາ 2013 ເຊິ່ງບໍລິສັດຍັງບໍ່ໄດ້ຮັບຊຳລະຄ່າຮຸ້ນຈາກຜູ້ຖືຮຸ້ນຈຳນວນ 251,779 ລ້ານກີບ ຈຶ່ງບັນທຶກເປັນໜີ້ຕ້ອງຮັບຈາກຜູ້ຖືຮຸ້ນໃນປີ 2013 ແຕ່ທັງນີ້ໃນເດືອນກັນຍາ 2014 ບໍລິສັດໄດ້ມີການແຈ້ງຮຽກເກັບລູກໜີ້ຄ່າຮຸ້ນດັ່ງກ່າວ ແລະ ຜູ້ຖືຮຸ້ນກໍ່ໄດ້ຊຳລະໜີ້ຄ້າງຮັບດັ່ງກ່າວຢ່າງເຕັມຈຳນວນສົ່ງຜົນໃຫ້ບໍລິສັດມີທຶນຈົດທະບຽນ ແລະ ທຶນທີ່ຊຳລະແລ້ວເທົ່າກັບ 350,000 ລ້ານກີບ.

### 1.3 ເງິນລ່ວງໜ້າໃຫ້ຜູ້ສະໜອງ

ໃນວັນທີ 31 ທັນວາ ຂອງປີ 2011, 2012 ແລະ 2013 ບໍລິສັດມີການຊຳລະເງິນລ່ວງໜ້າຄ່າສິນຄ້າໃຫ້ແກ່ຜູ້ສະໜອງເທົ່າກັບ 8,792 ລ້ານກີບ, 10,781 ລ້ານກີບ ແລະ 526 ລ້ານກີບ ຕາມລຳດັບ ເຊິ່ງເກີດຈາກການທີ່ບໍລິສັດຊຳລະເງິນລ່ວງໜ້າຄ່າສິນຄ້າໃຫ້ແກ່ຜູ້ສະໜອງໄປກ່ອນ.

### 1.4 ສິນຄ້າໃນສາງ

ໃນວັນທີ 31 ທັນວາ ຂອງປີ 2011, 2012 ແລະ 2013 ບໍລິສັດມີສິນຄ້າໃນສາງເທົ່າກັບ 8,571 ລ້ານກີບ, 7,587 ລ້ານກີບ ແລະ 12,291 ລ້ານກີບ ຫຼື ຄິດເປັນສັດສ່ວນ 4.23 ສ່ວນຮ້ອຍ, 2.70 ແລະ 2.19 ຂອງສັບຊິນລວມ

ໃນແຕ່ລະປີຕາມລຳດັບ. ໂດຍສິນຄ້າໃນສາງສ່ວນໃຫຍ່ຈະເປັນນ້ຳມັນເຊື້ອໄຟ ແລະ ມັນນ້ຳເຄື່ອງ ເພື່ອຮັບຮອງການຈຳໜ່າຍນ້ຳມັນປະເພດຕ່າງໆ ໃຫ້ແກ່ລູກຄ້າ.

### 1.5 ຊັບສິນໝຸນວຽນອື່ນ

ໃນວັນທີ 31 ທັນວາ ຂອງປີ 2011, 2012 ແລະ 2013 ບໍລິສັດມີຊັບສິນໝຸນວຽນອື່ນສຸດທິເທົ່າກັບ 20,555 ລ້ານກີບ, 22,241 ລ້ານກີບ ແລະ 2,943 ລ້ານກີບ ຕາມລຳດັບ ຫຼື ຄິດເປັນ 10.14 ສ່ວນຮ້ອຍ, 7.92 ສ່ວນຮ້ອຍ ແລະ 0.52 ສ່ວນຮ້ອຍຂອງຊັບສິນລວມ ຕາມລຳດັບ. ໂດຍຊັບສິນໝຸນວຽນອື່ນສ່ວນໃຫຍ່ປະກອບດ້ວຍ ເງິນລ່ວງໜ້າໃຫ້ແກ່ພະນັກງານເພື່ອນຳໄປຈັດກິດຈະກຳການຕະຫຼາດໃນຕ່າງແຂວງ, ໃຫ້ຢືມເຄື່ອງໃນສາງແກ່ລູກຄ້າ ແລະ ຄ່າໃຊ້ຈ່າຍລ່ວງໜ້າອື່ນໆ.

ໃນວັນທີ 31 ທັນວາ 2013 ຊັບສິນໝຸນວຽນອື່ນຂອງບໍລິສັດຫຼຸດລົງເຖິງ 19,298 ລ້ານກີບ ເນື່ອງຈາກເມື່ອວັນທີ 10 ຕຸລາ 2010 ບໍລິສັດໄດ້ເຮັດສັນຍາຊື້-ຂາຍເພື່ອສະໜອງນ້ຳມັນກາຊວນໃຫ້ແກ່ບໍລິສັດ ວຽງຈັນ ພັດທະນາ ເຊິ່ງເປັນບໍລິສັດທີ່ໄດ້ຮັບອະນຸຍາດໃນການນຳເຂົ້ານ້ຳມັນ ຈາກກະຊວງອຸດສາຫະກຳ ແລະ ການຄ້າ ເປັນຈຳນວນ 30,000,000 ລິດ ໂດຍໃນປີ 2011 ແລະ 2012 ບໍລິສັດໄດ້ສະໜອງນ້ຳມັນກາຊວນໃຫ້ເປັນຈຳນວນ 2,498,000 ລິດ ຕີກເປັນເງິນ 19,036 ລ້ານກີບ, ແຕ່ໃນລະຫວ່າງນັ້ນບໍລິສັດ ວຽງຈັນ ພັດທະນາ ແມ່ນຍັງບໍ່ທັນໄດ້ຮັບໃບອະນຸຍາດນຳເຂົ້າເທື່ອ ສະນັ້ນ, ບໍລິສັດຈຶ່ງໄດ້ຕົກລົງໃຫ້ເປັນການກູ້ຍືມນ້ຳມັນກ່ອນ ແລະ ມາໃນປີ 2013 ບໍລິສັດ ວຽງຈັນ ພັດທະນາ ໄດ້ຊຳລະຄືນໃນມູນຄ່າດັ່ງກ່າວສົ່ງຜົນໃຫ້ສັບຊິນໝຸນວຽນອື່ນຫຼຸດລົງຢ່າງມີເນື້ອໃນສຳຄັນ.

### 1.6 ຊັບສິນຄົງທີ່

ໃນວັນທີ 31 ທັນວາ ຂອງປີ 2011, 2012 ແລະ 2013 ບໍລິສັດມີຊັບສິນຄົງທີ່ສຸດທິເທົ່າກັບ 55,539 ລ້ານກີບ, 69,007 ລ້ານກີບ ແລະ 67,637 ລ້ານກີບ ຫຼື ຄິດເປັນສັດສ່ວນ 27.38 ສ່ວນຮ້ອຍ, ຄິດເປັນສັດສ່ວນ 24.57 ສ່ວນຮ້ອຍ ແລະ 12.04 ສ່ວນຮ້ອຍຂອງຊັບສິນລວມ ຕາມລຳດັບ.

ໃນວັນທີ 31 ທັນວາ 2012 ບໍລິສັດມີຊັບສິນຄົງທີ່ສຸດທິເພີ່ມຂຶ້ນ ເນື່ອງຈາກໃນປີດັ່ງກ່າວບໍລິສັດໂອນຊັບສິນທີ່ຢູ່ໃນລະຫວ່າງການກໍ່ສ້າງ ເຊິ່ງດຳເນີນການສ້າງສຳເລັດແລ້ວລະຫວ່າງປີເຊັ່ນ: ຕຶກອາຄານ ແລະ ສິ່ງປຸກສ້າງ ລວມທັງມີການລົງທຶນຊື້ຊັບສິນຄົງທີ່ອື່ນໆເພີ່ມຂຶ້ນ ເຮັດໃຫ້ມູນຄ່າຂອງຊັບສິນຄົງທີ່ສຸດທິເພີ່ມຂຶ້ນຈາກປີກ່ອນໜ້າ. ສ່ວນໃນວັນທີ 31 ທັນວາ 2013 ບໍລິສັດມີຊັບສິນຄົງທີ່ສຸດທິຫຼຸດລົງເລັກໜ້ອຍ ເນື່ອງຈາກຜົນຂອງການຕັດຄ່າຫຼ້ຽຫ້ຽນລະຫວ່າງປີ ປະກອບກັບການຈຳໜ່າຍສັບຊິນບາງສ່ວນອອກໄປ ເຖິງແມ່ນວ່າຈະມີການລົງທຶນຊື້ຊັບສິນຄົງທີ່ອື່ນໆເພີ່ມຂຶ້ນໃນປີດັ່ງກ່າວດ້ວຍກໍ່ຕາມ.

ຕາຕະລາງທີ **1.12.8** : ຊັບສິນຄົງທີ່ໃນທ້າຍປີ 2011, 2012 ແລະ 2013

| ລາຍການຊັບສິນ | 31 ທັນວາ 2011 (ລ້ານກີບ) | 31 ທັນວາ 2012 (ລ້ານກີບ) | 31 ທັນວາ 2013 (ລ້ານກີບ) |
|---|---|---|---|
| ຕຶກອາຄານ ແລະ ສິ່ງປຸກສ້າງ | 30,820 | 38,372 | 39,196 |
| ເຄື່ອງຈັກ ແລະ ອຸປະກອນ | 17,952 | 21,397 | 22,129 |
| ພະຫະນະ | 5,083 | 6,254 | 3,057 |
| ເຄື່ອງໃຊ້ຫ້ອງການ | 1,684 | 2,985 | 3,255 |
| **ລວມ** | **55,539** | **69,007** | **67,637** |

### 1.7 ຊັບສິນທີ່ບໍ່ມີຕົວຕົນ

ໃນວັນທີ 31 ທັນວາ ຂອງປີ 2011, 2012 ແລະ 2013 ບໍລິສັດມີຊັບສິນທີ່ບໍ່ມີຕົວຕົນສຸດທິເທົ່າກັບ 623 ລ້ານກີບ, 588 ລ້ານກີບ ແລະ 506 ລ້ານກີບ ຫຼື ເທົ່າກັບ 0.31 ສ່ວນຮ້ອຍ, 0.21 ສ່ວນຮ້ອຍ ແລະ 0.09 ສ່ວນຮ້ອຍຂອງຊັບສິນລວມຕາມລຳດັບ. ໂດຍລາຍການຊັບສິນທີ່ບໍ່ມີຕົວຕົນແມ່ນປະກອບມີ: ລິຂະສິດຕ່າງໆກ່ຽວກັບ Computer Software ດັ່ງນີ້:

ຕາຕະລາງທີ **1.12.9** : ຊັບສິນທີ່ບໍ່ມີຕົວຕົນໃນທ້າຍປີ 2011, 2012 ແລະ 2013

| ລາຍການຊັບສິນ | 31 ທັນວາ 2011 (ລ້ານກີບ) | 31 ທັນວາ 2012 (ລ້ານກີບ) | 31 ທັນວາ 2013 (ລ້ານກີບ) |
|---|---|---|---|
| ຄອມພິວເຕີຊອບແວ | 623 | 588 | 506 |
| **ລວມ** | **623** | **588** | **506** |

### 1.8 ຊັບສິນຕາມສັນຍາເຊົ່າຊື້

ໃນວັນທີ 31 ທັນວາ ຂອງປີ 2011, 2012 ແລະ 2013 ບໍລິສັດມີຊັບສິນຕາມສັນຍາເຊົ່າຊື້ສຸດທິ 11,110 ລ້ານກີບ, 21,686 ລ້ານກີບ ແລະ 18,276 ລ້ານກີບ ຫຼື ເທົ່າກັບ 5.48 ສ່ວນຮ້ອຍ, 7.72 ສ່ວນຮ້ອຍ ແລະ 3.25 ສ່ວນຮ້ອຍຂອງຊັບສິນລວມຕາມລຳດັບ. ໂດຍໃນວັນທີ 31 ທັນວາ 2013 ບໍລິສັດມີສັນຍາເຊົ່າລົດຂົນສົ່ງ Isuzu ເປັນຈຳນວນ 12 ຄັນ ແລະ ລົດຂົນສົ່ງ Daewoo ຈຳນວນ 15 ຄັນ ກັບບໍລິສັດລັດໃຫ້ເຊົ່າສິນເຊື່ອທະນາຄານການຄ້າຕ່າງປະເທດລາວ ພາຍໃຕ້ສັນຍາເຊົ່າ 36 ເດືອນ ແລະ 60 ເດືອນ ເມື່ອຄົບກຳນົດສັນຍາແລ້ວບໍລິສັດມີທາງເລືອກທີ່ຈະສາມາດຊື້ລົດດັ່ງກ່າວໄວ້ເປັນກຳມະສິດຂອງບໍລິສັດເອງ.

### 1.9 ເງິນລົງທຶນໄລຍະຍາວ

ໃນວັນທີ 31 ທັນວາ ຂອງປີ 2011, 2012 ແລະ 2013 ບໍລິສັດມີເງິນລົງທຶນໄລຍະຍາວເທົ່າກັບ 8,449 ລ້ານກີບ, 19,391 ລ້ານກີບ ແລະ 21,173 ລ້ານກີບ ຫຼື ເທົ່າກັບ 4.17 ສ່ວນຮ້ອຍ, 6.90 ສ່ວນຮ້ອຍ ແລະ 3.77 ສ່ວນຮ້ອຍ ຂອງຊັບສິນລວມ ຕາມລຳດັບ. ໂດຍໃນວັນທີ 31 ທັນວາ 2013 ບໍລິສັດມີເງິນໃຫ້ກູ້ຢືມແກ່ ບໍລິສັດ ຂວັນໃຈການຄ້າ ຂາອອກ-ຂາເຂົ້າ ຈຳກັດ ຈຳນວນ 12.121 ລ້ານກີບ, ເງິນໃຫ້ກູ້ຢືມແກ່ບໍລິສັດ ແປັກແຄນປອນ ລາວ ຂາເຂົ້າ-ຂາອອກ ຈຳກັດ ຈຳນວນ 1,513 ລ້ານກີບ, ເງິນໃຫ້ກູ້ຢືມແກ່ບໍລິສັດ ສຸດາພອນການຄ້າ ຂາອອກ-ຂາເຂົ້າ ແລະ ບໍລິການ ຈຳກັດ ຈຳນວນ 966 ລ້ານກີບ ແລະ ເງິນໃຫ້ກູ້ຢືມແກ່ບໍລິສັດ ລາວເດລີ້ມາກ ຂາເຂົ້າ-ຂາອອກ ຈຳກັດ ຈຳນວນ 6,572 ລ້ານກີບ ໂດຍເງິນໃຫ້ກູ້ຢືມດັ່ງກ່າວເປັນເງິນກູ້ຢືມແບບບໍ່ມີຫຼັກຊັບຄ້ຳປະກັນ ແລະ ບໍລິສັດມີການຄິດໄລ່ອັດຕາດອກເບ້ຍສະເລ່ຍຢູ່ທີ່ 10-11 ສ່ວນຮ້ອຍ ຕໍ່ປີ.

### 1.10 ໜີ້ຕ້ອງຮັບໄລຍະຍາວອື່ນໆ

ໃນວັນທີ 31 ທັນວາ ຂອງປີ 2011, 2012 ແລະ 2013 ບໍລິສັດມີໜີ້ຕ້ອງຮັບໄລຍະຍາວເທົ່າກັບ 5,190 ລ້ານກີບ, 26,675 ລ້ານກີບ ແລະ 36,474 ຫຼື ເທົ່າກັບ 2.56 ສ່ວນຮ້ອຍ, 9.50 ສ່ວນຮ້ອຍ ແລະ 6.49 ສ່ວນຮ້ອຍ ຂອງຊັບສິນລວມ ຕາມລຳດັບ ໂດຍໜີ້ຕ້ອງຮັບໄລຍະຍາວອື່ນໆໄດ້ແກ່ເງິນໃຫ້ກູ້ຢືມແກ່ກຳມະການ (ທ່ານ ຈັນທອນ ສິດທິໄຊ) ໂດຍບໍ່ມີຫຼັກຊັບຄ້ຳປະກັນ, ບໍ່ມີການຄິດໄລ່ອັດຕາດອກເບ້ຍ ແລະ ກຳນົດຊຳລະເມື່ອທວງຖາມ.

## 2. ໜີ້ສິນ

ໃນວັນທີ 31 ທັນວາ ຂອງປີ 2011, 2012 ແລະ 2013 ບໍລິສັດມີໜີ້ສິນທັງໝົດຈຳນວນ 105,605 ລ້ານກີບ, 178,768 ລ້ານກີບ ແລະ 192,440 ລ້ານກີບ ຕາມລຳດັບ. ໂດຍລາຍການໜີ້ສິນທີ່ສຳຄັນທີ່ສົ່ງຜົນຕໍ່ການປ່ຽນແປງໃນໜີ້ສິນລວມຂອງບໍລິສັດມີດັ່ງນີ້:

### 2.1 ເງິນກູ້ຢືມໄລຍະສັ້ນ

ໃນວັນທີ 31 ທັນວາ ຂອງປີ 2011, 2012 ແລະ 2013 ບໍລິສັດມີໜີ້ສິນສ່ວນໃຫຍ່ຄື: ເງິນກູ້ຢືມໄລຍະສັ້ນ ບໍລິສັດມີການກູ້ຢືມເງິນຈາກທະນາຄານພາຍໃນປະເທດ ເທົ່າກັບ 70,642 ລ້ານກີບ, 134,271 ລ້ານກີບ ແລະ 158,199 ລ້ານກີບ ຫຼື ເທົ່າກັບ 34.83 ສ່ວນຮ້ອຍ, 47.80 ສ່ວນຮ້ອຍ ແລະ 28.17 ສ່ວນຮ້ອຍຂອງຊັບສິນລວມ ຕາມລຳດັບ ເຊິ່ງເປັນເງິນກູ້ຢືມໄລຍະສັ້ນເພື່ອມາເປັນທຶນໝຸນວຽນຂອງບໍລິສັດ, ໂດຍສັນຍາເງິນກູ້ຈະຕ້ອງຊຳລະຕາມກຳນົດເມື່ອຄົບອາຍຸສັນຍາ ແລະ ມີອັດຕາດອກເບ້ຍຢູ່ທີ່ປະມານ 8-10 ສ່ວນຮ້ອຍ ຕໍ່ປີ.

### 2.2 ເຈົ້າໜີ້ການຄ້າ

ບໍລິສັດມີເຈົ້າໜີ້ການຄ້າ ໃນປີ 2011, 2012 ແລະ 2013 ເທົ່າກັບ 4,954 ລ້ານກີບ, 14,562 ລ້ານກີບ ແລະ 17,576 ລ້ານກີບ ຕາມລຳດັບ. ໂດຍການເຕີບໂຕຂອງເຈົ້າໜີ້ການຄ້າຕະຫຼອດຊ່ວງໄລຍະເວລາ 3 ປີ ເກີດຈາກລາຍໄດ້ທີ່ເຕີບໂຕຢ່າງຕໍ່ເນື່ອງ ເຊິ່ງສົ່ງຜົນໃຫ້ບໍລິສັດມີການສັ່ງຊື້ນ້ຳມັນເພື່ອມາຈຳໜ່າຍຫຼາຍຂຶ້ນ.

### 2.3 ພາສີຄ້າງຈ່າຍ

ພາສີຄ້າງຈ່າຍຂອງບໍລິສັດປະກອບດ້ວຍ ອາກອນກຳໄລຄ້າງຈ່າຍເປັນຫຼັກ ນອກຈາກນີ້ບໍລິສັດຍັງມີອາກອນມູນຄ່າເພີ່ມຄ້າງຈ່າຍ ແລະ ພາສີອື່ນໆ ເຊັ່ນ: ພາສີນຳເຂົ້າ ໂດຍໃນວັນທີ 31 ທັນວາ 2011, 2012 ແລະ 2013 ບໍລິສັດມີພາສີຄ້າງຈ່າຍ 19,697 ລ້ານກີບ, 15,040 ລ້ານກີບ ແລະ 7,331 ລ້ານກີບ ຕາມລຳດັບ ເຊິ່ງຈະຕ້ອງຊຳລະພາຍໃນຕົ້ນປີຖັດໆໄປ ຕາມເງື່ອນໄຂເວລາທີ່ກົດໝາຍກຳນົດ

### 2.4 ເງິນກູ້ຢືມໄລຍະຍາວ

ເນື່ອງຈາກບໍລິສັດມີການເຮັດສັນຍາເຊົ່າສິນເຊື່ອໄລຍະຍາວຕາມລາຍລະອຽດໃນຂໍ້ 1.8 ຂ້າງເທິງນັ້ນ ບໍລິສັດມີພາລະເງິນກູ້ຢືມໄລຍະຍາວໃນຮູບແບບຂອງສັນຍາເຊົ່າສິນເຊື່ອ. ນອກຈາກນີ້ ບໍລິສັດຍັງມີເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນຈາກທະນາຄານ ANZ bank(Lao) ໂດຍໃນວັນທີ 31 ທັນວາ 2011, 2012 ແລະ 2013 ບໍລິສັດມີເງິນກູ້ຢືມໄລຍະຍາວຈຳນວນ 5,159 ລ້ານກີບ, 9,606 ລ້ານກີບ ແລະ 7,671 ລ້ານກີບ ຫຼື ເທົ່າກັບ 2.54 ສ່ວນຮ້ອຍ, 3.42 ສ່ວນຮ້ອຍ ແລະ 1.37 ສ່ວນຮ້ອຍຂອງຊັບສິນລວມຕາມລຳດັບ.

## 3. ທຶນຈາກຜູ້ຖືຮຸ້ນ

ໃນວັນທີ 31 ທັນວາ 2011, 2012 ແລະ 2013 ທຶນຂອງຜູ້ຖືຮຸ້ນລວມມີຈຳນວນ 97,208 ລ້ານກີບ, 102,114 ລ້ານກີບ ແລະ 369,133 ລ້ານກີບ ຫຼື ເທົ່າກັບ 47.93 ສ່ວນຮ້ອຍ, 36.35 ສ່ວນຮ້ອຍ ແລະ 65.73 ສ່ວນຮ້ອຍຂອງຊັບສິນລວມຕາມລຳດັບ ໃນວັນທີ 31 ທັນວາ 2011 ບໍລິສັດທຶນຈົດທະບຽນເທົ່າກັບ 75,600 ລ້ານກີບ ໂດຍມີທຶນຈົດທະບຽນທີ່ຊຳລະແລ້ວເທົ່າກັບ 50,098 ລ້ານກີບ ເຊິ່ງໄດ້ດຳເນີນການຫັນປ່ຽນກຳໄລສະສົມທີ່ຍັງບໍ່ທັນໄດ້ຈັດສັນຈຳນວນ 13,317 ລ້ານກີບມາເປັນທຶນຈົດທະບຽນຊຳລະແລ້ວຂອງຜູ້ຖືຮຸ້ນ ຕາມມະຕິກອງປະຊຸມຄະນະກຳມະການ

ບໍລິສັດໃນວັນທີ 25 ທັນວາ 2011 ເຊິ່ງສົ່ງຜົນໃຫ້ບໍລິສັດມີກຳໄລສະສົມຄົງເຫຼືອທ້າຍປີ 2011 ເທົ່າກັບ 21,608 ລ້ານກີບ.

ໃນວັນທີ 31 ທັນວາ 2012 ບໍລິສັດທຶນຈົດທະບຽນ ເທົ່າກັບ 75,600 ລ້ານກີບ ໂດຍມີທຶນຈົດທະບຽນທີ່ຊຳລະແລ້ວເທົ່າກັບ 71,707 ລ້ານກີບ ເຊິ່ງບໍລິສັດໄດ້ດຳເນີນການຫັນປ່ຽນກຳໄລສະສົມທີ່ຍັງບໍ່ທັນໄດ້ຈັດສັນຈຳນວນ 21,608 ລ້ານກີບມາເປັນທຶນຈົດທະບຽນທີ່ຊຳລະແລ້ວຂອງຜູ້ຖືຮຸ້ນ. ຕາມມະຕິກອງປະຊຸມສະພາບໍລິຫານຂອງບໍລິສັດ ໃນວັນທີ 24 ທັນວາ 2012 ເຊິ່ງສົ່ງຜົນໃຫ້ບໍລິສັດມີກຳໄລສະສົມຄົງເຫຼືອທ້າຍປີ 2012 ເທົ່າກັບ 26,514 ລ້ານກີບ

ແລະ ໃນວັນທີ 31 ທັນວາ 2013 ບໍລິສັດໄດ້ເພີ່ມທຶນຈົດທະບຽນຈາກ 75,600 ລ້ານກີບ ເປັນ 350,000 ລ້ານກີບ ໂດຍມີທຶນຈົດທະບຽນທີ່ຊຳລະແລ້ວເທົ່າກັບ 98,221 ລ້ານກີບ ເຊິ່ງບໍລິສັດໄດ້ດຳເນີນການຫັນປ່ຽນກຳໄລສະສົມທີ່ຍັງບໍ່ທັນໄດ້ຈັດສັນຈຳນວນ 26,514 ລ້ານກີບມາເປັນທຶນຈົດທະບຽນທີ່ຊຳລະແລ້ວຂອງຜູ້ຖືຮຸ້ນ ຕາມມະຕິກອງປະຊຸມສະພາບໍລິການຂອງບໍລິສັດໃນວັນທີ 23 ທັນວາ 2013 ເຊິ່ງສົ່ງຜົນໃຫ້ບໍລິສັດມີກຳໄລສະສົມຄົງເຫຼືອທ້າຍປີ 2013 ເທົ່າກັບ 19,133 ລ້ານກີບ. ໂດຍທ້າຍປີ 2013 ບໍລິສັດມີລູກໜີ້ຄ່າຮຸ້ນຄ້າງຮັບເທົ່າກັບ 251,778 ລ້ານກີບ. ແຕ່ທັງນີ້ ໃນເດືອນ ກັນຍາ ປີ 2014 ບໍລິສັດໄດ້ມີການແຈ້ງຮຽກເກັບລູກໜີ້ຄ່າຮຸ້ນດັ່ງກ່າວ ແລະ ຜູ້ຖືຮຸ້ນກໍ່ໄດ້ຊຳລະໜີ້ຄ້າງຮັບດັ່ງກ່າວຢ່າງເຕັມຈຳນວນ ສົ່ງຜົນໃຫ້ບໍລິສັດມີທຶນຈົດທະບຽນ ແລະ ທຶນທີ່ຊຳລະ ເທົ່າກັບ 350,000 ລ້ານກີບ.

### 1.12.6 ການວິເຄາະສະພາບຄ່ອງຂອງບໍລິສັດ

ບໍລິສັດມີອັດຕາສ່ວນສະພາບຄ່ອງໃນປີ 2011, ປີ 2012 ແລະ ປີ 2013 ເທົ່າກັບ 1.17 ເທົ່າ, 0.83 ເທົ່າ ແລະ 2.16 ເທົ່າ ໂດຍໃນປີ 2013 ອັດຕາສ່ວນສະພາບຄ່ອງເພີ່ມຂຶ້ນ ເນື່ອງຈາກບໍລິສັດໄດ້ດຳເນີນການເພີ່ມທຶນຈົດທະບຽນຈາກ 75,600 ລ້ານກີບເປັນ 350,000 ລ້ານກີບ ເຊິ່ງບໍລິສັດມີການຕັ້ງເປັນລູກໜີ້ຄ້າງຊຳລະຮຸ້ນຈຳນວນ 251,778 ລ້ານກີບ. ເຖິງຢ່າງໃດກໍ່ຕາມ, ອັດຕາສ່ວນສະພາບຄ່ອງໝຸນເວຂອງບໍລິສັດຍັງຢູ່ໃນລະດັບໃກ້ຄຽງກັນຕະຫຼອດຊ່ວງໄລຍະເວລາ 3 ປີ ເທົ່າກັບ 0.48–0.53 ເທົ່າ ເຊິ່ງສະທ້ອນໃຫ້ເຫັນວ່າບໍລິສັດຍັງມີຄວາມສ່ຽງຈາກການຊຳລະໜີ້ສິນດ້ວຍຊັບສິນໝຸນວຽນໄວ. ແຕ່ເນື່ອງຈາກບໍລິສັດມີວົງເງິນໄລຍະສັ້ນຈາກສະຖາບັນການເງິນ ເຮັດໃຫ້ບໍລິສັດສາມາດບໍລິຫານຈັດການສະພາບຄ່ອງດັ່ງກ່າວໄດ້ຢ່າງພຽງພໍ.

ບໍລິສັດມີກະແສເງິນສົດຈາກການດຳເນີນງານໃນປີ 2011, 2012 ແລະ 2013 ເທົ່າກັບ -7,775 ລ້ານກີບ, 819 ລ້ານກີບ ແລະ 9,284 ລ້ານກີບ ຕາມລຳດັບ ໂດຍໃນປີ 2011 ບໍລິສັດມີກະແສເງິນສົດຕິດລົບ ເນື່ອງຈາກການເພີ່ມຂຶ້ນຂອງໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນ. ເຖິງແນວໃດກໍ່ຕາມ, ກະແສເງິນສົດຈາກການດຳເນີນງານໃນປີ 2012 ກັບມາເປັນບວກຈຳນວນ 819 ລ້ານກີບ ເນື່ອງຈາກມີກຳໄລຈາກການດຳເນີນງານເພີ່ມຂຶ້ນ. ສ່ວນໃນປີ 2013 ເຖິງແມ່ນວ່າບໍລິສັດຈະມີກຳໄລຈາກການດຳເນີນງານຫຼຸດລົງ ແຕ່ກະແສເງິນສົດຈາກການດຳເນີນງານແມ່ນເພີ່ມຂຶ້ນ ໂດຍເຫດຜົນຫຼັກເກີດຈາກລູກໜີ້ການຄ້າ ແລະ ລູກໜີ້ອື່ນທີ່ເພີ່ມຂຶ້ນໃນອັດຕາຫຼຸດລົງຄ່ອນຂ້າງຫຼາຍ ເນື່ອງຈາກບໍລິສັດສາມາດເກັບເງິນຈາກລູກຄ້າໄດ້ໃນຊ່ວງທ້າຍປີ.

ບໍລິສັດມີກະແສເງິນສົດຈາກການລົງທຶນໃນປີ 2011, 2012 ແລະ 2013 ເທົ່າກັບ -33,670 ລ້ານກີບ, -65,117 ແລະ -30,168 ລ້ານກີບ ຕາມລຳດັບ ໂດຍໃນແຕ່ລະປີບໍລິສັດມີການລົງທຶນຊື້ຊັບສິນຄົງທີ່ເພີ່ມຂຶ້ນເພື່ອຂະຫຍາຍທຸລະກິດ ລວມທັງມີການໃຫ້ເງິນກູ້ຢືມແກ່ຫົວໜ່ວຍທຸລະກິດອື່ນທຸກປີ ແຕ່ໃນປີ 2013 ບໍລິສັດມີກະແສເງິນສົດຮັບຈາກການຂາຍຊັບສິນຄົງທີ່. ດັ່ງນັ້ນກະແສເງິນສົດຈາກການລົງທຶນໃນປີ 2013 ຈຶ່ງຕິດລົບຕ່ຳກວ່າປີ 2012.

ບໍລິສັດມີກະແສເງິນສົດຈາກການຈັດຫາເງິນໃນປີ 2011, 2012 ແລະ 2013 ເທົ່າກັບ 42,699 ລ້ານກີບ, 68,076 ລ້ານກີບ ແລະ 21,992 ລ້ານກີບ ຕາມລຳດັບ ເຊິ່ງບໍລິສັດມີກະແສເງິນສົດຈາກການຈັດຫາເງິນເພີ່ມຂຶ້ນທຸກປີ ຈາກການເພີ່ມຂຶ້ນຂອງເງິນກູ້ຢືມເພື່ອໃຊ້ໃນການລົງທຶນຊື້ຊັບສິນຄົງທີ່ ແລະ ໃຊ້ເປັນເງິນທຶນໝຸນວຽນ.

ບໍລິສັດມີໄລຍະເວລາການເກັບໜີ້ສິ້ນສະເລ່ຍຢູ່ໃນລະດັບປະມານ 19-28 ວັນ ໃນຂະນະທີ່ໄລຍະເວລາການຊຳລະໜີ້ສະເລ່ຍແມ່ນປະມານ 2-6 ວັນ. ສ່ວນໄລຍະເວລາຂາຍສິນຄ້າສະເລ່ຍຢູ່ໃນລະດັບປະມານ 3-4 ວັນ ເຊິ່ງສົ່ງຜົນໃຫ້ໄລຍະເວລາໝຸນວຽນເງິນສົດ (Cash Cycle) ຂອງບໍລິສັດສະເລ່ຍຢູ່ທີ່ປະມານ 21-27 ວັນ ສະທ້ອນໃຫ້ເຫັນເຖິງຄວາມຕ້ອງການແຫຼ່ງເງິນທຶນໄລຍະສັ້ນ ເຊິ່ງບໍລິສັດມີການກະກຽມຄວາມພ້ອມ ໂດຍມີວົງເງິນກູ້ຢືມໄລຍະສັ້ນຈາກສະຖາບັນການເງິນທີ່ຮອງຮັບຢ່າງພຽງພໍຕໍ່ການໃຊ້ຈ່າຍໝຸນວຽນໃນທຸລະກິດ.

# ພາກທີ 2
# ຂໍ້ມູນກ່ຽວກັບການອອກຈຳໜ່າຍຮຸ້ນ

## 2.1 ລາຍລະອຽດຂອງຮຸ້ນ

ພາກນີ້ ສະແດງຂໍ້ມູນທີ່ກ່ຽວພັນກັບຮຸ້ນຂອງບໍລິສັດ ແລະ ສິດໃນການຖືຮຸ້ນຂອງຜູ້ຖືຮຸ້ນ ເຊິ່ງອີງໃສ່ກົດລະບຽບຂອງບໍລິສັດ ແລະ ບັນດາກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ.

### 2.1.1 ສະພາບທົ່ວໄປ

ບໍລິສັດໄດ້ຫັນປ່ຽນຈາກ ບໍລິສັດຈຳກັດ ມາເປັນ ບໍລິສັດມະຫາຊົນ ທີ່ມີຄວາມຮັບຜິດຊອບຈຳກັດ ພາຍໃຕ້ກົດໝາຍຂອງ ສປປ ລາວ. ໃນວັນທີ່ໄດ້ຫັນປ່ຽນຮູບແບບບໍລິສັດ, ບໍລິສັດມີຜູ້ຖືຮຸ້ນ 9 ຄົນ ທີ່ຖືຮຸ້ນ 100 ສ່ວນຮ້ອຍ (ຮ້ອຍສ່ວນຮ້ອຍ) ຂອງຮຸ້ນຈົດທະບຽນ.

ຕໍ່ມາໃນວັນທີ 09 ຕຸລາ 2014 ກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1/2014 ໄດ້ມີມະຕິຕົກລົງໃຫ້ມີການເພີ່ມທຶນຈົດທະບຽນຂອງບໍລິສັດຈຳນວນ 120.00 ຕື້ກີບ ຈາກເດີມ 350.00 ຕື້ກີບ ມາເປັນ 470.00 ຕື້ກີບ ແບ່ງອອກເປັນ 235,000,000 (ສອງຮ້ອຍສາມສິບຫ້າລ້ານ) ຮຸ້ນ ມູນຄ່າກຳນົດ 2,000 (ສອງພັນ) ກີບຕໍ່ຮຸ້ນ.

ສຳລັບການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນຂອງບໍລິສັດເພື່ອສະເໜີຂາຍໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ບໍລິສັດຈະອອກຈຳໜ່າຍຮຸ້ນສາມັນເພີ່ມທຶນຈຳນວນ 60,000,000 (ຫົກສິບລ້ານ) ຮຸ້ນ ຫຼື ປະມານ 25.531 ສ່ວນຮ້ອຍຂອງຮຸ້ນທັງໝົດພາຍຫຼັງເພີ່ມທຶນຈົດທະບຽນ.

ໂດຍຫຼັກແລ້ວ ບໍລິສັດຖືກຄຸ້ມຄອງໂດຍກົດລະບຽບຂອງບໍລິສັດ ແລະ ບາງຂໍ້ກຳນົດຂອງກົດໝາຍວ່າດ້ວຍວິສາຫະກິດ.

- **ທຶນ**

ທຶນຂອງບໍລິສັດທີ່ໄດ້ລະບຸໄວ້ໃນໜັງສືຊວນຊື້ສະບັບນີ້ແມ່ນ 350.00 ຕື້ກີບ ປະກອບດ້ວຍ 235,000,000 (ສອງຮ້ອຍສາມສິບຫ້າລ້ານ) ຮຸ້ນ ເຊິ່ງແຕ່ລະຮຸ້ນມີມູນຄ່າກຳນົດ 2,000 (ສອງພັນ) ກີບຕໍ່ຮຸ້ນ. ຮຸ້ນທັງໝົດໄດ້ຖອກຄົບໝົດແລ້ວ.

ພາຍຫຼັງໄດ້ອອກຈຳໜ່າຍຮຸ້ນສາມັນເພີ່ມທຶນທັງໝົດ ບໍລິສັດທີ່ປຶກສາທາງການເງິນ ແລະ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນຈະໄດ້ທຳການສະເໜີຂໍຈົດທະບຽນຮຸ້ນສາມັນທັງໝົດຂອງບໍລິສັດເຂົ້າເປັນຫຼັກຊັບຈົດທະບຽນໃນຕະຫຼາດຫຼັກຊັບລາວ. ບໍລິສັດມີຄວາມຄາດຫວັງວ່າການສະເໜີດັ່ງກ່າວຈະໄດ້ຮັບການອະນຸມັດເພື່ອໃຫ້ການປະຕິບັດ ແລະ ຄຸນສົມບັດຂອງບໍລິສັດສອດຄ່ອງກັບກົດລະບຽບຂອງຕະຫຼາດຫຼັກຊັບລາວ.

- **ຂໍ້ຈຳກັດຂອງຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ**

ກົດໝາຍຂອງລາວໄດ້ມີຂໍ້ຫ້າມກ່ຽວກັບຈຳນວນຮຸ້ນຂອງນັກລົງທຶນຕ່າງປະເທດອາດຈະໄດ້ຮັບ ແລະ ຖືໄດ້. ອີງຕາມຂໍ້ຕົກລົງວ່າດ້ວຍລະບຽບການຄຸ້ມຄອງການຊື້-ຂາຍຮຸ້ນຂອງນັກລົງທຶນຕ່າງປະເທດໃນຕະຫຼາດຫຼັກຊັບລາວ ສະບັບເລກທີ 012/ຄລຕ ລົງວັນທີ 19 ພຶດສະພາ 2011 ນັກລົງທຶນຕ່າງປະເທດສາມາດໄດ້ຮັບອັດຕາສ່ວນຕາມທີ່ລະບຸໄວ້ໃນຂໍ້ກຳນົດຂອງເຈົ້າໜ້າທີ່ ສຄຄຊ ດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ດັ່ງຕໍ່ໄປນີ້:

- ລະບຽບຂອງຂະແໜງການທີ່ກ່ຽວຂ້ອງ
- ມະຕິກອງປະຊຸມຂອງບໍລິສັດທີ່ຈົດທະບຽນ

- ການກຳນົດຂອງ ສຄຄຊ ດັ່ງນີ້:
    - ນັກລົງທຶນໃນຕ່າງປະເທດສາມາດຊື້ຮຸ້ນໃນອັດຕາສ່ວນບໍ່ເກີນ 10 (ສິບ) ສ່ວນຮ້ອຍ ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດຈົດທະບຽນໃດໜຶ່ງ.
    - ນັກລົງທຶນຕ່າງປະເທດໜຶ່ງລາຍສາມາດຊື້ຮຸ້ນໃນອັດຕາສ່ວນບໍ່ເກີນໜຶ່ງສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດຂອງບໍລິສັດຈົດທະບຽນໃດໜຶ່ງ.

ເນື່ອງຈາກ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ມີມະຕິຕົກລົງຂອງກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1/2014 ເມື່ອວັນທີ 9 ຕຸລາ 2014 ເຫັນດີໃຫ້ບໍລິສັດບໍ່ມີຂໍ້ຈຳກັດການຖືຮຸ້ນໂດຍຄົນຕ່າງປະເທດ ເຊິ່ງຄົນຕ່າງປະເທດສາມາດຖືຮຸ້ນຂອງບໍລິສັດໄດ້ສູງສຸດເຖິງ 100 ສ່ວນຮ້ອຍຂອງທຶນຈົດທະບຽນ. ດັ່ງນັ້ນ ຈຶ່ງເປັນໄປຕາມຂໍ້ຕົກລົງວ່າດ້ວຍລະບຽບການຄຸ້ມຄອງການຊື້-ຂາຍຮຸ້ນຂອງນັກລົງທຶນຕ່າງປະເທດໃນຕະຫຼາດຫຼັກຊັບລາວ ສະບັບເລກທີ 012/ຄລຕ ລົງວັນທີ 19 ພຶດສະພາ 2011 ມາດຕາ 8.

- **ການຈ່າຍເງິນປັນຜົນ**

ບໍລິສັດຈະຈ່າຍເງິນປັນຜົນໃຫ້ແກ່ບັນດາຜູ້ຖືຮຸ້ນໃນອັດຕາສ່ວນບໍ່ຫຼຸດ 50 ສ່ວນຮ້ອຍ ຂອງກຳໄລສຸດທິພາຍຫຼັງຫັກເງິນຄັງສຳຮອງຕ່າງໆທຸກປະເພດ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງບໍລິສັດ ແລະ ຕາມທີ່ກົດໝາຍກຳນົດໄວ້ (ຖ້າມີ), ບໍລິສັດຈະບໍ່ຈ່າຍເງິນປັນຜົນເມື່ອບໍລິສັດຍັງມີຂາດທຶນຕໍ່ເນື່ອງໃນປີຜ່ານໆມາ.

ມະຕິຕົກລົງຕ່າງໆຂອງສະພາບໍລິຫານທີ່ອະນຸມັດໃຫ້ຈ່າຍເງິນປັນຜົນ ແລະ ຈຳນວນຄັ້ງໃນການຈ່າຍເງິນປັນຜົນຕໍ່ປີ ຕ້ອງຖືກນຳສະເໜີເພື່ອຂໍອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນເສຍກ່ອນ ແລະ ຕ້ອງໃຫ້ສອດຄ່ອງກັບລະບຽບຫຼັກການທີ່ກ່ຽວຂ້ອງຕ່າງໆ.

ເຖິງແນວໃດກໍ່ຕາມອັດຕາສ່ວນບໍ່ຫຼຸດ 50 ສ່ວນຮ້ອຍ ດັ່ງກ່າວອາດມີການປ່ຽນແປງຂຶ້ນຢູ່ກັບການພິຈາລະນາ ແລະ ອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນການພິຈາລະນາອາດຈະອີງໃສ່ສະພາບເສດຖະກິດ, ກະແສເງິນສົດ, ແຜນການລົງທຶນ, ເງື່ອນໄຂ ແລະ ຂໍ້ກຳນົດໃນສັນຍາຕ່າງໆທີ່ບໍລິສັດຜູກພັນຢູ່ລວມທັງຂໍ້ຈຳກັດທາງກົດໝາຍ ແລະ ຄຽງຄູ່ກັບຄວາມພຽງພໍຂອງທຶນໃນການຮອງຮັບການຂະຫຍາຍຕົວຂອງທຸລະກິດເຊື້ອໄຟໃນອະນາຄົດ.

ບໍລິສັດຈະຈ່າຍເງິນປັນຜົນເປັນສະກຸນເງິນກີບ ແລະ ຜູ້ຖືຮຸ້ນຈະໄດ້ຮັບການຍົກເວັ້ນອາກອນລາຍໄດ້ຈາກເງິນປັນຜົນ.

- **ກອງປະຊຸມຜູ້ຖືຮຸ້ນ**

1. ອີງຕາມກົດລະບຽບຂອງບໍລິສັດ ສະພາບໍລິຫານຂອງບໍລິສັດຈະຕ້ອງຮຽກໃຫ້ມີການປະຊຸມຜູ້ຖືຮຸ້ນຢ່າງໜ້ອຍປີລະ 1 ຄັ້ງ ຢ່າງຊ້າພາຍໃນເດືອນ 6 ຂອງທຸກປີ. ສະພາບໍລິຫານຂອງບໍລິສັດອາດຈະຮຽກໃຫ້ມີກອງປະຊຸມວິສາມັນຜູ້ຖືຮຸ້ນເມື່ອມີຄວາມຈຳເປັນຕ້ອງຂໍມະຕິຕົກລົງຈາກຜູ້ຖືຮຸ້ນໃນວາລະທີ່ອີງຕາມກົດລະບຽບບໍລິສັດ ຫຼື ອີງຕາມກົດໝາຍທີ່ກ່ຽວຂ້ອງ. ຫາກການຮ້ອງຂໍໃຫ້ມີກອງປະຊຸມວິສາມັນຜູ້ຖືຮຸ້ນເຊິ່ງໄດ້ມີການຍື່ນຂໍໂດຍຈຳນວນຜູ້ຖືຮຸ້ນ ຫຼື ຜູ້ອຳນວຍການຜູ້ທີ່ມີຄວາມສຳຄັນ (ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ) ຫຼື ໄດ້ຖືກຈັດຂຶ້ນຕາມຄຳສັ່ງສານ ສະພາບໍລິຫານຈະຕ້ອງຮຽກໃຫ້ມີກອງປະຊຸມວິສາມັນຜູ້ຖືຮຸ້ນ ພາຍໃນ 30 ວັນ ນັບຕັ້ງແຕ່ວັນທີ່ໄດ້ຮັບການຮ້ອງຂໍ.

ໜັງສືແຈ້ງການກອງປະຊຸມໃຫຍ່ໃດໜຶ່ງຄວນຈະສົ່ງມອບໂດຍກົງ ຫຼື ຜ່ານວິທີການອື່ນໆທີ່ເໝາະສົມໃຫ້ແກ່ຜູ້ຖືຮຸ້ນທັງໝົດຂອງບໍລິສັດຢ່າງໜ້ອຍ 5 ວັນລັດຖະການກ່ອນທີ່ຈະມີການເປີດກອງປະຊຸມ ຫຼື ອີງຕາມກົດໝາຍທີ່ກ່ຽວຂ້ອງ.

ອີງປະຊຸມສຳລັບກອງປະຊຸມຜູ້ຖືຮຸ້ນໃດໜຶ່ງຂອງບໍລິສັດຈະຕ້ອງມີຜູ້ຖືຮຸ້ນຢ່າງໜ້ອຍສອງຄົນເຂົ້າຮ່ວມ ເຊິ່ງມີຈຳນວນຮຸ້ນເກີນເຄິ່ງໜຶ່ງຂອງຮຸ້ນທີ່ຖອກແລ້ວທັງໝົດ.

- **ສິດໃນການລົງຄະແນນສຽງ**

ໂດຍທົ່ວໄປແລ້ວຜູ້ຖືຮຸ້ນມີສິດອອກສຽງຕາມຫຼັກການໜຶ່ງຮຸ້ນຕໍ່ໜຶ່ງສຽງມະຕິຂອງກອງປະຊຸມຜູ້ຖືຮຸ້ນຈະໄດ້ຮັບອະນຸມັດກໍ່ຕໍ່ເມື່ອມີສຽງສ່ວນຫຼາຍຈາກກອງປະຊຸມຜູ້ຖືຮຸ້ນ. ແຕ່ສຳລັບມະຕິສະເພາະຈະຕ້ອງໄດ້ຮັບການອະນຸມັດໂດຍການອອກສຽງຢ່າງໜ້ອຍສອງສ່ວນສາມຂອງຈຳນວນຜູ້ຖືຮຸ້ນ ຫຼື ຕົວແທນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນແລ້ວຫຼາຍກວ່າ 80 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ. ປະເດັນທີ່ພົວພັນເຖິງບໍລິສັດດັ່ງຕໍ່ໄປນີ້ ຈຳເປັນຕ້ອງມີມະຕິສະເພາະຂອງກອງປະຊຸມຜູ້ຖືຮຸ້ນ:

- ການລົງຄະແນນສຽງໃນບັນຫາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສະຫະກິດ
- ການປ່ຽນແປງກົດລະບຽບ ຫຼື ສັນຍາສ້າງຕັ້ງບໍລິສັດ
- ການເພີ່ມທຶນ ຫຼື ການຫຼຸດທຶນຂອງບໍລິສັດ
- ການຄວບ ຫຼື ຍົກເລີກບໍລິສັດ
- ການຂາຍ ຫຼື ການໂອນກິດຈະການທັງໝົດຫຼືບາງສ່ວນທີ່ມີຄວາມສຳຄັນໃຫ້ບຸກຄົນອື່ນ
- ການຊື້ ຫຼື ຮັບໂອນກິດຈະການຂອງວິສາຫະກິດອື່ນ

ອີງຕາມກົດໝາຍ ວ່າດ້ວຍວິສາຫະກິດ ຜູ້ຖືຮຸ້ນອາດຈະຖືກຫ້າມລົງຄະແນນສຽງກ່ຽວກັບບັນຫາທີ່ຕົນມີຄວາມກ່ຽວຂ້ອງ ຫຼື ອາດຈະໄດ້ຮັບກຳໄລ ຫຼື ຜົນປະ�โຫຍດໂດຍກົງ. ບັນດາສະມະຊິກທີ່ມີໜ້າເຂົ້າຮ່ວມປະຊຸມຜູ້ຖືຮຸ້ນຈະຕ້ອງກຳນົດວ່າຜູ້ຖືຮຸ້ນນັ້ນຕົກຢູ່ໃນກໍລະນີດັ່ງກ່າວນີ້ ຫຼື ບໍ່.

- **ສິດໄດ້ຮັບການສະເໜີຊື້ຮຸ້ນກ່ອນ ແລະ ການອອກຮຸ້ນສາມັນເພີ່ມເຕີມ**

ພາກທີ 1 ຂອງມະຕິຕົກລົງຂອງ ຄສພຊ ກຳນົດວ່າ ບໍລິສັດທີ່ໄດ້ຮັບການຈົດທະບຽນໃນຕະຫຼາດຫຼັກຊັບລາວ ຈະໄດ້ຮັບການຍົກເວັ້ນການປະຕິບັດພັນທະຂອງຕົນພາຍໃຕ້ກົດໝາຍວ່າດ້ວຍວິສາຫະກິດເຊິ່ງເປັນພັນທະທີ່ກ່ຽວຂ້ອງກັບສິດຂອງຜູ້ຖືຮຸ້ນທີ່ໄດ້ຮັບການສະເໜີຊື້ຮຸ້ນກ່ອນເມື່ອມີການຂາຍຮຸ້ນເພີ່ມທຶນຂອງບໍລິສັດ.

ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ບໍລິສັດຕ້ອງໄດ້ຮຽກໂຮມກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ອະນຸມັດກ່ຽວກັບການເພີ່ມທຶນຈົດທະບຽນຂອງບໍລິສັດ. ການເພີ່ມທຶນຈົດທະບຽນຂອງບໍລິສັດຕ້ອງໄດ້ຖືກຈົດທະບຽນການເພີ່ມທຶນ ກັບກະຊວງອຸດສາຫະກຳ ແລະ ການຄ້າ ພາຍໃນກຳນົດເວລາ 10 ວັນລັດຖະການ ນັບແຕ່ມື້ທີ່ໄດ້ກຳນົດໃຫ້ຊຳລະຄ່າຈອງຮຸ້ນເປັນຕົ້ນໄປ. ນອກຈາກນີ້, ພາຍຫຼັງທີ່ມີການຈົດທະບຽນເພີ່ມທຶນແລ້ວບໍລິສັດຕ້ອງແຈ້ງໃຫ້ມວນຊົນຮັບຮູ້ພາຍໃນກຳນົດເວລາ 10 ວັນລັດຖະການ ນັບແຕ່ວັນທີ່ໄດ້ຈົດທະບຽນການເພີ່ມທຶນເປັນຕົ້ນໄປ.

- **ສິດໃນການຊຳລະສະສາງ**

ໃນກໍລະນີຫາກມີການຊຳລະສະສາງບໍລິສັດຊັບສິນທີ່ຍັງເຫຼືອຈາກການຊຳລະສະສາງທີ່ໄດ້ໃຫ້ເຈົ້າໜີ້ຢ່າງຄົບຖ້ວນແລ້ວນັ້ນຈະຕ້ອງໄດ້ແບ່ງໃຫ້ກັບບັນດາຜູ້ຖືຮຸ້ນໃນສັດສ່ວນຕາມຈຳນວນຮຸ້ນທີ່ຕົນເອງຖື.

- **ບັນຊີທະບຽນຜູ້ຖືຮຸ້ນ**

ບໍລິສັດຈະບັນທຶກຊື່ ແລະນາມສະກຸນ ທີ່ຢູ່ ແລະ ສັນຊາດຂອງຜູ້ຖືຮຸ້ນ ໄວ້ໃນປຶ້ມທະບຽນຜູ້ຖືຮຸ້ນ (ເຊິ່ງຕໍ່ໄປນີ້ເອີ້ນວ່າ "ບັນຊີທະບຽນຜູ້ຖືຮຸ້ນ").

## 2.2 ຂໍ້ຫ້າມໃນການໂອນຮຸ້ນ

ນອກເໜືອຈາກໄລຍະເວລາທີ່ຈຳກັດໄວ້ນັ້ນ, ຜູ້ສ້າງຕັ້ງບໍລິສັດມະຫາຊົນທຸກຄົນແມ່ນຖືກຈຳກັດການໂອນຮຸ້ນຂອງຕົນຈຳນວນຢ່າງໜ້ອຍສິບສ່ວນຮ້ອຍຂອງທຶນຈົດທະບຽນພາຍໃນກຳນົດໄລຍະເວລາ 2 (ສອງ)ປີນັບແຕ່ວັນທີ່ບໍລິສັດມະຫາຊົນໄດ້ຂຶ້ນທະບຽນວິສາຫະກິດເປັນຕົ້ນໄປ ໂດຍອີງຕາມກົດໝາຍว่าด้วยวิสาหะกิด. ນອກຈາກນັ້ນຫາກບໍລິສັດເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ອີງຕາມລະບຽບว่าด้วยการจดทะบียนใน ตลาดหลักทรัพย์ ເລກທີ 24/ ตลาดหลักทรัพย์, ລົງວັນທີ 07 ມັງກອນ 2011 ຜູ້ຖືຮຸ້ນໃຫຍ່ ແລະ ຜູ້ມີສາຍພົວພັນກ່ຽວຂ້ອງແມ່ນຈະຖືກຈຳກັດບໍ່ໃຫ້ມີການໂອນຮຸ້ນທັງໝົດຂອງຕົນພາຍໃນກຳນົດໄລຍະເວລາ 6 ເດືອນ ນັບຈາກວັນທີຈົດທະບຽນໃນ ตลาดหลักทรัพย์ (Silent Period).

## 2.3 ການກຳນົດລາຄາສະເໜີຂາຍຮຸ້ນ

ວິທີການກຳນົດລາຄາສະເໜີຂາຍຮຸ້ນໃນຄັ້ງນີ້ ແມ່ນເປັນການກຳນົດໂດຍໃຊ້ "ວິທີລາຄາຕໍ່ກຳໄລສຸດທິຕໍ່ຮຸ້ນ (P/E Ratio)" ໂດຍລາຄາສະເໜີຂາຍຮຸ້ນໃນຄັ້ງນີ້ເທົ່າກັບ 4,000 ກີບ/ຮຸ້ນ ມາຈາກການນຳກຳໄລສຸດທິຂອງບໍລິສັດ ຈາກການຄາດການຜົນກຳໄລໃນປີ 2015 ເຊິ່ງສະທ້ອນເຖິງຜົນປະກອບການທີ່ນັກລົງທຶນຈະໄດ້ຮັບຈາກການລົງທຶນ ຫານດ້ວຍຈຳນວນຮຸ້ນສາມັນພາຍຫຼັງການສະເໜີຂາຍຄັ້ງນີ້ ຈະໄດ້ກຳໄລຕໍ່ຮຸ້ນພາຍຫຼັງການສະເໜີຂາຍ (Fully Diluted EPS) ເທົ່າກັບ 432 ກີບ/ຮຸ້ນ. ຫຼັງຈາກນັ້ນຈຶ່ງນຳມາຄູນກັບຄ່າ P/E ເທົ່າກັບ 9.26 ເທົ່າ ເຊິ່ງເປັນຄ່າ P/E ທີ່ໄດ້ຫາລືຮ່ວມກັນລະຫວ່າງບໍລິສັດ ທີ່ປຶກສາທາງການເງິນ ແລະ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ

ກໍລະນີນຳຄ່າ P/E ທີ່ກຳນົດມາປຽບທຽບກັບອັດຕາ P/E ສະເລ່ຍຂອງຜູ້ປະກອບການທຸລະກິດທີ່ຄ້າຍຄືກັບບໍລິສັດໃນປະເທດກຸ່ມ AEC ທັງໝົດ (P/E ສະເລ່ຍຂອງອຸດສາຫະກຳ) ໂດຍຈະໄດ້ອັດຕາ P/E ສະເລ່ຍຂອງອຸດສາຫະກຳເທົ່າກັບ 19.38 ເທົ່າ ສົ່ງຜົນໃຫ້ມູນຄ່າທີ່ເໝາະສົມເທົ່າກັບ 8,372 ກີບ/ຮຸ້ນ ຈຶ່ງເຮັດໃຫ້ລາຄາໃນການສະ ເ ໜີຂາຍຄັ້ງນີ້ມີສ່ວນຫຼຸດຈາກມູນຄ່າທີ່ເໝາະສົມປະມານ 52 ສ່ວນຮ້ອຍ.

## 2.4 ການອອກຈຳໜ່າຍ, ການຈອງຊື້ ແລະ ການແບ່ງປັນຮຸ້ນສາມັນເພີ່ມທຶນ

### 2.4.1 ການອອກຈຳໜ່າຍຮຸ້ນ

ຮຸ້ນສາມັນເພີ່ມທຶນຈະຖືກຈຳໜ່າຍ ແລະ ສະເໜີຂາຍໃຫ້ແກ່ມວນຊົນທັງໃນສປປ ລາວ ແລະ ນັກລົງທຶນຕ່າງປະເທດ ໂດຍຜ່ານຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ຜ່ານຕົວແທນຈຳໜ່າຍຮຸ້ນ.

- ການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນທັງໝົດ
    - ➢ ການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນຈຳນວນ 60,000,000 ຮຸ້ນ ໃນການອອກຈຳໜ່າຍໃນຄັ້ງນີ້ ຈະມີການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນໃນ ສປປ ລາວ ແລະ ນັກລົງທຶນຕ່າງປະເທດໂດຍມີລາຍລະອຽດ ດັງນີ້.
        - ○ ອອກຈຳໜ່າຍຮຸ້ນແກ່ນັກລົງທຶນພາຍໃນ ສປປ.ລາວ ຈຳນວນ 30,000,000 ຮຸ້ນ
        - ○ ອອກຈຳໜ່າຍຮຸ້ນແກ່ນັກລົງທຶນຕ່າງປະເທດ ຈຳນວນ 30,000,000 ຮຸ້ນ
    - ➢ ການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃນຄັ້ງນີ້ ຈະບໍ່ມີການກຳນົດນະໂຍບາຍພິເສດທາງດ້ານຈຳນວນຮຸ້ນ ແລະ ລາຄາທີ່ອອກຈຳໜ່າຍສຳລັບພະນັກງານຂອງບໍລິສັດ.
    - ➢ ການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນທັງໝົດໄດ້ຂຶ້ນທະບຽນເປັນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດກັບ ສຄຄຊ ແລ້ວ.

- ການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນ

ຮຸ້ນສາມັນເພີ່ມທຶນທີ່ໄດ້ອອກຈຳໜ່າຍໃຫ້ແກ່ມວນຊົນເປັນຄັ້ງທຳອິດໃນ ສປປ ລາວ ແລະ ນັກລົງທຶນຈາກຕ່າງປະເທດນັ້ນຈະຖືກຈຳໜ່າຍໂດຍຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນແລະ ຜ່ານຕົວແທນຈຳໜ່າຍຮຸ້ນໂດຍອີງຕາມບັນດາກົດໝາຍທີ່ມີຜົນບັງຄັບໃຊ້ໃນບັນດາປະເທດທີ່ມີການອອກຈຳໜ່າຍຮຸ້ນດັ່ງກ່າວໄດ້ເກີດຂຶ້ນ.

- ຂໍ້ມູນລາຍລະອຽດຂອງຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ຕົວແທນຈຳໜ່າຍຮຸ້ນ

1.) ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ
ບໍລິສັດ ຫຼັກຊັບ ລ້ານຊ້າງ ມະຫາຊົນ
ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 5
ຖະໜົນ: ກຳແພງເມືອງ, ບ້ານ: ໂພນທັນເໜືອ
ເມືອງ: ໄຊເສດຖາ, ນະຄອນຫຼວງວຽງຈັນ
ໂທ: (+856-21) 265 461-4
ແຟັກ: (+856-21) 265 465-6

2.) ຕົວແທນຈຳໜ່າຍຮຸ້ນ

- ໃນເຂດນະຄອນຫຼວງມີທັງໝົດ 3 ຕົວແທນ ດັ່ງນີ້:
  1. ບໍລິສັດ ຫລັກຊັບ ລ້ານຊ້າງ ມະຫາຊົນ
     ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 5
     ບ້ານ ໂພນທັນເໜືອ, ເມືອງສີສັດຕະນາກ, ນະຄອນຫລວງວຽງຈັນ.
     ເບີໂທລະສັບ : (+856-21) 265461-4
     ເບີໂທລະສານ : (+856-21) 265465-6
  2. ທະນາຄານ ພັດທະນາລາວ ສຳນັກງານໃຫຍ່
     ບ້ານ ສີຫອມ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ.
     ເບີໂທລະສັບ : (+856-21) 213300
     ເບີໂທລະສານ : (+856-21) 241275
  3. ທະນາຄານ ພັດທະນາລາວ ສາຂາ ນະຄອນຫຼວງ
     ບ້ານ ມີໄຊ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ.
     ເບີໂທລະສັບ : (+856-21) 213400
     ເບີໂທລະສານ : (+856-21) 213404
- ນອກເຂດນະຄອນຫຼວງມີທັງໝົດ 17 ຕົວແທນ ດັ່ງນີ້:
  1. ທະນາຄານ ພັດທະນາລາວ ສາຂາ ຫຼວງພະບາງ
     ບ້ານ ວິຊຸນ, ເມືອງ ຫຼວງພະບາງ, ແຂວງ ຫຼວງພະບາງ
     ເບີໂທລະສັບ : (+856-71) 212411
     ເບີໂທລະສານ : (+856-71) 212185

2. ທະນາຄານ ພັດທະນາລາວ ສາຂາ ໄຊຍະບູລີ
ບ້ານ ສີເມືອງ, ແຂວງ ໄຊຍະບູລີ
ເບີໂທລະສັບ : (+856-74) 211153
ເບີໂທລະສານ : (+856-74) 211365
3. ທະນາຄານ ພັດທະນາລາວ ສາຂາ ອຸດົມໄຊ
ບ້ານ ພູຂຽວ, ເມືອງ ໄຊ, ແຂວງ ອຸດົມໄຊ
ເບີໂທລະສັບ : (+856-81) 312059
ເບີໂທລະສານ : (+856-81) 312222
4. ທະນາຄານ ພັດທະນາລາວ ສາຂາ ຫຼວງນ້ຳທາ
ບ້ານ ໂພນໄຊ, ແຂວງ ຫຼວງນ້ຳທາ
ເບີໂທລະສັບ : (+856-86) 211398
ເບີໂທລະສານ : (+856-86) 312073
5. ທະນາຄານ ພັດທະນາລາວ ສາຂາ ຫວ້ຍຊາຍ
ບ້ານ ຂອນແກ້ວ, ເມືອງ ຫວ້ຍຊາຍ, ແຂວງ ບໍ່ແກ້ວ
ເບີໂທລະສັບ : (+856-84) 211492
ເບີໂທລະສານ : (+856-84) 211024
6. ທະນາຄານ ພັດທະນາລາວ ສາຂາ ຜົ້ງສາລີ
ບ້ານ ຜົ້ງສາລີ ເມືອງ ຜົ້ງສາລີ, ແຂວງ ຜົ້ງສາລີ
ເບີໂທລະສັບ : (+856-88) 210076
ເບີໂທລະສານ : (+856-88) 210015
7. ທະນາຄານ ພັດທະນາລາວ ສາຂາ ຊຳເໜືອ
ບ້ານ ພັນໄຊ, ເມືອງ ຊຳເໜືອ, ແຂວງ ຫົວພັນ
ເບີໂທລະສັບ : (+856-64) 312464
ເບີໂທລະສານ : (+856-64) 312824
8. ທະນາຄານ ພັດທະນາລາວ ສາຂາ ຊຽງຂວາງ
ບ້ານ ໂພນສະຫວ່າງ, ເມືອງ ແປກ, ແຂວງ ຊຽງຂວາງ
ເບີໂທລະສັບ : (+856-61) 213278
ເບີໂທລະສານ : (+856-61) 213301
9. ທະນາຄານ ພັດທະນາລາວ ສາຂາ ຄຳມວ່ນ
ບ້ານ ໂພນສະໜາມ, ເມືອງ ທ່າແຂກ, ແຂວງ ຄຳມວ່ນ
ເບີໂທລະສັບ : (+856-51) 212253
ເບີໂທລະສານ : (+856-51) 212073
10. ທະນາຄານ ພັດທະນາລາວ ສາຂາ ປາກຊັນ
ບ້ານ ໂພໄຊ, ເມືອງ ປາກຊັນ, ແຂວງ ບໍລິຄາໄຊ
ເບີໂທລະສັບ : (+856-54) 212025

ເບີໂທລະສານ : (+856-54) 212823

11. ທະນາຄານ ພັດທະນາລາວ ສາຂາ ໂພນໂຮງ
ບ້ານ ໂພນສີ, ເມືອງ ໂພນໂຮງ, ແຂວງ ວຽງຈັນ
ເບີໂທລະສັບ : (+856-23) 211018
ເບີໂທລະສານ : (+856-23) 212070

12. ທະນາຄານ ພັດທະນາລາວ ສາຂາ ສະຫວັນນະເຂດ
ບ້ານ ສຸນັນທາ, ເມືອງ ໄກສອນພົມວິຫານ, ແຂວງ ສະຫວັນນະເຂດ
ເບີໂທລະສັບ : (+856-41) 212226
ເບີໂທລະສານ : (+856-41) 212856

13. ທະນາຄານ ພັດທະນາລາວ ສາຂາ ປາກເຊ
ບ້ານ ທ່າຫລວງ, ເມືອງ ປາກເຊ, ແຂວງ ຈຳປາສັກ
ເບີໂທລະສັບ : (+856-31) 212168
ເບີໂທລະສານ : (+856-31) 213327

14. ທະນາຄານ ພັດທະນາລາວ ສາຂາ ສາລະວັນ
ບ້ານ ນາກົກໂພ, ເມືອງ ສາລະວັນ, ແຂວງ ສາລະວັນ
ເບີໂທລະສັບ : (+856-34) 211388
ເບີໂທລະສານ : (+856-34) 211301

15. ທະນາຄານ ພັດທະນາລາວ ສາຂາ ເຊກອງ
ບ້ານ ວັດຫລວງ, ເມືອງ ລະມານ, ແຂວງ ເຊກອງ
ເບີໂທລະສັບ : (+856-38) 211075
ເບີໂທລະສານ : (+856-38) 211022

16. ທະນາຄານ ພັດທະນາລາວ ສາຂາ ອັດຕະປື
ບ້ານ ວັດຫລວງ, ເມືອງ ສາມັກຄີໄຊ, ແຂວງ ອັດຕະປື
ເບີໂທລະສັບ : (+856-36) 211185
ເບີໂທລະສານ : (+856-36) 211857

17. ທະນາຄານ ພັດທະນາລາວ ສາຂາ ຫລັກຊາວ
ບ້ານ ຫລັກຊາວ, ເມືອງ ຄຳເກີດ, ແຂວງ ບໍລິຄຳໄຊ
ເບີໂທລະສັບ : (+856-54) 341513
ເບີໂທລະສານ : (+856-54) 700405

ເຖິງແນວໃດກໍ່ຕາມ, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນອາດຈະພິຈາລະນາປ່ຽນແປງ ຫຼື ເພີ່ມເຕີມຕົວແທນຈຳໜ່າຍຮຸ້ນຕາມເງື່ອນໄຂ ແລະ ຄວາມເໝາະສົມ.

- ເງື່ອນໄຂການຄ້ຳປະກັນການອອກຈຳໜ່າຍຮຸ້ນ

ບໍລິສັດ ໄດ້ແຕ່ງຕັ້ງຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນໃຫ້ດຳເນີນການຈອງຊື້ຮຸ້ນ ແລະ ການຊຳລະຄ່າຮຸ້ນທັງໝົດຈຳນວນ 60,000,000 ຮຸ້ນ ບົນພື້ນຖານການຄ້ຳປະກັນການອອກຈຳໜ່າຍຮຸ້ນຂອງບໍລິສັດຈະຕ້ອງປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂຂອງສັນຍາຄ້ຳປະກັນການອອກຈຳໜ່າຍຮຸ້ນ.

- ການຄາດຄະເນຄ່າໃຊ້ຈ່າຍໃນການອອກຈຳໜ່າຍຮຸ້ນ

ບໍລິສັດຈະຈ່າຍຄ່ານາຍໜ້າໃຫ້ແກ່ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ, ຕົວແທນຈຳໜ່າຍຮຸ້ນຈະໄດ້ສ່ວນແບ່ງຄ່ານາຍໜ້າໃນການຄ້ຳປະກັນການອອກຈຳໜ່າຍຮຸ້ນຈາກຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຄ່າໃຊ້ຈ່າຍລວມກັນທັງໝົດຂອງການອອກຈຳໜ່າຍຮຸ້ນ ຍົກເວັ້ນຄ່ານາຍໜ້າໃນການຄ້ຳປະກັນການອອກຈຳໜ່າຍຮຸ້ນຂອງຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນຈະຕ້ອງໄດ້ຊຳລະເປັນສ່ວນໃຫຍ່ໂດຍບໍລິສັດ ແລະ ຖືກຄາດຄະເນໄວ້ປະມານ 8.4 ຕື້ກີບ (ແປດຈຸດສີ່ ຕື້ກີບ).

- ຂັ້ນຕອນການຮັບເອົາໜັງສືຊວນຊື້ ແລະ ໃບຈອງຊື້ຮຸ້ນ

ນັກລົງທຶນສາມາດຂໍເອົາໜັງສືຊວນຊື້ ແລະ ໃບຈອງຊື້ຮຸ້ນໄດ້ທີ່ຫ້ອງການ ບໍລິສັດ ຫຼັກຊັບ ລ້ານຊ້າງ ມະຫາຊົນ ຊັ້ນ 5 ຂອງອາຄານຕະຫຼາດຫຼັກຊັບລາວ, ຖະໜົນ ກຳແພງເມືອງ, ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ ແລະ ສາມາດຂໍເອົາໃບຈອງຊື້ຮຸ້ນຈາກແຕ່ລະສາຂາຂອງຕົວແທນຈຳໜ່າຍຮຸ້ນໃນລະຫວ່າງ 8:30 ໂມງ ຕອນເຊົ້າ ເຖິງ 3:30 ໂມງ ຕອນແລງ ໃນລະຫວ່າງວັນທີ 1, 3 ແລະ 4 ທັນວາ 2014 ເຊິ່ງຕໍ່ໄປນີ້ເອີ້ນວ່າ: ໄລຍະເວລາການອອກຈຳໜ່າຍຮຸ້ນ.

2.4.2 ວິທີການຈອງຊື້ຮຸ້ນ

ຜູ້ຈອງຊື້ຮຸ້ນສາມາດຂໍຮັບເອົາໃບຈອງຊື້ຮຸ້ນໄດ້ຈາກຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ຕົວແທນຈຳໜ່າຍຮຸ້ນພາຍໃນໄລຍະເວລາການສະເໜີຂາຍຮຸ້ນທີ່ກຳນົດໄວ້ໃນພາກນີ້. ຜູ້ຈອງຊື້ຮຸ້ນຕ້ອງໄດ້ປະກອບຂໍ້ມູນໃນໃບຈອງຊື້ຮຸ້ນຢ່າງຄົບຖ້ວນ ແລະ ຈະແຈ້ງພ້ອມທັງໃຫ້ຜູ້ມີອຳນາດຂອງຕົນລົງລາຍເຊັນຢັ້ງຢືນໄປພ້ອມໆກັບການຈ້ຳກາປະທັບ (ຖ້າມີ) ແລະ ຕ້ອງຊຳລະຄ່າຈອງຊື້ຮຸ້ນຕາມຂັ້ນຕອນທີ່ກຳນົດໄວ້ໃນພາກນີ້ພາຍໃນໄລຍະເວລາການອອກຈຳໜ່າຍຮຸ້ນ.

ໃນການອອກຈຳໜ່າຍຮຸ້ນທັງໝົດ ການຈອງຊື້ຮຸ້ນຕ້ອງມີຈຳນວນຢ່າງໜ້ອຍ 100 ຮຸ້ນຂຶ້ນໄປ ແລະ ໃນທະວີຄູນຄັ້ງລະ 100 ຮຸ້ນ.

ຜູ້ຈອງຊື້ຮຸ້ນຕ້ອງປະກອບຂໍ້ມູນໃຫ້ຄົບຖ້ວນ ແລະ ຈະແຈ້ງຕາມໃບຈອງຊື້ຮຸ້ນພ້ອມທັງຍື່ນເອກະສານທັງໝົດຕາມທີ່ຮຽກຮ້ອງໂດຍຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຫຼື ຕົວແທນຈຳໜ່າຍຮຸ້ນ(ແລ້ວແຕ່ກໍລະນີ) ພ້ອມທັງຊຳລະຄ່າຈອງຊື້ຮຸ້ນທັງໝົດໃຫ້ຄົບຖ້ວນຕາມລາຄາທີ່ຈອງຊື້ໃຫ້ກັບຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຫຼື ຕົວແທນຈຳໜ່າຍຮຸ້ນ ໂດຍຜູ້ຈອງຊື້ຕ້ອງຊຳລະຄ່າຈອງຊື້ຮຸ້ນຄັ້ງດຽວເຕັມຈຳນວນທີ່ຈອງຊື້ພາຍໃນໄລຍະເວລາການອອກຈຳໜ່າຍຮຸ້ນໂດຍຊຳລະເປັນເງິນໂອນເຂົ້າບັນຊີທີ່ກຳນົດໄວ້ໃນໃບຈອງຮຸ້ນໃຫ້ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນສາມາດຮຽກເກັບເງິນໄດ້ພາຍໃນບໍ່ກາຍມື້ສຸດທ້າຍຂອງການຈອງຊື້ຮຸ້ນ.

ໃຫ້ນຳເອົາ (1). ໃບຈອງຊື້ຮຸ້ນ, (2). ເອກະສານຢັ້ງຢືນຕົວຕົນ, (3) ເອກະສານຢັ້ງຢືນການໂອນເງິນເປັນຈຳນວນເທົ່າກັບ ຫຼື ຫຼາຍກວ່າມູນຄ່າໃນການຈອງຊື້ຮຸ້ນເຂົ້າໃນບັນຊີຫຼັກຊັບຂອງທ່ານ (ຂັ້ນຕອນດຽວກັນກັບການຊື້-ຂາຍຫຼັກຊັບທົ່ວໄປ). ຫຼັງຈາກນັ້ນສົ່ງມອບເອກະສານດັ່ງກ່າວໃຫ້ແກ່ບໍລິສັດ ຫຼັກຊັບ ລ້ານຊ້າງ ມະຫາຊົນ ທີ່ອາຄານ

ຕະຫຼາດຫຼັກຊັບລາວຊັ້ນ 5 ຖະໜົນກຳແພງເມືອງ, ບ້ານໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ ຫຼື ຕົວແທນຈຳໜ່າຍຮຸ້ນພາຍໃນວັນທີ ແລະ ເວລາ ທີ່ລະບຸໄວ້ໃນໃບຈອງຊື້ຮຸ້ນ.

**ເອກະສານຢັ້ງຢືນຕົວຕົນທີ່ຕ້ອງການ:**

(1): ນັກລົງທຶນລາວ: ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ

(2): ນັກລົງທຶນຕ່າງປະເທດ: ໜັງສືຜ່ານແດນ (Passport)

(3): ໃບມອບສິດຈາກຜູ້ຈອງຊື້: ກໍລະນີທີ່ໃຫ້ບຸກຄົນທີ່ສາມມາຈອງຊື້ຮຸ້ນແທນ

(4): ນັກລົງທຶນທີ່ເປັນບໍລິສັດ ຫຼື ສະຖາບັນ: ສຳເນົາບັດປະຈຳຕົວ ຫຼື ໜັງສືຜ່ານແດນ (Passport) ຂອງ ບຸກຄົນທີ່ໄດ້ຮັບມອບສິດ

ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ຕົວແທນຈຳໜ່າຍຮຸ້ນທີ່ຮັບເອົາການຈອງຊື້ຮຸ້ນຈະຕ້ອງອອກໃບຢັ້ງຢືນ ທີ່ເປັນຫຼັກຖານກ່ຽວກັບການຈອງຊື້ຮຸ້ນໃຫ້ຜູ້ຈອງຊື້ຮຸ້ນ. ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນແລະ ຕົວແທນຈຳໜ່າຍຮຸ້ນ ຈະຕ້ອງແຈ້ງກ່ຽວກັບຈຳນວນຮຸ້ນທີ່ໄດ້ຮັບການແບ່ງປັນ, ຂັ້ນຕອນ ແລະ ກຳນົດເວລາຂອງການຊຳລະເງິນ.

## ການຮັບຊຳລະ ແລະ ການຮັກສາຄ່າຈອງຊື້ຮຸ້ນ

ຜູ້ຈອງຊື້ຮຸ້ນແຕ່ລະຄົນຕ້ອງຊຳລະການຈອງຊື້ຮຸ້ນໃຫ້ຄົບຖ້ວນໃຫ້ກັບຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຫຼື ຕົວແທນຈຳໜ່າຍຮຸ້ນໂດຍຊຳລະຜ່ານບັນຊີຫຼັກຊັບຂອງຜູ້ຈອງຊື້ຮຸ້ນທີ່ເປີດໄວ້ກັບ ບໍລິສັດ ຫຼັກຊັບ ລ້ານຊ້າງ ມະຫາຊົນ . ຈາກນັ້ນ, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຫຼື ຕົວແທນຈຳໜ່າຍຮຸ້ນຈະຫັກການຊຳລະການຈອງຊື້ຮຸ້ນອອກຈາກ ບັນຊີຫຼັກຊັບຂອງຜູ້ຈອງຊື້ຮຸ້ນ. ຜູ້ຈອງຊື້ຮຸ້ນສາມາດຊຳລະການຈອງຊື້ຮຸ້ນຢູ່ທະນາຄານ ພັດທະນາລາວ ສຳນັກງານໃຫຍ່ ແລະ 18 ສາຂາທົ່ວປະເທດ.

ຜູ້ຈອງຊື້ຮຸ້ນ ຈະເປັນຜູ້ຮັບຜິດຊອບຈ່າຍຄ່າທຳນຽມຂອງທະນາຄານ ຫຼື ຄ່າໃຊ້ຈ່າຍຕ່າງໆ ທີ່ພົວພັນເຖິງອັດຕາ ແລກປ່ຽນເງິນຕາຕ່າງປະເທດໂດຍຊຳລະແຍກອອກຕ່າງຫາກຈາກການຊຳລະການຈອງຊື້ຮຸ້ນ ແລະ ຈະສົ່ງຫຼັກຖານການ ຊຳລະດັ່ງກ່າວໃຫ້ແກ່ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຫຼື ຕົວແທນຈຳໜ່າຍຮຸ້ນໃນມື້ທີ່ມີການຢັ້ງຢືນການຈອງຮຸ້ນຜູ້ ຈອງຊື້ຮຸ້ນທີ່ໄດ້ຊຳລະການຈອງຊື້ຮຸ້ນແລ້ວບໍ່ສາມາດຍົກເລີກການຈອງຊື້ຮຸ້ນ ແລະ ຮຽກຮ້ອງເອົາເງິນຊຳລະການຈອງຊື້ ຮຸ້ນຄືນ.

## ການຈອງຊື້ຮຸ້ນເກີນຈຳນວນຮຸ້ນທີ່ອອກຈຳໜ່າຍ

ໃນກໍລະນີທີ່ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ຕົວແທນຈຳໜ່າຍຮຸ້ນຫາກໄດ້ຮັບການຈອງຊື້ຮຸ້ນທີ່ ຖືກຕ້ອງຕາມຂັ້ນຕອນຫຼາຍກວ່າຈຳນວນຮຸ້ນທີ່ບໍລິສັດຕົກລົງເຫັນດີອອກຈຳໜ່າຍ, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ບໍລິສັດສາມາດພິຈາລະນາຕັດສິນໃຈແບ່ງປັນຮຸ້ນໃຫ້ນັກລົງທຶນໃດໜຶ່ງ ຫຼື ທັງໝົດຕາມລະບຽບກົດໝາຍ.

## ການສົ່ງເງິນມັດຈຳຄືນໃນກໍລະນີທີ່ບໍ່ໄດ້ຮັບການແບ່ງປັນຮຸ້ນ

ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ຕົວແທນຈຳໜ່າຍຮຸ້ນຈະຕ້ອງແຈ້ງຜົນຂອງການແບ່ງປັນຮຸ້ນໃຫ້ຜູ້ ຈອງຊື້ຮຸ້ນທີ່ບໍ່ໄດ້ຮັບການແບ່ງປັນຮຸ້ນຕາມຈຳນວນທີ່ຈອງຊື້ທັງໝົດ ຫຼື ບາງສ່ວນຮັບຮູ້. ຜູ້ຄ້ຳປະກັນການອອກຈຳໜ່າຍ ຮຸ້ນ ຫຼື ຕົວແທນຈຳໜ່າຍຮຸ້ນຈະຕ້ອງສົ່ງຄ່າຈອງຊື້ຮຸ້ນຄືນໃຫ້ຜູ້ຈອງຊື້ຮຸ້ນທີ່ບໍ່ໄດ້ຮັບການແບ່ງປັນຮຸ້ນໃຫ້ຄົບຖ້ວນຕາມ ຈຳນວນທີ່ໄດ້ຊຳລະການຈ້ອງຊື້ຮຸ້ນທີ່ຜູ້ກ່ຽວໄດ້ຈອງຊື້ຮຸ້ນຕາມວິທີການຕ່າງໆດ້ວຍການໂອນເງິນຜ່ານລະບົບທະນາຄານ

ຫຼື ການອອກແຊັກໃຫ້ແກ່ຜູ້ຈອງຊື້ຮຸ້ນພາຍໃນ 2 (ສອງ) ວັນລັດຖະການນັບແຕ່ໄລຍະການແບ່ງປັນຮຸ້ນໄດ້ສິ້ນສຸດລົງ. ການສົ່ງເງິນຄືນດັ່ງກ່າວຈະຕ້ອງສົ່ງຄືນຕາມສັດສ່ວນຂອງລາຄາຈອງຊື້ຮຸ້ນຂອງຮຸ້ນທີ່ບໍ່ໄດ້ຮັບການແບ່ງປັນ. ການສົ່ງເງິນຄ່າຮຸ້ນດັ່ງກ່າວຈະບໍ່ໄດ້ຄິດໄລ່ອັດຕາດອກເບ້ຍ ຫຼື ການທົດແທນຄວາມເສຍຫາຍໃດໜຶ່ງໃຫ້. ຖ້າຫາກວ່າການສົ່ງຄືນນັ້ນບໍ່ໄດ້ປະຕິບັດຕາມຂັ້ນຕອນທີ່ບໍ່ໄດ້ກຳນົດໄວ້ໃນໜັງສືຊວນຊື້ສະບັບນີ້ ຫຼື ຜູ້ຄ້ຳປະກັນການຈຳໜ່າຍຮຸ້ນ ຫຼື ຕົວແທນຈຳໜ່າຍຮຸ້ນບໍ່ສາມາດປະຕິບັດຕາມທີ່ໄດ້ກຳນົດໄວ້. ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນແລະ ຕົວແທນຈຳໜ່າຍຮຸ້ນຈະຕ້ອງຮັບຜິດຊອບຈ່າຍດອກເບ້ຍຜິດນັດໃນອັດຕາ 3.00 (ສາມ)ສ່ວນຮ້ອຍຕໍ່ປີ ໃຫ້ແກ່ຜູ້ຈອງຊື້ຮຸ້ນທີ່ກ່ຽວຂ້ອງຈົນກວ່າຜູ້ກ່ຽວຈະໄດ້ຮັບເງິນຄ່າຈອງຊື້ຮຸ້ນຄືນຢ່າງຄົບຖ້ວນ.

### 2.4.3 ການແບ່ງປັນຮຸ້ນ

ການແບ່ງປັນຮຸ້ນໃຫ້ແກ່ນັກລົງທຶນແມ່ນຈະດຳເນີນການໃຫ້ພາຍຫຼັງສິ້ນສຸດໄລຍະເວລາຂອງການອອກຈຳໜ່າຍຮຸ້ນເຊິ່ງຄາດວ່າຈະສຳເລັດພາຍໃນ 7 ວັນລັດຖະການຫຼັງຈາກສິ້ນສຸດໄລຍະເວລາຂອງການອອກຈຳໜ່າຍ.

ຮຸ້ນທີ່ອອກຈຳໜ່າຍຄວນຈະຖືກແບ່ງປັນໂດຍຄຳນຶງເຖິງຜົນປະໂຫຍດສູງສຸດຂອງບໍລິສັດ. ເຖິງຢ່າງໃດກໍ່ຕາມ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຫຼື ຕົວແທນຈຳໜ່າຍຮຸ້ນຂໍສະຫງວນສິດໃນການປະຕິເສດການຈອງຊື້ຮຸ້ນ ແລະ ການຈັດສັນຮຸ້ນທີ່ອອກຈຳໜ່າຍຕາມໃບຈອງຊື້ຮຸ້ນ. ໃນກໍລະນີທີ່ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຫຼື ຕົວແທນຈຳໜ່າຍຮຸ້ນ (ແລ້ວແຕ່ກໍລະນີ) ພິຈາລະນາເຫັນວ່າການຈອງຊື້ຮຸ້ນດັ່ງກ່າວເກີດບັນຫາ, ອຸປະສັກ ຫຼື ຂໍ້ຈຳກັດໃນການດຳເນີນການເພື່ອອຳນວຍຄວາມສະດວກໃຫ້ແກ່ນັກລົງທຶນ ແລະ ເພື່ອໃຫ້ການອອກຈຳໜ່າຍຮຸ້ນໃນຄັ້ງນີ້ປະສົບຜົນສຳເລັດສູງສຸດ.

## 2.5 ການສົ່ງມອບຮຸ້ນ

ນາຍທະບຽນຮຸ້ນຈະຮັບຝາກຮຸ້ນໃນບັນຊີຫຼັກຊັບຂອງຜູ້ຈອງຊື້ຮຸ້ນ, ການຝາກຮຸ້ນນີ້ຈະດຳເນີນການໂດຍຜ່ານນາຍໜ້າທີ່ໄດ້ຮັບການຈົດທະບຽນ ເຊິ່ງເປັນຜູ້ທີ່ໄດ້ເປີດບັນຊີໃນນາມຕ່າງໜ້າໃຫ້ລູກຄ້າທີ່ຜູ້ຈອງຊື້ຮຸ້ນໄດ້ແຈ້ງກ່ຽວກັບຮູບການຂອງການຈອງຊື້ຮຸ້ນ. ຈາກນັ້ນຮຸ້ນຈະຖືກຈົດທະບຽນ ແລະ ຝາກໄວ້ກັບສູນຮັບຝາກຫຼັກຊັບ.

## 2.6 ແຜນສຳລັບການຈຳໜ່າຍຮຸ້ນ ແລະ ການນຳໃຊ້ເງິນຊຳລະຄ່າຮຸ້ນ

ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນໄດ້ເຮັດສັນຍາຄ້ຳປະກັນການອອກຈຳໜ່າຍຮຸ້ນທີ່ບໍລິສັດໄດ້ຕົກລົງເຫັນດີ ຈັດຫາໃຫ້ຜູ້ຈອງຊື້ຮຸ້ນເພື່ອລົງທະບຽນ ແລະ ຊື້ຮຸ້ນຈຳນວນ 60,000,000 ຮຸ້ນ ໂດຍຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນຈະຄ້ຳປະກັນການອອກຈຳໜ່າຍຮຸ້ນທີ່ສະເໜີຂາຍຕາມຂໍ້ກຳນົດ ແລະ ເງື່ອນໄຂຂອງສັນຍາຄ້ຳປະກັນການອອກຈຳໜ່າຍຮຸ້ນ.

ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນຈະຮ່ວມມືກັບຕົວແທນຈຳໜ່າຍຮຸ້ນເພື່ອຈະອອກຈຳໜ່າຍຮຸ້ນໃຫ້ນັກລົງທຶນທົ່ວໄປຢູ່ ສປປ ລາວ ແລະ ນັກລົງທຶນຕ່າງປະເທດ (ນັກລົງທຶນຢູ່ນອກ ສປປ ລາວ) ຕາມກົດໝາຍຂອງປະເທດດັ່ງກ່າວທີ່ໄດ້ມີການສະເໜີອອກຈຳໜ່າຍຮຸ້ນເຊິ່ງຈະຕ້ອງບໍ່ຖືກຮຽກຮ້ອງໃຫ້ຍື່ນເອກະສານໃດໜຶ່ງຕື່ມອີກ.

ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ຕົວແທນຈຳໜ່າຍຮຸ້ນວາງແຜນຈະສະເໜີການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນຈຳນວນ 60,000,000 ຮຸ້ນ ໃຫ້ແກ່ມວນຊົນທີ່ຢູ່ ສປປ ລາວ ແລະ ນັກລົງທຶນຕ່າງປະເທດໂດຍມີລາຍລະອຽດ ດັງນີ້.

- ອອກຈຳໜ່າຍຮຸ້ນແກ່ນັກລົງທຶນພາຍໃນ ສປປ.ລາວ ຈຳນວນ 30,000,000 ຮຸ້ນ
- ອອກຈຳໜ່າຍຮຸ້ນແກ່ນັກລົງທຶນຕ່າງປະເທດຈຳນວນ 30,000,000 ຮຸ້ນ

ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນເປັນຜູ້ຈຳໜ່າຍຮຸ້ນສາມັນເພີ່ມທຶນທີ່ອອກຈຳໜ່າຍໃຫ້ຕະຫຼາດຫຼັກຊັບລາວ ຂຶ້ນກັບເງື່ອນໄຂການອະນຸມັດທາງດ້ານກົດໝາຍຂອງທີ່ປຶກສາທາງດ້ານກົດໝາຍຂອງຕົນ ລວມທັງການຢັ້ງຢືນຄວາມຖືກຕ້ອງຂອງຮຸ້ນ ແລະ ເງື່ອນໄຂອື່ນໆທີ່ກຳນົດໄວ້ໃນສັນຍາຄ້ຳປະກັນການອອກຈຳໜ່າຍຮຸ້ນເຊັ່ນ ການຢັ້ງຢືນການຮັບເອກະສານຂອງພະນັກງານຂອງຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ເຊິ່ງຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນຂໍສະຫງວນສິດໃນການຖອນ, ຍົກເລີກ ຫຼື ປ່ຽນແປງການສະເໜີການອອກຈຳໜ່າຍຮຸ້ນຂອງຕົນ ແລະ ການປະຕິເສດການຈອງຊື້ຮຸ້ນທັງໝົດ ຫຼື ບາງສ່ວນຕາມຂອບເຂດທີ່ຕົນສາມາດເຮັດໄດ້ພາຍໃຕ້ກົດໝາຍວ່າດ້ວຍຫຼັກຊັບ ແລະ ກົດໝາຍອື່ນໆຂອງ ສປປ ລາວ.

ບໍລິສັດຕົກລົງເຫັນດີຈະໃຊ້ແທນຄ່າເສຍຫາຍຢ່າງຄົບຖ້ວນໃຫ້ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນຕໍ່ກັບໜີ້ສິນໃດໜຶ່ງ ລວມທັງໜີ້ສິນທີ່ເກີດຂຶ້ນພາຍໃຕ້ກົດໝາຍຂອງ ສປປ ລາວ ແລະກົດໝາຍອື່ນໆທີ່ກ່ຽວຂ້ອງກັບການຊື້-ຂາຍຮຸ້ນ ແລະ ຊ່ວຍເຫຼືອຕໍ່ກັບການຊຳລະເງິນຕ່າງໆທີ່ຜູ້ຄ້ຳປະກັນອາດຈະຕ້ອງນຳໄປໃຊ້ໜີ້ດັ່ງກ່າວນັ້ນ.

- **ທາງເລືອກໃນການແບ່ງຮຸ້ນເພີ່ມ**

  ການອອກຈຳໜ່າຍຮຸ້ນໃນຄັ້ງນີ້ ຈະບໍ່ມີທາງເລືອກໃນການແບ່ງປັນຮຸ້ນເພີ່ມ

- **ຮຸ້ນຈະບໍ່ໄດ້ຮັບການຂຶ້ນທະບຽນໃນຕ່າງປະເທດ ຍົກເວັ້ນ ສປປ ລາວ**

ການອອກຈຳໜ່າຍຮຸ້ນຈະຕ້ອງໄດ້ປະຕິບັດຕາມລະບຽບຂອງ ສຄຄຊ ທີ່ມີຜົນບັງຄັບໃຊ້ ແລະ ໜັງສືຊວນຊື້ສະບັບພາສາລາວຖືກກະກຽມໂດຍສະເພາະສຳລັບການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດໃນ ສປປ ລາວ. ດ້ວຍເຫດນັ້ນ ຮຸ້ນຈະບໍ່ໄດ້ຮັບການຂຶ້ນທະບຽນພາຍໃຕ້ກົດໝາຍຫຼັກຊັບຂອງຕ່າງປະເທດຍົກເວັ້ນ ສປປ ລາວ ແລະ ຈະບໍ່ມີການນຳສະເໜີໃດໆທີ່ເປັນການບອກວ່າຮູບແບບ ແລະ ເນື້ອໃນຂອງໜັງສືຊວນຊື້ສະບັບພາສາລາວ ແລະ ພາສາອັງກິດເໝາະສົມ ຫຼື ພຽງພໍສຳລັບການອອກຈຳໜ່າຍຮຸ້ນໃນຕ່າງປະເທດ.

- **ການອອກຈຳໜ່າຍຮຸ້ນໃນລາວ**

ການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃນຄັ້ງນີ້ ແມ່ນການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນຂອງບໍລິສັດໃຫ້ແກ່ມວນຊົນເປັນຄັ້ງທຳອິດ ແລະ ຖ້າຫາກຕະຫຼາດຫຼັກຊັບລາວອະນຸມັດຄຳຮ້ອງຂໍຈົດທະບຽນຄັ້ງທຳອິດຂອງບໍລິສັດ, ຮຸ້ນຂອງບໍລິສັດຈະໄດ້ຈົດທະບຽນໃນຕະຫຼາດຫຼັກຊັບລາວ. ຕະຫຼາດຫຼັກຊັບລາວແມ່ນຕະຫຼາດຂັ້ນສອງທີ່ຖືກສ້າງຕັ້ງຂຶ້ນໃນເດືອນ ຕຸລາ 2010. ບໍລິສັດຄາດຫວັງວ່າ ຮຸ້ນຂອງຕົນຈະໄດ້ຮັບການຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ຈະເລີ່ມຕົ້ນການຊື້-ຂາຍພາຍໃນ ຫຼື ປະມານວັນທີ 9 ທັນວາ 2014.

## 2.7 ເປົ້າໝາຍການນຳໃຊ້ເງິນທີ່ໄດ້ຈາກການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນ

ເງິນທີ່ໄດ້ຮັບຈາກການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນທັງໝົດບໍ່ຫຼຸດ 120 ຕື້ກີບ (ໜຶ່ງຮ້ອຍຊາວ ຕື້ກີບ) ຈະໄດ້ນຳເອົາໄປໃຊ້ຕາມຈຸດປະສົງທີ່ໄດ້ກ່າວໄວ້ໃນຫົວຂໍ້ເປົ້າໝາຍການນຳໃຊ້ເງິນທຶນຈົດທະບຽນ (ສ່ວນທີ1.5-3)

# ພາກທີ 3

# ການຮັບຮອງຄວາມຖືກຕ້ອງຂອງຂໍ້ມູນ

## 3.1 ການຮັບຮອງຄວາມຖືກຕ້ອງຂອງຂໍ້ມູນໃນສ່ວນຂອງບໍລິສັດ

ຂ້າພະເຈົ້າໄດ້ກວດກາຂໍ້ມູນໃນໜັງສືຊວນຊື້ສະບັບພາສາລາວແລ້ວ ແລະ ດ້ວຍຄວາມລະມັດລະວັງ ໃນຖານະສະພາບໍລິຫານ. ຂ້າພະເຈົ້າຂໍຮັບຮອງว่า ຂໍ້ມູນດັ່ງກ່າວນີ້ມີຄວາມຖືກຕ້ອງ ແລະ ຄົບຖ້ວນ.

ໃນນີ້, ເພື່ອເປັນຫຼັກຖານว่า ເອກະສານທັງໝົດ ເປັນເອກະສານຊຸດດຽວກັບທີ່ຂ້າພະເຈົ້າໄດ້ຮັບຮອງຄວາມຖືກຕ້ອງ. ຂ້າພະເຈົ້າ ໄດ້ມອບໝາຍໃຫ້ ທ່ານ ຈັນທອນ ສິດທິໄຊ ເປັນຜູ້ເຊັນຫຍໍ້ກຳກັບເອກະສານນີ້ໄວ້ທຸກໜ້າດ້ວຍ. ຫາກເອກະສານໃດບໍ່ມີການເຊັນຫຍໍ້ຊື່ຂອງ ທ່ານ ຈັນທອນ ສິດທິໄຊ ກຳກັບໄວ້, ຂ້າພະເຈົ້າ ຈະຖືว่าเอกะสานนั้นบ่ำแม่นข້ໍ້ມູນທີ່ຂ້າພະເຈົ້າໄດ້ຮັບຮອງຄວາມຖືກຕ້ອງ.

**ການລົງນາມຂອງສະພາບໍລິຫານຂອງບໍລິສັດ (Board of Directors)**

| ຊື່ | ຕຳແໜ່ງ | ລາຍເຊັນ |
|---|---|---|
| 1. ທ່ານ ຫວ່າງ ຣັຕນະວົງ | ປະທານສະພາບໍລິຫານ/ປະທານຄະນະກຳມະການກວດກາພາຍໃນ/ສະມາຊິກອິດສະຫຼະ | (ທ່ານ ຫວ່າງ ຣັຕນະວົງ) |
| 2. ທ່ານ ນາງ ສະຫວັນທອງ ພົງສະຫວັນ | ຮອງປະທານສະພາບໍລິຫານ | (ທ່ານ ນາງ ສະຫວັນທອງ ພົງສະຫວັນ) |
| 3. ທ່ານ ຈັນທອນ ສິດທິໄຊ | ຮອງປະທານສະພາບໍລິຫານ/ ຜູ້ອຳນວຍການໃຫຍ່ | (ທ່ານ ຈັນທອນ ສິດທິໄຊ) |
| 4. ທ່ານ ນາງ ຈັນທະດອມ ເມກສະຫວັນ | ສະມາຊິກສະພາບໍລິຫານ | (ທ່ານ ນາງ ຈັນທະດອມ ເມກສະຫວັນ) |
| 5. ທ່ານ ນາງ ດາລີ ພົນເສນາ | ສະມາຊິກສະພາບໍລິຫານ/ກຳມະການກວດກາພາຍໃນ/ສະມາຊິກອິດສະຫຼະ | (ທ່ານ ນາງ ດາລີ ພົນເສນາ) |
| 6. ທ່ານ ບຸນຖັນ ຈິດຕະວົງ | ສະມາຊິກສະພາບໍລິຫານ | (ທ່ານ ບຸນຖັນ ຈິດຕະວົງ) |

| | | |
|---|---|---|
| 7. ທ່ານ ໂພໄຊ ຈັນທະວົງສາ | ສະມາຊິກສະພາບໍລິຫານ | (ທ່ານ ໂພໄຊ ຈັນທະວົງສາ) |
| 8. ທ່ານ ໝູພັນ ມະຫາພົນ | ສະມາຊິກສະພາບໍລິຫານ/ກຳມະການກວດກາພາຍໃນ/ສະມາຊິກອິດສະຫຼະ | (ທ່ານ ໝູພັນ ມະຫາພົນ) |
| 9. ທ່ານ ວຽງຄອນ ສິດທິໄຊ | ສະມາຊິກສະພາບໍລິຫານ | (ທ່ານ ວຽງຄອນ ສິດທິໄຊ) |

(ປະທັບກາບໍລິສັດ)

**ການລົງນາມຂອງຝ່າຍການບັນຊີ**

| ຊື່ | ຕຳແໜ່ງ | ລາຍເຊັນ |
|---|---|---|
| 1. ທ່ານ ນາງ ແສງເດືອນ ກ້ຽວສຸວັດ | ຫົວໜ້າພະແນກບັນຊີ | (ທ່ານ ນາງ ແສງເດືອນ ກ້ຽວສຸວັດ) |

**ຜູ້ຮັບມອບອຳນາດ**

| ຊື່ | ຕຳແໜ່ງ | ລາຍເຊັນ |
|---|---|---|
| 1. ທ່ານ ຈັນທອນ ສິດທິໄຊ | ຮອງປະທານສະພາບໍລິຫານ/ ຜູ້ອຳນວຍການໃຫຍ່ | (ທ່ານ ຈັນທອນ ສິດທິໄຊ) |

## 3.2 ການຮັບຮອງຄວາມຖືກຕ້ອງຂອງຂໍ້ມູນໃນສ່ວນຂອງທີ່ປຶກສາທາງການເງິນ

ໜັງສືຊວນຊື້ສະບັບນີ້ ເປັນສ່ວນໜຶ່ງຂອງເອກະສານປະກອບສຳນວນຄຳຮ້ອງຂໍອອກຮຸ້ນຂອງບໍລິສັດ ປິໂຕຣລ້ຽມ ເທຣດດິ້ງ ລາວ ມະຫາຊົນ ເຊິ່ງ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ແລະ ບໍລິສັດ ຫຼັກຊັບເອພີເອັມລາວ ຈຳກັດ ຮ່ວມກັນສ້າງຂຶ້ນບົນພື້ນຖານສັນຍາການໃຫ້ຄຳປຶກສາ ເພື່ອສະເໜີຂາຍຮຸ້ນແກ່ມວນຊົນຄັ້ງທຳອິດ.

ຂ້າພະເຈົ້າ ຮັບປະກັນວ່າ ການວິເຄາະ, ການຕີມູນຄ່າ ແລະ ການໃຊ້ສຳນວນຄຳສັບໃນໜັງສືຊວນຊື້ສະບັບນີ້ ມີ ຄວາມຖືກຕ້ອງ, ຄົບຖ້ວນ ບົນພື້ນຖານຂໍ້ມູນຂ່າວສານທີ່ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ສະໜອງໃຫ້.

**ບໍລິສັດ ຫຼັກຊັບເອພີເອັມລາວ ຈຳກັດ**

| ຊື່ | ຕຳແໜ່ງ | ລາຍເຊັນ |
|---|---|---|
| 1. ທ່ານ ສົມພົບ ສັກພັນພະນິມ | ຜູ້ອຳນວຍການ | (ທ່ານ ສົມພົບ ສັກພັນພະນິມ) |
| | | (ປະທັບກາບໍລິສັດ) |

# ເອກະສານຊ້ອນທ້າຍ 1

# ປະຫວັດສະພາບໍລິຫານ ແລະ ຜູ້ບໍລິຫານຂອງບໍລິສັດ

## ລາຍລະອຽດກ່ຽວກັບສະພາບໍລິຫານ / ຜູ້ບໍລິຫານ ແລະ ຜູ້ມີອຳນາດຄວບຄຸມຂອງບໍລິສັດ

| ຊື່ແລະນາມສະກຸນ / ຕຳແໜ່ງໃນບໍລິສັດ | ອາຍຸ | ວຸດທິການສຶກສາ | ສັດສ່ວນການຖືຮຸ້ນ (ສ່ວນຮ້ອຍ) | ຄວາມສຳພັນທາງຄອບຄົວ | ປະຫວັດການເຮັດວຽກໃນຊ່ວງເວລາ 5 ປີທີ່ຜ່ານມາ | | |
|---|---|---|---|---|---|---|---|
| | | | | | ຊ່ວງເວລາ | ຕຳແໜ່ງລ່າສຸດ<br>ຊື່ໜ່ວຍງານ/ບໍລິສັດ | ປະເພດທຸລະກິດ |
| 1. ທ່ານ ຈັນທອນ ສິດທິໄຊ<br>➢ ຜູ້ອຳນວຍການໃຫຍ່<br>➢ ຮອງປະທານສະພາບໍລິຫານ<br>➢ ປະທານຄະນະກຳມະການເສດຖະກິດ<br>➢ ຮັກສາການຮອງຜູ້ອຳນວຍການໃຫຍ່ຝ່າຍປະຕິບັດການ<br>➢ ຮັກສາການຫົວໜ້າພະແນກ MIS<br>➢ ຮັກສາການຫົວໜ້າພະແນກ ຍຸດທະສາດອົງກອນ | 37 | ປະລິນຍາຕີ ສາຂາເສດຖະສາດ ແລະບໍລິຫານ ມະຫາວິທະຍາໄລແຫ່ງຊາດລາວ. | 73.857% | ເປັນຄູ່ສາມີ ພັນລະຍາຂອງ ທ່ານ ນາງ ສະຫວັນທອງ ພິງສະຫວັນ | 2008-ປັດຈຸບັນ<br>2008-ປັດຈຸບັນ<br>2010-ປັດຈຸບັນ<br>2010-ປັດຈຸບັນ<br>2012-ປັດຈຸບັນ | - ປະທານອຳນວຍການ ບໍລິສັດປິໂຕ ຣລ້ຽມເທຣດດິ້ງ ລາວ ມະຫາຊົນ<br>- ປະທານອຳນວຍການ ບໍລິສັດຂວັນ ໃຈການຄ້າ ຂ້າເຂົ້າ-ຂາອອກ ຈຳກັດ<br>- ປະທານອຳນວຍການບໍລິສັດ ສິດທິໂລຈິດສຕິກ ລາວ ຈຳກັດ<br>- ປະທານອຳນວຍການບໍລິສັດ ແວວ ເທັກ ລາວ ຈຳກັດ<br>- ປະທານອຳນວຍການບໍລິສັດ ລາວ ເດລິມາກ ຈຳກັດ. | - ດຳເນີນທຸລະກິດນຳເຂົ້າ ແລະ ຈັດຈຳໜ່າຍນ້ຳມັນ ເຊື້ອໄຟຄົບວົງຈອນຜ່ານທາງສະຖານບໍລິການ ນ້ຳມັນ ແລະ ລູກຄ້າໂຄງການໃນ ສປປ ລາວ.<br>- ຄ້າຂາຍຍົກບໍ່ເປັນອັນສະເພາະ<br>- ບໍລິການ ຂົນສົ່ງສິນຄ້າທາງບົກ ທັງພາຍໃນ ແລະ ຕ່າງປະເທດ.<br>- ທີປຶກສາທາງດ້ານການຄ້າ ແລະ ການລົງທຶນ ໂດຍນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າຊ່ວຍ.<br>- ນຳເຂົ້າເຄື່ອງ ອຸປະໂພກ-ບໍລິໂພກທຸຊະນິດ ເພື່ອຈຳໜ່າຍໃນຮູບແບບແຟນຊາຍ |
| 2. ທ່ານ ນາງ ສະຫວັນທອງ ພິງສະຫວັນ<br>➢ ຮອງປະທານສະພາບໍລິຫານ | 34 | ປະລິນຍາຕີ ສາຂາເສດຖະສາດ ແລະບໍລິຫານ ມະຫາວິທະຍາໄລແຫ່ງຊາດລາວ. | 25.000 % | ເປັນຄູ່ສາມີ ພັນລະຍາຂອງ ທ່ານ ຈັນທອນ ສິດທິໄຊ | 2001-2008<br>2001-2007 | - ຜູ້ອຳນວຍການຝ່າຍການເງິນ ບໍລິສັດ ຂວັນໃຈການຄ້າ ຂາອອກ-ຂາເຂົ້າ ຈຳກັດ<br>- ຜູ້ອຳນວຍການຝ່າຍການເງິນ ໂຮງ ເລື່ອຍ ພິງສະຫວັນ | - ຄ້າຂາຍຍົກບໍ່ເປັນອັນສະເພາະ<br>- ສິ່ງອອກໄມ້ແປຮູບ |
| 3. ທ່ານ ຫວ່າງ ຣັຕນະວົງ<br>➢ ປະທານສະພາບໍລິຫານ<br>➢ ສະມາຊິກອິດສະຫຼະ<br>➢ ປະທານຄະນະກຳມະການກວດກາພາຍໃນ | 65 | ປະລິນຍາໂທ ສາຂາ ລັດຖະສາດ ມະຫາວິທະຍາໄລ ເກເບັກ-ມິງເຣອານ ປະເທດການາດາ | ບໍ່ມີ | ບໍ່ມີ | ປັດຈຸບັນ<br>2003-2011<br>2002-2003 | - ບຳນານ<br>- ຮອງປະທານອົງການທ່ອງທ່ຽວແຫ່ງຊາດ<br>- ຫົວໜ້າກົມເອເຊຍ - ອາເມລິກາ, ກະຊວງການຕ່າງປະເທດ | - ພະນັກງານບຳນານ<br>- ໜ່ວຍງານຂອງລັດຖະບານ<br>- ໜ່ວຍງານຂອງລັດຖະບານ |
| 4. ທ່ານ ໜູພັນ ມະຫາພົນ<br>➢ ສະມາຊິກສະພາບໍລິຫານ<br>➢ ສະມາຊິກອິດສະຫຼະ<br>➢ ກຳມະການກວດກາພາຍໃນ | 64 | ປະລິນຍາໂທ ກົດໝາຍ ທີ່ປະເທດອາດີດ ສສສ ໂຊວຽດ | ບໍ່ມີ | ບໍ່ມີ | ປັດຈຸບັນ<br>2012-2014 | - ຮັບປຳນານ ແລະ ເປັນທີ່ປຶກສາ ທາງກົດໝາຍ ຢູ່ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | - ໜ່ວຍງານຂອງລັດຖະບານ<br>- ໜ່ວຍງານຂອງລັດຖະບານ |

| | | | | | | | |
|---|---|---|---|---|---|---|---|
| | | | | | | - ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | |
| 5. ທ່ານ ນາງ ດາລີ ພົນເສນາ<br>➢ ສະມາຊິກສະພາບໍລິຫານ<br>➢ ສະມາຊິກອິດສະຫຼະ<br>➢ ຮອງປະທານຄະນະກຳມະການ ກາພາຍໃນ | 55 | ປະລິນຍາໂທ ສາຂາ ການບໍລິຫານລິດ ມະຫາວິທະຍາໄລ ຊຽງໃໝ່ | ບໍ່ມີ | ບໍ່ມີ | 2012-ປັດຈຸບັນ<br><br>2010-2012<br><br>2007-2010 | - ປະທານສະພາບໍລິຫານ ທະນາຄານພົງສະຫວັນ<br>- ຜູ້ຊ່ວຍຜູ້ວ່າການທະນາຄານແຫ່ງ ສປປ ລາວ ນະຄອນຫຼວງ<br>- ຫົວໜ້າກົມນະ�โยบายເງິນຕາ, ທະນາຄານແຫ່ງ ສປປ ລາວ ນະຄອນຫຼວງ | - ໃຫ້ບໍລິການທາງດ້ານການເງິນ<br>- ໜ່ວຍງານຂອງລັດຖະບານ<br>- ໜ່ວຍງານຂອງລັດຖະບານ |
| 6. ທ່ານ ບຸນຖົນ ຈິດຕະວົງ<br>➢ ສະມາຊິກສະພາບໍລິຫານ<br>➢ ປະທານຄະນະກຳມະການ ບໍລິຫານ<br>➢ ຮັກສາການ ຫົວໜ້າພະແນກ ປະຕິບັດການ | 55 | ປະລິນຍາຕີ ສາຂາ ເສດຖະສາດ ການຄ້າ ຈາກ ສສ ໂຊວຽດ. | 0.229% | ບໍ່ມີ | 2008-ປັດຈຸບັນ | - ຜູ້ອຳນວຍການຝ່າຍປະຕິບັດການ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ | - ດຳເນີນທຸລະກິດນຳເຂົ້າ ແລະ ຈັດຈຳໜ່າຍນ້ຳມັນ ເຊື້ອໄຟຄົບວົງຈອນຜ່ານທາງສະຖານບໍລິການ ນ້ຳມັນ ແລະ ລູກຄ້າໂຄງການໃນ ສປປ ລາວ. |
| 7. ທ່ານ ນາງ ຈັນທະດອມ ເມກສະຫວັນ<br>➢ ຮັກສາການ ຮອງຜູ້ອານວຍການ ໃຫ່ຍຝ່າຍການເງິນ<br>➢ ສະມາຊິກສະພາບໍລິຫານ<br>➢ ປະທານກຳມະການບໍລິຫານ ຄວາມສ່ຽງ | 49 | ປະລິນຍາຕີ ສາຂາເສດຖະສາດ ແລະບໍລິຫານ ມະຫາວິທະຍາ ໄລແຫ່ງຊາດລາວ. | 0.457% | ບໍ່ມີ | 2008-ປັດຈຸບັນ | - ຜູ້ອຳນວຍການໃຫຍ່ຝ່າຍການເງິນ ບໍລິສັດປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ | - ດຳເນີນທຸລະກິດນຳເຂົ້າ ແລະ ຈັດຈຳໜ່າຍນ້ຳມັນ ເຊື້ອໄຟຄົບວົງຈອນຜ່ານທາງສະຖານບໍລິການ ນ້ຳມັນ ແລະ ລູກຄ້າໂຄງການໃນ ສປປ ລາວ. |
| 8. ທ່ານ ນາງ ແສງເດືອນ ກ້ຽວສຸວັດ ຫົວໜ້າພະແນກ ບັນຊີ | 46 | ຊັ້ນສູງ ໂຮງຮຽນເຕັກນິກປາກ ປາສັກ | ບໍ່ມີ | ບໍ່ມີ | 2010-ປັດຈຸບັນ | - ຜູ້ອຳນວຍການຝ່າຍບັນຊີການເງິນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ຕຳແໜ່ງ ປັດຈຸບັນ) | - ດຳເນີນທຸລະກິດນຳເຂົ້າ ແລະ ຈັດຈຳໜ່າຍນ້ຳມັນ ເຊື້ອໄຟຄົບວົງຈອນຜ່ານທາງສະຖານບໍລິການ ນ້ຳມັນ ແລະ ລູກຄ້າໂຄງການໃນ ສປປ ລາວ. |
| 9. ທ່ານ ບຸນຍືນ ດວງສອນ ຫົວໜ້າພະແນກ ບໍລິຫານ | 45 | ຊັ້ນສູງ ທີ່ໂຮງຮຽນກົດໝາຍ ນະຄອນຫຼວງ | ບໍ່ມີ | ບໍ່ມີ | 2010-ປັດຈຸບັນ | - ຜູ້ອຳນວຍການຝ່າຍບໍລິຫານ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ | - ດຳເນີນທຸລະກິດນຳເຂົ້າ ແລະ ຈັດຈຳໜ່າຍນ້ຳມັນ ເຊື້ອໄຟຄົບວົງຈອນຜ່ານທາງສະຖານບໍລິການ ນ້ຳມັນ ແລະ ລູກຄ້າໂຄງການໃນ ສປປ ລາວ. |
| 10. ທ່ານ ໂພໄຊ ຈັນທະວົງສາ<br>➢ ສະມາຊິກສະພາບໍລິຫານ<br>➢ ຜູ້ກວດສອບພາຍໃນ | 44 | ປະລິນຍາໂທ ການບັນຊີ ມະຫາວິທະຍາໄລແຫ່ງຊາດ ລາວ | ບໍ່ມີ | ບໍ່ມີ | 2012-ປັດຈຸບັນ<br><br>2007-2012 | - ຜູ້ອຳນວຍການຝ່າຍບັນຊີ-ການເງິນ ບໍລິສັດຂວັນໃຈການຄ້າ ຂາເຂົ້າ-ຂາອອກ ຈຳກັດ<br>- ຮອງຫົວໜ້າກົມບັນຊີ, ກະຊວງ ການເງິນ | - ຕົວແທນຈຳໜ່າຍຂາຍຍົກສິນຄ້າອຸປະໂພກແລະບໍ ລິໂພກທຸຊະນິດ<br>- ໜ່ວຍງານຂອງລັດຖະບານ |

| | | | | | | | |
|---|---|---|---|---|---|---|---|
| 11. ທ່ານ ຕະກູນສິນ ຊາພັກດີ<br>ຫົວໜ້າພະແນກ ການຄ້າ | 35 | ປະລິນຍາໂທ ບໍລິຫານທຸລະກິດ ມະຫາວິທະຍາໄລຣັດຕະນະ | 0.229% | ບໍ່ມີ | 2008-ປັດຈຸບັນ | - ຜູ້ອຳນວຍການຝ່າຍການຄ້າ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ຕຳແໜ່ງ ປັດຈຸບັນ) | - ດຳເນີນທຸລະກິດນຳເຂົ້າ ແລະ ຈັດຈຳໜ່າຍນ້ຳມັນ ເຊື້ອໄຟຄົບວົງຈອນຜ່ານທາງສະຖານບໍລິການ ນ້ຳມັນ ແລະ ລູກຄ້າໂຄງການໃນ ສປປ ລາວ. |
